# ພຣະທັມຈົດເຊັນບັນຊີ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | 35 | 36 | | | | |


## ຈົດບັນຊີ

NUMBERS

### 1 ນັບຄົນອິສຣາເອນທີ່ພູເຂົາຊີນາອີ

The First Census of Israel

(2 ຊມອ 24:1-9, 1 ຂຄວ 21:1-6)

1 ໃນວັນທີນຶ່ງເດືອນທີສອງປີທີສອງ ຕັ້ງແຕ່ເຂົາທັງຫລາຍອອກຈາກປະເທດເອຢິບ ພຣະຜູ້ເປັນເຈົ້າຊົງກ່າວແກ່
ໂມເຊໃນເຕັນນັດພົບໃນຖິ່ນກັນດານຊີນາອີວ່າ,
2 “ເຈົ້າຈົ່ງທຳສຳມະໂນຄົວຊຸມນຸມຊົນອິສຣາເອນທັງຫມົດຕາມຕະກູນຕາມຄອບຄົວ ຕາມຈຳນວນລາຍຊື່ຜູ້ຊາຍ
ຮຽງຕົວທຸກຄົນ
3 ເຈົ້າແລະອາໂຣນຈົ່ງນັບທຸກຄົນໃນອິສຣາເອນຊຶ່ງອອກຮົບໄດ້ ອາຍຸຕັ້ງແຕ່ຊາວປີຂຶ້ນໄປໄວ້ເປັນກອງໆ
4 ແລະໃຫ້ມີຊາຍຈາກທຸກເຜົ່າມາຢູ່ກັບເຈົ້າເຜົ່າລະຄົນ ແຕ່ລະຄົນໃຫ້ເປັນຫົວຫນ້າໃນຄອບຄົວຂອງຕົນ
5 ແລະຊື່ຊາຍທັງປວງທີ່ຈະຊ່ອຍເຈົ້ານັ້ນ ຈາກເຜົ່າຣູເບນ ຄື ເອລີຊູ ບຸດຂອງເຊເດອູ
6 ຈາກເຜົ່າຊີເມໂອນ ຄື ເຊລູມີເອນ ບຸດຂອງຊູຣີຊັດດັຍ
7 ຈາກເຜົ່າຢູດາ ຄື ນາໂຊນ ບຸດຂອງອັມມີນາດາບ
8 ຈາກເຜົ່າອິສຊາຄາ ຄື ເນທານເອນ ບຸດຂອງຊູອາ
9 ຈາກເຜົ່າເຊບູລູນ ຄື ເອລີອາບ ບຸດຂອງເຮໂລນ
10 ຈາກເຊື້ອສາຍຂອງໂຢເຊັບ ຈາກເຜົ່າເອຟຣາອິມ ຄື ເອລີຊາມາ ບຸດຂອງອັມມີຮູດ ຈາກເຜົ່າມານັສເຊ ຄື ກາ
ມາລີເອນ ບຸດຂອງເປດາຊູ
11 ຈາກເຜົ່າເບັນຢາມິນ ຄື ອາບີດານ ບຸດຂອງກີເດໂອນີ
12 ຈາກເຜົ່າດານ ຄື ອາຮີເອເຊີ ບຸດຂອງອັມມີຊັດດັຍ
13 ຈາກເຜົ່າອາເຊີ ຄື ປາກີເອນ ບຸດຂອງໂອກຣານ
14 ຈາກເຜົ່າກາດ ຄື ເອລີອາສາຟ ບຸດຂອງເດອູເອນ
15 ຈາກເຜົ່າເນັຟທາລີ ຄື ອາຮີຣາ ບຸດຂອງເອນານ
16 ຄົນເຫລົ່ານີ້ເປັນຄົນທີ່ຊຸມນຸມຊົນເລືອກໃຫ້ເປັນຫົວຫນ້າແຫ່ງເຜົ່າຂອງບັນພະບຸຣຸດຂອງເຂົາ ເປັນຫົວຫນ້າເຊື້ອ
ສາຍຄົນອິສຣາເອນ
17 ໂມເຊ ແລະອາໂຣນໄດ້ນຳຄົນເຫລົ່ານີ້ທີ່ມີຊື່ມາແລ້ວ

18 ແລ້ວໃນວັນທີນຶ່ງເດືອນທີສອງ ຄົນເຫລົ່ານີ້ກໍ່ຮຽກປະຊຸມຊົນທັງຫມົດ ເຂົາມາຂຶ້ນທະບຽນຕາມຕະກູນແລະ
ຕາມຄອບຄົວ ຕາມຈໍານວນຣາຍຊື່ລຽນຕົວຄົນທັງປວງທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ
19 ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້ ທ່ານຈຶ່ງນັບຄົນທີ່ຖິ່ນກັນດານຊີນາອີດັ່ງນີ້
20 ຄົນເຜົ່າຣູເບນບຸດທົວປີຂອງອິສຣາເອນ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍ
ຊື່ຜູ້ຊາຍຮຽງຕົວທຸກຄົນ ທີ່ມີອາຍຸຕັ້ງແຕ່ຊາວຂຶ້ນໄປທີ່ອອກຣົບໄດ້ທັງຫມົດ
21 ຈໍານວນຄົນໃນເຜົ່າຣູເບນເປັນສີ່ຫມື່ນຫົກພັນຫ້າຮ້ອຍຄົນ
22 ຄົນເຜົ່າຊີເມໂອນ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ທຸກຄົນທີ່ເຂົານັບຕາມຈໍານວນລາຍຊື່ ຜູ້
ຊາຍຮຽງຕົວທຸກຄົນ ທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຣົບໄດ້ທັງຫມົດ
23 ຈໍານວນຄົນໃນເຜົ່າຊີເມໂອນເປັນຫ້າຫມື່ນເກົ້າພັນສາມຮ້ອຍຄົນ
24 ຄົນເຜົ່າກາດຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີ
ຂຶ້ນໄປທີ່ອອກຣົບໄດ້ທັງຫມົດ
25 ຈໍານວນຄົນໃນເຜົ່າກາດເປັນສີ່ຫມື່ນຫ້າພັນຫົກຮ້ອຍຫ້າສິບຄົນ
26 ຄົນເຜົ່າຢູດາ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ອາຍຸຕັ້ງແຕ່ຊາວປີ
ຂຶ້ນໄປທີ່ອອກຣົບໄດ້ທັງຫມົດ
27 ຈໍານວນຄົນໃນເຜົ່າຢູດາເປັນເຈັດຫມື່ນສີ່ພັນຫົກຮ້ອຍຄົນ
28 ຄົນເຜົ່າອິສຊາຄາ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ອາຍຸຕັ້ງແຕ່
ຊາວປີຂຶ້ນໄປທີ່ອອກຣົບໄດ້ທັງຫມົດ
29 ຈໍານວນຄົນໃນເຜົ່າອິສຊາຄາເປັນຫ້າຫມື່ນສີ່ພັນສີ່ຮ້ອຍຄົນ
30 ຄົນເຜົ່າເຊບູລູນ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ອາຍຸຕັ້ງແຕ່ຊາວ
ປີຂຶ້ນໄປທີ່ອອກຣົບໄດ້ທັງຫມົດ
31 ຈໍານວນຄົນໃນເຜົ່າເຊບູລູນເປັນຫ້າຫມື່ນເຈັດພັນສີ່ຮ້ອຍຄົນ
32 ຄົນເຊື້ອສາຍໂຢເຊັບ ຄືຄົນເຜົ່າເອຟຣາອິມ ຊາດ
ເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນຣາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຣົບ
ໄດ້ທັງຫມົດ
33 ຈໍານວນຄົນເຜົ່າເອຟຣາອິມເປັນສີ່ຫມື່ນຫ້າຮ້ອຍຄົນ
34 ຄົນເຜົ່າມານັສເຊ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່
ຊາວປີຂຶ້ນໄປ ທີ່ອອກຣົບໄດ້ທັງຫມົດ
35 ຈໍານວນຄົນໃນເຜົ່າມານັສເຊເປັນສາມຫມື່ນສອງພັນສອງຮ້ອຍຄົນ
36 ຄົນເຜົ່າເບັນຢາມິນ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ທີ່ມີອາຍຸຕັ້ງແຕ່
ຊາວປີຂຶ້ນໄປ ທີ່ອອກຣົບໄດ້ທັງຫມົດ
37 ຈໍານວນຄົນໃນເຜົ່າເບັນຢາມິນເປັນສາມຫມື່ນຫ້າພັນສີ່ຮ້ອຍຄົນ
38 ຄົນເຜົ່າດານ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີ
ຂຶ້ນໄປ ທີ່ອອກຣົບໄດ້ທັງຫມົດ
39 ຈໍານວນຄົນໃນເຜົ່າດານເປັນຫົກຫມື່ນສອງພັນເຈັດຮ້ອຍຄົນ
40 ຄົນເຜົ່າອາເຊີ ຊາດເຊື້ອສາຍຂອງເຂົາຕາມຕະກູນຕາມຄອບຄົວ ຕາມຈໍານວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວ
ປີຂຶ້ນໄປ ທີ່ອອກຣົບໄດ້ທັງຫມົດ
41 ຈໍານວນຄົນໃນເຜົ່າອາເຊີເປັນສີ່ຫມື່ນນຶ່ງພັນຫ້າຮ້ອຍຄົນ

42 ຄົນເຜົ່ານັຟທາລີ ຊາດເຊື້ອສາຍຂອງຕາມຕະກູນຕາມຄອບຄົວ ຕາມຈຳນວນລາຍຊື່ຄົນທີ່ມີອາຍຸ ຕັ້ງແຕ່ຊາວ
ປີຂຶ້ນໄປ ທີ່ອອກຮົບໄດ້ທັງຫມົດ
43 ຈຳນວນຄົນໃນເຜົ່ານັບທາລີເປັນຫ້າຫມື່ນສາມພັນສີ່ຮ້ອຍຄົນ
44 ຈຳນວນຄົນເຫລົ່ານີ້ເປັນຄົນທີ່ໂມເຊກັບອາໂຣນ ແລະປະມຸກທັງສິບສອງຄົນຂອງຄົນອິສຣາເອນຜູ້ແທນຄົນ
ເຜົ່າຂອງຕົນໄດ້ນັບໄວ້
45 ສະນັ້ນຈຳນວນຄົນອິສຣາເອນທັງຫມົດທີ່ນັບຕາມຄອບຄົວ ຕາມຈຳນວນຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປທຸກ
ຄົນໃນອິສຣາເອນຊຶ່ງອອກຮົບໄດ້
46 ຈຳນວນຄົນທັງຫມົດເປັນຫົກແສນສາມພັນຫ້າຮ້ອຍຫ້າສິບຄົນ

### ການແຕ່ງຕັ້ງຄົນເລວີໃຫ້ດູແລຫໍເຕັນສັກສິດ

47 ແຕ່ບໍ່ໄດ້ນັບຄົນເລວີຕາມເຜົ່າບັນພະບຸຣຸດຂອງຕົນຮ່ວມດ້ວຍ
48 ເພາະພຣະເຈົ້າຊົງກ່າວກັບໂມເຊວ່າ,
49 "ສະເພາະເຜົ່າເລວີເຈົ້າຢ່ານັບ ແລະຢ່າທຳສຳມະໂນຄົວໄວ້ໃນຄົນອິສຣາເອນ
50 ແຕ່ເຈົ້າຈົ່ງຕັ້ງຄົນເລວີໄວ້ສຳລັບຫໍເຕັນພຣະໂອວາດແລະເຄື່ອງໃຊ້ ກັບປະຕິບັດງານຫໍເຕັນນັ້ນ ແລະຕັ້ງເຕັນຢູ່
ຮອບຫໍເຕັນ
51 ເມື່ອຈະຍ້າຍຫໍເຕັນໄປຄົນເລວີຈະຕ້ອງຮື້ຫໍເຕັນລົງ ແລະເມື່ອຈະຕັ້ງຫໍເຕັນຂຶ້ນ ກໍໃຫ້ຄົນເລວີເປັນຜູ້ຈັດຕັ້ງ ຜູ້
ອື່ນເຂົ້າມາໃກ້ຫໍເຕັນ ຜູ້ນັ້ນຕ້ອງຖືກໂທດເຖິງຕາຍ
52 ໃຫ້ຄົນອິສຣາເອນຕັ້ງເຕັນຕາມທີ່ຂອງຕົນແຕ່ລະພວກ ແລະແຕ່ລະຄົນຕາມຄ້າຍຂອງຕົນ ແລະແຕ່ລະຄົນຕາມ
ທຸງເຜົ່າຂອງຕົນ
53 ແຕ່ໃຫ້ຄົນເລວີຕັ້ງເຕັນຮອບຫໍເຕັນພຣະໂອວາດ ເພື່ອບໍ່ໃຫ້ພຣະພິໂຣດເກີດເຫນືອຊຸມນຸມຊົນອິສຣາເອນ ໃຫ້
ເຜົ່າເລວີປະຕິບັດງານຫໍເຕັນພຣະໂອວາດ"
54 ຄົນອິສຣາເອນກໍກະທຳຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊໄວ້ທຸກປະການ

## 2 ຄ້າຍແລະຫົວຫນ້າຂອງເຜົ່າ

The Order of Encampment and Marching

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊແລະອາໂຣນວ່າ,
2 "ໃຫ້ຄົນອິສຣາເອນຕັ້ງຄ້າຍຢູ່ຕາມທຸງຂອງຕົນທຸກຄົນ ຕາມທຸງທີ່ມີກາຄອບຄົວຂອງຕົນ ໃຫ້ຕັ້ງເຕັນຫັນຫນ້າ
ເຂົ້າຫາເຕັນນັດພົບທຸກດ້ານ
3 ພວກທີ່ຕັ້ງຄ້າຍດ້ານຕາເວັນອອກທາງດວງອາທິດຂຶ້ນ ໃຫ້ເປັນຂອງທຸງຄ້າຍຢູດາຕາມກອງຂອງເຂົາ ນາໂຊນ
ບຸດອັມມີນາດາບເປັນຫົວຫນ້າຂອງຄົນຢູດາ
4 ພົນໂຍທາທີ່ນັບໄວ້ນີ້ມີເຈັດຫມື່ນສີ່ພັນຫົກຮ້ອຍຄົນ
5 ໃຫ້ເຜົ່າອິສຊາຄາຕັ້ງຄ້າຍຮຽງຖັດມາ ເນທານເອນ ບຸດຂອງຊູອາເປັນຫົວຫນ້າຂອງຄົນເຜົ່າອິສຊາຄາ
6 ພົນໂຍທາທີ່ນັບໄວ້ນີ້ມີຫ້າຫມື່ນສີ່ພັນສີ່ຮ້ອຍຄົນ
7 ໃຫ້ເຜົ່າເຊບູລູນຮຽງຖັດຢູດາໄປ ເອລີອາບບຸດເຮໂລນເປັນຫົວຫນ້າຄົນເຜົ່າເຊບູລູນ
8 ພົນໂຍທາທີ່ນັບໄວ້ນີ້ມີຫ້າຫມື່ນເຈັດພັນສີ່ຮ້ອຍຄົນ
9 ຈຳນວນຊົນທັງຫມົດທີ່ນັບເຂົ້າໃນຄ້າຍຢູດາຕາມກອງຂອງເຂົາເປັນນຶ່ງແສນແປດຫມື່ນຫົກພັນສີ່ຮ້ອຍຄົນ ເມື່ອ
ອອກເດີນຄົນເຫລົ່ານີ້ຈະຍົກໄປກ່ອນ

10 “ໃຫ້ທຸງຄ້າຍຂອງຣູເບນຕັ້ງທາງທິດໃຕ້ຕາມກອງຂອງເຂົາ ເອລີຊູ ບຸດຂອງເຊເດອູເປັນຫົວຫນ້າຂອງຄົນເຜົ່າຣູເບນ

11 ພົນໂຍທາທີ່ນັບໄວ້ນີ້ມີສີ່ຫມື່ນຫົກພັນຫ້າຮ້ອຍຄົນ

12 ໃຫ້ເຜົ່າຊີເມໂອນຕັ້ງຄ້າຍຮຽງຖັດມາ ເຊລູມີເອນ ບຸດຂອງຊູຣີຊັດດັຍເປັນຫົວຫນ້າຄົນເຜົ່າຊີເມໂອນ

13 ພົນໂຍທາທີ່ນັບໄວ້ນີ້ມີຫ້າຫມື່ນເກົ້າພັນສາມຮ້ອຍຄົນ

14 ໃຫ້ເຜົ່າກາດຮຽງຖັດຕໍ່ຣູເບນໄປ ເອລີອາສາຟ ບຸດຂອງຣູອູເອນເປັນຫົວຫນ້າຄົນເຜົ່າກາດ

15 ພົນໂຍທາທີ່ນັບໄວ້ນີ້ມີສີ່ຫມື່ນຫ້າພັນຫົກຮ້ອຍຫ້າສິບຄົນ

16 ຈຳນວນຄົນທັງຫມົດທີ່ນັບເຂົ້າໃນຄ້າຍຣູເບນຕາມກອງຂອງເຂົາເປັນນຶ່ງແສນຫ້າຫມື່ນນຶ່ງພັນສີ່ຮ້ອຍຫ້າສິບຄົນ ເມື່ອອອກເດີນຄົນເຫລົ່ານີ້ຈະເປັນພວກທີສອງ

17 “ແລ້ວໃຫ້ຍົກເຕັນນັດພົບເດີນຕາມໄປ ໃຫ້ຄ້າຍຄົນເລວີຢູ່ກາງຂະບວນຄ້າຍ ເຂົາຕັ້ງຄ້າຍຢູ່ອັນດັບໃດກໍໃຫ້ອອກເດີນໄປຕາມອັນດັບນັ້ນ ທຸກຄ້າຍຕາມອັນດັບຕາມທຸງເຜົ່າຂອງຕົນ

18 “ໃຫ້ທຸງຄ້າຍຂອງເອຟຣາອິມຕັ້ງທິດຕາເວັນຕົກຕາມກອງຂອງເຂົາ ເອລີຊາມາ ບຸດຂອງອັມມີຮູດເປັນຫົວຫນ້າຂອງຄົນເຜົ່າເອຟຣາອິມ

19 ພົນໂຍທາທີ່ນັບໄວ້ນີ້ມີສີ່ຫມື່ນຫ້າຮ້ອຍຄົນ

20 ໃຫ້ຄົນເຜົ່າມານັສເຊຮຽງຖັດມາ ກາມາລີເອນ ບຸດຂອງເປດາຊູເປັນຫົວຫນ້າຄົນເຜົ່າມານັສເຊ

21 ພົນໂຍທາທີ່ນັບໄວ້ນີ້ມີສາມຫມື່ນສອງພັນສອງຮ້ອຍຄົນ

22 ໃຫ້ເຜົ່າເບັນຢາມິນຮຽງຖັດຕໍ່ເອຟຣາອິມໄປ ອາບີດານ ບຸດຂອງກີເດໂອນີເປັນຫົວຫນ້າຂອງຄົນເຜົ່າເບັນຢາມິນ

23 ພົນໂຍທາທີ່ນັບໄວ້ນີ້ມີສາມຫມື່ນຫ້າພັນສີ່ຮ້ອຍຄົນ

24 ຈຳນວນຄົນທັງຫມົດທີ່ນັບເຂົ້າໃນຄ້າຍເອຟຣາອິມຕາມກອງຂອງເຂົາເປັນນຶ່ງແສນແປດພັນນຶ່ງຮ້ອຍຄົນ

25 “ໃຫ້ທຸງຄ້າຍຂອງດານຕັ້ງທາງທິດເຫນືອຕາມກອງຂອງເຂົາ ອາຮີເອເຊີ ບຸດຂອງອັມມີຊັດດັຍເປັນຫົວຫນ້າຂອງຄົນເຜົ່າດານ

26 ພົນໂຍທາທີ່ນັບໄວ້ນີ້ມີຫົກຫມື່ນສອງພັນເຈັດຮ້ອຍຄົນ

27 ໃຫ້ເຜົ່າອາເຊີຕັ້ງຄ້າຍຮຽງຖັດມາ ປາກີເອນ ບຸດຂອງໂອກຣານເປັນຫົວຫນ້າຂອງຄົນເຜົ່າອາເຊີ

28 ພົນໂຍທາທີ່ນັບໄວ້ນີ້ມີສີ່ຫມື່ນນຶ່ງພັນຫ້າຮ້ອຍຄົນ

29 ໃຫ້ເຜົ່ານັຟທາລີຮຽງຖັດດານໄປ ອາຮີຣາ ບຸດຂອງເອນານເປັນຫົວຫນ້າຄົນເຜົ່ານັຟທາລີ

30 ພົນໂຍທາທີ່ນັບໄວ້ນີ້ມີຫ້າຫມື່ນສາມພັນສີ່ຮ້ອຍຄົນ

31 ຈຳນວນຄົນທັງຫມົດທີ່ນັບເຂົ້າໃນຄ້າຍດານ ເປັນນຶ່ງແສນຫ້າຫມື່ນເຈັດພັນຫົກຮ້ອຍຄົນ ເມື່ອອອກເດີນຄົນເຫລົ່ານີ້ຈະເປັນພວກສຸດທ້າຍ ເດີນຕາມທຸງເຜົ່າຂອງຕົນ”

32 ຄົນເຫລົ່ານີ້ເປັນຊົນຊາດອິສຣາເອນທີ່ນັບຕາມຄອບຄົວ ຄົນທັງຫມົດທີ່ຢູ່ໃນຄ້າຍ ນັບຕາມກອງມີຫົກແສນສາມພັນຫ້າຮ້ອຍຫ້າສິບຄົນ

33 ແຕ່ບໍ່ໄດ້ນັບພວກເລວີຮວມເຂົ້າໃນຄົນອິສຣາເອນ ຕາມພຣະຜູ້ເປັນເຈົ້າຊົງບັນຊາໂມເຊ

34 ຄົນອິສຣາເອນກໍກະທຳດັ່ງນັ້ນ ເຂົາທັງຫລາຍຕັ້ງຄ້າຍຢູ່ຕາມທຸງ ແລະຍົກອອກເດີນໄປທຸກຄົນຕາມຄອບຄົວຂອງຕົນຕາມຕະກູນຂອງຕົນ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້ທຸກປະການ

## 3 ຈຳນວນແລະຫນ້າທີ່ຂອງຄົນເລວີ

### The Sons of Aaron

(ລລວ 10:1-7)

1 ຕໍ່ໄປນີ້ເປັນເຜົ່າເຊື້ອສາຍຂອງອາໂຣນແລະໂມເຊ ຄັ້ງເມື່ອພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊເທິງພູເຂົາຊີນາອີ
2 ຊື່ບຸດຂອງອາໂຣນມີດັ່ງນີ້ ນາດາບບຸດຫົວປີ ອາບີຮູ ເອເລອາຊາ ແລະອີທາມາ
3 ນີ້ແຫລະເປັນຊື່ບຸດຂອງອາໂຣນທີ່ໄດ້ຫົດສົງໄວ້ເປັນປະໂຣຫິດ ເປັນຜູ້ທີ່ທ່ານສະຖາປະນາໄວ້ໃຫ້ປະຕິບັດໃນ
ຫນ້າທີ່ປະໂຣຫິດ
4 ແຕ່ນາດາບແລະອາບີຮູຕາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ເມື່ອເຂົາເອົາໄຟທີ່ຕ້ອງຫ້າມມາຖວາຍບູຊາແດ່ພຣະຜູ້
ເປັນເຈົ້າທີ່ຖິ່ນກັນດານຊີນາອີ ແລະຕ່າງກໍບໍ່ມີບຸດ ດັ່ງນັ້ນເອເລອາຊາ ແລະອີທາມາຈຶ່ງໄດ້ປະຕິບັດໃນຫນ້າທີ່
ປະໂຣຫິດໃນຄວາມດູແລຂອງອາໂຣນບິດາຂອງເຂົາ

### The Duties of the Levites

5 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
6 “ຈົ່ງນໍາເຜົ່າເລວີເຂົ້າມາໃກ້ ແລະຕັ້ງເຂົາໄວ້ຕໍ່ຫນ້າປະໂຣຫິດອາໂຣນ ໃຫ້ເຂົາບົວລະບັດອາໂຣນ
7 ເຂົາຈະປະຕິບັດຫນ້າທີ່ແທນອາໂຣນ ແລະແທນຊຸມນຸມທັງຫມົດຫນ້າເຕັນນັດພົບ ຂນະເຂົາປະຕິບັດງານທີ່ຫໍ
ເຕັນ
8 ເຂົາຈະດູແລເຄື່ອງໃຊ້ຂອງເຕັນນັດພົບ ແລະປະຕິບັດຫນ້າທີ່ເທນຄົນອິສຣາເອນ ເມື່ອເຂົາປະຕິບັດງານທີ່ຫໍ
ເຕັນ
9 ຈົ່ງມອບຄົນເລວີໄວ້ກັບອາໂຣນ ແລະກັບບຸດທັງຫລາຍຂອງອາໂຣນ ເຂົາທັງຫລາຍຮັບເລືອກຈາກຄົນອິສຣາ
ເອນມອບໄວ້ກັບອາໂຣນແລ້ວ
10 ເຈົ້າຈົ່ງແຕ່ງຕັ້ງອາໂຣນ ແລະບຸດຊາຍທັງຫລາຍຂອງອາໂຣນໃຫ້ປະຕິບັດງານຕາມຕໍາແຫນ່ງປະໂຣຫິດ ແຕ່
ຄົນອື່ນທີ່ເຂົ້າມາໃກ້ຈະຕ້ອງຖືກລົງໂທດເຖິງຕາຍ”
11 ແລະພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
12 “ເບິ່ງແມ໋, ເຮົາເອງໄດ້ເລືອກຄົນເລວີຈາກຄົນອິສຣາເອນແທນບຸດຫົວປີຖ້າມກາງຄົນອິສຣາເອນທີ່ຄອດຈາກ
ຄັນມານດາກ່ອນ ຄົນເລວີເປັນຂອງເຮົາ
13 ເພາະບັນດາບຸດຫົວປີເປັນຂອງເຮົາ ໃນວັນທີ່ເຮົາໄດ້ປະຫານຊີວິດລູກຫົວປີທັງຫລາຍໃນປະເທດເອຢິບນັ້ນ
ເຮົາໄດ້ເລືອກບັນດາລູກຫົວປີໃນອິສຣາເອນ ທັງມະນຸດແລະສັດເດັຽຣະສານໄວ້ເປັນຂອງເຮົາ ທັງຫລາຍເຫລົ່າ
ນີ້ຕ້ອງເປັນຂອງເຮົາ ເຮົາຄືພຣະຜູ້ເປັນເຈົ້າ”

### A Census of the Levites

(ຈຊບ 1:47-54)

14 ພຣະຜູ້ເປັນເຈົ້າກ່າວກັບໂມເຊທີ່ຖິ່ນກັນດານຊີນາອີວ່າ,
15 “ຈົ່ງນັບເຜົ່າເຊື້ອສາຍເລວີຕາມຕະກູນແລະຕາມຄອບຄົວ ຄືທ່ານຈົ່ງນັບຜູ້ຊາຍທຸກຄົນທີ່ມີອາຍຸຕັ້ງແຕ່ເດືອນນຶ່ງ
ຂຶ້ນໄປ”
16 ໂມເຊຈຶ່ງໄດ້ນັບເຂົາທັງຫລາຍຕາມພຣະດໍາຣັດຂອງພຣະຜູ້ເປັນເຈົ້າດັ່ງທີ່ພຣະອົງຕຣັສສັ່ງໄວ້
17 ຕໍ່ໄປນີ້ເປັນຊື່ບຸດຊາຍຂອງເລວີ ຄື ເກີໂຊນ ໂກຮາດ ແລະເມຣາຣີ
18 ຊື່ບຸດຂອງເກີໂຊນຕາມຄອບຄົວ ຄື ລິບນີ ແລະຊີເມອີ
19 ບຸດຂອງໂກຮາດຕາມຄອບຄົວ ຄື ອັມຣາມ ອິສຮາ ເຮໂບຣນ ແລະອຸສຊີເອນ
20 ແລະບຸດຂອງເມຣາຣີຕາມຄອບຄົວ ຄື ມາລີ ແລະມູຊີ ນີ້ເປັນຄອບຄົວຄົນເລວີ ຕາມຕະກູນຂອງເຂົາ
21 ວົງເກີໂຊນມີຕະກູນລິບນີ ແລະຕະກູນຊີເມອີ ເຫລົ່ານີ້ເປັນວົງວານເກີໂຊນ
22 ຈໍານວນຄົນທັງຫລາຍ ຄືຈໍານວນຜູ້ຊາຍທັງຫມົດທີ່ມີອາຍຸຕັ້ງແຕ່ເດືອນນຶ່ງຂຶ້ນໄປເປັນເຈັດພັນຫ້າຮ້ອຍຄົນ

23 ວົງວານເກີໂຊນນັ້ນຈະຕ້ອງຕັ້ງຄ້າຍຢູ່ຂ້າງຫລັງທໍເຕັນດ້ານຕາເວັນຕົກ

24 ມີເອລີອາສາຟບຸດລາເອນເປັນຫົວຫນ້າວົງວານເກີໂຊນ

25 ງານທີ່ວົງເກີໂຊນປະຕິບັດໃນເຕັນນັດພົບ ມີງານທໍເຕັນສັກສິດ ງານເຕັນພ້ອມກັບເຄື່ອງຄຸມເຕັນ ແລະຜ້າກັ້ງປະຕູເຕັນນັດພົບ

26 ຜ້າກັ້ງບັງລານແລະຜ້າກັ້ງປະຕູລານ ຊຶ່ງຢູ່ອ້ອມຮອບທໍເຕັນແລະແທ່ນບູຊາ ຮວມທັງເຊືອກ ທັງງານສາຣະພັດກ່ຽວກັບສິ່ງເຫລົ່ານີ້

27 ວົງໂກຮາດມີຕະກູນອັມຣາມ ຕະກູນອິສຮາ ຕະກູນເຮໂບຣນ ຕະກູນອຸສຊີເອນ ເຫລົ່ານີ້ເປັນວົງວານໂກຮາດ

28 ຕາມຈຳນວນຜູ້ຊາຍທັງຫມົດທີ່ມີອາຍຸຕັ້ງແຕ່ເດືອນນຶ່ງຂຶ້ນໄປເປັນແປດພັນຫົກຮ້ອຍຄົນ ເປັນຄົນປະຕິບັດຫນ້າທີ່ສະຖານນະມັສການ

29 ບັນດາຕະກູນລູກຫລານຂອງໂກຮາດຈະຕັ້ງຄ້າຍຢູ່ທາງດ້ານໃຕ້ຂອງທໍເຕັນສັກສິດ

30 ມີເອລີຊາຟານ ບຸດຂອງອຸສຊີເອນເປັນຫົວຫນ້າຂອງວົງວານໂກຮາດ

31 ຄົນເຫລົ່ານີ້ມີຫນ້າທີ່ດູແລຫີບພຣະບັນຍັດ ໂຕະເຄື່ອງຮອງຕີນໂຄມ ແທ່ນບູຊາທັງສອງ ແລະເຄື່ອງໃຊ້ປະຕິບັດງານແລະ ຜ້າກັ້ງ ທັງງານສາຣະພັດທີ່ກ່ຽວກັບສິ່ງເຫລົ່ານີ້

32 ເອເລອາຊາບຸດຂອງປະໂຣຫິດອາໂຣນເປັນນາຍໃຫຍ່ເຫນືອຫົວຫນ້າຂອງຄົນເລວີ ແລະກວດກາຜູ້ທີ່ມີຫນ້າທີ່ປະຕິບັດສະຖານນະມັສການ

33 ວົງເມຣາຣີມີຕະກູນມາລີ ແລະຕະກູນມູຊີ ເຫລົ່ານີ້ເປັນວົງວານເມຣາຣີ

34 ຈຳນວນຄົນທັງຫລາຍຄືຈຳນວນຜູ້ຊາຍທັງຫມົດທີ່ມີອາຍຸຕັ້ງແຕ່ນຶ່ງເດືອນຂຶ້ນໄປເປັນຫົກພັນສອງຮ້ອຍຄົນ

35 ແລະຊູຣີເອນບຸດຂອງອາບີຮາອິນເປັນຫົວຫນ້າຂອງວົງວານເມຣາຣີ ຄົນເຫລົ່ານີ້ຈະຕັ້ງຄ້າຍຢູ່ດ້ານເຫນືອຂອງທໍເຕັນສັກສິດ

36 ງານທີ່ກຳນົດໃຫ້ແກ່ວົງວານເມຣາຣີ ຄືງານດູແລໄມ້ຂອບທໍເຕັນສັກສິດ ໄມ້ກອນ ໄມ້ເສົາ ຖານຮອງແລະເຄື່ອງປະກອບ ສິ່ງເຫລົ່ານີ້ທັງຫມົດ ທັງງານສາຣະພັດທີ່ກ່ຽວກັບສິ່ງເຫລົ່ານີ້

37 ແລະເສົາອ້ອມຮອບລານ ພ້ອມກັບຖານຮອງຫລັກຫມຸດ ແລະເຊືອກ

38 ແລະບຸກຄົນທີ່ຈະຕັ້ງຄ້າຍຢູ່ຫນ້າທໍເຕັນສັກສິດດ້ານຕາເວັນອອກຫນ້າເຕັນນັດພົບ ດ້ານທີ່ດວງອາທິດຂຶ້ນ ມີໂມເຊ ແລະອາໂຣນກັບບຸດຫລານຂອງທ່ານ ມີຫນ້າທີ່ດູແລພິທີການພາຍໃນສະຖານນະມັສການ ແລບັນດາກິຈການທີ່ຄວນກະທຳເພື່ອຄົນອິສຣາເອນ ແລະຜູ້ໃດອື່ນທີ່ເຂົ້າມາໃກ້ຈະຕ້ອງຖືກລົງໂທດເຖິງຕາຍ

39 ບັນດາຄົນທີ່ນັບເຂົ້າໃນຄົນເລວີ ຊຶ່ງໂມເຊແລະອາໂຣນໄດ້ນັບຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າ ເປັນບັນດາຜູ້ຊາຍທັງຫມົດຕາມຄອບຄົວທີ່ມີອາຍຸຕັ້ງແຕ່ນຶ່ງເດືອນຂຶ້ນໄປເປັນສອງຫມື່ນສອງພັນຄົນ

ຄົນເລວີແລະການໄຖ່ບຸດຫົວປີ

The Redemption of the Firstborn

40 ແລະພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ, "ຈົ່ງນັບບຸດຊາຍຫົວປີທັງຫລາຍຂອງຄົນອິສຣາເອນ ທີ່ມີອາຍຸຕັ້ງແຕ່ນຶ່ງເດືອນຂຶ້ນໄປ ຈົ່ງຈົດຈຳນວນລາຍຊື່ໄວ້

41 ເຈົ້າຈົ່ງກັນພວກເລວີໄວ້ໃຫ້ເຮົາ ເຮົາຄືພຣະຜູ້ເປັນເຈົ້າ ທັງຫນີ້ເພື່ອແທນບຸດຫົວປີຖ້າມກາງຄົນອິສຣາເອນ ແລະໃຫ້ສັດທັງປວງຂອງຄົນເລວີແທນສັດຫົວປີທັງຫລາຍຂອງຄົນອິສຣາເອນ"

42 ດັ່ງນັ້ນໂມເຊຈຶ່ງໄດ້ນັບບຸດຫົວປີຖ້າມກາງຄົນອິສຣາເອນ ຕາມທີ່ພຣະຜູ້ເປັນເຈົ້າຕຣັດສັ່ງທ່ານ

43 ບຸດຊາຍຫົວປີທັງຫລາຍຕາມຈຳນວນຊື່ທີ່ນັບໄດ້ ຊຶ່ງມີອາຍຸຕັ້ງແຕ່ນຶ່ງເດືອນຂຶ້ນໄປມີສອງຫມື່ນສອງພັນສອງຮ້ອຍເຈັດສິບສາມຄົນ

44 ແລະພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ,

45 “ຈົ່ງເອົາຄົນເລວີແທນບຸດຫົວປີທັງຫມົດຂອງຄົນອິສຣາເອນ ແລະເອົາສັດທັງຫລາຍຂອງຄົນເລວີແທນສັດຂອງ
ຄົນອິສຣາເອນ ຄົນເລວີຈະເປັນຂອງເຮົາ ເຮົາຄືພຣະຜູ້ເປັນເຈົ້າ
46 ສຳລັບເປັນຄ່າໄຖ່ບຸດຫົວປີຂອງຄົນອິສຣາເອນຈຳນວນສອງຮ້ອຍເຈັດສິບສາມຄົນທີ່ເກີນຈຳນວນຜູ້ຊາຍຄົນເລ
ວີນັ້ນ
47 ເຈົ້າຈົ່ງເກັບຄົນລະຫ້າເຊເກລ ຕາມເຊເກລຂອງສະຖານນະມັສການ ເຊເກລນຶ່ງມີຊາວເກຣາ ເຈົ້າຈົ່ງເກັບເງິນ
ນັ້ນໄວ້
48 ແລະມອບເງິນຊຶ່ງຕ້ອງເສັຽເປັນຄ່າໄຖ່ຂອງຄົນທີ່ເກີນເຫລົ່ານັ້ນໃຫ້ໄວ້ແກ່ອາໂຣນແລະບຸດຫລານຂອງທ່ານ”
49 ໂມເຊຈຶ່ງເກັບເງິນຄ່າໄຖ່ຈາກຄົນເຫລົ່ານັ້ນທີ່ເກີນກວ່າຈຳນວນຄົນທີ່ຄົນເລວີໄຖ່ໄວ້
50 ຄືທ່ານເກັບເງິນຈາກບຸດຫົວປີຂອງຄົນອິສຣາເອນ ເປັນເງິນຈຳນວນນຶ່ງພັນສາມຮ້ອຍຫົກສິບຫ້າເຊເກລ ນັບ
ຕາມເຊເກລຂອງສະຖານນະມັສການ
51 ແລະໂມເຊໄດ້ນຳເອົາເງິນຄ່າໄຖ່ໃຫ້ແກ່ອາໂຣນ ແລະລູກຫລານຂອງອາໂຣນຕາມພຣະດຳຣັດຂອງພຣະຜູ້
ເປັນເຈົ້າ ດັ່ງທີ່ ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້

## 4 ຕະກູນໂກຮາດ

The Kohathites

1 ພຣະຜູ້ເປັນເຈົ້າຊົງສັ່ງໂມເຊວ່າ,
2 ຈົ່ງທຳສຳມະໂນຄົວວົງວານໂກຮາດ ຈາກເຜົ່າເຊື້ອສາຍເລວີ ຕາມຕະກູນແລະຕາມຄອບຄົວ
3 ຈາກຄົນທີ່ມີອາຍຸສາມສິບປີເຖິງຫ້າສິບປີ ທຸກຄົນທີ່ເຂົ້າປະຕິບັດງານໄດ້ ເພື່ອທຳງານໃນເຕັນນັດພົບ
4 ນີ້ເປັນງານທີ່ວົງວານໂກຮາດກະທຳໃນເຕັນນັດພົບ ຄືງານທີ່ກະທຳຕໍ່ສິ່ງບໍຣິສຸດທີ່ສຸດ
5 ເມື່ອຈະເຄື່ອນຍ້າຍຄ້າຍໄປ ອາໂຣນແລະບຸດຂອງທ່ານຈະເຂົ້າໄປຂ້າງໃນ ແລະປົດຜ້າກັ້ງກຳບັງອອກເອົາຄຸມ
ຫີບຄຳສັນຍາໄວ້
6 ແລ້ວເອົາຫນັງສັດເນື້ອດີຄຸມ ແລະເອົາຜ້າສີຟ້າລ້ອນຄຸມເທິງນັ້ນ ແລະສອດຄານຫາມ
7 ແລະເອົາຜ້າສີຟ້າປູລົງເທິງໂຕະທີ່ປະທັບແລ້ວວາງຈານແລະຊາມ ຈານໃສ່ເຄື່ອງບູຊາ ແລະເຂົ້າຈີ່ຕັ້ງ
ຖວາຍເປັນນິດກໍໃຫ້ວາງເທິງຜ້າສີຟ້ານັ້ນດ້ວຍ
8 ແລ້ວເອົາຜ້າສີແດງຄຸມ ເທິງນີ້ເອົາຫນັງສັດເນື້ອດີຄຸມອີກແລ້ວສອດຄານຫາມ
9 ແລ້ວໃຫ້ເຂົາເອົາຜ້າສີຟ້າຄຸມເຄື່ອງຮອງຕີນໂຄມທີ່ໃຊ້ຈູດຄຸມຕະກຽງ ຄີມຕັດໄສ້ຕະກຽງ ຖາດແລະພາຊນະໃສ່
ນ້ຳມັນເຕີມຕະກຽງ
10 ເອົາຫນັງສັດເນື້ອດີຫໍ່ຕະກຽງແລະເຄື່ອງປະກອບທັງຫມົດ ແລ້ວໃສ່ໄວ້ເທິງໂຄງຫາມ
11 ໃຫ້ເຂົາເອົາຜ້າສີຟ້າມາຄຸມແທ່ນຄຳ ເອົາຫນັງສັດເນື້ອດີຄຸມໄວ້ ແລ້ວສອດຄານຫາມ
12 ແລະໃຫ້ເຂົາເອົາຜ້າສີຟ້າຫໍ່ພາຊນະເຄື່ອງໃຊ້ຊຶ່ງໃຊ້ຢູ່ໃນສະຖານນະມັສການແລະຄຸມເສັຽດ້ວຍຫນັງສັດເນື້ອດີ
ແລ້ວໃສ່ໄວ້ເທິງໂຄງຫາມ
13 ໃຫ້ເອົາຂີ້ເທົ່າອອກຈາກແທ່ນບູຊາ ເອົາຜ້າສີມ່ວງຄຸມແທ່ນເສັຽ
14 ເອົາພາຊນະປະຈຳແທ່ນທັງຫມົດຊຶ່ງເປັນເຄື່ອງໃຊ້ປະຈຳແທ່ນ ມີຖາດຮອງໄຟ ຂໍເກາະ ຊ້ອນແລະອ່າງ ແລະ
ພາຊນະປະຈຳແທ່ນທັງຫມົດວາງໄວ້ຂ້າງເທິງ ແລ້ວເອົາຫນັງສັດຢ່າງດີຄຸມ ແລະສອດຄານຫາມ
15 ເມື່ອອາໂຣນ ແລະບຸດຊາຍຄຸມສະຖານນະມັສການ ແລະຄຸມເຄື່ອງໃຊ້ຂອງສະຖານນະມັສການແລ້ວ ເມື່ອ
ເຖິງເວລາເຄື່ອນຍ້າຍຄ້າຍ ວົງວານໂກຮາດຈຶ່ງຈະເຂົ້າມາຫາມ ແຕ່ເຂົາຕ້ອງບໍ່ແຕະຕ້ອງຂອງບໍຣິສຸດເຫລົ່ານັ້ນ
ຢ້ານວ່າເຂົາຈະຕ້ອງຕາຍ ສິ່ງເຫລົ່ານີ້ແຫລະທີ່ເປັນຂອງປະຈຳເຕັນນັດພົບຊຶ່ງວົງວານໂກຮາດຈະຕ້ອງຫາມ

16 “ແລ້ວເອເລອາຊາບຸດຊາຍຂອງປະໂຣຫິດອາໂຣນຈະຕ້ອງດູແລນໍ້າມັນສໍາລັບຕາມຕະກຽງ ເຄື່ອງຫອມ ເຄື່ອງ
ທັນຍາບູຊາ ແລະນໍ້າມັນເຈີມ ແລະດູແລເຕັນທັງຫມົດກັບບັນດາສິ່ງຂອງໃນເຕັນນັ້ນ ຄືສະຖານນະມັສການ
ແລະເຄື່ອງປະກອບດ້ວຍ”
17 ພຣະເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,
18 “ຢ່າຕັດເຜົ່າຄອບຄົວຄົນໂກຮາດອອກເສັຽຈາກຄົນເລວີ
19 ແຕ່ຈົ່ງກະທໍາແກ່ເຂົາເພື່ອຈະໃຫ້ມີຊີວິດ ແລະບໍ່ຕາຍ ເມື່ອເຂົາທັງຫລາຍເຂົ້າມາໃກ້ຂອງບໍຣິສຸດເຫລົ່ານັ້ນ ຄືອາ
ໂຣນ ແລະບຸດທັງຫລາຍຂອງອາໂຣນ ຈະເຂົ້າໄປຕັ້ງເຂົາທັງຫລາຍໄວ້ຕາມງານແລະພາຣະຂອງເຂົາທຸກຄົນ
20 ແຕ່ຢ່າໃຫ້ໂກຮາດເຂົ້າໄປເບິ່ງຂອງບໍຣິສຸດແມ້ແຕ່ອຶດໃຈດຽວຢ້ານວ່າເຂົາຈະຕ້ອງຕາຍ”

The Gershonites and Merarites

21 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
22 “ຈົ່ງທໍາສໍາມະໂນຄົວວົງວານເກີໂຊນ ຕາມຕະກູນຕາມຄອບຄົວຂອງເຂົາດ້ວຍ
23 ເຈົ້າຈົ່ງນັບຄົນທີ່ມີອາຍຸຕັ້ງແຕ່ສາມສິບປີເຖິງຫ້າສິບປີ ທຸກຄົນທີ່ເຂົ້າປະຕິບັດງານໄດ້ເພື່ອທໍາງານໃນເຕັນນັດ
ພົບ
24 ຕໍ່ໄປນີ້ເປັນການງານຂອງວົງວານເກີໂຊນ ຄືງານບົວລະບັດແລະງານແບກພາຣະ
25 ໃຫ້ເຂົາທັງຫລາຍຂົນຜ້າກັ້ງເຕັນ ແລະຂົນເຕັນນັດພົບພ້ອມກັບຜ້າຄຸມ ແລະຫນັງສັດເນື້ອດີທີ່ຄຸມຢູ່ຂ້າງເທິງ
ແລະຜ້າກັ້ງສໍາລັບບັງປະຕູເຕັນນັດພົບ
26 ແລະຜ້າກັ້ງບັງລານ ແລະຜ້າກັ້ງທາງເຂົ້າປະຕູລານຊຶ່ງຢູ່ຮອບເຕັນແລະແທ່ນບູຊາ ແລະເຊືອກ ແລະເຄື່ອງໃຊ້
ສອຍທັງຫມົດ ເຂົາຈະຕ້ອງກະທໍາງານທີ່ຄວນກະທໍາທຸກຢ່າງທີ່ກ່ຽວກັບສິ່ງເຫລົ່ານີ້
27 ໃຫ້ອາໂຣນແລະບຸດຊາຍທັງຫລາຍຂອງອາໂຣນບັງຄັບບັນຊາບຸດຊາຍທັງຫລາຍຂອງເກີໂຊນ ເຣື່ອງທຸກສິ່ງທີ່
ເຂົາຈະຕ້ອງຂົນ ແລະງານທຸກຢ່າງທີ່ເຂົາຈະຕ້ອງກະທໍາ ແລະເຈົ້າຈະຕ້ອງກໍານົດທຸກສິ່ງທີ່ເຂົາຈະຕ້ອງຂົນ
28 ນີ້ເປັນການງານຂອງວົງວານເກີໂຊນໃນເຕັນນັດພົບ ແລະອິທາມາບຸດຊາຍຂອງອາໂຣນປະໂຣຫິດຈະບັງຄັບດູ
ແລງານຂອງຄົນເຫລົ່ານັ້ນ
29 “ຝ່າຍເຜົ່າເຊື້ອສາຍຂອງເມຣາຣີນັ້ນເຈົ້າຈົ່ງນັບເຂົາຕາມຕະກູນຕາມຄອບຄົວ
30 ເຈົ້າຈົ່ງນັບຄົນທີ່ມີອາຍຸສາມສິບປີຂຶ້ນໄປເຖິງຫ້າສິບປີ ທຸກຄົນທີ່ເຂົ້າປະຕິບັດງານໄດ້ເພື່ອທໍາງານເຕັນນັດພົບ
31 ແລະຕໍ່ໄປນີ້ເປັນສິ່ງທີ່ກໍານົດໃຫ້ເຂົາຂົນ ງານທັງຫມົດຂອງເຂົາໃນການບົວລະບັດເຕັນນັດພົບ ຄືໄມ້ຂອບເຕັນ
ໄມ້ກອນ ໄມ້ເສົາ ແລະຖານຮອງ
32 ເສົາອ້ອມລານພ້ອມກັບຖານຮອງ ຫລັກຫມຸດແລະເຊືອກ ເຄື່ອງໃຊ້ແລະເຄື່ອງປະກອບສິ່ງເຫລົ່ານີ້ທັງຫມົດ
ເຈົ້າຈົ່ງກໍານົດຊື່ສິ່ງຂອງທີ່ເຂົາຕ້ອງຫາມ
33 ນີ້ເປັນການງານຂອງວົງວານເມຣາຣີ ເປັນງານທັງຫມົດຂອງເຂົາໃນການບົວລະບັດເຕັນນັດພົບ ໃນບັງຄັບບັນ
ຊາຂອງອິທາມາບຸດຊາຍຂອງອາໂຣນປະໂຣຫິດ”

Census of the Levites

34 ໂມເຊແລະອາໂຣນແລະບັນດາຫົວຫນ້າຂອງຊຸມນຸມຊົນໄດ້ນັບເຜົ່າເຊື້ອສາຍຂອງໂກຮາດ ຕາມຕະກູນແລະ
ຕາມຄອບຄົວ
35 ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປເຖິງຫ້າສິບປີທີ່ເຂົ້າປະຕິບັດງານໄດ້ເພື່ອທໍາງານໃນເຕັນນັດພົບ
36 ແລະຈໍານວນຕາມຕະກູນຂອງເຂົາເປັນສອງພັນເຈັດຮ້ອຍຫ້າສິບຄົນ
37 ນີ້ແຫລະເປັນຈໍານວນຄົນໃນຕະກູນໂກຮາດ ບັນດາຜູ້ປະຕິບັດງານໃນເຕັນນັດພົບ ຊຶ່ງໂມເຊແລະອາໂຣນໄດ້
ນັບໄວ້ຕາມທີ່ ພຣະເຈົ້າຊົງສັ່ງໂມເຊ

38 ຈຳນວນຄົນໃນວົງວານເກີໂຊນ ຕາມຕະກູນຕາມຄອບຄົວ
39 ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປເຖິງຫ້າສິບປີທີ່ເຂົ້າປະຕິບັດງານໄດ້ ເພື່ອທຳງານໃນເຕັນນັດພົບ
40 ຈຳນວນຄົນຕາມຕະກູນຕາມຄອບຄົວ ເປັນສອງພັນຫົກຮ້ອຍສາມສິບຄົນ
41 ນີ້ເປັນຈຳນວນຄົນໃນວົງວານເກີໂຊນ ບັນດາຜູ້ປະຕິບັດງານໃນເຕັນນັດພົບ ຊຶ່ງໂມເຊແລະອາໂຣນໄດ້ນັບໄວ້
ຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າ
42 ຈຳນວນຄົນໃນວົງວານເມຣາຣີຕາມຕະກູນຕາມຄອບຄົວ
43 ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປເຖິງຫ້າສິບປີທີ່ເຂົ້າປະຕິບັດງານໄດ້ ເພື່ອທຳງານໃນເຕັນນັດພົບ
44 ຈຳນວນຄົນຕາມຕະກູນຂອງເຂົາເປັນສາມພັນສອງຮ້ອຍຄົນ
45 ນີ້ແຫລະເປັນຈຳນວນຄົນທີ່ນັບໄດ້ໃນວົງວານເມຣາຣີ ຊຶ່ງໂມເຊແລະອາໂຣນໄດ້ນັບໄວ້ຕາມທີ່ພຣະຜູ້ເປັນເຈົ້າ
ຊົງສັ່ງໂມເຊ
46 ບັນດາຄົນເລວີທີ່ນັບໄດ້ ຜູ້ທີ່ໂມເຊແລະອາໂຣນແລະບັນດາຫົວໜ້າຂອງຄົນອິສຣາເອນໄດ້ນັບໄວ້ຕາມຕະກູນ
ຕາມຄອບຄົວ
47 ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປເຖິງຫ້າສິບປີທີ່ເຂົ້າປະຕິບັດງານແລະທຳງານຂົນພາຣະໄດ້ໃນເຕັນນັດ
ພົບ
48 ຈຳນວນຄົນທີ່ນັບໄດ້ນັ້ນເປັນແປດພັນຫ້າຮ້ອຍແປດສິບຄົນ
49 ເຂົາທັງຫລາຍໄດ້ຖືກຕັ້ງຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງທາງໂມເຊ ໃຫ້ທຸກຄົນທຳງານບົວລະບັດ ຫລືງານຂົນ
ຂອງເຂົາ ດັ່ງນີ້ແຫລະໂມເຊໄດ້ນັບເຂົາໄວ້ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

## 5 ການຂັບໄລ່ຜູ້ມົນທິນອອກຈາກຄ້າຍ

Unclean Persons

(ລລວ 15:1-33)

1 ພຣະຜູ້ເປັນເຈົ້າຊົງສັ່ງໂມເຊວ່າ,
2 "ຈົ່ງບັນຊາຄົນອິສຣາເອນໃຫ້ສັ່ງບັນດາຄົນໂຣກເຮື້ອນ ແລະທຸກຄົນທີ່ມີສິ່ງໄຫລອອກ ແລະທຸກຄົນທີ່ມົນທິນ
ເພາະການຖືກຊາກສົບໃຫ້ໄປນອກຄ້າຍ
3 ເຈົ້າຈົ່ງສັ່ງທັງຜູ້ຊາຍແລະຜູ້ຍິງໃຫ້ໄປນອກຄ້າຍ ເພື່ອບໍ່ໃຫ້ເຂົາກະທຳໃຫ້ຄ້າຍຂອງເຂົາຊຶ່ງເຮົາສະຖິດຢູ່ຖ້າມ
ກາງນັ້ນເປັນມົນທິນ"
4 ແລະຄົນອິສຣາເອນກໍກະທຳຕາມ ແລະສັ່ງຄົນເຫລົ່ານັ້ນໃຫ້ໄປນອກຄ້າຍ ພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້ປະ
ການໃດຄົນອິສຣາເອນກໍກະທຳຕາມຢ່າງນັ້ນ

### ກົດໝາຍເຣື່ອງການຄືນຂອງ

Confession and Restitution

( ລລວ 6:1-7 )

5 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
6 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ຜູ້ຊາຍກໍດີ ຫລືຍິງກໍດີກະທຳບາບຢ່າງທີ່ມະນຸດກະທຳ ຄືປະພຶດຝ່າຝືນຕໍ່ພຣະ
ເຈົ້າ ແລະຜູ້ນັ້ນໄດ້ຜິດແລ້ວ
7 ກໍໃຫ້ຜູ້ນັ້ນສາລະພາບຄວາມຜິດທີ່ເຂົາໄດ້ກະທຳ ແລະໃຫ້ເຂົາຄືນສິ່ງທີ່ຜິດຊຶ່ງເຂົາໄດ້ມານັ້ນເຕັມຕາມເດີມທັງ
ເພີ້ມອີກນຶ່ງໃນຫ້າສ່ວນໃຫ້ແກ່ເຈົ້າຂອງເດີມຜູ້ທີ່ເຂົາໄດ້ກະທຳຜິດຕໍ່ນັ້ນ

8 ຖ້າຄົນນັ້ນບໍ່ມີພີ່ນ້ອງທີ່ຈະຮັບຂອງຄືນກໍໃຫ້ຖວາຍຂອງທີ່ຄືນນັ້ນແດ່ພຣະຜູ້ເປັນເຈົ້າທາງປະໂຣຫິດ ຮວມທັງ
ແກະເຖິກສຳລັບບູຊາລ້າງມົນທິນບາບ
9 ແລະຂອງບໍຣິສຸດທີ່ຄົນອິສຣາເອນນຳມາຖວາຍທຸກສິ່ງອັນນຳມາໃຫ້ແກ່ປະໂຣຫິດກໍຕົກເປັນຂອງປະໂຣຫິດ
10 ສິ່ງບໍຣິສຸດຂອງທຸກຄົນໃຫ້ຕົກເປັນຂອງປະໂຣຫິດ ແລະທຸກສິ່ງທີ່ເຂົານຳໄປຖວາຍປະໂຣຫິດກໍຕ້ອງຕົກເປັນ
ຂອງປະໂຣຫິດ"

**ກົດໝາຍເຣື່ອງການຫຶງຫວງ**

Concerning an Unfaithful Wife

11 ແລະພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
12 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ຖ້າເມັຽຂອງຊາຍຄົນໃດຫລົງປະພຶດນອກໃຈຜົວ
13 ມີຊາຍອື່ນມານອນຮ່ວມກັບນາງພົ້ນຕາຜົວຂອງນາງ ເຖິງແມ່ນນາງໄດ້ກະທຳຕົວໃຫ້ເປັນມົນທິນແລ້ວ ແຕ່ບໍ່ມີ
ໃຜຮູ້ເຫັນ ແລະຍັງບໍ່ມີພຍານ ເພາະຈັບບໍ່ໄດ້ຄາທີ່
14 ຈິດຫຶງຫວງກໍມາສິງຜົວ ເຂົາຈຶ່ງຫຶງຫວງເມັຽຂອງເຂົາ ເຖິງແມ່ນວ່າເມັຽບໍ່ໄດ້ທຳຄວາມຜິດ
15 ກໍໃຫ້ຊາຍຜູ້ນັ້ນພາເມັຽຂອງຕົນໄປຫາປະໂຣຫິດນຳເຄື່ອງບູຊາສຳລັບເມັຽໄປ ມີແປ້ງບເລ
ນຶ່ງໃນສິບເອຟາ ຢ່າໃຫ້ເຂົາເທນ້ຳມັນຫລືໃສ່ກຳຍານໃນແປ້ງນັ້ນ ເພາະເປັນທັນຍາບູຊາແຫ່ງຄວາມຣຳລຶກຟື້ນ
ໃຫ້ລະນຶກເຖິງຄວາມຜິດ
16 "ແລະປະໂຣຫິດຈະນຳນາງມາໃກ້ໃຫ້ເຂົ້າເຝົ້າພຣະຜູ້ເປັນເຈົ້າ
17 ແລະປະໂຣຫິດຈະເອົານ້ຳບໍຣິສຸດທີ່ໃສ່ພາຊນະດິນ ເອົາຂີ້ຝຸ່ນທີ່ພື້ນເຕັນສັກສິດໃສ່ໃນນ້ຳມັນ
18 ແລະປະໂຣຫິດຈະໃຫ້ນາງເຂົ້າເຝົ້າພຣະເຈົ້າ ແລະແກ້ມ້ອນຜົມຂອງນາງອອກ ແລະສິ່ງທັນຍາບູຊາແຫ່ງຄວາມ
ຣຳລຶກໃຫ້ນາງຖືໄວ້ ອັນເປັນທັນຍາບູຊາແຫ່ງຄວາມຫຶງຫວງ ແລ້ວປະໂຣຫິດຈະຖືນ້ຳແຫ່ງຄວາມຂົມຂື່ນທີ່ນຳ
ການແຊ່ງສາບນັ້ນໄວ້ເອງ
19 ແລ້ວປະໂຣຫິດຈະໃຫ້ນາງສາບານຕົວວ່າ "ຖ້າບໍ່ມີຊາຍໃດມານອນກັບເຈົ້າ ຫລືເຈົ້າບໍ່ທັນໜີໄປກະທຳມົນທິນ
ເມື່ອເຈົ້າຍັງຢູ່ໃນອຳນາດຂອງສາມີ ກໍໃຫ້ເຈົ້າພົ້ນເສັຽຈາກນ້ຳແຫ່ງຄວາມຂົມຂື່ນທີ່ນຳການສາບແຊ່ງນີ້
20 ແຕ່ຖ້າເຈົ້າໄດ້ຫລົງໄປເຖິງແມ່ນວ່າເຈົ້າຢູ່ໃນອຳນາດຂອງຜົວ ແລະໄດ້ກະທຳຕົວເອງໃຫ້ເປັນມົນທິນ ແລະຊາຍ
ອື່ນນອກຈາກຜົວໄດ້ເຂົ້ານອນດ້ວຍແລ້ວ
21 ກໍ (ໃຫ້ປະໂຣຫິດກະທຳໃຫ້ຍິງນັ້ນກ່າວຄຳສາບານສາບແຊ່ງ ແລະກ່າວແກ່ຜູ້ຍິງນັ້ນວ່າ) ຂໍໃຫ້ພຣະຜູ້ເປັນເຈົ້າ
ຊົງກະທຳເຈົ້າໃຫ້ເປັນຄຳແຊ່ງ ແລະເປັນຄຳສາບຖ້າມກາງຊົນຊາດຂອງເຈົ້າ ໃນເມື່ອພຣະຜູ້ເປັນເຈົ້າກະທຳໃຫ້
ຕົ້ນຂາເຈົ້າລີບ ແລະກະທຳໃຫ້ທ້ອງເຈົ້າໄຄ່ແລ້ວ
22 ຂໍໃຫ້ນ້ຳແຫ່ງຄຳສາບແຊ່ງນີ້ນັ້ນເຂົ້າໃນຕົວເຈົ້າກະທຳໃຫ້ທ້ອງເຈົ້າໄຄ່ ແລະກະທຳໃຫ້ຕົ້ນຂາເຈົ້າລີບໄປ" ແລະ
ນາງນັ້ນຈະຕ້ອງກ່າວວ່າ "ອາແມນ ອາແມນ"
23 "ແລ້ວປະໂຣຫິດຈະຂຽນຄຳສາບນີ້ລົງໃນໜັງສື ແລະລຶບຄວາມນັ້ນອອກເສັຽໃນນ້ຳແຫ່ງຄວາມຂົມຂື່ນ
24 ແລ້ວໃຫ້ຍິງນັ້ນດື່ມນ້ຳແຫ່ງຄວາມຂົມຂື່ນທີ່ນຳການສາບແຊ່ງ ແລ້ວນ້ຳທີ່ນຳການສາບແຊ່ງນັ້ນຈະເຂົ້າໄປໃນ
ຕົວນາງ ກະທຳໃຫ້ນາງເຈັບປວດ
25 ແລະປະໂຣຫິດຈະເອົາທັນຍາບູຊາແຫ່ງຄວາມຫຶງຫວງອອກຈາກມືນາງ ຍື່ນຖວາຍທັນຍາບູຊານັ້ນແດ່ພຣະຜູ້
ເປັນເຈົ້າ ແລ້ວນຳໄປທີ່ແທ່ນບູຊາ
26 ແລະປະໂຣຫິດຈະຫຍິບທັນຍາບູຊາກຳມືນຶ່ງເປັນສ່ວນອະນຸສອນ ແລ້ວເຜົາເສັຽເທິງແທ່ນບູຊາ ແລ້ວຈຶ່ງໃຫ້ຍິງ
ນັ້ນດື່ມນ້ຳນັ້ນ

27 ເມື່ອໃຫ້ຍິງນັ້ນດື່ມນ້ຳແລ້ວ ຖ້ານາງກະທຳຕົວໃຫ້ມົນທິນແລະປະພຶດນອກໃຈຜົວ ນ້ຳທີ່ນຳການສາບແຊ່ງນັ້ນ
ຈະເຂົ້າໃນຕົວນາງກະທຳໃຫ້ເຈັບປວດຂຶ້ນ ທ້ອງຈະໄຄ່ແລະຕົ້ນຂາຈະລີບໄປ ແລະຍິງນັ້ນຈະເປັນຄຳແຊ່ງສາບ
ຖ້າມກາງຊົນຊາດຂອງນາງ
28 ຖ້າຍິງນັ້ນບໍ່ໄດ້ມີມົນທິນ ແຕ່ບໍຣິສຸດ ນາງຈະພົ້ນຄວາມຜິດ ແລະຕັ້ງທ້ອງ
29 "ນີ້ເປັນກົດເຣື່ອງຄວາມຫຶງຫວງ ເມື່ອເມັຽເຖິງແມ່ນວ່າຈະຢູ່ໃນອຳນາດຂອງຜົວໄດ້ຫລົງໄປກະທຳຕົນໃຫ້ມີມົນ
ທິນ
30 ຫລືເມື່ອຈິດຫຶງຫວງສິງຜູ້ຊາຍ ແລະເຂົາຫຶງຫວງເມັຽຂອງເຂົາ ແລ້ວເຂົາຕ້ອງໃຫ້ນາງໄປເຂົ້າເຝົ້າພຣະຜູ້ເປັນ
ເຈົ້າ ແລະປະໂຣຫິດຈະປະຕິບັດຕໍ່ນາງຕາມບັນຍັດນີ້ທຸກປະການ
31 ຜູ້ຊາຍຈຶ່ງຈະພົ້ນຄວາມຜິດ ແຕ່ຜູ້ຍິງຈະຕ້ອງຮັບໂທດຂອງນາງ"

## 6 ກົດຫມາຍເຣື່ອງພວກນາຊີຣີ

The Nazirites

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອຜູ້ຊາຍກໍດີ ແລະຜູ້ຍິງກໍດີ ກະທຳສັດສາບານເປັນພິເສດ ຄືສາບານເປັນຄົນ
ນາຊີຣີ ພືກຕົວອອກຖວາຍແດ່ພຣະຜູ້ເປັນເຈົ້າ
3 ກໍໃຫ້ຜູ້ນັ້ນພືກຕົວອອກຈາກເຫລົ້າອະງຸ່ນ ແລະສຸຣາ ເຂົາຕ້ອງບໍ່ດື່ມນ້ຳສົ້ມທີ່ໄດ້ຈາກເຫລົ້າອະງຸ່ນ ຫລືສຸຣາ ບໍ່
ດື່ມນ້ຳອະງຸ່ນຫລືຮັບປະທານອະງຸ່ນ ບໍ່ວ່າສົດຫລືແຫ້ງ
4 ຕລອດເວລາທີ່ເຂົາພືກຕົວອອກມານັ້ນ ເຂົາຕ້ອງບໍ່ຮັບປະທານສິ່ງໃດທີ່ໄດ້ຈາກຕົ້ນອະງຸ່ນ ທັງເປັນເມັດ ຫລື
ເປືອກອະງຸ່ນກໍດີ
5 ຕລອດເວລາທີ່ເຂົາສາບານພືກຕົວອອກມານັ້ນ ຢ່າໃຫ້ມີດໂກນຖືກຫົວຂອງເຂົາ ເຂົາຕ້ອງບໍຣິສຸດຈົນກວ່າຈະ
ສິ້ນກຳນົດເວລາທີ່ເຂົາພືກຕົວອອກມາຖວາຍແດ່ພຣະຜູ້ເປັນເຈົ້າ ເຂົາຈະຕ້ອງຈຶ່ງຜົມຍາວ
6 "ຕລອດເວລາທີ່ເຂົາພືກຕົວອອກມາເພື່ອພຣະຜູ້ເປັນເຈົ້າ ເຂົາຕ້ອງບໍ່ເຂົ້າໃກ້ສົບຄົນຕາຍ
7 ຢ່າທຳຕົວໃຫ້ມີມົນທິນດ້ວຍບິດາມານດາ ຫລືພີ່ນ້ອງຊາຍຍິງທີ່ຕາຍ ເຂົາບໍ່ຄວນເຂົ້າໄປໃກ້ໃຫ້ເສັຽຄວາມບໍຣິ
ສຸດ ເພາະວ່າຜົມຂອງເຂົາເປັນເຄື່ອງຫມາຍໃນການອຸທິດຖວາຍຕົວຕໍ່ພຣະຜູ້ເປັນເຈົ້າ
8 ຕລອດເວລາທີ່ເປັນຄົນນາຊີຣີຢູ່ນັ້ນ ເຂົາຕ້ອງທຳຕົນໃຫ້ບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ
9 "ແລະຖ້າມີຄົນມາຕາຍຢູ່ໃກ້ຕົວເຂົາປັດຈຸບັນທັນດ່ວນ ຫົວຂອງເຂົາທີ່ຊຳຣະໃຫ້ບໍຣິສຸດໄວ້ກໍເປັນມົນທິນເສັຽ
ແລ້ວ ເຂົາຕ້ອງແຖຜົມຂອງເຂົາໃນວັນຊຳຣະຕົວຄືໃນວັນທີເຈັດນັ້ນເຂົາຕ້ອງແຖຜົມ
10 ໃນວັນທີແປດເຂົາຕ້ອງນຳນົກເຂົາສອງຕົວ ຫລືນົກກາງແກສອງຕົວໄປໃຫ້ປະໂຣຫິດທີ່ປະຕູເຕັນນັດພົບ
11 ແລະປະໂຣຫິດຈະຖວາຍບູຊາຕົວນຶ່ງເປັນເຄື່ອງບູຊາໄຖ່ບາບ ອີກຕົວນຶ່ງຖວາຍເປັນເຄື່ອງເຜົາບູຊາລ້າງມົນທິນ
ໃຫ້ເຂົາ ເພາະເຂົາໄດ້ກະທຳຜິດເຫດເຣື່ອງສົບຄົນຕາຍ ແລະເຂົາຕ້ອງຊຳຣະຫົວໃຫ້ບໍຣິສຸດໃນວັນນັ້ນອີກ
12 ແລະໃຫ້ເຂົາພືກຕົວອອກເພື່ອພຣະຜູ້ເປັນເຈົ້າ ຕລອດເວລາການພືກຕົວຂອງເຂົາ ແລະນຳແກະເຖິກອາຍຸນຶ່ງ
ປີມາເປັນເຄື່ອງບູຊາໄຖ່ກັມບາບ ແຕ່ເວລາກ່ອນນັ້ນນັບບໍ່ໄດ້ ເພາະການປະຕິຍານພືກຕົວຂອງເຂົານັ້ນມີມົນ
ທິນເສັຽແລ້ວ
13 "ເມື່ອເວລາພືກຕົວຂອງເຂົາຄົບແລ້ວ ກົດຂອງພວກນາຊີຣີມີດັ່ງນີ້ ໃຫ້ນຳເຂົາມາທີ່ປະຕູເຕັນນັດພົບ
14 ໃຫ້ເຂົາຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ ຄືລູກແກະເຖິກອາຍຸນຶ່ງປີທີ່ປາສຈາກຕຳຫນິເປັນເຄື່ອງເຜົາບູຊາ
ແລະລູກແກະແມ່ອາຍຸນຶ່ງປີທີ່ປາສຈາກຕຳຫນິເປັນເຄື່ອງບູຊາໄຖ່ບາບ ແລະແກະເຖິກໂຕນຶ່ງທີ່ປາສຈາກຕຳ
ຫນິເປັນເຄື່ອງສານຕິບູຊາ

15 ແລະເຂົ້າຫນົມທີ່ບໍ່ມີເຊື້ອແປ້ງຖາດນຶ່ງ ເຂົ້າຫນົມເຮັດດ້ວຍຍອດແປ້ງປົນໃສ່ນ້ຳມັນ ເຂົ້າຫນົມແຜ່ນທີ່ບໍ່ມີເຊື້ອ
ແປ້ງທານ້ຳມັນ ພ້ອມກັບເຄື່ອງທັນຍາບູຊາ ແລະເຄື່ອງດື່ມບູຊາທີ່ຄູ່ກັນ
16 ແລະປະໂຣຫິດຈະນຳຂອງເຫລົ່ານີ້ສເນີພຣະຜູ້ເປັນເຈົ້າແລ້ວຖວາຍເຄື່ອງບູຊາໄຖ່ບາບແລະເຄື່ອງເຜົາບູຊາ
17 ແລະປະໂຣຫິດຈະຖວາຍແກະເຖິກເປັນເຄື່ອງສານຕິບູຊາແດ່ພຣະຜູ້ເປັນເຈົ້າ ພ້ອມກັບເຂົ້າຫນົມທີ່ບໍ່ມີເຊື້ອແປ
້ງຖາດນຶ່ງ ປະໂຣຫິດຈະຖວາຍທັນຍາບູຊາແລະເຄື່ອງດື່ມບູຊາທີ່ຄູ່ກັນດ້ວຍ
18 ແລະຜູ້ເປັນນາຊີຣີຈະແຖຫົວທີ່ສາບານນັ້ນທີ່ປະຕູເຕັນນັດພົບ ແລະນຳເອົາຜົມທີ່ຫົວທີ່ສາບານໄວ້ນັ້ນໄປໃສ່
ໄຟທີ່ຢູ່ໃຕ້ເຄື່ອງສານຕິບູຊາເສັຽ
19 ເມື່ອຜູ້ເປັນນາຊີຣີແຖຜົມທີ່ເຂົາສາບານແລ້ວ ປະໂຣຫິດຈະນຳຊີ້ນສັນຂາຫນ້າຂອງແກະເຖິກທີ່ຕົ້ມແລ້ວ ກັບ
ເຂົ້າຫນົມບໍ່ມີເຊື້ອແປ້ງກ້ອນນຶ່ງໃນຖາດ ແລະເຂົ້າຫນົມແຜ່ນບໍ່ມີເຊື້ອແປ້ງແຜ່ນນຶ່ງວາງໄວ້ໃນມືຂອງທັງສອງ
ຂອງຜູ້ເປັນນາຊີຣີນັ້ນ
20 ຫລັງຈາກນັ້ນ ປະໂຣຫິດຈະຕ້ອງນຳສິ່ງເຫລົ່ານີ້ສເນີຕໍ່ພຣະຜູ້ເປັນເຈົ້າ ເພື່ອເປັນຂອງຂວັນສັກສິດສຳລັບປະ
ໂຣຫິດ ນອກຈາກນີ້ ຊີ້ນຫນ້າເອິກ ແລະຂາຂອງແກະຕ້ອງຕັດເປັນຂອງປະໂຣຫິດ ຈາກນັ້ນຜູ້ເປັນນາຊີຣີຈຶ່ງດື່ມ
ເຫລົ້າອະງຸ່ນໄດ້
21 "ນີ້ເປັນບັນຍັດຂອງຜູ້ເປັນນາຊີຣີຜູ້ສາບານ ແລະເຄື່ອງບູຊາຂອງເຂົາທີ່ຖວາຍແດ່ພຣະຜູ້ເປັນເຈົ້າໃນການປົກ
ຕົວ ນອກຈາກສິ່ງອື່ນໆທີ່ເຂົາຖວາຍໄດ້ເປັນເຄື່ອງບູຊາຕາມທີ່ເຂົາສາບານເປັນນາຊີຣີນັ້ນ ດັ່ງນັ້ນແຫລະເຂົາ
ຕ້ອງກະທຳຕາມກົດຂອງການພືກຕົວອອກໄປເປັນນາຊີຣີຕາມທີ່ເຂົາໄດ້ສາບານໄວ້"

**ຄຳອວຍພອນແບບປະໂຣຫິດ**

The Priestly Benediction

22 ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊວ່າ,
23 ຈົ່ງກ່າວແກ່ອາໂຣນ ແລະບຸດທັງຫລາຍຂອງອາໂຣນວ່າ ທ່ານທັງຫລາຍຈົ່ງອວຍພອນແກ່ຄົນອິສຣາເອນດັ່ງຕໍ່
ໄປນີ້ ຄືກ່າວແກ່ເຂົາທັງຫລາຍວ່າ
24 ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນແກ່ທ່ານ ແລະພິທັກຮັກສາທ່ານ
25 ຂໍພຣະຜູ້ເປັນເຈົ້າຊົງໃຫ້ພຣະພັກຂອງພຣະອົງສ່ອງແສງແກ່ທ່ານ ແລະຊົງພຣະກະຣຸນາທ່ານ
26 ຂໍພຣະຜູ້ເປັນເຈົ້າຊົງເງີຍພຣະພັກຂອງພຣະອົງເຫນືອທ່ານ ແລະປະທານຄວາມສງົບສຸກແກ່ທ່ານ
27 ດັ່ງນັ້ນແຫລະໃຫ້ເຂົາປະທັບນາມຂອງເຮົາເຫນືອຄົນອິສຣາເອນ ແລະເຮົາຈະໄດ້ອວຍພອນແກ່ເຂົາທັງຫລາຍ"

## 7 ການຖວາຍຂອງພວກ ຫົວຫນ້າ

Offerings of the Leaders

1 ເມື່ອວັນທີ່ໂມເຊຈັດຕັ້ງຫໍເຕັນສັກສິດແລ້ວ ແລະໄດ້ທົດສົງແລະໄດ້ຊຳຣະເຕັນກັບບັນດາເຄື່ອງໃຊ້ສອຍປະຈຳ
ຫໍເຕັນສັກສິດໃຫ້ບໍຣິສຸດ ແລະໄດ້ທົດສົງແລະຊຳຣະແທ່ນບູຊາກັບພາຊນະປະຈຳທັງຫມົດໃຫ້ບໍຣິສຸດແລ້ວ
2 ບັນດາຫົວຫນ້າຂອງຄົນອິສຣາເອນ ຫົວຫນ້າຕະກູນ ຄືຫົວຫນ້າຂອງເຜົ່າຕ່າງໆຜູ້ຢູ່ເຫນືອຜູ້ທີ່ຂຶ້ນທະບຽນໄວ້
3 ໄດ້ນຳຂອງບູຊາມາຖວາຍແດ່ພຣະຜູ້ເປັນເຈົ້າ ມີກວຽນຫົກລຳກັບງົວທີກຄູ່ ຫົວຫນ້າສອງຄົນນຳກວຽນລຳນຶ່ງ
ແລະງົວຄົນລະໂຕຖວາຍເສັຽທີ່ຫນ້າເຕັນສັກສິດ
4 ແລ້ວພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ,
5 "ຈົ່ງຮັບຂອງເຫລົ່ານີ້ໄວ້ຈາກເຂົາເພື່ອຈະໄດ້ໃຊ້ໃນການທຳງານຂອງເຕັນນັດພົບຈົ່ງມອບໄວ້ກັບຄົນເລວີແກ່ທຸກ
ຄົນຕາມ ງານບົວລະບັດຂອງເຂົາ"
6 ໂມເຊຈຶ່ງນຳກວຽນ ແລະງົວໄປມອບໃຫ້ແກ່ຄົນເລວີ

7 ທ່ານໃຫ້ກວຽນສອງລຳກັບງົວສອງຄູ່ແກ່ບຸດທັງຫລາຍຂອງເກີໂຊນຕາມງານບົວລະບັດຂອງເຂົາ
8 ທ່ານມອບກວຽນສີ່ລຳ ແລະງົວສີ່ຄູ່ໃຫ້ແກ່ບຸດທັງຫລາຍຂອງເມຣາຣີ ຕາມງານບົວລະບັດຂອງເຂົາຊຶ່ງເປັນຕາມ
ຄຳຊີ້ແຈງຂອງອີທາມາບຸດອາໂຣນປະໂຣຫິດ
9 ແຕ່ທ່ານບໍ່ໄດ້ມອບສິ່ງໃດໃຫ້ແກ່ບຸດຂອງໂກຮາດ ເພາະງານບົວລະບັດຂອງເຂົາເປັນງານທີ່ຕ້ອງຫາມສິ່ງຂອງ
ບໍຣິສຸດ
10 ແລະບັນດາຫົວຫນ້າກໍນຳຂອງບູຊາມາເພື່ອແກ່ການສະຫລອງແທ່ນບູຊາໃນວັນທີ່ທຳພິທີທົດສົງແທ່ນບູຊານັ້ນ
ແລະພວກຫົວຫນ້າຕ່າງກໍຖວາຍເຄື່ອງບູຊາຂອງຕົນຫນ້າແທ່ນບູຊາ
11 ພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ, “ໃຫ້ພວກຫົວຫນ້າມາຖວາຍເຄື່ອງບູຊາຂອງເຂົາມື້ລະຄົນໃນງານສະຫລອງ
ແທ່ນບູຊາ
12 ຜູ້ທີ່ຖວາຍເຄື່ອງບູຊາໃນວັນແຣກຄື ນາໂຊນບຸດອັມມີນາດາບ ແຫ່ງເຜົ່າຢູດາ
13 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ແລະຊາມເງິນໃບນຶ່ງຫນັກເຈັດສິບເຊເກລ
ຕາມເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນໃສ່ນ້ຳມັນເຕັມເພື່ອເປັນທັນຍາບູຊາ
14 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
15 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
16 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
17 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງ
ເຫລົ່ານີ້ເປັນຂອງຖວາຍຂອງນາໂຊນບຸດຂອງອັມມີນາດາບ
18 ວັນທີສອງເນທານເອນບຸດຊູອາ ຫົວຫນ້າເຜົ່າອິສຊາຄາຖວາຍຂອງ
19 ເຂົາຖວາຍຂອງຖວາຍຂອງເຂົາເປັນຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດ
ສິບເຊເກລ ເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນໃສ່ນ້ຳມັນເຕັມ ເພື່ອເປັນທັນ
ຍາບູຊາ
20 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລມີເຄື່ອງຫອມສຳລັບເຜົາເຕັມ
21 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງເປັນເຄື່ອງເຜົາບູຊາ
22 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
23 ແລະງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ
ສິ່ງເຫລົ່ານີ້ເປັນຂອງຖວາຍຂອງເນທານເອນບຸດຊູອາ
24 ວັນທີສາມເອລີອາບບຸດເຮໂລນ ຫົວຫນ້າຂອງຄົນເຜົ່າເຊບູລູນ
25 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ
ຕາມເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນໃສ່ນ້ຳມັນເຕັມ ເພື່ອເປັນທັນຍາບູຊາ
26 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
27 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
28 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
29 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງ
ເຫລົ່ານີ້ເປັນຂອງຖວາຍຂອງເອລີອາບບຸດເຮໂລນ
30 ວັນທີສີ່ເອລີຊູ ບຸດເຊເດອູ ຫົວຫນ້າຂອງຄົນເຜົ່າຣູເບນ
31 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ
ຕາມເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນໃສ່ນ້ຳມັນເຕັມ ເພື່ອເປັນທັນຍາບູຊາ

32 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລມີເຄື່ອງຫອມສຳລັບເຜົາເຕັມ
33 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
34 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
35 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູບາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງເອລີຊູບຸດເຊເດອູ
36 ວັນທີຫ້າ ເຊລູມີເອນ ບຸດຊູຣີຊັດດັຍ ຫົວຫນ້າຂອງຄົນເຜົ່າຊີເມໂອນ
37 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນນ້ຳໃສ່ມັນເຕັມ ເພື່ອເປັນທັນຍາບູຊາ
38 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
39 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
40 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
41 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສັນຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງເຊລູມີເອນ ບຸດຊູຣີຊັດດັຍ
42 ວັນທີຫົກ ເອລີອາສາຟ ບຸດເດອູເອນ ຫົວຫນ້າຂອງຄົນເຜົ່າກາດ
43 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ພາຊນະທັງສອງນີ້ມີຍອດແປ້ງປົນໃສ່ນ້ຳມັນເຕັມ ເພື່ອເປັນທັນຍາບູຊາ
44 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
45 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
46 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
47 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສັນຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງເອລີອາສາບ ບຸດເດອູເອນ
48 ວັນທີເຈັດ ເອລີຊາມາ ບຸດອັມມີຮູດ ຫົວຫນ້າຂອງຄົນເຜົ່າເອຟຣາອິມ
49 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ເພື່ອເປັນທັນຍາບູຊາ
50 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
51 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
52 ແບ້ເຖິກໂຕນຶ່ງເປັນເຄື່ອງເຜົາບູຊາ
53 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງເອລີຊາມາ ບຸດອັມມີຮູດ
54 ວັນທີແປດ ກາມາລີເອນ ບຸດເປດາຊູ ຫົວຫນ້າຂອງຄົນເຜົ່າມານັສເຊ
55 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ເພື່ອເປັນທັນຍາບູຊາ
56 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ
57 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ
58 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
59 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງກາມາລີເອນ ບຸດເປດາຊູ

60 ວັນທີເກົ້າ ອາບີດານ ບຸດກີເດໂອນີ ຫົວຫນ້າຂອງຄົນເຜົ່າເບັນຢາມິນ

61 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ເພື່ອເປັນທັນຍາບູຊາ

62 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ

63 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ

64 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

65 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງອາບີດານ ບຸດກີເດໂອນີ

66 ວັນທີສິບ ອາຮີເອເຊີ ບຸດອັມມີຊັດດັຍ ຫົວຫນ້າຂອງຄົນເຜົ່າດານ

67 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການເພື່ອເປັນທັນຍາບູຊາ

68 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ

69 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ

70 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

71 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງອາຮີເອເຊີ ບຸດອັມມີຊັດດັຍ

72 ວັນທີສິບເອັດ ປາກີເອນບຸດໂອກຣານ ຫົວຫນ້າຂອງຄົນເຜົ່າອາເຊີ

73 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການເພື່ອເປັນທັນຍາບູຊາ

74 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ

75 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ

76 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

77 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງປາກີເອນ ບຸດໂອກຣານ

78 ວັນທີສິບສອງ ອາຮີຣາ ບຸດເອນານ ຫົວຫນ້າຂອງຄົນເຜົ່າເນັຟທາລີ

79 ຂອງຖວາຍຂອງເຂົາຄືຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ຊາມເງິນໃບນຶ່ງຫນັກເຈັດສິບເຊເກລ ຕາມເຊເກລຂອງສະຖານນະມັສການ ເພື່ອເປັນທັນຍາບູຊາ

80 ຖ້ວຍທອງຄຳໃບນຶ່ງຫນັກສິບເຊເກລ ມີເຄື່ອງຫອມສຳລັບເຜົາເຕັມ

81 ລູກງົວເຖິກໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີໂຕນຶ່ງ ເປັນເຄື່ອງເຜົາບູຊາ

82 ແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

83 ງົວເຖິກສອງໂຕ ແກະເຖິກຫ້າໂຕ ແບ້ເຖິກຫ້າໂຕ ລູກແກະເຖິກອາຍຸນຶ່ງປີຫ້າໂຕ ເປັນເຄື່ອງສານຕິບູຊາ ສິ່ງເຫລົ່ານີ້ເປັນຂອງຖວາຍຂອງອາຮີຣາ ບຸດເອນານ

84 ຕໍ່ໄປນີ້ເປັນຂອງຖວາຍໃນງານສລອງແທ່ນບູຊາຈາກຫົວຫນ້າຂອງຄົນອິສຣາເອນ ໃນວັນທີ່ມີພິທີຫົດສົງແທ່ນບູຊານັ້ນ ຄືຈານເງິນສິບສອງໃບ ຊາມເງິນສິບສອງໃບ ຖ້ວຍຄຳສິບສອງໃບ

85 ຈານເງິນໃບນຶ່ງຫນັກນຶ່ງຮ້ອຍສາມສິບເຊເກລ ແລະຊາມໃບນຶ່ງຫນັກເຈັດສິບເຊເກລ ເງິນທີ່ທຳພາຊນະທັງຫມົດຫນັກສອງພັນສີ່ຮ້ອຍເຊເກລ ຕາມເຊເກລຂອງສະຖານນະມັສການ

86 ຖ້ວຍຄຳສິບສອງໃບມີເຄື່ອງຫອມສຳລັບເຜົາເຕັມ ຫນັກໃບລະສິບເຊເກລ ຕາມເຊເກລຂອງສະຖານນະມັສ
ການ ຄຳທີ່ເຮັດຖ້ວຍທັງຫມົດຫນັກນຶ່ງຮ້ອຍຊາວເຊເກລ
87 ສັດສຳລັບເຄື່ອງເຜົາບູຊາ ມີງົວເຖິກສິບສອງໂຕ ແກະເຖິກສິບສອງໂຕ ລູກແກະເຖິກອາຍຸນຶ່ງປີສິບສອງໂຕ
ພ້ອມກັບເຄື່ອງທັນຍາບູຊາຄູ່ກັນ ແລະແບ້ເຖິກສິບສອງໂຕສຳລັບເປັນເຄື່ອງບູຊາໄຖ່ບາບ
88 ສັດທັງຫມົດທີ່ຂ້າຖວາຍເປັນເຄື່ອງສານຕິບູຊາ ມີງົວເຖິກຊາວສີ່ໂຕ ແກະເຖິກຫົກສິບ ແບ້ເຖິກຫົກສິບ ແລະລູກ
ແກະເຖິກອາຍຸນຶ່ງປີຫົກສິບໂຕ ນີ້ແຫລະເປັນຂອງຖວາຍໃນງານສະຫລອງແທ່ນບູຊາເມື່ອໄດ້ກະທຳການທົດ
ສົງແລ້ວ
89 ເມື່ອໂມເຊໄດ້ເຂົ້າໄປໃນເຕັນນັດພົບເພື່ອຈະກາບທູນພຣະອົງ ທ່ານໄດ້ຍິນພຣະສຸຣະສຽງກ່າວກັບທ່ານມາ
ຈາກພຣະທີ່ນັ່ງກະຣຸນາ ຊຶ່ງຢູ່ເທິງຫີບພຣະໂອວາດຖ້າມກາງເຊຣູບິມທັງສອງ ແລະພຣະສຸຣະສຽງນັ້ນໄດ້ສົນ
ທະນາກັບທ່ານ

## 8 ການຕັ້ງຕະກຽງ

The Seventh Lamps

(ອພຍ 25:31-40)

1 ພຣະເຈົ້າຊົງກ່າວແກ່ໂມເຊວ່າ,

2 ຈົ່ງກ່າວແກ່ອາໂຣນວ່າ ເມື່ອຈະຕັ້ງຕະກຽງໃຫ້ຕະກຽງທັງເຈັດສ່ອງແສງຂ້າງຫນ້າເຄື່ອງຮອງຕີນໂຄມ

3 ແລະອາໂຣນໄດ້ກະທຳດັ່ງນັ້ນທ່ານໄດ້ຕັ້ງຕະກຽງໃຫ້ສ່ອງແສງອອກດ້ານຫນ້າເຄື່ອງຮອງຕີນໂຄມ ຕາມທີ່ພຣະ
ຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ

4 ສິນີທີ່ທຳເຄື່ອງຮອງຕີນໂຄມເປັນດັ່ງນີ້ ເປັນຄຳໃຊ້ຄ້ອນທຸບ ຕັ້ງແຕ່ຖານຂຶ້ນໄປເຖິງດອກເປັນສິນີຄ້ອນ
ຕາມແບບຢ່າງທີ່ ພຣະຜູ້ເປັນເຈົ້າສຳແດງແກ່ໂມເຊ ເຂົາຈຶ່ງເຮັດເຄື່ອງຮອງຕີນໂຄມດັ່ງນັ້ນ

### ການຊຳຣະຕັ້ງຄົນເລວີ

Consecration and Service of the Levites

5 ແລະພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

6 "ຈົ່ງແຍກຄົນເລວີອອກຈາກຄົນອິສຣາເອນ ແລະຊຳຣະເຂົາທັງຫລາຍເສັຽ

7 ເຈົ້າຈົ່ງຊຳຣະເຂົາດັ່ງນີ້ ຈົ່ງເອົານ້ຳຊຳຣະມາປະພົມເຂົາ ໃຫ້ເຂົາແຖຂົນຕາມຕົນຕົວ ໃຫ້ຊັກຜ້າແລະຊຳຣະຕົວ
ໃຫ້ສະອາດ

8 ແລ້ວໃຫ້ເຂົາທັງຫລາຍນຳລູກງົວເຖິກ ກັບເຄື່ອງທັນຍາບູຊາຄູ່ກັນ ຄືຍອດແປ້ງປົນໃສ່ນ້ຳມັນ ແລະເຈົ້າຈົ່ງນຳ
ລູກງົວເຖິກອີກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

9 ແລ້ວຈົ່ງພາຄົນເລວີມາຫນ້າເຕັນນັດພົບ ແລະໃຫ້ຄົນອິສຣາເອນມາຊຸມນຸມພ້ອມກັນຫມົດ

10 ເມື່ອເຈົ້ານຳຄົນເລວີມາກາບທູນພຣະຜູ້ເປັນເຈົ້າ ໃຫ້ຄົນອິສຣາເອນເອົາມືຂອງເຂົາວາງເທິງຄົນເລວີ

11 ແລະໃຫ້ອາໂຣນຖວາຍຄົນເລວີແດ່ພຣະຜູ້ເປັນເຈົ້າໃຫ້ເປັນເຄື່ອງຍື່ນຖວາຍຈາກປະຊາຊົນອິສຣາເອນ ເພື່ອ
ເຂົາຈະໄດ້ທຳງານບົວລະບັດພຣະຜູ້ເປັນເຈົ້າ

12 ແລ້ວຄົນເລວີຈະເອົາມືຂອງຕົນວາງເທິງຫົວງົວເຖິກທັງສອງ ເຈົ້າຈົ່ງເອົາໂຕນຶ່ງມາຖວາຍເປັນເຄື່ອງບູຊາ
ໄຖ່ບາບ ແລະອີກໂຕນຶ່ງໃຫ້ເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ເພື່ອລຶບມົນທິນບາບຂອງຄົນເລວີ

13 ເຈົ້າຈົ່ງຕັ້ງຄົນເລວີໃຫ້ຄອຍຮັບໃຊ້ອາໂຣນ ແລະບຸດທັງຫລາຍຂອງອາໂຣນ ແລະຈົ່ງຖວາຍເຂົາທັງຫລາຍໃຫ້
ເປັນເຄື່ອງຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ

14 "ສັນນີ້ແຫລະເຈົ້າຈົ່ງແຍກຄົນເລວີອອກຈາກຄົນອິສຣາເອນ ແລະຄົນເລວີຈະເປັນຂອງເຮົາ

15 ຕັ້ງແຕ່ນັ້ນໄປຄົນເລວີຈະເຂົ້າໄປບົວລະບັດງານທີ່ເຕັນນັດພົບ ໃນເມື່ອເຈົ້າໄດ້ຊໍາຣະເຂົາ ແລະກະທໍາການຍື່ນ
ຖວາຍເຂົາໄວ້ແລ້ວ
16 ເພາະເຂົາທັງຫມົດຖືກແຍກອອກຈາກຄົນອິສຣາເອນ ແລະມອບໄວ້ແກ່ເຮົາ ເຮົາໄດ້ຮັບເຂົາມາເປັນຂອງເຮົາ
ແລ້ວ ແທນທຸກຄົນທີ່ເກີດຈາກຄັນມານດາກ່ອນຄືແທນບຸດຫົວປີຂອງປະຊາຊົນອິສຣາເອນ
17 ເພາະວ່າລູກຫົວປີທັງຫມົດຂອງຄົນອິສຣາເອນເປັນຂອງເຮົາທັງຄົນແລະສັດ ໃນວັນທີ່ເຮົາໄດ້ສັງຫານລູກຫົວປີ
ໃນແຜ່ນດິນເອຢິບ ເຮົາໄດ້ເລືອກເຂົາໄວ້ເປັນຂອງເຮົາ
18 ແລະເຮົາໄດ້ເລືອກຄົນເລວີແທນບຸດຫົວປີຂອງຄົນອິສຣາເອນ
19 ແລະເຮົາໄດ້ໃຫ້ຄົນເລວີຈາກຄົນອິສຣາເອນໄວ້ກັບອາໂຣນແລະບຸດຂອງອາໂຣນ ໃຫ້ປະຕິບັດງານແທນຄົນອິ
ສຣາເອນທີ່ເຕັນນັດພົບ ແລະທໍາການລ້າງມົນທິນໃຫ້ຄົນອິສຣາເອນ ເພື່ອວ່າຈະບໍ່ມີໄພວິບັດບັງເກີດແກ່ຄົນອິສ
ຣາເອນ ເມື່ອເຂົາເຂົ້າມາໃກ້ສະຖານນະມັສການ"
20 ໂມເຊ ແລະອາໂຣນ ແລະຊຸມນຸມຊົນອິສຣາເອນທັງຫມົດໄດ້ກະທໍາຕໍ່ຄົນເລວີດັ່ງນັ້ນ ຕາມທີ່ພຣະຜູ້ເປັນເຈົ້າ
ຊົງສັ່ງໂມເຊໃນເຣື່ອງຄົນເລວີທຸກປະການ ຄົນອິສຣາເອນກໍກະທໍາດັ່ງນັ້ນ
21 ຄົນເລວີໄດ້ຊໍາຣະຕົນໃຫ້ສິ້ນບາບ ແລະຊັກເສື້ອຜ້າຂອງຕົນ ແລະອາໂຣນກໍທໍາພິທີຍື່ນຖວາຍເຂົາແດ່ພຣະຜູ້
ເປັນເຈົ້າ ແລະອາໂຣນທໍາການລົບມົນທິນຊໍາຣະເຂົາ
22 ແຕ່ນັ້ນມາຄົນເລວີກໍເຂົ້າໄປປະຕິບັດໃນເຕັນນັດພົບ ໃນການຮັບໃຊ້ອາໂຣນ ແລະບຸດຊາຍຂອງອາໂຣນ ຕາມ
ທີ່ພຣະຜູ້ເປັນເຈົ້າຕຣັສສັ່ງໂມເຊເຣື່ອງຄົນເລວີ ເຂົາຈຶ່ງໄດ້ກະທໍາຢ່າງນັ້ນແກ່ເຂົາທັງຫລາຍ

**ກໍານົດອາຍຸຄົນເລວີເມື່ອປະຕິບັດງານ**

23 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
24 ເຣື່ອງນີ້ກ່ຽວກັບຄົນເລວີ ໃຫ້ຄົນເລວີທີ່ມີອາຍຸຕັ້ງແຕ່ຊາວຫ້າປີຂຶ້ນໄປ ເຂົ້າໄປປະຕິບັດງານໃນເຕັນນັດພົບ
25 ພໍອາຍຸໄດ້ຫ້າສິບປີໃຫ້ເຂົາຢຸດປະຕິບັດບໍ່ຕ້ອງທໍາງານຕໍ່ໄປ
26 ແຕ່ໃຫ້ເຂົາຊ່ອຍພີ່ນ້ອງໃນເຕັນນັດພົບດູແລການງານ ບໍ່ຕ້ອງລົງມືທໍາເອງ ເຈົ້າຈົ່ງກະທໍາເຊັ່ນນີ້ແກ່ຄົນເລວີເມື່ອ
ກໍານົດງານໃຫ້ເຂົາ"

## 9 ການຖືເທສການປັສຄາ

The Passover at Sinai

(ອພຍ 12:1-20)

1 ໃນເດືອນທີນຶ່ງປີທີສອງຕັ້ງແຕ່ເຂົາທັງຫລາຍອອກຈາກແຜ່ນດິນເອຢິບ ພຣະຜູ້ເປັນເຈົ້າກ່າວກັບໂມເຊທີ່ຖິ່ນກັນ
ດານຊີນາອີວ່າ,
2 "ໃຫ້ຄົນອິສຣາເອນຖືເທສການປັສຄາ ຕາມເວລາທີ່ກໍານົດໄວ້
3 ຄືເດືອນນີ້ໃນວັນຂຶ້ນສິບສີ່ຄໍ່າ ເວລາຄໍ່າ ເຈົ້າທັງຫລາຍຈົ່ງຖືເທສການປັສຄາຕາມເວລາທີ່ກໍານົດນັ້ນ ເຈົ້າຈົ່ງກະ
ທໍາຕາມກົດເກນແລະກົດຫມາຍທັງສິ້ນຂອງເທສການນັ້ນ"
4 ໂມເຊຈຶ່ງບອກຄົນອິສຣາເອນໃຫ້ຖືເທສການປັສຄາ
5 ເຂົາທັງຫລາຍໄດ້ຖືເທສການປັສຄາໃນເດືອນທີນຶ່ງຂຶ້ນສິບສີ່ຄໍ່າເວລາຄໍ່າທີ່ຖິ່ນກັນດານຊີນາອີ ທີ່ພຣະຜູ້ເປັນ
ເຈົ້າສັ່ງໂມເຊທຸກປະການ ຄົນອິສຣາເອນກໍກະທໍາຕາມຢ່າງນັ້ນ
6 ມີຜູ້ຊາຍບາງຄົນທີ່ມີມົນທິນເພາະຖືກຕ້ອງສົບ ຈຶ່ງຖືປັສຄາໃນວັນນັ້ນບໍ່ໄດ້ ເຂົາຈຶ່ງມາຢູ່ຕໍ່ຫນ້າໂມເຊແລະອາ
ໂຣນໃນວັນນັ້ນ

7 ເຂົາເຫລົ່ານັ້ນກ່າວແກ່ທ່ານວ່າ, "ເຮົາມີມົນທິນເພາະໄດ້ຖືກຕ້ອງສົບ ເປັນຫຍັງຈຶ່ງຫ້າມບໍ່ໃຫ້ເຮົາຖວາຍເຄື່ອງບູ
ຊາຂອງ  ພຣະຜູ້ເປັນເຈົ້າຕາມວັນກຳນົດຖ້າມກາງຄົນອິສຣາເອນ"
8 ໂມເຊບອກເຂົາວ່າ, "ຈົ່ງຄອຍຢູ່ກ່ອນເພື່ອເຮົາຈະຟັງເບິ່ງວ່າ ພຣະຜູ້ເປັນເຈົ້າກ່າວສັ່ງຢ່າງໃດເຣື່ອງທ່ານ"
9 ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ,
10 ຈົ່ງກ່າວແກ່ຄົນອິສຣາເອນວ່າ ຖ້າຜູ້ໃດໃນພວກເຈົ້າຫລືໃນເຊື້ອສາຍຂອງເຈົ້າມີມົນທິນເພາະຖືກຕ້ອງສົບຫລື
ໄປທາງໄກ ກໍໃຫ້ຜູ້ນັ້ນຖືປັສຄາແດ່ພຣະຜູ້ເປັນເຈົ້າ
11 ໃຫ້ຖືປັສຄາໃນເດືອນທີສອງວັນທີສິບສີ່ ເວລາຄ່ຳ ໃຫ້ເຂົາເຂົ້າຈີ່ບໍ່ມີເຊື້ອແປ້ງ ແລະຜັກຣົດຂົມ
12 ເຂົາທັງຫລາຍຕ້ອງບໍ່ໃຫ້ສິ່ງໃດເຫລືອ ໄວ້ຮອດຕອນເຊົ້າ ແລະບໍ່ຫັກກະດູກແກະປັສຄາ ໃຫ້ກະທຳຕາມກົດ
ເກນໃນເຣື່ອງຖືເທສການປັສຄາທຸກປະການ
13 ແຕ່ຄົນທີ່ສະອາດແລະບໍ່ໄດ້ເດີນທາງໄປແຕ່ງົດບໍ່ຖືເທສການປັສຄາ ກໍຢ່າຖືວ່າເຂົາເປັນໄພ່ພົນຂອງເຮົາອີກຕໍ່
ໄປ ເພາະເຂົາບໍ່ໄດ້ນຳເຄື່ອງບູຊາຂອງພຣະເຈົ້າມາຖວາຍຕາມກຳນົດ ຜູ້ນັ້ນຕ້ອງຖືກທຳໂທດ
14 ຖ້າຄົນຕ່າງດ້າວມາອາໄສຢູ່ຖ້າມກາງພວກເຈົ້າທັງຫລາຍ ຢາກຖືປັສຄາແດ່ພຣະຜູ້ເປັນເຈົ້າຕາມກົດເກນຂອງ
ເທສການປັສຄາ ແລະຕາມກົດໝາຍກໍໃຫ້ເຂົາຖືໄດ້ ເຈົ້າຈົ່ງມີກົດເກນຢ່າງດຽວສຳລັບທັງຄົນຕ່າງດ້າວແລະ
ຊາວເມືອງ

**ກ້ອນເມກໄຟ**

The Cloud and the Fire

**(ອພຍ 13:21-22, 40:34-38)**

15 ໃນວັນທີ່ຕັ້ງຫໍເຕັນສັກສິດນັ້ນ ໄດ້ມີກ້ອນເມກປົກຄຸມຫໍເຕັນໄວ້ ຄືເຕັນພຣະໂອວາດ ໃນເວລາກາງຄືນເມກນັ້ນ
ກໍຢູ່ເຫນືອຫໍເຕັນແລະເມກນັ້ນກາຍເປັນລັກສນະແສງໄຟຈົນຮຸ່ງເຊົ້າ
16 ເປັນຢ່າງນັ້ນສເມີມາ ມີເມກຄຸມ ກາງຄືນເມກນັ້ນກາຍເປັນລັກສນະແສງໄຟ
17 ເວລາໃດກ້ອນເມກຫາກລອຍຂຶ້ນໄປ ພວກອິສຣາເອນກໍມ້າງຄ້າຍຜ້າເຕັນ ແຕ່ເມື່ອກ້ອນເມກຫາກລົງມາປົກ
ຄຸມ ພວກເຂົາກໍຕັ້ງຄ້າຍຜ້າເຕັນຂຶ້ນອີກ
18 ຄົນອິສຣາເອນອອກເດີນຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າ ແລະເຂົາໄດ້ຕັ້ງຄ້າຍຕາມພຣະດຳຣັດຂອງພ
ຣະຜູ້ເປັນເຈົ້າ ໃນເວລາໃດທີ່ເມກຢຸດຢູ່ເຫນືອຫໍເຕັນ ເຂົາກໍຍັງຕັ້ງຄ້າຍຢູ່
19 ເມື່ອເມກປົກຄຸມເປັນເວລາຫລາຍວັນ ພວກເຂົາກໍໄດ້ເຊື່ອຟັງພຣະຜູ້ເປັນເຈົ້າ ແລະບໍ່ໄດ້ເຄື່ອນຍ້າຍໄປທາງໃດ
20 ບາງເທື່ອ ເວລາໃດກ້ອນເມກຫາກປົກຄຸມຢູ່ເປັນເວລາສອງ ຫລືສາມວັນກໍຕາມ ພວກເຂົາກໍບໍ່ໄດ້ຍົກຍ້າຍໄປ
ໃສ ຖ້າພຣະຜູ້ເປັນເຈົ້າຊົງບອກໃຫ້ຢຸດ ພວກເຂົາກໍຢຸດ ຖ້າພຣະຜູ້ເປັນເຈົ້າບອກໃຫ້ໄປ ພວກເຂົາກໍໄປ
21 ບາງເທື່ອເມກປົກຄຸມຢູ່ຕັ້ງແຕ່ຄ່ຳເຖິງເຊົ້າ ຖ້າເມກລອຍຂຶ້ນໄປໃນເວລາຕອນເຊົ້າ ພວກເຂົາກໍຍົກອອກເດີນ
ຫລືຖ້າເມກປົກຄຸມຢູ່ນຶ່ງວັນກັບນຶ່ງຄືນ ເມື່ອເມກລອຍຂຶ້ນເຂົາກໍຍົກອອກເດີນ
22 ບໍ່ວ່າເມກຈະປົກຄຸມຢູ່ເຫນືອຫໍເຕັນສອງວັນ ຫລືເດືອນນຶ່ງ ຫລືເວລານານກວ່າ ຄົນອິສຣາເອນກໍຢູ່ໃນຄ້າຍນານ
ເທົ່ານັ້ນ ບໍ່ໄດ້ຍົກອອກໄປ ແຕ່ເມື່ອເມກລອຍຂຶ້ນເມື່ອໃດເຂົາກໍຍົກອອກໄປເມື່ອນັ້ນ
23 ເຂົາຕັ້ງຄ້າຍຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າ ແລເຂົາຍົກອອກເດີນຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າ
ເຂົາທັງຫລາຍກໍປະຕິບັດງານຂອງພຣະຜູ້ເປັນເຈົ້າ ຕາມພຣະດຳຣັດທີ່ພຣະຜູ້ເປັນເຈົ້າກ່າວສັ່ງໂມເຊ

## 10 ແກເງິນ

The Silver Trumpets

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 ຈົ່ງເຮັດແກເງິນສອງອັນດ້ວຍໃຊ້ຄ້ອນທຸບ ເຈົ້າຈົ່ງໃຊ້ແກນັ້ນເອີ້ນຊຸມນຸມ ແລະໃຊ້ຮື້ຍ້າຍຄ້າຍ
3 ເມື່ອເປົ່າແກທັງສອງນັ້ນກໍໃຫ້ມາຊຸມນຸມພ້ອມກັນກັບເຈົ້າທີ່ທາງເຂົ້າເຕັນນັດພົບ
4 ຖ້າເປົ່າແກອັນດຽວໃຫ້ປະມຸກຜູ້ເປັນຫົວໜ້າເຜົ່າອິສຣາເອນມາປະຊຸມກັບເຈົ້າ
5 ເມື່ອເປົ່າແກປຸກໃຫ້ບັນດາຄ້າຍທີ່ຕັ້ງຢູ່ດ້ານຕາເວັນອອກຍົກອອກເດີນ
6 ເມື່ອເປົ່າແກປຸກເທື່ອທີ່ສອງໃຫ້ບັນດາຄ້າຍທີ່ຢູ່ດ້ານໃຕ້ຍົກອອກເດີນ ເມື່ອໃດຈະໃຫ້ຍົກອອກເດີນກໍໃຫ້ເປົ່າແກປຸກ
7 ແຕ່ເມື່ອຈະໃຫ້ປະຊາຊົນທັງປວງມາປະຊຸມພ້ອມກັນຈົ່ງເປົ່າແກແຕ່ຢ່າທຳສຽງປຸກ
8 ໃຫ້ບຸດຂອງອາໂຣນຄືປະໂຣຫິດເປັນຄົນເປົ່າແກ ແກນີ້ຈະເປັນບັນຍັດຖາວອນຕລອດຊົ່ວເຊື້ອສາຍຂອງເຈົ້າ
9 ແລະເມື່ອເຈົ້າທັງຫລາຍຈະໄປທຳເສິກໃນແຜ່ນດິນຂອງເຈົ້າສູ້ສັດຕຣູຜູ້ມາບີບບັງຄັບເຈົ້າ ກໍໃຫ້ເປົ່າແກທຳສຽງປຸກ ເພື່ອ  ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຈະຊົງລະນຶກເຖິງເຈົ້າ ແລະຊ່ອຍເຈົ້າໃຫ້ພົ້ນຈາກສັດຕຣູຂອງເຈົ້າ
10 ໃນວັນທີ່ເຈົ້າທັງຫລາຍມີຄວາມຍິນດີ ແລະໃນງານເທສການແລະໃນວັນຕົ້ນເດືອນຂອງເຈົ້າ ເຈົ້າຈົ່ງເປົ່າແກເຫນືອເຄື່ອງເຜົາບູຊາແລະເຫນືອສັຕບູຊາອັນເປັນເຄື່ອງສານຕິບູຊາ ເປັນທີ່ໃຫ້ພຣະເຈົ້າຂອງເຈົ້າລະນຶກເຖິງເຈົ້າ ເຮົາເປັນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ”

ຄົນອິສຣາເອນອອກຈາກພູເຂົາຊີນາອີ

Departure from Sinai

11 ໃນວັນທີຊາວເດືອນທີສອງປີທີສອງ ຊົງໃຫ້ເມກນັ້ນຂຶ້ນຈາກຫໍເຕັນພຣະໂອວາດ
12 ຄົນອິສຣາເອນກໍຍົກເດີນຢຸດເປັນລະຍະໆ ໄປຈາກຖິ່ນກັນດານຊີນາອີ ແລະເມກນັ້ນມາຢຸດຢູ່ທີ່ຖິ່ນກັນດານປາຣານ
13 ເຂົາທັງຫລາຍໄດ້ຍົກອອກເດີນໄປເປັນຄັ້ງທຳອິດຕາມພຣະດຳຣັດຂອງພຣະເຈົ້າທີ່ໄດ້ສັ່ງໂມເຊ
14 ທຸງຄ້າຍຂອງຄົນຢູດາອອກເດີນໄປເປັນກອງໆກ່ອນ ນີນາໂຊນ ບຸດອັມມີນາດາບເປັນຜູ້ນຳພົນໂຍທາ
15 ເນທານເອນບຸດຊູອານຳພົນໂຍທາເຜົ່າອິສຊາຄາ
16 ແລະເອລີອາບບຸດເຮໂລນນຳພົນໂຍທາເຜົ່າຄົນເຊບູລູນ
17 ເມື່ອຮື້ຫໍເຕັນສັກສິດລົງແລ້ວ ບັດດາບຸດເກີໂຊນ ແລະຂອງເມຣາຣີຜູ້ແບກຫາມເຕັນນັ້ນກໍຍົກເດີນໄປ
18 ທຸງຄ້າຍຂອງຄົນຣູເບນອອກເດີນໄປເປັນກອງໆ ເອລີຊູບຸດເຊເດອູເປັນຜູ້ນຳພົນໂຍທາ
19 ເຊລູມີເອນບຸດຊູຣີຊັດດັຍນຳພົນໂຍທາເຜົ່າຄົນຊີເມໂອນ
20 ເອລີອາສາບ ບຸດເດອູເອນນຳພົນໂຍທາເຜົ່າຄົນກາດ
21 ແລ້ວຄົນໂກຣາດກໍຍົກອອກເດີນແບກຫາມສິ່ງບໍຣິສຸດຕ່າງໆ ກ່ອນທີ່ພວກນີ້ໄປເຖິງ ເຂົາກໍຕັ້ງຫໍເຕັນຂຶ້ນເປັນທີ່ຮຽບຮ້ອຍແລ້ວ
22 ທຸງຄ້າຍຄົນເອຟຣາອິມອອກເດີນໄປເປັນກອງໆໄປເປັນກອງໆ ມີເອລີຊາມາ ບຸດອັມມີຮູດນຳພົນໂຍທາ
23 ກາມາລີເອນ ບຸດເປດາຊູນຳພົນໂຍທາເຜົ່າຄົນມານັສເຊ
24 ອາບີດານ ບຸດກີເດໂອນີນຳພົນໂຍທາເຜົ່າຄົນເບັນຢາມິນ
25 ແລ້ວທຸງຄ້າຍຄົນເຜົ່າດານເປັນພວກລະວັງທ້າຍຂອງຄ້າຍທັງຫມົດ ໄດ້ຍົກອອກເດີນໄປເປັນກອງໆມີອາຮີເອເຊີບຸດອັມມີຊັດດັຍນຳພົນໂຍທາ
26 ປາກີເອນ ບຸດໂອກຣານນຳພົນໂຍທາເຜົ່າຄົນເອເຊີ
27 ອາຮີຣາ ບຸດເອນານນຳພົນໂຍທາເຜົ່າຄົນເນັບທາລີ
28 ນີ້ເປັນລຳດັບການເດີນທາງຂອງຄົນອິສຣາເອນຕາມເຫລົ່າພົນໂຍທາຂອງເຂົາ ເມື່ອເຂົາຍົກອອກເດີນໄປ

29 ໂມເຊເວົ້າກັບໂຮບັບບຸດຣູເອນຄົນມີດີອານພໍ່ເຖົ້າຂອງໂມເຊວ່າ, "ເຮົາທັງຫລາຍອອກເດີນໄປສູ່ທີ່ຊຶ່ງພຣະຜູ້ເປັນເຈົ້າສັ່ງໄວ້ວ່າ "ເຮົາຈະຍົກໃຫ້ແກ່ເຈົ້າທັງຫລາຍ" ເຊີນໄປກັບເຮົາເຖີດ ແລະເຮົາທັງຫລາຍຈະທຳດີແກ່ທ່ານ ເພາະພຣະຜູ້ເປັນເຈົ້າຊົງສັນຍາໃຫ້ຂອງດີແກ່ຄົນອິສຣາເອນ"

30 ແຕ່ເຂົາຕອບໂມເຊວ່າ, "ເຮົາບໍ່ໄປ ເຮົາຈະກັບຄືນໄປເມືອງຂອງເຮົາ ຍັງວົງຍາດຂອງເຮົາ"

31 ແລະໂມເຊວ່າ, "ຂໍຢ່າພາກຈາກເຮົາໄປເລີຍ ທ່ານຊາບຢູ່ແລ້ວວ່າ ເຮົາຕ້ອງຕັ້ງຄ້າຍຢູ່ໃນຖິ່ນກັນດານ ແລະທ່ານຈະໄດ້ເປັນເຫມືອນດັ່ງຫນ່ວຍຕາຂອງເຮົາ

32 ຖ້າທ່ານໄປກັບເຮົາທັງຫລາຍ ພຣະຜູ້ເປັນເຈົ້າກະທຳຢ່າງນັ້ນແກ່ທ່ານ"

33 ເຂົາທັງຫລາຍກໍອອກເດີນຈາກພູເຂົາຂອງພຣະຜູ້ເປັນເຈົ້າລະຍະທາງສາມມື້ ຫີບຄຳສັນຍາຂອງພຣະຜູ້ເປັນເຈົ້ານຳຫນ້າ  ເຂົາໄປສາມວັນເພື່ອຫາທີ່ພັກໃຫ້ເຂົາ

34 ເຂົາທັງຫລາຍຍົກຄ້າຍໄປເມື່ອໃດ ເມກຂອງພຣະຜູ້ເປັນເຈົ້າກໍຢູ່ເຫນືອເຂົາໃນກາງເວັນເມື່ອນັ້ນ

35 ເມື່ອຫີບຍົກອອກເດີນເມື່ອໃດ ໂມເຊກາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນເຖີດ ໃຫ້ສັດຕຣູທັງຫລາຍຂອງພຣະອົງກະຈັດກະຈາຍໄປ ໃຫ້ຜູ້ທີ່ຊັງພຣະອົງຫລົກຫນີພຣະອົງໄປ"

36 ເມື່ອຫີບຢັບຢັ້ງທ່ານກາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍສະເດັດກັບມາສູ່ຄົນຕະກູນອິສຣາເອນທີ່ນັບເປັນຫມື່ນນີ້ເຖີດ"

## 11 ຕາເບຣາ

Complaining in the Desert

1 ປະຊາຊົນພາກັນຈົ່ມທຸກຈົ່ມຮ້າຍກ່ຽວກັບເຣື່ອງໂຊກຮ້າຍຂອງພວກເຂົາຕໍ່ພຣະຜູ້ເປັນເຈົ້າ ເມື່ອຊົງໄດ້ຍິນດັ່ງນັ້ນ ພຣະອົງກໍຊົງພຣະພິໂຣດຫນັກຈຶ່ງທຳໃຫ້ເກີດມີໄຟໄຫມ້ຄ້າຍພັກຂອງພວກເຂົາ ໄຟໄດ້ໄຫມ້ແລະໄດ້ທຳລາຍຄ້າຍພັກໄປເບື້ອງນຶ່ງ

2 ພວກປະຊາຊົນຈຶ່ງຮ້ອງຂໍຄວາມຊ່ອຍເຫລືອຈາກໂມເຊ ດັ່ງນັ້ນໂມເຊຈຶ່ງອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ແລ້ວໄຟຈຶ່ງໄດ້ ມອດລົງ

3 ຍ້ອນວ່າໄຟໄດ້ລຸກໄຫມ້ຄ້າຍພັກຂອງພວກເຂົາ ບ່ອນນີ້ຈຶ່ງຖືກເອີ້ນວ່າ ຕາເບຣາ

4 ພວກຕ່າງດ້າວທີ່ເດີນທາງຮ່ວມກັບພວກອິສຣາເອນກໍອຶດຢາກເປັນການໃຫຍ່ ແມ່ນແຕ່ພວກອິສຣາເອນເອງກໍຍັງຮ້ອງທຸກວ່າ "ຂໍຊີ້ນກິນແດ່"

5 ຄາວຢູ່ປະເທດເອຢິບພຸ້ນ ເຮົາລະນຶກເຖິງປາທີ່ເຮົາເຄີຍກິນໂດຍບໍ່ເສັຽເງິນຄຳ ແລະເຮົາຍັງໄດ້ກິນຫມາກແຕງຫມາກໂມ ຜັກທອມ ຜັກບົວ ຜັກທຽມ

6 ແຕ່ດຽວນີ້ ເຮົາບໍ່ມີເຫື່ອແຮງເລີຍ ເພາະໃນແຕ່ລະມື້ ນອກຈາກກິນມານາແລ້ວກໍບໍ່ມີສິ່ງອື່ນກິນອີກເລີຍ"ມານາເປັນຄືເມັດເຂົ້າສີເຫລືອງອ່ອນ

7 ປະຊາຊົນພາກັນໄປເກັບມາໂມ້ທຳແປ້ງ ແລ້ວຕົ້ມໃຫ້ສຸກເພື່ອທຳເຂົ້າຫນົມແຜ່ນ ຣົດຊາດຂອງມັນເຫມືອນກັບຂະຫນົມທີ່ອົບໃສ່ນ້ຳມັນຫມາກກອກ

8 ມານາໄດ້ຕົກລົງມາໃນບ່ອນຕັ້ງຄ້າຍ ຊຶ່ງເປັນເວລາດຽວກັນກັບຕອນທີ່ນ້ຳຫມອກຕົກລົງໃນຍາມກາງຄືນ

9 ໃນຂນະທີ່ພວກເຂົາຢືນອ້ອມຢູ່ທາງປະຕູຕູບຜ້າເຕັນຂອງໂມເຊນັ້ນ ທ່ານກໍໄດ້ຍິນສຽງຈົ່ມທຸກຂອງປະຊາຊົນຝ່າຍພຣະຜູ້ເປັນເຈົ້າກໍຊົງພຣະພິໂຣດພວກເຂົາ

10 ສ່ວນໂມເຊກໍມີຄວາມທຸກຢ່າງຫນັກ ທ່ານຈຶ່ງທູນຕໍ່ພຣະຜູ້ເປັນເຈົ້າວ່າ, "ເປັນຫຍັງພຣະອົງຈຶ່ງທຳຮ້າຍແຮງຕໍ່ຂ້າພຣະອົງແທ້ ເຫດໃດພຣະອົງຈຶ່ງບໍ່ຊົງພໍພຣະທັຍກັບຂ້າພຣະອົງ ດ້ວຍເຫດໃດພຣະອົງຈຶ່ງຊົງໃຫ້ຂ້າພຣະອົງຮັບຜິດຊອບຄົນເຫລົ່ານີ້

11 ຂ້າພຣະອົງບໍ່ໄດ້ສ້າງຊີວິດພວກເຂົາ ຫລືນຳພວກເຂົາລົງມາເກີດ ເປັນຫຍັງພຣະອົງຈຶ່ງຂໍໃຫ້ຂ້າພຣະອົງປະຕິ
ບັດຕົນເຫມືອນຜູ້ລ້ຽງ ແລະໃຫ້ອູ້ມເຂົາໄວ້ໃນອ້ອມແຂນເຫມືອນກັບວ່າພວກເຂົາຍັງເປັນເດັກນ້ອຍ ເພື່ອໃຫ້
ພາໄປເຖິງແຜ່ນດິນທີ່ ພຣະອົງຊົງສັນຍາໄວ້ກັບພວກປູ່ຍ່າຕາຍາຍຂອງພວກເຂົາ
12 ຂ້າພຣະອົງຈະໄປເອົາຊີ້ນມາຈາກໃສຈຶ່ງຈະພຽງພໍກັບຄວາມຕ້ອງການຂອງຄົນເຫລົ່ານີ້
13 ເພາະພວກເຂົາກຳລັງຂໍຊີ້ນກິນຢູ່ ຂ້າພຣະອົງບໍ່ສາມາດຮັບຜິດຊອບພວກເຂົາເຫລົ່ານີ້ໄດ້ ມັນເປັນການເຫລືອ
ບ່າກວ່າແຮງສຳລັບຂ້າພຣະອົງແລ້ວ
14 ຖ້າພຣະອົງທຳຕໍ່ຂ້າພຣະອົງຢ່າງນີ້ ຂໍໂຜດປະຫານຊີວິດຂ້າພຣະອົງສາ ເພື່ອວ່າຂ້າພຣະອົງຈະບໍ່ໄດ້ທົນທານຕໍ່
ພຣະພິໂຣດຂອງພຣະອົງອີກຕໍ່ໄປ”

**ໂມເຊເລືອກຜູ້ນຳເຈັດສິບຄົນ**

The Seventy Elders

15 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, “ຈົ່ງຮີບໂຮມເອົາພວກຜູ້ນຳເຈັດສິບຄົນ ຊຶ່ງເປັນຜູ້ທີ່ເຂົ້າໃຈໃນການນຳປະ
ຊາຊົນ ຈົ່ງພາພວກເຫລົ່ານີ້ມາຫາເຮົາທີ່ເຕັນນັດພົບແຫ່ງນີ້ ແລ້ວບອກໃຫ້ພວກເຂົາຢືນຢູ່ໃກ້ເຈົ້າເຮົາຈະລົງມາ
ເວົ້າກັບເຈົ້າຢູ່ບ່ອນນັ້ນ
16 ແລະເຮົາຈະໃຫ້ອຳນາດຄືພຣະວິນຍານບາງສ່ວນແກ່ພວກເຂົາ ແລ້ວພວກເຂົາກໍຈະສາມາດຮັບພາຣະຊ່ວຍ
ເຫລືອປະຊາຊົນເຫລົ່ານີ້ ສ່ວນເຈົ້າກໍຈະບໍ່ໄດ້ຮັບພາຣະນີ້ແຕ່ຄົນດຽວ
17 ຈົ່ງບອກປະຊາຊົນໃຫ້ຊຳຣະຕົນໃຫ້ບໍຣິສຸດໃນມື້ອື່ນ ແລ້ວພວກເຂົາກໍຈະມີຊີ້ນກິນ ເພາະພວກເຂົາຮ້ອງຂໍຕໍ່ພ
ຣະຜູ້ເປັນເຈົ້າວ່າ “ໃຜຈະເອົາຊີ້ນໃຫ້ພວກເຮົາກິນ ຖ້າພວກເຮົາຢູ່ປະເທດເອຢິບກໍຈະດີກວ່ານີ້” ເພາະເຫດນີ້ພ
ຣະຜູ້ເປັນເຈົ້າຈະຊົງປະທານຊີ້ນໃຫ້ທ່ານທັງຫລາຍຮັບປະທານ
18 ທ່ານຈະບໍ່ໄດ້ຮັບປະທານພຽງແຕ່ມື້ນຶ່ງຫລືສອງມື້ ຫ້າມື້ ສິບມື້ ຫລືຊາວມື້ເທົ່ານັ້ນ
19 ແຕ່ຈະຮັບປະທານຕລອດເດືອນຈົນພວກທ່ານຈະເບື່ອ ສິ່ງເຫລົ່ານີ້ໄດ້ເກີດຂຶ້ນເພາະວ່າພວກທ່ານໄດ້ປະລະພ
ຣະຜູ້ເປັນເຈົ້າຜູ້ຊົງສະຖິດຢູ່ກັບພວກທ່ານ ແລະພວກທ່ານໄດ້ຮ້ອງທຸກຕໍ່ພຣະອົງວ່າພວກເຮົາເສັຽໃຈທີ່ໄດ້ອອກ
ຫນີຈາກປະເທດເອຢິບ”
20 ໂມເຊທູນຕໍ່ພຣະຜູ້ເປັນເຈົ້າວ່າ, “ຜູ້ຊາຍສະກັນທີ່ຂ້າພຣະອົງກຳລັງນຳຫນ້າໄປມີເຖິງຫົກແສນຄົນ ແຕ່ພຣະອົງ
ຊົງບອກວ່າຈະປະທານຊີ້ນໃຫ້ພວກເຂົາກິນຢ່າງພຽງພໍສຳລັບເດືອນນຶ່ງ
21 ຈະຕ້ອງຂ້າງົວ ແລະແກະຈັກຕົວຈຶ່ງຈະພໍກິນ ຫລືປາທັງຫມົດໃນນ້ຳທະເລອີກຈັກເທົ່າໃດຈຶ່ງຈະພໍໃຫ້ປະຊາຊົນ
ກິນອີ່ມ
22 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ເຈົ້າຄິດວ່າອຳນາດຂອງເຮົາມີຂອບເຂດຈຳກັດຊັ້ນບໍ ໃນບໍ່ຊ້ານີ້ເຈົ້າຈະໄດ້ເຫັນ
ວ່າຄຳທີ່ເຮົາໄດ້ເວົ້າໄປນັ້ນຈະເກີດຂຶ້ນແທ້ຫລືບໍ່
23 ຄັນແລ້ວ ໂມເຊຈຶ່ງໄດ້ອອກໄປບອກປະຊາຊົນຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ ທ່ານໄດ້ທ້ອນໂຮມພວກຜູ້ນຳ
ເຈັດສິບຄົນ ແລະໄດ້ຈັດໃຫ້ທຸກຄົນໄປຢືນອ້ອມຫໍເຕັນສັກສິດ
24 ແລ້ວພຣະຜູ້ເປັນເຈົ້າຊົງສະເດັດລົງມາເປັນກ້ອນເມກແລະກ່າວກັບໂມເຊ ໃນຂນະດຽວກັນນັ້ນ ພຣະອົງກໍຊົງ
ປະທານພຣະວິນຍານບໍຣິສຸດ ທີ່ໂມເຊມີແລ້ວນັ້ນໃຫ້ພວກຜູ້ນຳເຈັດສິບຄົນນັ້ນ ພໍພຣະວິນຍານເຂົ້າສວມທັບ
ພວກເຂົາກໍຮ້ອງຂຶ້ນດ້ວຍສຽງດັງເຫມືອນກັບຄົນເສັຽສະຕິແລ້ວບໍ່ດົນກໍງຽບລົງ
25 ໃນຈຳນວນພວກຜູ້ນຳເຈັດສິບຄົນ ມີສອງຄົນຄື ເອນດາດ ແລະເມດາດ ທີ່ບໍ່ໄດ້ອອກມາຈາກຕູບຜ້າເຕັນນຳ
ຫມູ່ ແຕ່ພຣະວິນຍານໄດ້ຊົງເຂົ້າເຂົາທັງສອງຄົນນີ້ ພວກເຂົາຈຶ່ງຮ້ອງຂຶ້ນຢ່າງດັງເຫມືອນຄົນເສັຽສະຕິ
26 ເມື່ອເຫັນດັ່ງນັ້ນ ຊາຍຫນຸ່ມຜູ້ນຶ່ງກໍແລ່ນໄປບອກໂມເຊກ່ຽວກັບເລື່ອງທີ່ເກີດຂຶ້ນກັບ ເອນດາດ ແລະເມດາດ

27 ແລ້ວໂຢຊວຍບຸດນູນທີ່ເປັນຜູ້ຊ່ອຍຂອງໂມເຊມາຕັ້ງແຕ່ຍັງຫນຸ່ມນ້ອຍໄດ້ເວົ້າຕໍ່ໂມເຊວ່າ, "ທ່ານເອີຍ ໄປບອກ
ໃຫ້ພວກເຂົາຢຸດແມ"
28 ໂມເຊຕອບວ່າ, "ເຈົ້າມາສົນໃຈຫຍັງກັບວຽກຂອງເຮົາ ເຮົາຢາກໃຫ້ພຣະຜູ້ເປັນເຈົ້າປະທານພຣະວິນຍານໃຫ້
ໄພ່ພົນຂອງ ພຣະອົງ ເພື່ອໃຫ້ພວກເຂົາເປັນຜູ້ປະກາດພຣະທັມ"
29 ແລ້ວໂມເຊພ້ອມທັງພວກຜູ້ນໍາເຈັດສິບຄົນກໍພາກັນກັບຄືນເມືອຄ້າຍພັກ

**ນົກຂຸ້ມ**

The Quails

30 ໃນທັນໃດນັ້ນພຣະຜູ້ເປັນເຈົ້າຊົງບັນດານໃຫ້ມີລົມພັດມາ ແລະມີຝູງນົກຂຸ້ມບິນມາຈາກທະເລ ມັນບິນຫ່າງຈ
າກພື້ນດິນພຽງສອງສອກເທົ່ານັ້ນ ນົກເຫລົ່ານີ້ໄດ້ມາຈັບຢູ່ຕາມຄ້າຍ ແລະທົ່ວທຸກບ່ອນອ້ອມແອ້ມຄ້າຍເປັນລະ
ຍະຫລາຍຫລັກ
31 ດັ່ງນັ້ນ ປະຊາຊົນທັງປວງຈຶ່ງພາກັນຈັບເອົານົກຂຸ້ມນັ້ນຕລອດມື້ຕລອດຄືນ ຄົນຈັບໄດ້ນ້ອຍທີ່ສຸດໄດ້ເຖິງສິບໂຮ
ເມີ ພວກເຂົາໄດ້ພາກັນຄົວນົກ ແລ້ວເອົາຕາກໄວ້ເຕັມທົ່ວຄ້າຍ
32 ກ່ອນຊີ້ນຈະຫມົດໄປ ແລະໃນຂນະທີ່ຍັງມີຊີ້ນກິນຢ່າງອຸດົມສົມບູນຢູ່ນັ້ນ ພຣະຜູ້ເປັນເຈົ້າຊົງພຣະພິໂຣດ ແລະ
ຊົງທໍາໃຫ້ພວກເຂົາເກີດເປັນໂຣກອະຫິວາ
33 ບ່ອນນີ້ໄດ້ໃສ່ຊື່ວ່າ ກິບໂຣດຮັດຕາອາວາ (ຫລຸມຝັງສົບຂອງຜູ້ຂໍກິນ)  ເພາະວ່າພວກເຂົາໄດ້ຝັງສົບພວກທີ່ຂໍ
ກິນຊີ້ນໄວ້ຢູ່ບ່ອນນັ້ນ
34 ຫລັງຈາກນັ້ນ ປະຊາຊົນກໍຍ້າຍໄປຢູ່ຮາເຊໂຣດ ແລະພາກັນຕັ້ງຄ້າຍພັກເຊົາຢູ່ທີ່ນັ້ນ

## 12 ອາໂຣນ ແລະມີຣີອາມກ່າວຂັດຂວາງໂມເຊ

Aaron and Miriam Jealous of Moses

1 ມີຣີອາມແລະອາໂຣນໄດ້ຕິຕຽນໂມເຊ ຍ້ອນຍິງຄົນກູຊທີ່ທ່ານໄດ້ແຕ່ງງານນໍາ (ເພາະໂມເຊໄດ້ແຕ່ງງານກັບຍິງ
ຄົນກູຊຄົນນຶ່ງ)
2 ເຂົາທັງສອງກ່າວວ່າ, "ພຣະຜູ້ເປັນເຈົ້າຊົງກ່າວຜ່ານທາງໂມເຊຄົນດຽວເທົ່ານັ້ນຈິງຫລື ພຣະອົງຊົງກ່າວ
ຜ່ານທາງພວກເຮົາຄືກັນບໍ່ແມ່ນຫລື" ພຣະຜູ້ເປັນເຈົ້າຊົງໄດ້ຍິນ
3 ໂມເຊເປັນຄົນຖ່ອມໃຈຫລາຍຍິ່ງກວ່າຄົນທັງປວງໃນເທິງແຜ່ນດິນໂລກນີ້
4 ໃນທັນໃດນັ້ນພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊແລະອາໂຣນກັບມີຣີອາມວ່າ, "ເຈົ້າທັງສາມຈົ່ງອອກມາທີ່ເຕັນ
ນັດພົບ" ເຂົາທັງສາມກໍອອກມາ
5 ພຣະຜູ້ເປັນເຈົ້າກໍສະເດັດລົງມາໃນເສົາເມກ ປະທັບຢືນທີ່ປະຕູເຕັນ ຊົງເອີ້ນອາໂຣນ ແລະມີຣີອາມ ເຂົາທັງ
ສອງກໍມາຂ້າງຫນ້າ
6 ພຣະອົງຊົງກ່າວວ່າ, "ຈົ່ງຟັງຖ້ອຍຄໍາຂອງເຮົາ ຖ້າຈະມີຜູ້ປະກາດພຣະທັມຖ້າມກາງເຈົ້າທັງຫລາຍ ເຮົາພຣະຜູ້
ເປັນເຈົ້າຈະສໍາແດງຕົວແກ່ຜູ້ນັ້ນເປັນນິມິດ ເຮົາຈະເວົ້າກັບເຂົາທາງຄວາມຝັນ
7 ສໍາລັບໂມເຊຜູ້ຮັບໃຊ້ຂອງເຮົາກໍບໍ່ເປັນເຊັ່ນນັ້ນ ໃນປະຊາຊົນຂອງເຮົາ ເຂົາສັດຊື່
8 ເຮົາເວົ້າກັບເຂົາປາກຕໍ່ປາກຢ່າງຊັດເຈນ ບໍ່ເວົ້າເລິກລັບ ແລະເຂົາເຫັນຮູບຮ່າງຂອງພຣະຜູ້ເປັນເຈົ້າ ເປັນຫຍັງ
ເຈົ້າບໍ່ຢ້ານທີ່ຈະເວົ້າຕິຕຽນໂມເຊຜູ້ຮັບໃຊ້ຂອງເຮົາ"
9 ພຣະຜູ້ເປັນເຈົ້າຊົງພຣະພິໂຣດເຂົາ ແລ້ວສະເດັດຫນີໄປ
10 ເມື່ອເມກລອຍພົ້ນເຕັນໄປ ເບິ່ງແມ, ມີຣີອາມກໍເປັນໂຣກເຮື້ອນຂາວເຫມືອນຫິມມະ ອາໂຣນຫັນໄປເບິ່ງມີຣີ
ອາມ ແລະເບິ່ງແມ, ມີຣີອາມເປັນໂຣກເຮື້ອນ

11 ແລະອາໂຣນເວົ້າກັບໂມເຊວ່າ, "ຂ້າແດ່ເຈົ້ານາຍຂອງຂ້າພະເຈົ້າ ຂໍຢ່າລົງໂທດແກ່ເຮົາທັງສອງທີ່ໄດ້ກະທຳ
ຄວາມໂງ່ແລະບາບເຊັ່ນນີ້
12 ຂໍຢ່າໃຫ້ມີຣີອາມເປັນເຫມືອນຄົນທີ່ຕາຍແລ້ວ ດັ່ງຄົນທີ່ອອກຈາກຄັນມານດາມີເນື້ອກຸດໄປເຄິ່ງນຶ່ງ"
13 ແລະໂມເຊໄດ້ຮ້ອງທູນພຣະຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຮັກສານາງ ຂ້າພຣະອົງທູນ
ວິງວອນຕໍ່ ພຣະອົງ"
14 ແຕ່ພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ, ຖ້າພໍ່ຂອງນາງຖົ່ມນ້ຳລາຍໃສ່ຫນ້ານາງ ນາງຈະລະອາຍຢູ່ເຈັດມື້ບໍ່ແມ່ນ
ຫລື ຈົ່ງກັກນາງໄວ້ນອກຄ້າຍເຈັດມື້ ພາຍຫລັງຈຶ່ງໃຫ້ກັບຄືນເຂົ້າມາໄດ້"
15 ດັ່ງນັ້ນ ມີຣີອາມຈຶ່ງຖືກກັກຢູ່ນອກຄ້າຍເຈັດວັນ ແລະປະຊາຊົນກໍບໍ່ໄດ້ຍົກເດີນໄປຈົນກວ່າມີຣີອາມກັບຄືນເຂົ້າ
ມາອີກ
16 ແລ້ວປະຊາຊົນກໍຍົກເດີນຈາກເມືອງຮາເຊໂຣທ ໄປຕັ້ງຄ້າຍຢູ່ທີ່ຖິ່ນກັນດານປາຣານ

## 13 ພວກນັກສືບສອດແນມ

Spies sent into Canaan

(ພບຍ 1:19-33)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງເລືອກເອົາຜູ້ນຳຄົນນຶ່ງໃນແຕ່ລະຕະກູນໃຫ້ໄປສືບສອດແນມເບິ່ງປະເທດການາອານ ຊຶ່ງເປັນບ່ອນທີ່ເຮົາ
ໄດ້ມອບໄວ້ໃຫ້ພວກອິສຣາເອນ
3 ແລ້ວໂມເຊກໍປະຕິບັດຕາມ ໂດຍໄດ້ຈັດສົ່ງພວກຜູ້ນຳຕໍ່ໄປນີ້ອອກຈາກຖິ່ນກັນດານປາຣານ
4 ຕໍ່ໄປນີ້ເປັນຊື່ຂອງຄົນເຫລົ່ານັ້ນ ຊັມມູອາ ບຸດຊັກເກີເປັນເຜົ່າຣູເບນ
5 ຊາຟັດ ບຸດໂຮຣີເປັນເຜົ່າຊີເມໂອນ
6 ກາເລັບ ບຸດເຢຟຸນເນເປັນເຜົ່າຢູດາ
7 ອີການ ບຸດໂຢເຊັບເປັນເຜົ່າອິສຊາຄາ
8 ໂຮເຊອາ ບຸດນູນເປັນເຜົ່າເອຟຣາອິມ
9 ປານຕີ ບຸດຣາຟູເປັນເຜົ່າເບັນຢາມິນ
10 ກາດດີເອນ ບຸດໂຊດີເປັນເຜົ່າເຊບູລູນ
11 ກາດດີ ບຸດຊູຊີເປັນເຊື້ອສາຍຂອງໂຢເຊັບ ຄືເຜົ່າມານັສເຊ
12 ອັມມີເອນ ບຸດເກມັນລີເປັນເຜົ່າດານ
13 ເຊທູ ບຸດມີຄາເອນເປັນເຜົ່າອາເຊີ
14 ນາບີ ບຸດວົບຊີເປັນເຜົ່າເນັບທາລີ
15 ເກອູເອນ ບຸດມາຄີເປັນເຜົ່າກາດ
16 ພວກເຫລົ່ານີ້ ຄືພວກນັກສືບສອດແນມທີ່ໂມເຊສົ່ງໄປສຳຣວດກວດເບິ່ງພື້ນແຜ່ນດິນການາອານ ທ່ານໄດ້ປ່ຽນ
ຊື່ໃຫມ່ໃຫ້ໂຮເຊອາບຸດນູນວ່າ ໂຢຊວຍ
17 ໂມເຊໄດ້ສົ່ງພວກນີ້ອອກໄປ ແລະສັ່ງພວກເຂົາວ່າ, "ຈົ່ງເຂົ້າໄປເນເກັບແຕ່ທິດເຫນືອຫາທິດໃຕ້ ແລະຕລອດ
ທົ່ວທັງປະເທດ ແລ້ວໃຫ້ໄປຍັງເນີນພູເພື່ອສຳຣວດກວດເບິ່ງວ່າປະເທດນີ້ເປັນຢ່າງໃດ
18 ມີປະຊາຊົນຈັກຄົນແລະມີກຳລັງພົນຫນ້ອຍຫລາຍແລະເຂັ້ມແຂງປານໃດ
19 ໃຫ້ສຳຣວດກວດເບິ່ງອີກວ່າ ປະເທດນີ້ອຸດົມສົມບູນຫລືບໍ່ ປະຊາຊົນຢູ່ໃນເມືອງທີ່ບໍ່ມີກຳແພງ ຫລືຢູ່ໃນປ້ອມ

20 ໃຫ້ເບິ່ງວ່າເມືອງນີ້ອຸດົມສົມບູນ ຫລືແຫ້ງແລ້ງ ແລະມີໄມ້ຫລາຍບໍ ຈົ່ງມີໃຈອົງອາດກ້າຫານ ແລະໃຫ້ນຳເອົາ
ຜົນລະປູກບາງຢ່າງທີ່ເກີດຂຶ້ນຈາກບ່ອນນັ້ນມາ (ຍາມນັ້ນເປັນຍາມທີ່ຫມາກອະງຸ່ນກຳລັງສຸກ)
21 ດັ່ງນັ້ນ ພວກນັກສືບຈຶ່ງໄດ້ເດີນທາງໄປຍັງເຂດເຫນືອ ເພື່ອສຳຣວດກວດເບິ່ງດິນແດນທີ່ປ່າກັນດານຊິນ ທາງ
ເຂດໃຕ້ຈົນເຖິງທາງໄປສູ່ເຣໂຮ ໃກ້ກັບເລໂບຮາມັທ
22 ພວກເຂົາຂຶ້ນໄປເຖິງເນເກັບ ແລະ ເຖິງເມືອງເຮໂບຣນ ຊຶ່ງເປັນບ່ອນຢູ່ຂອງເຜົ່າອາຮີມານ ເຊຊັຍ ແລະຕັນມັຍ
ພວກເຜົ່າເຫລົ່ານີ້ເປັນເຊື້ອສາຍຂອງຊົນຊາດຮູບຮ່າງໃຫຍ່ ຄືຄົນອານາກີມຢູ່ທີ່ນັ້ນ (ເມືອງເຮໂບຣນນີ້ເຂົາໄດ້
ສ້າງມາກ່ອນເມືອງ
ໂຊອານທີ່ປະເທດເອຢິບໄດ້ເຈັດປີ)
23 ພວກເຂົາເດີນທາງມາຮ່ອມເອັສໂຄນ ຢູ່ທີ່ນີ້ພວກເຂົາໄດ້ຕັດເອົາງ່າໄມ້ຕົ້ນອະງຸ່ນຊຶ່ງມີພວງດົກຫນາ ຈົນມີສອງ
ຄົນໃຊ້ໄມ້ຫາມ ພວກເຂົາຍັງໄດ້ນຳເອົາຫມາກພິລາ ແລະຫມາກເດື່ອຈຳນວນເລັກນ້ອຍມານຳ
24 ບ່ອນນີ້ເອີ້ນຊື່ວ່າຮ່ອມເອສໂກນ ຮ່ອມຫມາກອະງຸ່ນ ເພາະວ່າພວກອິສຣາເອນໄດ້ຕັດເອົາພົ້ວຫມາກອະງຸ່ນຢູ່
ບ່ອນນັ້ນ

The Report of the Spies

25 ຫລັງຈາກສຳຣວດກວດເບິ່ງດິນແດນໄດ້ສີ່ສິບວັນແລ້ວ
26 ພວກເຂົາກໍພາກັນກັບຄືນມາຫາໂມເຊ ແລະອາໂຣນ ແລະພວກຊຸມນຸມຊົນອິສຣາເອນທີ່ກາເດັສໃນຖິ່ນກັນ
ດານປາຣານ ພວກເຂົາໄດ້ລາຍງານທຸກສິ່ງທີ່ໄດ້ເຫັນ ແລະໄດ້ເອົາຫມາກໄມ້ທີ່ນຳມານັ້ນໃຫ້ທຸກຄົນເບິ່ງ
27 ພວກເຂົາບອກກັບໂມເຊວ່າ, "ຂ້າພະເຈົ້າໄດ້ສຳຣວດເບິ່ງຜືນແຜ່ນດິນຕາມທີ່ທ່ານໄດ້ສົ່ງໄປນັ້ນແລ້ວ ດິນແດນ
ແຫ່ງນີ້ຮັ່ງມີ ແລະອຸດົມສົມບູນຫລາຍ ແລະນີ້ເດ່ຫມາກໄມ້ບາງຢ່າງຈາກປະເທດນັ້ນ
28 ແຕ່ວ່າປະຊາຊົນຢູ່ບ່ອນນີ້ມີອຳນາດຫລາຍ ແລະທົວເມືອງຕ່າງໆຂອງພວກເຂົາກໍກວ້າງໃຫຍ່ໄພສານທັງມີກຳ
ແພງປ້ອງກັນໄວ້ເປັນຢ່າງດີ ນອກຈາກນີ້ ຂ້າພະເຈົ້າຍັງໄດ້ເຫັນເຊື້ອສາຍຂອງພວກອານາກຊຶ່ງເປັນຄົນທີ່ມີຮູບ
ຮ່າງໃຫຍ່ສູງ
29 ສ່ວນຄົນອາມາເລກກໍຢູ່ທາງເຂດເບື້ອງໃຕ້ ແລະຄົນຮິດຕີ ຄົນເຢບຸສ ຄົນອາໂມຣິດກໍຢູ່ເທິງພູນ້ອຍ ຄົນການາ
ອານກໍອາໄສຢູ່ໃກ້ທະເລເມດິເຕຣາເນ ແລະຢູ່ຕາມຝັ່ງແມ່ນ້ຳຈໍແດນ"
30 ແລ້ວກາເລັບຈຶ່ງບອກໃຫ້ປະຊາຊົນທີ່ຮ້ອງທຸກຕໍ່ໂມເຊມິດງຽບ ແລະເວົ້າຕໍ່ໄປວ່າ, "ພວກເຮົາມີກຳລັງພຽງພໍທີ່
ຈະຊະນະໄດ້ ດັ່ງນັ້ນ ພວກເຮົາຕ້ອງເຂົ້າໂຈມຕີ ແລະຍຶດເອົາດິນແດນແຫ່ງນີ້ດຽວນີ້"
31 ແຕ່ວ່າ ພວກທີ່ໄປນຳກາເລັບໄດ້ເວົ້າວ່າ, "ບໍ່ໄດ້ ພວກເຮົາຍັງບໍ່ທັນມີກຳລັງພຽງພໍທີ່ຈະໄປໂຈມຕີ ເພາະວ່າປະ
ຊາຊົນຢູ່ບ່ອນນັ້ນມີກຳລັງຫລາຍກວ່າພວກເຮົາ"
32 ດັ່ງນັ້ນ ພວກເຂົາຈຶ່ງລາຍງານເທັດກ່ຽວກັບແຜ່ນດິນທີ່ໄດ້ໄປສຳຣວດມານັ້ນຕໍ່ພວກອິສຣາເອນໂດຍພວກເຂົາ
ເວົ້າວ່າ, "ດິນແດນແຫ່ງນັ້ນບໍ່ມີພືດຜົນຢ່າງໃດພໍທີ່ຈະລ້ຽງຝູງຄົນທີ່ນັ້ນໄດ້ ທຸກຄົນທີ່ພວກເຮົາໄດ້ພົບເຫັນນັ້ນ
ເປັນຄົນສູງໃຫຍ່
33 ທີ່ນັ້ນ ພວກເຮົາໄດ້ເຫັນຄົນເນຟີລ (ຄົນອານາກຜູ້ມາຈາກຄົນເນຟີນ) ພວກເຂົາມອງເບິ່ງພວກເຮົາເຫມືອນຝູງ
ຕັກແຕນຕົວນ້ອຍໆເທົ່ານັ້ນ ແລະກໍເປັນດັ່ງນັ້ນໃນສາຍຕາຂອງພວກເຮົາດ້ວຍ"

## 14 ປະຊາຊົນກະບົດຕໍ່ພຣະເຈົ້າ

The People Rebel

1 ປະຊາຊົນຮ້ອງທຸກດ້ວຍຄວາມໂສກເສົ້າຕລອດຄືນ ພວກເຂົາຈົ່ມທຸກຕໍ່ໂມເຊ ແລະອາໂຣນວ່າ,
2 "ຖ້າຕາຍຢູ່ໃນປະເທດເອຢິບ ຫລືແມ່ນວ່າຕາຍໃນຖິ່ນກັນດານນີ້ກໍຍັງດີກວ່າ

3 ເຫດໃດ ພຣະຜູ້ເປັນເຈົ້າຈຶ່ງນຳພວກເຮົາໄປສູ່ດິນແດນແຫ່ງນັ້ນ ພວກເຮົາຈະຖືກຂ້າຕາຍໃນສນາມຣົບແລະລູກ
ເມັຽກໍຈະຖືກຈັບໄປ ສະນັ້ນ ກັບຄືນເມືອປະເທດເອຢິບຈະບໍ່ດີກວ່າບໍ?
4 ດັ່ງນັ້ນ ພວກເຂົາຈຶ່ງເວົ້າກັນວ່າ, "ຂໍໃຫ້ພວກເຮົາເລືອກເອົາຜູ້ນຳຄົນນຶ່ງ ແລ້ວກັບຄືນເມືອປະເທດເອຢິບເທາະ"
5 ແຕ່ແລ້ວໂມເຊກັບອາໂຣນ ໄດ້ກົ້ມໜ້າໝູບລົງຕໍ່ໜ້າປະຊາຊົນທຸກຄົນ
6 ສ່ວນໂຢຊວຍບຸດຂອງນູນ ແລະກາເລັບບຸດຂອງເຢຟຸນເນ ສອງຄົນໃນຈຳນວນນັກສືບໄດ້ພາກັນຈີກເສື້ອຜ້າ
ຂອງຕົນດ້ວຍຄວາມເສັຽໃຈ ແລ້ວເວົ້າຕໍ່ປະຊາຊົນວ່າ,
7 "ປະເທດທີ່ພວກຂ້າພະເຈົ້າໄດ້ໄປສຳຣວດກວດເບິ່ງນັ້ນເປັນແຜ່ນດິນທີ່ດີເລີດ
8 ຖ້າວ່າພຣະຜູ້ເປັນເຈົ້າຊົງພໍພຣະທັຍໃນພວກເຮົາ ພຣະອົງກໍຈະຊົງນຳພວກເຮົາໄປສູ່ແຜ່ນດິນທີ່ມັ່ງຄັ່ງ ແລະອຸ
ດົມສົມບູນນີ້
9 ແຕ່ຂໍສິ່ງດຽວຄື ຢ່າກະບົດຕໍ່ສູ້ພຣະຜູ້ເປັນເຈົ້າເລີຍ ແລະຢ່າຢ້ານປະຊາຊົນທີ່ຢູ່ໃນແຖບນັ້ນ ພວກເຮົາຈະຊະນະ
ພວກເຂົາຢ່າງງ່າຍດາຍ ພຣະຜູ້ເປັນເຈົ້າຊົງທຳລາຍຮູບພຣະທີ່ປົກປ້ອງພວກເຂົານັ້ນສູນສິ້ນໄປໝົດແລ້ວ ຢ່າ
ຢ້ານຫຍັງເລີຍເພາະວ່າພຣະອົງສະຖິດຢູ່ນຳພວກເຮົາ"
10 ແຕ່ພວກຊຸມນຸມຊົນທັງໝົດໄດ້ວາງແຜນແກວ່ງກ້ອນຫີນໃສ່ໂມເຊ ແລະອາໂຣນໃຫ້ຕາຍ ໃນທັນໃດນັ້ນ ປະ
ຊາຊົນໄດ້ເຫັນແປວໄຟຊຶ່ງສະແດງເຖິງຣັສມີຂອງພຣະຜູ້ເປັນເຈົ້າປາກົດຂຶ້ນເທິງຫໍເຕັນສັກສິດ

**ໂມເຊອ້ອນວອນເພື່ອປະຊາຊົນ**

11 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, "ເຖິງແມ່ນວ່າເຮົາໄດ້ກະທຳການອັສຈັນຫລາຍຢ່າງຖ້າມກາງພວກເຂົາມາ
ແລ້ວກໍຕາມ ປະຊາຊົນເຫລົ່ານີ້ກໍຍັງຈະໝິ່ນປມາດ ແລະປະຕິເສດບໍ່ຍອມເຊື່ອຟັງເຮົາອີກຢູ່
12 ດັ່ງນີ້ແຫລະ ເຮົາຈະສົ່ງໂຣກລະບາດມາທຳລາຍພວກເຂົາ ແຕ່ເຮົາຈະທຳໃຫ້ເຈົ້າເປັນຊົນຊາດທີ່ຍິ່ງໃຫຍ່ແລະ
ມີອຳນາດຫລາຍກວ່າພວກເຂົາອີກ"

Moses Intercedes for the People

13 ແຕ່ໂມເຊທູນຕໍ່ພຣະຜູ້ເປັນເຈົ້າວ່າ, "ດ້ວຍອຳນາດຂອງພຣະອົງທີ່ຊົງນຳພວກປະຊາຊົນເຫລົ່ານີ້ອອກຈາກປະ
ເທດເອຢິບ ເມື່ອພວກເອຢິບຮູ້ຈັກສິ່ງທີ່ພຣະອົງຊົງກະທຳຕໍ່ໄພ່ພົນຂອງພຣະອົງ
14 ພວກເຂົາກໍຈະເລົ່າໃຫ້ປະຊາຊົນໃນແຖບນັ້ນຟັງ ແລະພວກເຂົາກໍຈະໄດ້ຍິນແລ້ວວ່າ ພຣະອົງຊົງເປັນພຣະຜູ້
ເປັນເຈົ້າຜູ້ຊົງສະຖິດຢູ່ກັບພວກຂ້າພຣະອົງ ຄືພວກຂ້າພຣະອົງໄດ້ເຫັນກ້ອນເມກຂອງພຣະອົງ ພຣະອົງຊົງນຳ
ໜ້າພວກຂ້າພຣະອົງກ່ອນດ້ວຍເສົາເມກໃນຍາມກາງເວັນ ແລະເສົາໄຟໃນຍາມກາງຄືນ
15 ດຽວນີ້ ຖ້າພຣະອົງຈະຊົງຂ້າໄພ່ພົນທັງໝົດຂອງພຣະອົງ ຊົນຊາດຕ່າງໆທີ່ໄດ້ຍິນຊື່ສຽງຣຽງນາມຂອງພຣະອົງ
ກໍຈະພາກັນປະນາມວ່າ
16 ພຣະອົງຊົງຂ້າໄພ່ພົນຂອງພຣະອົງໃນຖິ່ນກັນດານ ເພາະພຣະອົງຂາດຄວາມສາມາດທີ່ຈະນຳພວກເຂົາໄປ
ເຖິງແຜ່ນດິນທີ່ພຣະອົງຊົງສັນຍາວ່າຈະໃຫ້ພວກເຂົານັ້ນ
17 ຂ້າແດ່ພຣະຜູ້ເປັນເຈົ້າ ດ້ວຍເຫດນີ້ແຫລະ ຂ້າພຣະອົງຈຶ່ງອ້ອນວອນຕໍ່ພຣະອົງ ຂໍຊົງສະແດງຣິດອຳນາດຂອງພ
ຣະອົງໃຫ້ພວກຂ້າພຣະອົງໄດ້ເຫັນ ແລະທຳຕາມທີ່ພຣະອົງຊົງສັນຍາໄວ້ໂດຍໄດ້ຊົງກ່າວວ່າ,
18 "ເຮົາເປັນຜູ້ມີຄວາມອົດກັ້ນ ເຮົາມີຄວາມຮັກທີ່ຍິ່ງໃຫຍ່ ມີຄວາມເມດຕາ ໃຫ້ການອະພັຍໂທດ ແລະໃຫ້ອະພັຍ
ການທໍຣະຍົດ ແຕ່ເຮົາຈະລົງໂທດລູກຫລານເຫລັນສືບໆໄປສາມສີ່ຊົ່ວອາຍຸຄົນ ຍ້ອນຄວາມບາບທີ່ຕົກທອດ
ມາຈາກພໍ່ແມ່ຂອງພວກເຂົາ"
19 ຂ້າພຣະອົງອ້ອນວອນຂໍຕໍ່ພຣະອົງໂຜດໃຫ້ອະພັຍໂທດປະຊາຊົນເຫລົ່ານີ້ ດ້ວຍຄວາມຮັກອັນຍິ່ງໃຫຍ່ທີ່ບໍ່ປ່ຽນ
ແປງຂອງ ພຣະອົງເໝືອນດັ່ງພຣະອົງຊົງໃຫ້ອະພັຍພວກເຂົາໃນຄາວທີ່ພວກເຂົາອອກມາຈາກປະເທດເອ
ຢິບ"

20 ພຣະຜູ້ເປັນເຈົ້າຊົງຕອບວ່າ, "ເຮົາຈະໃຫ້ອະພັຍແກ່ເຂົາຕາມຄຳຂໍຮ້ອງຂອງເຈົ້າ
21 ແຕ່ເຮົາສັນຍາວ່າ ເຮົາມີຊີວິດຢູ່ຢ່າງແນ່ນອນ ແລະດ້ວຍຣັສມີຄວາມຍິ່ງໃຫຍ່ຂອງເຮົາເຕັມຢູ່ທົ່ວໂລກນີ້
22 ເຮົາຈຶ່ງຈະບໍ່ໃຫ້ໃຜໃນຈຳນວນປະຊາຊົນເຫລົ່ານີ້ເຂົ້າໄປໃນແຜ່ນດິນນັ້ນ ພວກເຂົາໄດ້ເຫັນຣັສມີຂອງເຮົາ ແລະ
ໄດ້ເຫັນການອັດສະຈັນທີ່ເຮົາໄດ້ກະທຳຢູ່ໃນປະເທດເອຢິບ ແລະໃນຖິ່ນກັນດານນັ້ນ ແຕ່ພວກເຂົາໄດ້ທົດລອງ
ຄວາມອົດທົນພຍາຍາມຂອງເຮົາຫລາຍຄັ້ງ ທັງປະຕິເສດບໍ່ຍອມຟັງຄວາມເຮົາ
23 ພວກເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາໄດ້ສັນຍາໄວ້ກັບພວກປູ່ຍ່າຕາຍາຍຂອງພວກເຂົານັ້ນເລີຍ ຜູ້ທີ່
ຫມິ່ນປມາດເຮົາຈະບໍ່ມີໃຜໄດ້ເຂົ້າໄປໃນແຜ່ນດິນນັ້ນ
24 ແຕ່ວ່າ ຍ້ອນກາເລັບຜູ້ຮັບໃຊ້ຂອງເຮົາມີຈິດໃຈແຕກຕ່າງຄົນອື່ນ ແລະຍັງຄົງສັດຊື່ເຮົາຢູ່ ເຮົາຈຶ່ງຈະນຳເຂົາເຂົ້າ
ໄປໃນແຜ່ນດິນທີ່ເຂົາໄດ້ໄປສຳຣວດມາແລ້ວນັ້ນ ແລະເຊື້ອສາຍຂອງເຂົາຈະມີສິດເປັນເຈົ້າຂອງແຜ່ນດິນນັ້ນ
25 ຄືໃນຮ່ອມພູບ່ອນທີ່ອາມາເລກ ແລະຊາວການາອານຢູ່ໃນປະຈຸບັນນີ້ ດັ່ງນັ້ນ ໃນມື້ອື່ນຈົ່ງກັບຄືນເມືອໄປໃນຖິ່ນ
ກັນດານຕາມສາຍທາງສູ່ທະເລແດງ

**ພຣະຜູ້ເປັນເຈົ້າຊົງລົງໂທດ ໄພ່ພົນ**

**ຂອງພຣະອົງຍ້ອນການຈົ່ມທຸກ**

An Attempted Invasion is Repulsed

(ພບຍ1:41-45)

26 ແລ້ວພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,
27 "ຍັງອີກດົນປານໃດ ປະຊາຊົນທີ່ຊົ່ວຊ້າພວກນີ້ຈະເຊົາຈົ່ມທຸກຕໍ່ເຮົາ ເຮົາໄດ້ຍິນສຽງຂອງຄົນອິສຣາເອນຊຶ່ງ
ຈົ່ມທຸກນີ້ມັນລົ້ນຫູເຮົາແລ້ວ
28 ເອົາລະໃຫ້ຕອບເຂົາດັ່ງນີ້ວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຂໍສາບານວ່າ ເຮົາຈະປະຕິບັດຕາມຄຳຮ້ອງຂໍຂອງພວກ
ເຂົາສັນນັ້ນ ເຮົາຄື ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້
29 ພວກເຈົ້າຈະຕາຍ ແລະຊາກສົບຂອງພວກເຈົ້າຈະກະຈັດກະຈາຍໄປທົ່ວຖິ່ນກັນດານນີ້ ກໍຍ້ອນວ່າພວກເຈົ້າຈົ່ມ
ທຸກໃສ່ເຮົາ ໃນຈຳນວນພວກເຈົ້ານັບຕັ້ງແຕ່ອາຍຸຊາວປີຂຶ້ນໄປຈະບໍ່ມີໃຜໄດ້ເຂົ້າໄປໃນແຜ່ນດິນນັ້ນ
30 ເຮົາໄດ້ສັນຍາໄວ້ວ່າຈະພາພວກເຈົ້າໄປໃນບ່ອນນັ້ນ ແຕ່ບໍ່ມີໃຜຈະໄດ້ໄປນອກຈາກ ກາເລັບ ແລະໂຢຊວຍ
ເທົ່ານັ້ນ
31 ພວກເຈົ້າໄດ້ພາກັນເວົ້າວ່າ ພວກລູກຫລານຂອງພວກເຈົ້າຈະຕ້ອງຖືກຈັບ ແຕ່ວ່າເຮົາຈະນຳພວກເຈົ້າໄປຍັງ
ແຜ່ນດິນບ່ອນທີ່ພວກເຈົ້າຈະບໍ່ຍອມໄປນັ້ນ
32 ຊຶ່ງບ່ອນນັ້ນຈະເປັນບ້ານເມືອງຂອງພວກເຂົາ ແຕ່ສ່ວນພວກເຈົ້າຊາກສົບຂອງພວກເຈົ້າຈະຖືກປະຖິ້ມໃນຖິ່ນ
ກັນດານນີ້
33 ແລະພວກລູກຂອງພວກເຈົ້າຈະເປັນຜູ້ລ້ຽງແກະໃນຖິ່ນກັນດານນີ້ເປັນເວລາສີ່ສິບປີ ພວກເຂົາຈະທຸກຍາກລຳ
ບາກຈົນກວ່າຊາກສົບຂອງພວກເຈົ້າຈະເປື່ອຍເນົ່າໄປ
34 ຍ້ອນວ່າພວກເຈົ້າບໍ່ສັດຊື່ ພວກເຈົ້າໄດ້ໄປສຳຣວດເບິ່ງແຜ່ນດິນເປັນເວລາສີ່ສິບວັນ ສະນັ້ນເຮົາຈະລົງໂທດ
ເຈົ້າເປັນເວລາສີ່ສິບປີຍ້ອນວ່າພວກເຈົ້າບໍ່ເຊື່ອຟັງເຮົາ ແລ້ວພວກເຈົ້າຈຶ່ງຈະຮູ້ວ່າຄວາມບໍ່ພໍໃຈຂອງເຮົາມີ
ຄວາມຫມາຍສໍ່າໃດ
35 ເຮົາຂໍສາບານວ່າ ເຮົາຈະກະທຳດັ່ງນີ້ຕໍ່ພວກຄົນຊົ່ວຊ້າທີ່ຮ່ວມໃຈກັນຕໍ່ສູ້ເຮົາ ພວກເຈົ້າທຸກຄົນຈະຕ້ອງຕາຍຢູ່
ໃນຖິ່ນກັນດານນີ້ ເຮົາພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"
36 ພວກທີ່ໂມເຊສົ່ງໄປສຳລວດເບິ່ງແຜ່ນດິນແລ້ວ ກັບມາລາຍງານຂ່າວ ຊຶ່ງເປັນເຫດໃຫ້ປະຊາຊົນຈົ່ມທຸກໃສ່ໂມ
ເຊນັ້ນ

37 ພຣະອົງໄດ້ຊົງທຳໃຫ້ພວກເຂົາຕາຍຍ້ອນໂຣກພັຍໄຂ້ເຈັບ
38 ດັ່ງນັ້ນ ໃນຈຳນວນນັກສືບສິບສອງຄົນນັ້ນຈຶ່ງມີແຕ່ໂຢຊວຍ ແລະກາເລັບເທົ່ານັ້ນທີ່ຍັງມີຊີວິດເຫລືອຢູ່

**ປະເທດການາອານຖືກບຸກລຸກຄັ້ງທຳອິດ**

39 ເມື່ອໂມເຊໄດ້ບອກຄົນອິສຣາເອນກ່ຽວກັບຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວນັ້ນ ພວກເຂົາກໍພາກັນໂສກເສົ້າ
ເສັຽໃຈຫລາຍ
40 ດັ່ງນັ້ນ ໃນເວລາຮຸ່ງເຊົ້າຂອງວັນໃຫມ່ ຄົນອິສຣາເອນກໍອອກໄປຕີເສິກທາງພູນ້ອຍ ແລະເວົ້າວ່າ, "ດຽວນີ້ ຂ້າ
ພະເຈົ້າທັງຫລາຍພ້ອມທີ່ຈະໄປຍັງບ່ອນທີ່ພຣະຜູ້ເປັນເຈົ້າຊົງບອກນັ້ນ ຂ້າພະເຈົ້າທັງຫລາຍຍອມຮັບວ່າຕົນເອ
ງເປັນຄົນບາບແທ້"
41 ແຕ່ໂມເຊບອກວ່າ, "ເປັນຫຍັງພວກເຈົ້າຈຶ່ງບໍ່ຟັງຄວາມພຣະຜູ້ເປັນເຈົ້າ ພວກເຈົ້າຈະບໍ່ມີຜົນສຳເຣັດດອກ
42 ບໍ່ຕ້ອງໄປເພາະວ່າພຣະຜູ້ເປັນເຈົ້າບໍ່ສະຖິດຢູ່ກັບພວກເຈົ້າ ສັດຕຣູຈະຊະນະພວກເຈົ້າ
43 ຍ້ອນວ່າພວກເຈົ້າບໍ່ຍອມຕິດຕາມພຣະຜູ້ເປັນເຈົ້າ ພຣະອົງຈຶ່ງບໍ່ຊົງສະຖິດຢູ່ກັບພວກເຈົ້າ ເມື່ອພວກເຈົ້າໄປປະ
ເຊີນຫນ້າກັບພວກອາມາເລກ ແລະພວກການາອານໃນສນາມຮົບ ພວກເຈົ້າຈະຕ້ອງຖືກຂ້າຕາຍ"
44 ແຕ່ພວກເຂົາກໍຍັງບັງອາດຂຶ້ນໄປຍັງພູນ້ອຍນັ້ນ ທັງໆທີ່ຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ແລະໂມເຊບໍ່ໄດ້
ອອກຈາກຄ້າຍເລີຍ
45 ພວກອາມາເລກ ແລະພວກການາອານທີ່ຢູ່ໃນບ່ອນນັ້ນກໍໂຈມຕີ ແລະຊະນະພວກເຂົາພ້ອມທັງໄລ່ຕິດຕາມ
ພວກເຂົາອອກ ໄປໄກທີ່ສຸດຈົນເຖິງເມືອງໂຮມາ

## 15 ກົດຫມາຍກ່ຽວກັບການຖວາຍບູຊາ

Various Offerings

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າທັງຫລາຍຈະເຂົ້າໃນແຜ່ນດິນທີ່ເຈົ້າຈະເຂົ້າອາໄສຢູ່ຊຶ່ງເຮົາໃຫ້ແກ່ເຈົ້າ
ນັ້ນ
3 ຖ້າຜູ້ໃດຈະນຳເຄື່ອງຈາກຝູງງົວ ຫລືຈາກຝູງແບ້ ແກະໄປຖວາຍພຣະຜູ້ເປັນເຈົ້າເປັນເຄື່ອງບູຊາດ້ວຍໄຟ ຄື
ເຄື່ອງເຜົາບູຊາ ຫລືເຄື່ອງສັດບູຊາ ເພື່ອແກ້ບົນ ຫລືເປັນເຄື່ອງບູຊາດ້ວຍໃຈສມັກຫລືໃນການລ້ຽງຕາມກຳນົດ
ກະທຳໃຫ້ມີກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ
4 ກໍໃຫ້ຜູ້ນຳເຄື່ອງບູຊານັ້ນນຳທັນຍາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ຄືຍອດແປ້ງນຶ່ງໃນສິບເອຟາ ປົນໃສ່ນ້ຳມັນ
ນຶ່ງໃນສີ່ຮິນ
5 ແລະເຈົ້າຈົ່ງຈັດເຫລົ້າອະງຸ່ນນຶ່ງໃນສີ່ຮິນສຳລັບລູກແກະທຸກໂຕເປັນເຄື່ອງດື່ມເຜົາບູຊາຄູ່ກັບເຄື່ອງສັດບູຊາ
6 ຫລືສຳລັບແກະເຖິກໂຕນຶ່ງ ເຈົ້າຈົ່ງຈັດທັນຍາບູຊາດ້ວຍຍອດແປ້ງສອງໃນສິບເອຟາ ປົນໃສ່ນ້ຳມັນນຶ່ງໃນສາມ
ຮິນ
7 ແລະສຳລັບເປັນເຄື່ອງດື່ມບູຊາ ເຈົ້າຈົ່ງຖວາຍເຫລົ້າອະງຸ່ນນຶ່ງໃນສາມຮິນໃຫ້ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້
ເປັນເຈົ້າ
8 ເມື່ອເຈົ້າຈັດງົວເຖິກເປັນເຄື່ອງເຜົາບູຊາ ຫລືເປັນເຄື່ອງສັດບູຊາ ເພື່ອແກ້ບົນ ຫລືໃຫ້ເປັນສານຕິ ບູຊາແດ່ພຣະ
ຜູ້ເປັນເຈົ້າ
9 ກໍໃຫ້ນຳທັນຍາບູຊາມີຍອດແປ້ງສາມໃນສິບເອຟາປົນໃສ່ນ້ຳມັນເຄິ່ງຮິນມາບູຊາພ້ອມກັບງົວເຖິກນັ້ນ
10 ແລະໃຫ້ນຳເຄື່ອງດື່ມບູຊາມີເຫລົ້າອະງຸ່ນເຄິ່ງຮິນໃຫ້ເປັນການບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້
ເປັນເຈົ້າ

11 ຈົ່ງກະທຳຢ່າງນີ້ສຳລັບງົວເຖິກ ຫລືແກະເຖິກທຸກຕົວ ຫລືສຳລັບລູກແກະເຖິກ ຫລືລູກແບ້ທຸກໂຕ
12 ຕາມຈຳນວນສັດທີ່ຈັດມາ ຈົ່ງກະທຳຕາມສ່ວນນີ້ແກ່ສັດທຸກໆໂຕ
13 ບັນດາຊາວພື້ນເມືອງຕ້ອງກະທຳຢ່າງນີ້ທຸກຄົນ ເມື່ອຈະຖວາຍເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພ
ຣະຜູ້ເປັນເຈົ້າ
14 ຖ້າຄົນຕ່າງດ້າວທີ່ມາອາໄສຢູ່ກັບເຈົ້າ ຫລືຄົນນຶ່ງຄົນໃດຖ້າມກາງເຈົ້າຕລອດຊົ່ວເຊື້ອສາຍຂອງເຈົ້າຢາກຈະ
ຖວາຍເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ ກໍ ໃຫ້ເຂົາທັງຫລາຍກະທຳເຫມືອນເຈົ້າ
ທັງຫລາຍໄດ້ກະທຳນັ້ນ
15 ຈະຕ້ອງມີກົດເກນຢ່າງດຽວກັນສຳລັບຊຸມນຸມຊົນ ແລະສຳລັບຄົນຕ່າງດ້າວຜູ້ມາອາໄສຢູ່ກັບເຈົ້າ ເປັນກົດເກນ
ຖາວອນ ຕລອດຊົ່ວເຊື້ອສາຍຂອງເຈົ້າ ຄືເຈົ້າເປັນຢ່າງໃດຄົນຕ່າງດ້າວກໍເປັນຢ່າງນັ້ນຕໍ່ພຣະພັກພຣະຜູ້ເປັນ
ເຈົ້າ
16 ຈະຕ້ອງມີບັນຍັດຢ່າງດຽວກັນ ແລະກົດຫມາຍຢ່າງດຽວກັນສຳລັບເຈົ້າ ແລະກົດຫມາຍຢ່າງດຽວກັນສຳລັບເຈົ້າ
ແລະສຳລັບຄົນຕ່າງດ້າວທີ່ມາອາໄສຢູ່ກັບເຈົ້າ”
17 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ,
18 “ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າທັງຫລາຍມາເຖິງແຜ່ນດິນທີ່ເຮົາຈະພາເຈົ້າໄປ
19 ແລະເມື່ອເຈົ້າຮັບປະທານອາຫານແຫ່ງແຜ່ນດິນນັ້ນ ເຈົ້າຈົ່ງນຳເຄື່ອງບູຊາຖວາຍແດ່ພຣະຜູ້ເປັນເຈົ້າ
20 ຈົ່ງເອົາແປ້ງປຽກສ່ວນນຶ່ງທີ່ເຈົ້າເຮັດໃຫມ່ ເຮັດເຂົ້າຫນົມກ້ອນນຶ່ງຖວາຍເປັນເຄື່ອງບູຊາ ເປັນເຄື່ອງບູຊາທີ່ໄດ້
ຈາກລານນວດເຂົ້າ ເຈົ້າຈົ່ງຖວາຍເຊັ່ນວ່ານີ້
21 ຈົ່ງເອົາແປ້ງປຽກສ່ວນນຶ່ງທີ່ເຈົ້າເຮັດໃຫມ່ຖວາຍເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຕລອດຊົ່ວເຊື້ອສາຍຂອງ
ເຈົ້າ
22 “ຖ້າເຈົ້າທັງຫລາຍໄດ້ປະຕິບັດຜິດ ບໍ່ໄດ້ຮັກສາພຣະບັນຍັດເຫລົ່ານີ້ທຸກປະການ ຊຶ່ງພຣະຜູ້ເປັນເຈົ້າໄດ້ສັ່ງແກ່
ໂມເຊ
23 ທຸກປະການຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໄວ້ທາງໂມເຊ ຕັ້ງແຕ່ວັນທີ່ພຣະຜູ້ເປັນເຈົ້າປະທານພຣະບັນຊາ ແລະ
ຕໍ່ໆໄປ ຕລອດຊົ່ວເຊື້ອສາຍຂອງເຈົ້າ
24 ແລ້ວຖ້າປະຊາຊົນໄດ້ກະທຳຜິດໂດຍບໍ່ເຈຕນາ ໂດຍທີ່ຊຸມນຸມຊົນບໍ່ຮູ້ເຫັນ ຊຸມນຸມຊົນທັງຫມົດຕ້ອງຖວາຍລູກ
ງົວເຖິກໂຕນຶ່ງເປັນເຄື່ອງເຜົາບູຊາໃຫ້ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ ພ້ອມກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນຕາມກົດຫມາຍ ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
25 ແລະໃຫ້ປະໂຣຫິດທຳການລົບມົນທິນບາບໃຫ້ແກ່ຊຸມນຸມຊົນອິສຣາເອນທັງຫມົດແລະເຂົາທັງຫລາຍຈະໄດ້
ຮັບອະພັຍໂທດ ເພາະເປັນການຜິດ ແລະເຂົາໄດ້ນຳເຄື່ອງບູຊາຂອງເຂົາມາຖວາຍດ້ວຍໄຟແດ່ພຣະຜູ້ເປັນເຈົ້າ
ແລະຖວາຍເຄື່ອງບູຊາໄຖ່ບາບຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະຄວາມຜິດຂອງເຂົາ
26 ແລະຊຸມນຸມຊົນອິສຣາເອນທັງຫມົດຈະໄດ້ຮັບອະພັຍໂທດ ພ້ອມກັບຄົນຕ່າງດ້າວຜູ້ຢູ່ຖ້າມກາງເຂົາທັງຫລາຍ
ເພາະວ່າພົນລະເມືອງທັງຫມົດກ່ຽວພັນກັບຄວາມຜິດນັ້ນອັນເກີດຂຶ້ນໂດຍເຈຕນາ
27 “ຖ້າບຸກຄົນຄົນນຶ່ງກະທຳຜິດໂດຍບໍ່ຮູ້ຕົວ ກໍໃຫ້ຜູ້ນັ້ນເອົາແບ້ແມ່ອາຍຸນຶ່ງປີໄປເປັນເຄື່ອງບູຊາໄຖ່ບາບແລະໃຫ້
ປະໂຣຫິດກະທຳການລົບມົນທິນບາບຕໍ່ພຣະຜູ້ເປັນເຈົ້າໃຫ້ບຸກຄົນຜູ້ກະທຳຜິດນັ້ນເມື່ອເຂົາກະທຳບາບໂດຍບໍ່
ຮູ້ຕົວເພື່ອທຳການລົບມົນທິນບາບເຂົາເສັຽ ແລະເຂົາຈະໄດ້ຮັບອະພັຍໂທດ
28 ໃຫ້ເຈົ້າມີບັນຍັດຢ່າງດຽວສຳລັບຜູ້ກະທຳຜິດໂດຍບໍ່ຮູ້ຕົວ ຄືຄົນອິສຣາເອນຜູ້ເປັນຊາວພື້ນເມືອງ ແລະຜູ້ເປັນ
ຄົນຕ່າງດ້າວທີ່ຢູ່ຖ້າມກາງເຂົາ

29 ແຕ່ບຸກຄົນໃດໆບັງອາດກະທຳຜິດ ເຂົາເປັນຄົນພື້ນເມືອງ ຫລືຄົນຕ່າງດ້າວກໍດີ ຜູ້ນັ້ນຫມິ່ນປມາດພຣະຜູ້ເປັນ
ເຈົ້າ ໃຫ້(ອະເປທີ)ຕັດຂາດຜູ້ນັ້ນເສັຽຈາກຊົນຊາດຂອງຕົນ
30 ເພາະເຂົາໄດ້ຫມິ່ນປະຫມາດພຣະດຳຣັດຂອງພຣະຜູ້ເປັນເຈົ້າ ແລະຂັດຂືນພຣະບັນຊາຂອງພຣະອົງ ໃຫ້(ອະ
ເປທີ) ຕັດຂາດຜູ້ນັ້ນໂລດ ໃຫ້ເຂົາຮັບໂທດຂອງຕົນ

**ເອົາຫີນແກ່ວງໃສ່ຄົນທີ່ລະເມີດວັນສະບາໂຕ** Penalty for Violating the Sabbath

(ອພຍ 31:12-17)

31 ຂນະເມື່ອຄົນອິສຣາເອນຢູ່ໃນຖິ່ນກັນດານ ເຂົາພົບຄົນນຶ່ງໄປເກັບຟືນໃນວັນສະບາໂຕ
32 ຜູ້ທີ່ພົບເຂົາເກັບຟືນກໍພາເຂົາມາຫາໂມເຊ ແລະອາໂຣນ ແລະມາຫາຊຸມນຸມຊົນທັງຫມົດ
33 ເຂົາຈຶ່ງຈຳຄົນນັ້ນໄວ້ ເພາະຍັງບໍ່ແຈ້ງວ່າຈະທຳຢ່າງໃດແກ່ເຂົາ
34 ແລະພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ, “ຊາຍຜູ້ນັ້ນຕ້ອງເຖິງຕາຍ ຊຸມນຸມຊົນຕ້ອງເອົາຫີນແກ່ວງໃສ່ເຂົາທີ່
ນອກຄ້າຍ”
35 ແລະຊຸມນຸມຊົນທັງຫມົດຈຶ່ງພາເຂົາມານອກຄ້າຍ ແລະເອົາຫີນແກ່ວງໃສ່ເຂົາຈົນຕາຍ ຕາມທີ່ພຣະຜູ້ເປັນເຈົ້າ
ຊົງບັນຊາໂມເຊ

**ກົດກ່ຽວກັບຍອຍເສື້ອຄຸມ**

Fringes on Garments

36 ພຣະຜູ້ເປັນເຈົ້າກ່າວຕໍ່ໂມເຊວ່າ,
37 “ຈົ່ງເວົ້າກັບຄົນອິສຣາເອນ ແລະສັ່ງເຂົາໃຫ້ທຳຍອຍໃສ່ແຈຂອງເຄື່ອງນຸ່ງຕລອດຊົ່ວເຊື້ອສາຍຂອງເຂົາ ໃຫ້ເອົາ
ດ້າຍສີຟ້າຕິດຍອຍທີ່ແຈທຸກແຈ
38 ເພື່ອເຈົ້າຈະມອງເບິ່ງຍ່ອຍນັ້ນ ແລະຈົດຈຳພຣະບັນຊາທັງສິ້ນຂອງພຣະຜູ້ເປັນເຈົ້າ ແລະປະຕິບັດຕາມ ເພື່ອ
ເຈົ້າຈະບໍ່ກະທຳສິ່ງໃດຕາມຄວາມພໍໃຈພໍຕາຂອງເຈົ້າຊຶ່ງເຈົ້າມັກຫລົງຕາມນັ້ນ
39 ເພື່ອວ່າເຈົ້າຈະຈົດຈຳ ແລະກະທຳຕາມບັນຊາທັງສິ້ນຂອງເຮົາ ແລະເປັນຄົນບໍຣິສຸດແດ່ພຣະຜູ້ເປັນເຈົ້າຂອງເຈົ້
າ
40 ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ນຳເຈົ້າອອກຈາກແຜ່ນດິນເອຢິບ ເພື່ອເປັນພຣະຜູ້ເປັນເຈົ້າຂອງເຈົ້າ
ເຮົາຄື ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ”

## 16 ການກະບົດຂອງໂກຣາ ດາທານ ແລະອາບີຣາມ

Revolt of Korah, Dathan, and Abiram

1 ໂກຣາ ບຸດອິສຣາ ບຸດໂກຮາດ ຜູ້ເປັນບຸດເລວີ ກັບດາທານ ແລະອາບີຣາມ ບຸດເອບີອາບ ແລະໂອນ ບຸດເປເລ
ັດ ບຸດຣູເບນ ພາຄົນໄປ
2 ແລະໄປຢືນຕໍ່ຫນ້າໂມເຊ ພ້ອມກັບຄົນອິສຣາເອນຈຳນວນນຶ່ງ ເປັນຜູ້ນຳຂອງຊຸມນຸມຊົນມີສອງຮ້ອຍຫ້າສິບຄົນ
ທີ່ເລືອກມາຈາກທີ່ປະຊຸມ ເປັນຄົນມີຊື່
3 ແລະເຂົາທັງຫລາຍມາປະຊຸມກັນຕໍ່ໂມເຊ ຕໍ່ອາໂຣນ ກ່າວແກ່ທ່ານທັງສອງວ່າ, “ທ່ານທຳເກີນເຫດໄປ ເພາະ
ວ່າຊຸມນຸມຊົນທັງຫມົດກໍບໍຣິສຸດທຸກໆຄົນ ແລະພຣະຜູ້ເປັນເຈົ້າຊົງສະຖິດຖ້າມກາງເຂົາ ເຫດໃດທ່ານຈຶ່ງຖືຕົວ
ເຫນືອທີ່ປະຊຸມແຫ່ງພຣະຜູ້ເປັນເຈົ້າ”
4 ຄັນໂມເຊໄດ້ຍິນກໍຊົບຫນ້າລົງເຖິງດິນ

5 ທ່ານຈຶ່ງເວົ້າກັບໂກຣາ ແລະພັກພວກຂອງເຂົາວ່າ, “ມື້ອື່ນເຊົ້າ ພຣະຜູ້ເປັນເຈົ້າຈະຊົງສຳແດງໃຫ້ເຫັນວ່າ ຜູ້ໃດເປັນຂອງ ພຣະອົງ ແລະໃຜເປັນຄົນບໍຣິສຸດ ແລະຈະຊົງໃຫ້ຜູ້ນັ້ນເຂົ້າໃກ້ພຣະອົງ ຜູ້ໃດທີ່ພຣະອົງຊົງເລືອກ ພຣະອົງຈະຊົງໃຫ້ເຂົ້າໄປໃກ້ພຣະອົງ

6 ຈົ່ງກະທຳຢ່າງນີ້ ໃຫ້ໂກຣາ ແລະພັກພວກຂອງເຂົານຳຫມໍ້ຂາງໄຟມາ

7 ຈົ່ງເອົາໄຟໃສ່ ແລະໃສ່ເຄື່ອງຫອມຕໍ່ພຣະພັກພຣະຜູ້ເປັນເຈົ້າໃນມື້ອື່ນນີ້ ຜູ້ໃດທີ່ພຣະຜູ້ເປັນເຈົ້າຊົງເລືອກກໍຈະເປັນຄົນບໍຣິສຸດ ບຸດຂອງເລວີເອີຍ ທ່ານທັງຫລາຍໄດ້ກະທຳເກີນເຫດໄປ”

8 ແລະໂມເຊເວົ້າກັບໂກຣາວ່າ, “ພວກທ່ານຜູ້ເປັນບຸດຂອງເລວີຈົ່ງຟັງ

9 ເປັນເຣື່ອງເລັກນ້ອຍສຳລັບທ່ານຢູ່ຫລື ຊຶ່ງພຣະຜູ້ເປັນເຈົ້າແຫ່ງອິສຣາເອນໄດ້ແຍກທ່ານໃຫ້ມາໃກ້ພຣະອົງ ໃຫ້ປະຕິບັດງານໃນຫໍເຕັນສັກສິດຂອງພຣະຜູ້ເປັນເຈົ້າ ແລະຢືນຢູ່ຕໍ່ຫນ້າຊຸມນຸມຊົນເພື່ອບົວລະບັດພຣະອົງ

10 ແລະພຣະອົງຊົງນຳທ່ານມາໃກ້ພຣະອົງຮ່ວມທັງພີ່ນ້ອງທັງສິ້ນຂອງທ່ານ ຄືລູກຫລານຂອງເລວີ ທ່ານທັງຫລາຍສແວງ ຫາຕຳແຫນ່ງປະໂຣຫິດດ້ວຍຫລື

11 ເພາະສະນັ້ນທີ່ທ່ານ ແລະພັກພວກຂອງທ່ານໄດ້ປະຊຸມກັນກໍເປັນການຕໍ່ສູ້ພຣະຜູ້ເປັນເຈົ້າ ສ່ວນອາໂຣນເປັນຫຍັງ ທ່ານຈຶ່ງໄດ້ຈົ່ມໃຫ້ເຂົາ”

12 ໂມເຊໃຊ້ໃຫ້ໄປເອີ້ນດາທານ ແລະອາບີຣາມ ບຸດເອລີອາບ ເຂົາທັງສອງວ່າ, “ເຮົາບໍ່ຂຶ້ນໄປ

13 ເປັນການເລັກນ້ອຍຢູ່ຫລືທີ່ທ່ານນຳພວກເຮົາຈາກແຜ່ນດິນທີ່ມີນ້ຳນົມແລະນ້ຳເຜີ້ງໄຫລບໍຣິບູນ ເພື່ອຈະຂ້າພວກເຮົາເສັຽໃນຖິ່ນກັນດານ ແລະທ່ານຈະໄດ້ຕັ້ງຕົວຂຶ້ນເປັນເຈົ້ານາຍເຫນືອພວກເຮົາດ້ວຍ

14 ນອກຈາກນີ້ ທ່ານບໍ່ໄດ້ນຳພວກເຮົາເຂົ້າໄປຍັງແຜ່ນດິນທີ່ມີນ້ຳນົມ ແລະນ້ຳເຜີ້ງໄຫລບໍຣິບູນ ບໍ່ໄດ້ໃຫ້ພວກເຮົາຮັບທີ່ນາຫລືສວນອະງຸ່ນເປັນມໍຣະດົກ ທ່ານຈະຄວັກຕາຄົນເຫລົ່ານີ້ອອກເສັຽຫລື ເຮົາບໍ່ຂຶ້ນໄປ”

15 ໂມເຊໃຈຮ້າຍແລະກາບທູນພຣະຜູ້ເປັນເຈົ້າວ່າ, “ຂໍຢ່າຊົງໂປດປານເຄື່ອງບູຊາຂອງເຂົາເລີຍ ຂ້າພຣະອົງບໍ່ໄດ້ເອົາລໍຂອງເຂົາມາຈັກໂຕນຶ່ງ ແລະຂ້າພຣະອົງບໍ່ໄດ້ທຳອັນຕະລາຍເຂົາຈັກຄົນດຽວ”

16 ແລະໂມເຊເວົ້າກັບໂກຣາວ່າ, “ຕົວທ່ານ ແລະພັກພວກຂອງທ່ານຈົ່ງເຂົ້າເຝົ້າພຣະຜູ້ເປັນເຈົ້າໃນມື້ອື່ນເຊົ້າ ທັງຕົວທ່ານ ພັກພວກຂອງທ່ານ ແລະອາໂຣນ

17 ໃຫ້ທຸກຄົນນຳຫມໍ້ຂາງໄຟຂອງຕົນໄປ ໃສ່ເຄື່ອງຫອມໃນນັ້ນ ໃຫ້ທຸກຄົນນຳຫມໍ້ຂາງໄຟເຂົ້າເຝົ້າຕໍ່ພຣະຜູ້ເປັນເຈົ້າ ມີຫມໍ້ຂາງໄຟສອງຮ້ອຍຫ້າສິບດ້ວຍກັນ ຕົວທ່ານດ້ວຍ ແລະອາໂຣນ ຕ່າງຈົ່ງເອົາຫມໍ້ຂາງໄຟຂອງຕົນໄປ”

18 ດັ່ງນັ້ນທຸກຄົນຈຶ່ງນຳຫມໍ້ຂາງໄຟເຂົາຕ່າງເອົາໄຟໃສ່ແລະເອົາເຄື່ອງຫອມໃສ່ ແລະເຂົາໄປຢືນຢູ່ທີ່ທາງເຂົ້າເຕັນນັດພົບ ພ້ອມກັບໂມເຊແລະອາໂຣນ

19 ໂກຣາກໍຮ່ວມຊຸມນຸມຊົນທີ່ທາງເຂົ້າເຕັນນັດພົບປະຈັນຫນ້າເຂົາທັງສອງແລະພຣະສະງ່າຣາສີຂອງພຣະຜູ້ເປັນເຈົ້າກໍປາກົດຕໍ່ຊຸມນຸມຊົນ

20 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊ ແລະອາໂຣນວ່າ,

21 “ຈົ່ງແຍກຕົວເສັຽອອກຈາກຊຸມນຸມຊົນນີ້ ເພື່ອເຮົາຈະຜານເຂົາເສັຽໃນພິບຕາດຽວ”

22 ເຂົາທັງສອງກົ້ມຫນ້າລົງເຖິງດິນກາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຜູ້ຊົງເປັນພຣະເຈົ້າແຫ່ງຈິດວິນຍານຂອງມະນຸດທັງສິ້ນ ເມື່ອຄົນດຽວກະທຳຜິດ ພຣະອົງຈະພິໂຣດແກ່ຊຸມນຸມຊົນທັງຫມົດຫລື”

23 ພຣະຜູ້ເປັນເຈົ້າໄດ້ສັ່ງກັບໂມເຊວ່າ,

24 “ຈົ່ງກ່າວແກ່ຊຸມນຸມວ່າ ຈົ່ງໄປໃຫ້ຫ່າງທີ່ຢູ່ຂອງໂກຣາ ດາທານ ແລະອາບີຣາມ”

25 ແລ້ວໂມເຊລຸກຂຶ້ນໄປຫາດາທານ ແລະອາບີຣາມ ແລະພວກຜູ້ໃຫຍ່ແຫ່ງອິສຣາເອນກໍຕາມທ່ານໄປ

26 ໂມເຊຈຶ່ງກ່າວແກ່ຊຸມນຸມຊົນນັ້ນວ່າ, "ທ່ານທັງຫລາຍອອກໄປເສັຽໃຫ້ຫ່າງຈາກເຕັນຂອງຄົນຊົ່ວເຫລົ່ານີ້ ຢ່າ
ແຕະຕ້ອງສິ່ງໃດຂອງເຂົາເລີຍ ຍ້ານວ່າທ່ານທັງຫລາຍຈະຕ້ອງຖືກກວາດໄປກັບບັນດາການບາບຂອງເຂົາ
ດ້ວຍ"
27 ດັ່ງນັ້ນເຂົາທັງຫລາຍກໍອອກໄປໃຫ້ຫ່າງຈາກທີ່ຢູ່ຂອງໂກຣາ ດາທານ ແລະອາບີຣາມ ແລະດາທານກັບອາບີ
ຣາມອອກມາຢືນຢູ່ທີ່ປະຕູເຕັນຂອງຕົນ ພ້ອມກັບເມັຽ ບຸດຊາຍ ແລະລູກນ້ອຍຂອງເຂົາ
28 ແລະໂມເຊເວົ້າວ່າ, "ດັ່ງນີ້ແຫລະ ທ່ານທັງຫລາຍຈະໄດ້ຊາບວ່າ ພຣະຜູ້ເປັນເຈົ້າໃຊ້ໃຫ້ຂ້າພະເຈົ້າມາກະທຳ
ການທັງສິ້ນນີ້ ຂ້າພະເຈົ້າບໍ່ໄດ້ກະທຳຕາມອຳເພີໃຈຂ້າພະເຈົ້າເອງ
29 ຖ້າຄົນເຫລົ່ານີ້ຕາຍຢ່າງຄົນທຳມະດາມາຢ້ຽມຢາມເຂົາ ກໍຫມາຍວ່າພຣະຜູ້ເປັນເຈົ້າບໍ່ໄດ້ຊົງໃຊ້ຂ້າພະເຈົ້າມາ
30 ແຕ່ຖ້າພຣະຜູ້ເປັນເຈົ້າບັນດານສິ່ງໃຫມ່ເກີດຂຶ້ນ ແລະແຜ່ນທໍຣະນີອ້າປາກກືນຄົນເຫລົ່ານີ້ເຂົ້າໄປ ພ້ອມກັບສິ່ງ
ຂອງທັງຫມົດຂອງເຂົາ ແລະເຂົາທັງຫລາຍລົງໄປສູ່ແດນຜູ້ຕາຍທັງເປັນ ທ່ານທັງຫລາຍຈຶ່ງຊາບເຖີດວ່າຄົນ
ເຫລົ່ານີ້ໄດ້ຫມິ່ນ ປມາດພຣະຜູ້ເປັນເຈົ້າ"
31 ເມື່ອທ່ານກ່າວຄຳເຫລົ່ານີ້ຈົບແຜ່ນດິນໃຕ້ບ່ອນທີ່ເຂົາເຫລົ່ານັ້ນຢືນຢູ່ກໍແຍກອອກ
32 ແລະແຜ່ນທໍຣະນີກໍອ້າປາກອອກກືນເຂົາທັງຫລາຍກັບຄອບຄົວ ແລະບັນດາຄົນຂອງໂກຣາ ແລະສິ່ງຂອງທັງ
ຫມົດຂອງເຂົາ
33 ດັ່ງນັ້ນເຂົາທັງຫລາຍພ້ອມກັບສິ່ງຂອງທັງຫມົດຂອງເຂົາລົງໄປສູ່ແດນຄົນຕາຍທັງເປັນ ແລະແຜ່ນດິນກໍກືນເຂົາ
ໄວ້ ແລະເຂົາທັງຫລາຍກໍພິນາດເສັຽຈາກຖ້າມກາງທີ່ປະຊຸມ
34 ອິສຣາເອນທັງຫມົດທີ່ຢູ່ອ້ອມເຂົາໄດ້ຍິນສຽງຮ້ອງຂອງເຂົາກໍຫນີໄປ ເພາະເຂົາກ່າວວ່າ "ຢ້ານວ່າທໍຣະນີຈະກືນ
ເຮົາເສັຽ"
35 ແລະໄຟອອກມາຈາກພຣະຜູ້ເປັນເຈົ້າ ເຜົາຜານຄົນທັງສອງຮ້ອຍຫ້າສິບທີ່ໄດ້ຖວາຍເຄື່ອງຫອມນັ້ນເສັຽ

**ຫມໍ້ຂາງໄຟ**

36 ແລ້ວພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
37 "ຈົ່ງບອກເອເລອາຊາ ບຸດອາໂຣນປະໂຣຫິດ ໃຫ້ເອົາຫມໍ້ຂາງໄຟອອກເສັຽຈາກແປວໄຟ ແລະເຈົ້າຈົ່ງກະຈາຍ
ກ້ອນໄຟອອກຫ່າງໆກັນ ເພາະຫມໍ້ຂາງໄຟເຫລົ່ານັ້ນບໍຣິສຸດ
38 ຄືຫມໍ້ຂາງຂອງຄົນເຫລົ່ານີ້ທີ່ໄດ້ກະທຳບາບຈົນເຖິງເສັຽຊີວິດນັ້ນ ຈົ່ງເອົາຄ້ອນຕີແຜ່ທຳເປັນແຜ່ນຄຸມແທ່ນບູຊາ
ເພາະໄດ້ຖວາຍຫມໍ້ຂາງເຫລົ່ານັ້ນແດ່ພຣະຜູ້ເປັນເຈົ້າ ຈຶ່ງເປັນສິ່ງບໍຣິສຸດ ດັ່ງນັ້ນສິ່ງເຫລົ່ານີ້ຈະເປັນຫມາຍສຳ
ຄັນແກ່ຄົນອິສຣາເອນ"
39 ດັ່ງນັ້ນປະໂຣຫິດເອເລອາຊາຈຶ່ງນຳຫມໍ້ຂາງໄຟທອງສຳຣິດ ຊຶ່ງຜູ້ທີ່ຖືກໄຟເຜົານຳໄປບູຊາມາຕີແຜ່ອອກເປັນ
ແຜ່ນຄຸມແທ່ນບູຊາ
40 ໃຫ້ເປັນເຄື່ອງເຕືອນໃຈຄົນອິສຣາເອນ ເພື່ອວ່າຄົນສາມັນຜູ້ທີ່ບໍ່ແມ່ນເຜົ່າເຊື້ອສາຍຂອງອາໂຣນ ຈະບໍ່ໄດ້ເຂົ້າ
ໄປເຜົາເຄື່ອງຫອມຖວາຍພຣະຜູ້ເປັນເຈົ້າ ຢ້ານວ່າຈະເປັນຢ່າງໂກຣາ ແລະພັກພວກຂອງເຂົາ ດັ່ງທີ່ພຣະຜູ້
ເປັນເຈົ້າກ່າວກັບເອເລອາຊາຜ່ານທາງໂມເຊ
41 ມື້ຕໍ່ມາຊຸມນຸມຊົນອິສຣາເອນກໍຈົ່ມທຸກຕໍ່ໂມເຊ ແລະອາໂຣນວ່າ, "ທ່ານໄດ້ປະຫານຊີວິດຄົນຂອງພຣະຜູ້ເປັນ
ເຈົ້າເສັຽ"
42 ແລະເມື່ອຊຸມນຸມຊົນມາປະຊຸມປະຈັນຫນ້າໂມເຊ ແລະອາໂຣນ ເຂົາຫັນຫນ້າມາສູ່ເຕັນນັດພົບ ແລະເບິ່ງແມ,
ເມກມາຄຸມເຕັນນັ້ນ ແລະພຣະສະງ່າຣາສີຂອງພຣະຜູ້ເປັນເຈົ້າກໍປາກົດ
43 ໂມເຊ ກັບອາໂຣນຈຶ່ງມາຫນ້າເຕັນນັດພົບ
44 ແລະພຣະຜູ້ເປັນເຈົ້າໄດ້ສັ່ງໂມເຊວ່າ,

45 "ຈົ່ງອອກໄປເສັຍຈາກຖ້າມກາງປະຊຸມຊົນນີ້ ເພື່ອເຮົາຈະຜານເຂົາທັງຫລາຍເສັຍໃນພິບຕາດຽວ" ແລະທ່ານທັງສອງກໍກົ້ມຫນ້າລົງເຖິງດິນ

46 ໂມເຊເວົ້າກັບອາໂຣນວ່າ, "ຈົ່ງເອົາຫມໍ້ຂາງໄຟຂອງທ່ານ ເອົາໄຟຈາກແທ່ນບູຊາໃສ່ໄວ້ ແລ້ວໃສ່ເຄື່ອງຫອມ ຮີບນໍາໄປທີ່ຊຸມນຸມຊົນທໍາການລົບມົນທິນບາບຂອງຊຸມນຸມຊົນນັ້ນເສັຍ ເພາະພຣະພິໂຣດພຸ່ງອອກມາຈາກພຣະຜູ້ເປັນເຈົ້າແລ້ວ ພັຍວິບັດໄດ້ບັງເກີດຂຶ້ນ"

47 ອາໂຣນຈຶ່ງນໍາຫມໍ້ຂາງໄຟດັ່ງທີ່ໂມເຊບອກ ແລ່ນເຂົ້າໄປຖ້າມກາງທີ່ປະຊຸມ ແລະພັຍວິບັດໄດ້ບັງເກີດຂຶ້ນແກ່ປະຊາຊົນແລ້ວ ແລະທ່ານໄດ້ໃສ່ເຄື່ອງຫອມແລະທໍາການລົບມົນທິນບາບຂອງປະຊາຊົນ

48 ທ່ານໄດ້ຢືນຢູ່ລະຫວ່າງຄົນຕາຍກັບຄົນເປັນ ແລະພັຍວິບັດນັ້ນກໍຖືກລະງັບແລ້ວ

49 ບັນດາຄົນທີ່ຕາຍດ້ວຍພັຍວິບັດມີນຶ່ງຫມື່ນສີ່ພັນເຈັດຮ້ອຍຄົນ ບໍ່ນັບຄົນທີ່ຕາຍດ້ວຍເຣື່ອງຂອງໂກຣາ

50 ເມື່ອພັຍວິບັດຖືກລະງັບແລ້ວ ອາໂຣນກໍກັບໄປຫາໂມເຊທາງເຂົ້າເຕັນນັດພົບ

## 17 ໄມ້ເທົ້າຂອງອາໂຣນ

The Budding of Aaron's Rod

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 "ຈົ່ງເວົ້າກັບຄົນອິສຣາເອນ ແລະເອົາໄມ້ເທົ້າມາຈາກເຂົາ ເຜົ່າລະອັນຈາກຫົວຫນ້າທຸກຄົນຕາມເຜົ່າ ເປັນໄມ້ເທົ້າສິບສອງອັນ ຂຽນຊື່ຊາຍເຈົ້າຂອງໄມ້ໄວ້ເທິງໄມ້ເທົ້າທຸກອັນ

3 ຂຽນຊື່ຂອງອາໂຣນໄວ້ເທິງໄມ້ເທົ້າຂອງຄົນເຜົ່າເລວີ ເພາະຈະມີໄມ້ເທົ້າອັນດຽວສໍາລັບຫົວຫນ້າເຜົ່ານຶ່ງ

4 ຈົ່ງວາງໄມ້ເທົ້າເຫລົ່ານັ້ນໄວ້ໃນເຕັນນັດພົບ ຕໍ່ຫນ້າພຣະໂອວາດທີ່ຊຶ່ງເຮົາພົບກັບເຈົ້າທັງຫລາຍ

5 ແລະໄມ້ເທົ້າຂອງຊາຍຜູ້ທີ່ເຮົາໂຜດເລືອກນັ້ນຈະງອກ ເຊັ່ນນີ້ເຮົາຈະກະທໍາໃຫ້ສຽງຈົ່ມຂອງຄົນອິສຣາເອນ ຊຶ່ງເຂົາຈົ່ມຕໍ່ເຈົ້າສງົບລົງເສັຽຈາກເຮົາ"

6 ໂມເຊຈຶ່ງສັ່ງຄົນອິສຣາເອນ ແລະຫົວຫນ້າຂອງທ່ານທຸກຄົນກໍມອບໄມ້ເທົ້າແກ່ທ່ານຄົນລະອັນຕາມເຜົ່າເປັນໄມ້ເທົ້າສິບສອງອັນ ແລະໄມ້ເທົ້າຂອງອາໂຣນກໍຢູ່ໃນໄມ້ເທົ້າເຫລົ່ານັ້ນດ້ວຍ

7 ແລະໂມເຊວາງໄມ້ເທົ້າເຫລົ່ານັ້ນຕໍ່ພຣະຜູ້ເປັນເຈົ້າທີ່ໃນເຕັນພຣະໂອວາດ

8 ມື້ຕໍ່ມາໂມເຊໄດ້ເຂົ້າໄປໃນເຕັນພຣະໂອວາດ ເບິ່ງແມ່, ໄມ້ເທົ້າຂອງອາໂຣນສໍາລັບເຜົ່າເຊື້ອສາຍເລວີໄດ້ງອກມີດອກຈູມແລະດອກບານ ແລະເກີດຫມາກອັນໂມນສຸກຕິດຢູ່ນໍາ

9 ແລ້ວໂມເຊນໍາໄມ້ເທົ້າທັງຫມົດຈາກທີ່ຕໍ່ງພຣະພັກພຣະຜູ້ເປັນເຈົ້າມາຍັງຄົນອິສຣາເອນ ເຂົາໄດ້ກວດເບິ່ງແລະທຸກຄົນກໍນໍາໄມ້ເທົ້າຂອງຕົນໄປ

10 ພຣະຜູ້ເປັນເຈົ້າໄດ້ກ່າວກັບໂມເຊວ່າ, "ຈົ່ງນໍາໄມ້ເທົ້າຂອງອາໂຣນກັບໄປວາງໄວ້ທີ່ພຣະໂອວາດ ເກັບໄວ້ເປັນຫມາຍສໍາຄັນສໍາລັບເຕືອນພວກກະບົດ ເພື່ອເຈົ້າຈະໃຫ້ເຂົາທັງຫລາຍຍຸຕິການຈົ່ມວ່າເຮົາ ເພື່ອເຂົາຈະບໍ່ຕ້ອງຕາຍ"

11 ໂມເຊກໍກະທໍາເຊັ່ນນີ້ ພຣະຜູ້ເປັນເຈົ້າໄດ້ຊົງສັ່ງທ່ານຢ່າງໃດ ທ່ານກໍກະທໍາຢ່າງນັ້ນ

12 ແລະຄົນອິສຣາເອນເວົ້າກັບໂມເຊວ່າ, "ເບິ່ງແມ່, ເຮົາພິນາດ ເຮົາເຖິງຄວາມຫາຍຍະນະ ເຮົາເຖິງຫາຍຍະນະຫມົດແລ້ວ

13 ທຸກຄົນທີ່ມາໃກ້ ຜູ້ມາໃກ້ຫໍເຕັນສັກສິດແຫ່ງພຣະຜູ້ເປັນເຈົ້າຕ້ອງຕາຍ ເຮົາຈະຕ້ອງຕາຍຫມົດຫລື"

## 18 ສິ່ງທີ່ຈັດສັນໄວ້ໃຫ້ປະໂຣຫິດ ແລະຄົນເລວີ

Responsibility of Priests and Levites

1 ດັ່ງນັ້ນພຣະຜູ້ເປັນເຈົ້າຊົງກ່າວແກ່ອາໂຣນວ່າ, “ເຈົ້າແລະບຸດຂອງເຈົ້າ ແລະຕະກູນຂອງເຈົ້າຈະຕ້ອງຮັບໂທດຄວາມຜິດ ເນື່ອງດ້ວຍສະຖານນະມັສການ ທັງເຈົ້າແລະບຸດຂອງເຈົ້າຈະຕ້ອງຮັບໂທດຄວາມຜິດ ເນື່ອງດ້ວຍໜ້າທີ່ປະໂຣຫິດຂອງເຈົ້າ

2 ແລະຈົ່ງນຳພີ່ນ້ອງຂອງເຈົ້າມາໃກ້ເຈົ້າ ຊຶ່ງເປັນເຜົ່າເລວີ ເຜົ່າບິດາຂອງເຈົ້າ ເພື່ອເຂົາຈະສົມທົບກັບເຈົ້າ ແລະປົວລະບັດເຈົ້າ ຂນະທີ່ເຈົ້າແລະບຸດຢູ່ຕໍ່ໜ້າເຕັນພຣະໂອວາດ

3 ເຂົາທັງຫລາຍຈະຄອຍຮັບໃຊ້ເຈົ້າ ແລະຮັບໃຊ້ໜ້າທີ່ຕ່າງໆຂອງເຕັນ ແຕ່ຢ່າໃຫ້ເຂົ້າໃກ້ເຄື່ອງໃຊ້ຂອງສະຖານນະມັສການ ຫລືແທ່ນບູຊາ ຢ້ານວ່າເຂົາທັງຫລາຍ ແລະເຈົ້າຈະຕ້ອງຕາຍ

4 ເຂົາທັງຫລາຍຈະສົມທົບກັບພວກເຈົ້າ ແລະຄອຍຮັບໃຊ້ຢູ່ທີ່ເຕັນນັດພົບ ໃນງານປົວລະບັດທັງສິ້ນຂອງເຕັນ ແລະຢ່າໃຫ້ຜູ້ອື່ນໃດມາໃກ້ເຈົ້າ

5 ພວກເຈົ້າຕ້ອງຄອຍຮັບໃຊ້ໃນໜ້າທີ່ຂອງສະຖານນະມັສການ ແລະໜ້າທີ່ຂອງແທ່ນບູຊາ ເພື່ອພຣະພິໂຣດຈະບໍ່ເກີດແກ່ຄົນອິສຣາເອນອີກ

6 ແລະເບິ່ງແມ໋, ເຮົາໄດ້ເລືອກຄົນເລວີພີ່ນ້ອງຂອງເຈົ້າອອກຈາກຄົນອິສຣາເອນເປັນຂອງປະທານແກ່ເຈົ້າ ຖວາຍແດ່ພຣະຜູ້ເປັນເຈົ້າ ເພື່ອໃຫ້ເຈົ້າປະຕິບັດງານຂອງເຕັນນັດພົບ

7 ທັງເຈົ້າແລະບຸດຊາຍຈົ່ງຄອຍຮັບໃຊ້ໃນໜ້າທີ່ປະໂຣຫິດ ເພື່ອງານທຸກຢ່າງທີ່ກ່ຽວຂ້ອງກັບແທ່ນບູຊາ ແລະສິ່ງທີ່ຢູ່ພາຍໃນຜ້າກັ້ງ ເຈົ້າຕ້ອງຢູ່ປະຕິບັດງານ ເຮົາໃຫ້ຕຳແໜ່ງປະໂຣຫິດແກ່ເຈົ້າເປັນຂອງປະທານ ແລະຜູ້ໃດອື່ນທີ່ເຂົ້າມາໃກ້ຕ້ອງໃຫ້ເຖິງແກ່ຄວາມຕາຍ”

The Priests’ Portion

8 ແລ້ວພຣະຜູ້ເປັນເຈົ້າກ່າວຕໍ່ອາໂຣນວ່າ, “ເບິ່ງແມ໋, ເຮົາໄດ້ໃຫ້ເຄື່ອງບູຊາຂອງເຮົາສ່ວນນຶ່ງແກ່ເຈົ້າ ຄືບັນດາຂອງຖວາຍຂອງຄົນອິສຣາເອນ ເຮົາໃຫ້ເຈົ້າສ່ວນນຶ່ງ ແລະແກ່ລູກຫລານຂອງເຈົ້າເປັນສ່ວນກຳນົດຖາວອນ

9 ໃນບັນດາຂອງບໍຣິສຸດທີ່ສຸດສ່ວນຊຶ່ງບໍ່ໄດ້ເຜົາໄຟທີ່ເປັນຂອງຂອງເຈົ້າມີດັ່ງນີ້ ບັນດາຂອງຖວາຍຂອງເຂົາ ບັນດາທັນຍາບູຊາຂອງເຂົາ ບັນດາເຄື່ອງບູຊາໄຖ່ບາບຂອງເຂົາ ບັນດາເຄື່ອງບູຊາໄຖ່ກັມບາບຂອງເຂົາ ຊຶ່ງເຂົາຖວາຍແກ່ເຮົາ ຈະເປັນຂອງບໍຣິສຸດທີ່ສຸດແກ່ເຈົ້າ ແລະແກ່ລູກຫລານຂອງເຈົ້າ

10 ເຈົ້າຈົ່ງຮັບປະທານສິ່ງເຫລົ່ານີ້ໃນທີ່ບໍຣິສຸດທີ່ສຸດ ຜູ້ຊາຍທຸກຄົນຮັບປະທານໄດ້ ເປັນຂອງບໍຣິສຸດແກ່ເຈົ້າ

11 ສິ່ງຕໍ່ໄປນີ້ກໍເປັນຂອງເຈົ້າດ້ວຍ ຄືຂອງໃຫ້ທີ່ເຂົາຖວາຍ ບັນດາຂອງຍື່ນຖວາຍຂອງຄົນອິສຣາເອນ ເຮົາໄດ້ໃຫ້ໄວ້ແກ່ເຈົ້າແລະແກ່ບຸດຊາຍຍິງຊຶ່ງຢູ່ກັບເຈົ້າເປັນສ່ວນຖາວອນ ທຸກຄົນທີ່ສະອາດຢູ່ໃນຄອບຄົວຂອງເຈົ້າຮັບປະທານໄດ້

12 ນ້ຳມັນທີ່ດີທີ່ສຸດທັງໝົດ ແລະເຫລົ້າອະງຸ່ນທີ່ດີທີ່ສຸດ ແລະພືດຜົນທີ່ເປັນເມັດ ແລະຜົນຮຸ່ນທຳອິດທີ່ເຂົາຖວາຍແດ່ພຣະຜູ້ເປັນເຈົ້າເຮົາໃຫ້ແກ່ເຈົ້າ

13 ຜົນທີ່ສຸກຮຸ່ນທຳອິດຂອງທຸກຢ່າງຊຶ່ງຢູ່ໃນແຜ່ນດິນທີ່ເຂົານຳມາຖວາຍພຣະຜູ້ເປັນເຈົ້າຈະເປັນຂອງເຈົ້າ ທຸກຄົນທີ່ສະອາດຢູ່ໃນຄອບຄົວຂອງເຈົ້າຮັບປະທານໄດ້

14 ບັນດາຂອງມອບຖວາຍໃນອິສຣາເອນຈະເປັນຂອງເຈົ້າ

15 ລູກຫົວປີຂອງຄົນອິສຣາເອນ ບໍ່ວ່າມະນຸດ ຫລືສັດກໍດີ ຊຶ່ງເຂົາຖວາຍແດ່ພຣະຜູ້ເປັນເຈົ້າຈະເປັນຂອງເຈົ້າ ແຕ່ຢ່າງໃດກໍຕາມ ບຸດຫົວປີຂອງມະນຸດເຈົ້າຈະຕ້ອງໄຖ່ໄວ້ ເຈົ້າຕ້ອງໄຖ່ລູກຫົວປີຂອງບັນດາສັດທັງປວງທີ່ມົນທິນດ້ວຍ

16 ແລະຄ່າໄຖ່ (ພໍອາຍຸໄດ້ນຶ່ງເດືອນເຈົ້າກໍຕ້ອງໄຖ່) ໃຫ້ເຈົ້າກຳນົດວ່າເປັນເງິນຫ້າເຊເກລ ຕາມເຊເກລຂອງສະຖານນະມັສການ (ຊຶ່ງເປັນຊາວເກຣາ)

17 ແຕ່ລູກທົ່ວປີຂອງງົວ ຫລືລູກທົ່ວປີຂອງແກະ ຫລືລູກທົ່ວປີຂອງແບ້ ເຈົ້າບໍ່ຕ້ອງໄຖ່ ເພາະເປັນຂອງບໍຣິສຸດ ເຈົ້າ
ຈຶ່ງເອົາເລືອດຂອງມັນຊິດໃສ່ແທ່ນບູຊາ ແລະເອົາໄຂມັນຂອງມັນເຜົາເປັນເຄື່ອງບູຊາດ້ວຍໄຟໃຫ້ເປັນກິ່ນທີ່ພໍ
ພຣະທັຍແດ່ພຣະຜູ້ ເປັນເຈົ້າ
18 ແຕ່ຊີ້ນຂອງມັນຈະເປັນຂອງເຈົ້າ ເຊັ່ນດຽວກັບຊີ້ນເອິກທີ່ຍື່ນຖວາຍ ຫລືຊີ້ນຕົ້ນຂາຂວາເປັນຂອງເຈົ້າ
19 ບັນດາເຄື່ອງບູຊາບໍຣິສຸດທີ່ຄົນອິສຣາເອນມອບຖວາຍແດ່ພຣະຜູ້ເປັນເຈົ້າ ເຮົາໃຫ້ແກ່ເຈົ້າເປັນສ່ວນແບ່ງຖາ
ວອນ ເປັນຄໍາສັນຍາທີ່ເປັນນິດແດ່ພຣະຜູ້ເປັນເຈົ້າສໍາລັບເຈົ້າ ແລະເຜົ່າເຊື້ອສາຍຂອງເຈົ້າດ້ວຍ”
20 ແລະພຣະເຈົ້າໄດ້ສັ່ງອາໂຣນວ່າ, “ເຈົ້າຈະບໍ່ໄດ້ຮັບມໍຣະດົກໃນແຜ່ນດິນຂອງເຂົາ ທັງເຈົ້າຈະບໍ່ມີສ່ວນອັນໃດ
ກັບເຂົາເລີຍ ເຮົາເປັນສ່ວນແບ່ງຂອງເຈົ້າແລະເປັນມໍຣະດົກຂອງເຈົ້າທ້າມກາງຄົນອິສຣາເອນ
21 “ເຮົາໃຫ້ນຶ່ງສ່ວນສິບໃນອິສຣາເອນແກ່ຄົນເລວີເປັນມໍຣະດົກເປັນຄ່າຕອບແທນງານທີ່ເຂົາປະຕິບັດ ຄືງານປະຕິ
ບັດທີ່ເຕັນນັດພົບ
22 ຕັ້ງແຕ່ນີ້ຕໍ່ໄປຄົນອິສຣາເອນຈະບໍ່ໄດ້ເຂົ້າມາໃກ້ເຕັນນັດພົບ ຍ້ານວ່າເຂົາຈະຮັບໂທດບາບ ແລະຈະຕ້ອງຕາຍ
23 ແຕ່ຄົນເລວີຈະຕ້ອງປະຕິບັດງານຂອງເຕັນນັດພົບ ແລະເຂົາຈະຕ້ອງຮັບໂທດຄວາມຜິດຂອງເຂົາ
ຈະເປັນກົດເກນຖາວອນຕລອດຊົ່ວເຊື້ອສາຍຂອງເຈົ້າ ເຂົາຈະບໍ່ມີສ່ວນມໍຣະດົກທ້າມກາງຄົນອິສຣາເອນ
24 ເພາະວ່າເຮົາໄດ້ຍົກນຶ່ງສ່ວນສິບຂອງຄົນອິສຣາເອນ ຊຶ່ງນໍາມາຖວາຍແດ່ພຣະຜູ້ເປັນເຈົ້າ ເຮົາໄດ້ໃຫ້ແກ່ຄົນເລ
ວີເປັນມໍຣະດົກ ເພາະສະນັ້ນເຮົາຈຶ່ງໄດ້ບອກເຂົາວ່າເຂົາຈະບໍ່ມີສ່ວນມໍຣະດົກທ້າມກາງຄົນອິສຣາເອນ
25 ພຣະຜູ້ເປັນເຈົ້າກ່າວຕໍ່ໂມເຊວ່າ,
26 ນອກຈາກນີ້ ເຈົ້າຈົ່ງກ່າວແກ່ຄົນເລວີວ່າ “ເມື່ອພວກເຈົ້າຮັບນຶ່ງສ່ວນສິບຈາກຄົນອິສຣາເອນ ຊຶ່ງເຮົາໃຫ້ເປັນ
ກໍາມະສິດຂອງເຈົ້ານັ້ນ ພວກເຈົ້າຈົ່ງແບ່ງນຶ່ງສ່ວນສິບ ຖວາຍເປັນສ່ວນອຸດຫນຸນໃຫ້ແກ່ພຣະຜູ້ເປັນເຈົ້າເຫມືອນ
ກັນ
27 ແລະສ່ວນຖວາຍຂອງເຈົ້ານັ້ນຈະນັບເຫມືອນນຶ່ງເປັນພືດທີ່ໄດ້ມາຈາກລານນວດເຂົ້າ ແລະເຫມືອນສ່ວນທີ່
ເຕັມປ່ຽມຈາກບໍ່ຢໍ່າອະງຸ່ນ
28 ເພາະສະນັ້ນເຈົ້າຕ້ອງນໍາຂອງບູຊາຈາກນຶ່ງສ່ວນສິບທັງສິ້ນຂອງເຈົ້າຖວາຍແດ່ພຣະຜູ້ເປັນເຈົ້າ ຄືນຶ່ງສ່ວນສິບທີ່
ເຈົ້າຮັບຈາກຄົນອິສຣາເອນນັ້ນ ຈາກສ່ວນໄດ້ນີ້ພວກເຈົ້າຈົ່ງມອບຂອງຖວາຍແດ່ພຣະຜູ້ເປັນເຈົ້າແກ່ອາໂຣນ
ປະໂຣຫິດ
29 ຈາກບັນດາຂອງທີ່ພວກເຈົ້າໄດ້ຮັບເຈົ້າຈົ່ງນໍາເຄື່ອງຖວາຍທຸກສິ່ງທີ່ຕ້ອງຖວາຍແດ່ພຣະຜູ້ເປັນເຈົ້າ ຈາກບັນດາ
ຂອງດີທີ່ສຸດນັ້ນ ຄືສ່ວນຂອງທີ່ບໍຣິສຸດ
30 ສະນັ້ນເຈົ້າຈົ່ງເວົ້າກັບເຂົາວ່າ, “ເມື່ອເຈົ້າໄດ້ຖວາຍສ່ວນທີ່ດີທີ່ສຸດແລ້ວ ໃຫ້ຄົນເລວີນັບສ່ວນທີ່ເຫລືອຢູ່ເປັນ
ເຫມືອນນຶ່ງພືດທີ່ໄດ້ມາຈາກລານນວດເຂົ້າ ແລະເປັນຜົນໄດ້ຈາກບໍ່ຢໍ່າອະງຸ່ນ
31 ແລະເຈົ້າຈະຮັບປະທານສ່ວນນັ້ນໃນທີ່ໃດໆກໍໄດ້ ທັງຕົວເຈົ້າ ແລະຄອບຄົວຂອງເຈົ້າ ເພາະວ່າເປັນຮາງວັນ
ຕອບແທນງານປະຕິບັດຂອງເຈົ້າໃນເຕັນນັດພົບ
32 ເມື່ອເຈົ້າໄດ້ຖວາຍສ່ວນທີ່ດີທີ່ສຸດແລ້ວ ເຈົ້າຈະບໍ່ມີໂທດໂດຍຂອງຖວາຍນັ້ນ ແລະເຈົ້າຢ່າທໍາສິ່ງບໍຣິສຸດຂອງ
ຄົນອິສຣາເອນໃຫ້ເປັນມົນທິນ ຍ້ານວ່າເຈົ້າຈະຕ້ອງຕາຍ”

## 19 ການຊໍາຣະຜູ້ມີມົນທິນ

Ceremony of the Red Heifer

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,

2 “ຕໍ່ໄປນີ້ເປັນກົດພຣະທັມຊຶ່ງພຣະຜູ້ເປັນເຈົ້າໄດ້ຊົງບັນຊາວ່າ ຈົ່ງບອກຄົນອິສຣາເອນໃຫ້ນຳງົວແມ່ສີແດງບໍ່ພິການຊຶ່ງບໍ່ມີຕຳໜິ ແລະຍັງບໍ່ເຄີຍເຂົ້າທຽມແອກ
3 ແລະເຈົ້າຈົ່ງໃຫ້ງົວນັ້ນແກ່ເອເລອາຊາປະໂຣຫິດ ແລະໃຫ້ເອົາງົວນັ້ນໄປນອກຄ້າຍຂ້າເສັຽຕໍ່ໜ້າເຂົາ
4 ແລະເອເລອາຊາຈະເອົານິ້ວມືຈຸ່ມເລືອດງົວຊິດໃສ່ທີ່ຂ້າງໜ້າເຕັນນັດພົບເຈັດຄັ້ງ
5 ແລະໃຫ້ມີຄົນເຜົາງົວແມ່ນັ້ນເສັຽຕໍ່ໜ້າເຂົາ ຄືໜັງ ເນື້ອ ແລະເລືອດ ກັບເຄື່ອງໃນໄສ້ພຸງໃຫ້ເຜົາເສັຽໝົດ
6 ແລະປະໂຣຫິດຈະເອົາໄມ້ສົນ ໄມ້ຫູສົບກັບດ້າຍສີແດງໂຍນເຂົ້າໄປໃນໄຟທີ່ເຜົາງົວແມ່ນັ້ນ
7 ແລ້ວປະໂຣຫິດຈະຊັກເສື້ອຜ້າຂອງຕົນ ແລະຊຳຣະຮ່າງກາຍເສັຽໃນນໍ້າ ພາຍຫລັງຈຶ່ງເຂົ້າໄປໃນຄ້າຍ ແລະປະໂຣຫິດນັ້ນຈຶ່ງເປັນມົນທິນຢູ່ຈົນເຖິງເວລາຄໍ່າ
8 ຜູ້ໃດທີ່ທຳການເຜົາງົວແມ່ຕ້ອງຊັກເສື້ອຜ້າ ແລະຊຳຣະຮ່າງກາຍຂອງຕົນເສັຽໃນນໍ້າ ແລະເຂົາຈະເປັນມົນທິນຢູ່ຈົນເຖິງເວລາຄໍ່າ
9 ໃຫ້ຊາຍຄົນທີ່ສະອາດເກັບຂີ້ເຖົ່າງົວແມ່ ນຳໄປໄວ້ນອກຄ້າຍໃນທີ່ສະອາດ ໃຫ້ເກັບຂີ້ເຖົ່ານັ້ນໄວ້ເພື່ອຄົນອິສຣາເອນ ເພື່ອທຳນໍ້າຊຳຣະມົນທິນສຳລັບລ້າງບາບ
10 ແລະຄົນທີ່ເກັບຂີ້ເຖົ່າໄຟຂອງງົວແມ່ຕ້ອງຊັກເສື້ອຜ້າຂອງຕົນ ແລະເຂົາຈະເປັນມົນທິນຢູ່ຈົນເຖິງເວລາຄໍ່າ ຈະເປັນຢ່າງນີ້ແກ່ຄົນອິສຣາເອນ ແລະແກ່ຄົນຕ່າງດ້າວຜູ້ອາສັຍຢູ່ຖ້າມກາງເຂົາເປັນກົດເກນຖາວອນ
11 “ຜູ້ທີ່ແຕະຕ້ອງສົບຂອງຜູ້ໃດກໍຕາມ ຕ້ອງເປັນມົນທິນຢູ່ເຈັດວັນ
12 ໃນວັນທີສາມແລະວັນທີເຈັດເຂົາຕ້ອງຊຳຣະຕົວດ້ວຍນໍ້າແລ້ວເຂົາຈະສະອາດ ຖ້າເຂົາບໍ່ຊຳຣະຕົວໃນວັນທີສາມແລະວັນທີ ເຈັດເຂົາຈະສະອາດບໍ່ໄດ້
13 ຜູ້ໃດແຕະຕ້ອງຄົນຕາຍ ຄືຮ່າງກາຍຂອງຄົນທີ່ຕາຍແລ້ວ ແລະບໍ່ໄດ້ຊຳຣະຕົນ ຜູ້ນັ້ນກໍກະທຳໃຫ້ຫໍເຕັນຂອງພຣະຜູ້ເປັນເຈົ້າມີມົນທິນ ຕ້ອງ(ອະເປຫິ) ຕັດຂາດຄົນນັ້ນອອກຈາກອິສຣາເອນ ເພາະບໍ່ໄດ້ເອົານໍ້າຊຳຣະມົນທິນສາດໃສ່ເຂົາ ເຂົາຈະເປັນມົນທິນ ມົນທິນຍັງຄ້າງຢູ່ທີ່ເຂົາ
14 “ຕໍ່ໄປນີ້ເປັນບັນຍັດເຣື່ອງຄົນຕາຍໃນເຕັນ ທຸກຄົນທີ່ເຂົ້າມາໃນເຕັນ ຫລືທຸກຄົນທີ່ຢູ່ໃນເຕັນຈະເປັນມົນທິນໄປເຈັດວັນ
15 ພາຊນະທຸກໜ່ວຍທີ່ບໍ່ມີຝາປິດຕ້ອງເປັນມົນທິນ
16 ຄົນໃດທີ່ຢູ່ໃນພື້ນທີ່ງໄປແຕະຕ້ອງຄົນທີ່ຖືກດາບຕາຍ ຫລືແຕະຕ້ອງສົບ ຫລືກະດູກຄົນ ຫລືຫລຸມຝັງສົບ ຈະເປັນມົນທິນໄປເຈັດວັນ
17 ສຳລັບເປັນມົນທິນນີ້ ຈົ່ງເອົາຂີ້ເຖົ່າຈາກການບູຊາໄຖ່ບາບ ແລະເອົານໍ້າທີ່ໄຫລເຕີມເຂົ້າໄປປົນໃສ່ໃນພາຊນະ
18 ໃຫ້ຄົນສະອາດເອົາກິ່ງຫູສົບຈຸ່ມນໍ້ານັ້ນຊິດໃສ່ທີ່ເຕັນແລະເຄື່ອງໃຊ້ສອຍທັງສິ້ນ ແລະເທິງຕົວຄົນທີ່ຢູ່ທີ່ນັ້ນແລະເທິງຕົວຄົນທີ່ແຕະຕ້ອງກະດູກ ຫລືຄົນຖືກຂ້າ ຫລືຄົນຕາຍ ຫລືຫລຸມຝັງສົບ
19 ໃຫ້ຄົນສະອາດຊິດໃສ່ຄົນທີ່ເປັນມົນທິນໃນວັນທີສາມ ແລະວັນທີເຈັດ ຢ່າງນີ້ພໍວັນທີເຈັດເຂົາຈະທຳໃຫ້ຄົນນັ້ນສະອາດ ແລະເຂົາຕ້ອງຊັກເສື້ອຜ້າແລະອາບນໍ້າ ພໍເຖິງເວລາຄໍ່າເຂົາຈະສະອາດ
20 “ແຕ່ຄົນທີ່ເປັນມົນທິນແລະບໍ່ຊຳຣະຕົວ ໃຫ້(ອະເປຫິ) ຕັດຂາດຄົນນັ້ນອອກເສັຽຈາກຖ້າມກາງທີ່ປະຊຸມ ເພາະເຂົາໄດ້ກະທຳໃຫ້ສະຖານນະມັສການຂອງພຣະເຈົ້າເປັນມົນທິນ ຄືວ່າບໍ່ໄດ້ເອົານໍ້າຊຳຣະມົນທິນສາດເຂົາ ເຂົາຈຶ່ງເປັນມົນທິນ
21 ແລະໃຫ້ເປັນກົດເກນຖາວອນແກ່ເຂົາ ຜູ້ທີ່ຊິດນໍ້າຊຳຣະມົນທິນຈະຕ້ອງຊັກເສື້ອຜ້າຂອງຕົນ ແລະຜູ້ທີ່ແຕະຕ້ອງນໍ້າຊຳຣະມົນທິນ ເຂົາຈະເປັນມົນທິນຈົນເຖິງເວລາຄໍ່າ
22 ແລະສິ່ງໃດທີ່ຜູ້ເປັນມົນທິນແຕະຕ້ອງສິ່ງນັ້ນກໍເປັນມົນທິນ ແລະຜູ້ທີ່ແຕະຕ້ອງສິ່ງນັ້ນຈະເປັນມົນທິນຈະເຖິງເວລາຄໍ່າ”

## 20 ເຫດການທີ່ເມືອງກາເດສ

The Waters of Meribah

(ອພຍ 17:1-7)

1 ຕໍ່ມາໃນເດືອນທີນຶ່ງ ປະຊາຊົນອິສຣາເອນໄດ້ພາກັນມາຍັງຖິ່ນກັນດານຊິນ ແລະຕັ້ງຄ້າຍຢູ່ກາເດສຊຶ່ງເປັນ
ບ່ອນທີ່ນາງມີຣີອາມໄດ້ຕາຍ ແລະຖືກຝັງໄວ້ຢູ່ທີ່ນັ້ນ
2 ຢູ່ບ່ອນນັ້ນ ບໍ່ມີນໍ້າກິນພວກປະຊາຊົນຈຶ່ງພາກັນອ້ອມໂມເຊ ແລະອາໂຣນ
3 ພວກເຂົາຈົ່ມທຸກໃສ່ທ່ານທັງສອງວ່າ, “ຖ້າວ່າພວກຂ້າພະເຈົ້າຕາຍຢູ່ຕໍ່ໜ້າຫໍເຕັນສັກສິດພ້ອມກັບເພື່ອນຊາວ
ອິສຣາເອນຄົງຈະດີກວ່າ
4 ເປັນຫຍັງພວກທ່ານຈຶ່ງນໍາພວກຂ້າພະເຈົ້າອອກຈາກປະເທດເອຢິບ ແລະເຂົ້າມາໃນຖິ່ນກັນດານນີ້ ເພື່ອໃຫ້
ພວກຂ້າພະເຈົ້າຕາຍໄປພ້ອມທັງຝູງສັດຂອງພວກຂ້າພະເຈົ້າຊັ້ນບໍ
5 ຢູ່ບ່ອນນີ້ບໍ່ມີເຂົ້າ ບໍ່ມີຕົ້ນໝາກເດື່ອ ບໍ່ມີຕົ້ນອະງຸ່ນ ບໍ່ມີຕົ້ນໝາກພິລາເລີຍ ແລະແມ່ນແຕ່ນໍ້າຈະດື່ມກໍຍັງບໍ່
ມີ”
6 ດັ່ງນັ້ນ ໂມເຊແລະອາໂຣນຈຶ່ງພາກັນຍ່າງໜີຈາກປະຊາຊົນ ແລະໄປຢືນຢູ່ທາງປະຕູເຂົ້າຫໍເຕັນສັກສິດ ພໍທັງ
ສອງກົ້ມຂາບລົງພຣະຣັສມີຂອງພຣະຜູ້ເປັນເຈົ້າກໍປາກົດຂຶ້ນແກ່ຄົນທັງສອງ
7 ພຣະຜູ້ເປັນເຈົ້າກ່າວຕໍ່ໂມເຊວ່າ,
8 “ຈົ່ງຈັບເອົາໄມ້ເທົ້າຢູ່ຕໍ່ໜ້າຫີບຄໍາສັນຍານັ້ນ ແລ້ວເຈົ້າກັບອາໂຣນຈົ່ງໄປຈັດຊຸມນຸມຊົນທັງໝົດໄວ້ໃຫ້ໄປ
ເວົ້າຕໍ່ໜ້າປະຊາຊົນທັງໝົດ ແລະສັ່ງໃຫ້ນໍ້າໄຫລອອກມາຈາກກ້ອນຫີນຢູ່ບ່ອນນັ້ນ ແລ້ວນໍ້າກໍຈະໄຫລອອກ
ມາເພື່ອໃຫ້ປະຊາຊົນດື່ມ ສະນັ້ນ ພວກເຂົາພ້ອມທັງຝູງສັດຈຶ່ງຈະມີນໍ້າດື່ມ”
9 ໂມເຊຈຶ່ງໄປເອົາໄມ້ເທົ້າຕາມຄໍາສັ່ງຂອງພຣະຜູ້ເປັນເຈົ້າ
10 ຕໍ່ມາ ໂມເຊກັບອາໂຣນກໍຈັດເອົາປະຊາຊົນທັງໝົດໄປຊຸມນຸມຢູ່ຕໍ່ໜ້າໂງ່ນຫີນ ໂມເຊເວົ້າຂຶ້ນວ່າ, “ພວກເຈົ້າ
ຜູ້ເປັນຄົນກະບົດຈົ່ງຟັງເທີ້ນ ພວກເຮົາຈະສາມາດທໍາໃຫ້ນໍ້າໄຫລອອກຈາກໂງ່ນຫີນນີ້ໄດ້ແທ້ບໍ່”
11 ແລ້ວໂມເຊກໍຕີໂງ່ນຫີນນັ້ນສອງຄັ້ງ ນໍ້າໄດ້ໄຫລອອກມາຢ່າງຫລວງຫລາຍ ປະຊາຊົນທຸກຖ້ວນໜ້າ ແລະຝູງ
ສັດກໍພາກັນດື່ມ
12 ແຕ່ພຣະຜູ້ເປັນເຈົ້າຊົງຕໍາໜິຕິຕຽນໂມເຊ ແລະອາໂຣນວ່າ, “ຍ້ອນພວກເຈົ້າບໍ່ມີຄວາມເຊື່ອພຽງພໍ ຈຶ່ງບໍ່
ສາມາດສະແດງອໍານາດອັນສັກສິດຂອງເຮົາໃຫ້ປະຊາຊົນອິສຣາເອນຮູ້ຈັກ ພວກເຈົ້າຈະບໍ່ໄດ້ນໍາພວກເຂົາເຂົ້າ
ໄປໃນແຜ່ນດິນທີ່ເຮົາກໍາລັງຈະໃຫ້ພວກເຂົານັ້ນ”
13 ເຣື່ອງນີ້ເກີດຂຶ້ນທີ່ ເມຣີບາ ບ່ອນທີ່ປະຊາຊົນອິສຣາເອນຈົ່ມທຸກຕໍ່ພຣະຜູ້ເປັນເຈົ້າ ແລະເປັນບ່ອນທີ່ພຣະອົງຊົງ
ສະແດງໃຫ້ພວກເຂົາຮູ້ຈັກວ່າພຣະອົງຊົງບໍຣິສຸດ

### ເຈົ້າຊີວິດເມືອງເອໂດມ ບໍ່ຍອມໃຫ້ພວກອິສຣາເອນຜ່ານໄປ

Passage through Edom Refused

14 ໂມເຊໄດ້ສົ່ງທູດນໍາຂ່າວຈາກກາເດສໄປຫາເຈົ້າຊີວິດແຫ່ງເອໂດມເພື່ອເວົ້າວ່າ, “ນີ້ເປັນຂ່າວມາຈາກປະເທດ
ອ້າຍນ້ອງອິສຣາເອນ ຄືພຣະອົງກໍຮູ້ເຖິງຄວາມຫຍຸ້ງຍາກທີ່ເຮົາໄດ້ປະສົບພົບພໍ້
15 ແລະທັງຮູ້ວ່າດ້ວຍເຫດໃດ ພວກບັນພະບຸຣຸດຂອງເຮົາຈຶ່ງໄດ້ໄປຢູ່ໃນປະເທດເອຢິບເປັນເວລາຫລາຍປີ ພວກ
ເອຢິບໄດ້ຂົ່ມເຫັງເຮົາ ແລະບັນພະບຸຣຸດຂອງເຮົາ

16 ເຮົາຈຶ່ງຮ້ອງຂໍຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ ພຣະອົງຊົງໄດ້ຍິນຄຳຮ້ອງຂໍຂອງເຮົາ ພຣະອົງຈຶ່ງໄດ້ສົ່ງທູດສວັນນຳຫນ້າເຮົາອອກມາຈາກປະເທດເອຢິບ ດຽວນີ້ ເຮົາໄດ້ຢູ່ທີ່ກາເດສ ຊຶ່ງເປັນເມືອງທີ່ຢູ່ໃກ້ເຂດແດນຂອງພຣະອົງ
17 ຂໍຄວາມກະຣຸນາໃຫ້ເຮົາຜ່ານປະເທດຂອງພຣະອົງໄປເທີ້ນ ເຮົາແລະຝູງສັດຈະບໍ່ຍຸດຢູ່ຕາມຖນົນຫົນທາງ ຈະບໍ່ລ່ວງເຂົ້າໄປໃນທົ່ງນາ ຫລືສວນອະງຸ່ນ ແລະເຮົາຈະບໍ່ດື່ມນ້ຳຈາກສ້າງຂອງພຣະອົງເລີຍ ເຮົາຈະເດີນທາງໄປຕາມຫົນທາງຫລວງຈົນກວ່າຈະພົ້ນເຂດແດນຂອງພຣະອົງໄປ”
18 ແຕ່ພວກເອໂດມຕອບວ່າ, “ພວກເຮົາຈະບໍ່ຍອມໃຫ້ທ່ານຜ່ານປະເທດຂອງພວກເຮົາໄປເປັນເດັດຂາດ ຖ້າຫາກວ່າທ່ານຍັງຂືນມາ ພວກເຮົາຈະຕໍ່ສູ້ກັບທ່ານທັນທີ”
19 ຄົນອິສຣາເອນໄດ້ເວົ້າວ່າ, “ເຮົາຈະພາກັນໄປຕາມທາງຫລວງນີ້ ຖ້າຫາກວ່າເຮົາ ຫລືຝູງສັດຂອງເຮົາຫາກກິນນ້ຳຂອງພວກທ່ານ ເຮົາຈະໃຊ້ທົດແທນຫມົດ ຂໍແຕ່ໃຫ້ເຮົາໄດ້ຜ່ານໄປເທົ່ານັ້ນ
20 ພວກເອໂດມກໍຍັງເວົ້າອີກວ່າ, “ພວກເຮົາບໍ່ຍອມໃຫ້ທ່ານຜ່ານໄປຢ່າງເດັດຂາດ” ແລ້ວພວກເຂົາກໍຍົກທັບທີ່ຍິ່ງໃຫຍ່ ແລະເຂັ້ມແຂງອອກມາເພື່ອຈະຕໍ່ສູ້ກັບພວກອິສຣາເອນ
21 ພວກອິສຣາເອນຈຶ່ງໄດ້ກັບຄືນ ແລະໄປຕາມທາງເສັ້ນອື່ນ

**ອາໂຣນເສັຽຊີວິດ**

The Death of Aaron

22 ພວກຊຸມນຸມຊົນອິສຣາເອນທັງຫມົດໄດ້ເດີນທາງອອກຈາກກາເດສ ແລະໄດ້ມາຮອດພູໂຮ ໃກ້ເຂດແດນເມືອງເອໂດມ
23 ຢູ່ບ່ອນນີ້ພຣະຜູ້ເປັນເຈົ້າຊົງກ່າວຕໍ່ອາໂຣນ ແລະໂມເຊວ່າ,
24 “ອາໂຣນຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາກຳລັງຈະມອບໃຫ້ຊາວອິສຣາເອນນັ້ນ ອາໂຣນຈະຕ້ອງຕາຍເພາະວ່າຢູ່ເທິງເມືອງ ເມຣິບານັ້ນ ເຈົ້າທັງສອງໄດ້ກະບົດຕໍ່ສູ້ຄຳສັ່ງຂອງເຮົາ
25 ຈົ່ງພາອາໂຣນ ແລະເອເລອາຊາ ບຸດຊາຍຂອງເຂົາຂຶ້ນໄປເທິງພູໂຮ ແລະໃຫ້ແກ້ເສື້ອປະຈຳຕຳແຫນ່ງຂອງເຂົາອອກ
26 ແລ້ວເອົາໄປນຸ່ງໃຫ້ເອເລອາຊາ ເພາະອາໂຣນຈະເສັຽຊີວິດຢູ່ບ່ອນນັ້ນ”
27 ສ່ວນໂມເຊກໍປະຕິບັດຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ ດັ່ງນັ້ນ ທັງສອງຈຶ່ງພາກັນຂຶ້ນໄປເທິງພູໂຮ ຖ້າມກາງສາຍຕາຂອງຊຸມນຸມຊົນທັງຫມົດ
28 ໂມເຊໄດ້ແກ້ເສື້ອຂອງອາໂຣນອອກ ແລະເອົານຸ່ງໃຫ້ເອເລອາຊາ ອາໂຣນໄດ້ຕາຍຢູ່ເທິງຈອມພູນັ້ນ ແລ້ວໂມເຊກັບອາໂຣນເອເລອາຊາກໍກັບຄືນລົງມາ
29 ເມື່ອຊຸມນຸມຊົນທັງຫມົດຮູ້ວ່າ ອາໂຣນໄດ້ຕາຍແລ້ວ ພວກເຂົາທັງຫມົດກໍພາກັນໄວ້ທຸກໃຫ້ທ່ານເປັນເວລາສາມສິບວັນ

## 21 ໄຊຊະນະຕໍ່ພວກການາອານ

The Bronze Serpent

1 ເມື່ອເຈົ້າຊີວິດອາຣາດ ຄົນການາອານຊຶ່ງປົກຄອງຢູ່ພາກໃຕ້ຂອງປະເທດໄດ້ຍິນວ່າ ຊາວອິສຣາເອນກຳລັງມາທາງອາທາຣິມ ພຣະອົງອອກໄປໂຈມຕີ ແລະຈັບເອົາຄົນອິສຣາເອນບາງຄົນມາເປັນຊະເລີຍ
2 ແລ້ວພວກອິສຣາເອນກໍສາບານຕໍ່ພຣະຜູ້ເປັນເຈົ້າວ່າ, “ຖ້າພຣະອົງຊົງອະນຸຍາດໃຫ້ຂ້າພຣະອົງທັງຫລາຍຕີຊະນະພວກເຫລົ່ານີ້ ຂ້າພຣະອົງທັງຫລາຍກໍຈະຂໍອຸທິດຖວາຍພວກເຂົາພ້ອມທັງຫົວເມືອງຕ່າງໃຫ້ພຣະອົງ ແລະຈະທຳລາຍພວກເຂົາທັງຫມົດ”

3 ພຣະຜູ້ເປັນເຈົ້າຊົງສະດັບຮັບຟັງ ແລະຊ່ວຍເຫລືອພວກເຂົາໃຫ້ຕີຊະນະຊາວການາອານ ດ້ວຍເຫດນີ້ ຊາວອິສ
ຣາເອນຈຶ່ງໄດ້ທຳລາຍພວກເຂົາກັບທົ່ວເມືອງຕ່າງໆຢ່າງສິ້ນເຊີງ ແລ້ວບ່ອນນີ້ຈຶ່ງມີຊື່ວ່າ ໂຮມາ

**ງູທອງ**

4 ຊາວອິສຣາເອນໄດ້ອອກຈາກພູໂຮ ໄປຕາມທາງສູ່ທະເລໄມ້ອໍ້ ເມື່ອກຳລັງຍ່າງອ້ອມເຂດແດນເອໂດມໄປນັ້ນ
ພວກເຂົາເລີຍໝົດຄວາມອົດທົນ

5 ພວກເຂົາຈຶ່ງຕໍ່ວ່າພຣະເຈົ້າ ແລະໂມເຊວ່າ, “ເຫດໃດໜໍທ່ານຈຶ່ງນຳພວກເຮົາອອກມາຈາກປະເທດເອຢິບ
ເພື່ອມາຕາຍໃນຖິ່ນກັນດານແຫ່ງນີ້ ຊຶ່ງເປັນບ່ອນທີ່ບໍ່ມີອາຫານແລະນໍ້າ ພວກເຮົາບໍ່ອາດທົນກິນອາຫານເຊັ່ນນີ້
ອີກໄດ້ດອກ”

6 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງສົ່ງງູພິດມາໃນຖ້າມກາງຊາວອິສຣາເອນ ໄດ້ມີຫລາຍຄົນຖືກງູພິດຕອດ ແລະ
ຕາຍໄປ

7 ແລ້ວປະຊາຊົນໄດ້ພາກັນມາເວົ້າຕໍ່ໂມເຊວ່າ, “ເວລາທີ່ເຮົາໄດ້ຕໍ່ວ່າພຣະຜູ້ເປັນເຈົ້າ ແລະຕໍ່ວ່າທ່ານນັ້ນ ພວກ
ເຮົາໄດ້ກະທຳບາບແລ້ວ ແລະບັດນີ້ຂໍໃຫ້ທ່ານອ້ອນວອນຂໍໃຫ້ພຣະຜູ້ເປັນເຈົ້າຊົງເອົາງູເຫລົ່ານີ້ອອກໜີໄປ
ເສັຽ” ແລ້ວໂມເຊກໍອ້ອນວອນພຣະຜູ້ເປັນເຈົ້າເພື່ອພວກເຂົາ

8 ພຣະຜູ້ເປັນເຈົ້າຈຶ່ງຊົງບອກໂມເຊໃຫ້ເອົາທອງມາເຮັດເປັນຮູບງູ ແລ້ວເອົາໄປໄວ້ເທິງກົກເສົາເພື່ອວ່າເມື່ອມີຄົນ
ໃດຖືກງູຕອດກໍຈະໄດ້ຫລຽວເບິ່ງຮູບງູນັ້ນ ແລະກໍຈະບໍ່ຕາຍ

9 ໂມເຊກໍໄດ້ທຳຮູບງູທອງ ແລະເອົາໄວ້ເທິງກົກເສົາ ເມື່ອຜູ້ທີ່ຖືກງູຕອດຫລຽວເບິ່ງງູທອງນັ້ນ ກໍຈະບໍ່ຕາຍ

**ຄົນອິສຣາເອນເດີນທາງອ້ອມໂມອາບ**

The Journey to Moab

10 ແລະຄົນອິສຣາເອນກໍຍົກອອກເດີນໄປຕັ້ງຄ້າຍຢູ່ທີ່ໂອໂບດ

11 ແລະເຂົາອອກເດີນຈາກໂອໂບດໄປຕັ້ງຄ້າຍຢູ່ທີ່ອີເຢອາບາຣິມ ຢູ່ໃນຖິ່ນກັນດານກົງຂ້າມໂມອາບທາງທິດຕາ
ເວັນຂຶ້ນ

12 ເຂົາຍົກອອກຈາກທີ່ນັ້ນມາຕັ້ງຄ້າຍຢູ່ທີ່ຮ່ອມພູເຊເຣດ

13 ເຂົາຍົກອອກເດີນຈາກທີ່ນັ້ນໄປຕັ້ງຢູ່ຟາກເໜືອຂອງລຸ່ມແມ່ນໍ້າອາຣ໌ໂນນ ຊຶ່ງຢູ່ໃນຖິ່ນກັນດານທີ່ຍຶດມາຈາກ
ເຂດແດນຂອງຄົນອາໂມຣິດ ເພາະວ່າແມ່ນໍ້າອາຣ໌ໂນນເປັນເຂດແດນຂອງໂມອາບ ລະຫວ່າງໂມອາບກັບຄົນ
ອາໂມຣິດ

14 ດັ່ງນັ້ນໃນໜັງສືສົງຄາມຂອງພຣະຜູ້ເປັນເຈົ້າຈຶ່ງມີວ່າ ວາເຮັບໃນເມືອງຊູຟາ ແລະລຸ່ມແມ່ນໍ້າອາຣ໌ໂນນ

15 ແລະທີ່ໂນທີ່ຂອງຫລຸບເຫລົ່ານັ້ນຊຶ່ງຍຶດໄປຈົນເຖິງທີ່ຕົ້ນເມືອງອາຣ໌ ແລະຕໍ່ໄປເຖິງເຂດແດນໂມອາບ

16 ຈາກທີ່ນັ້ນເຂົາອອກເດີນຕໍ່ໄປເຖິງເມືອງເບເອີ ຊຶ່ງເປັນບໍ່ນໍ້າທີ່ພຣະຜູ້ເປັນເຈົ້າບອກກັບໂມເຊວ່າ, “ຈົ່ງຮວບ
ຮວມປະຊາຊົນເຂົ້າດ້ວຍກັນ ເຮົາຈະໃຫ້ນໍ້າແກ່ເຂົາ”

17 ແລ້ວອິສຣາເອນຈຶ່ງຮ້ອງເພງນີ້ວ່າ ບໍ່ນໍ້າເອີຍ ຈົ່ງມີນໍ້າພຸ່ງຂຶ້ນມາ----- ໃຫ້ເຮົາມາຮ້ອງເພງກັນ-----

18 ເປັນບໍ່ນໍ້າທີ່ຫົວໜ້າໄດ້ຂຸດໄວ້ ເປັນບໍ່ທີ່ເຈົ້ານາຍຂອງປະຊາຊົນເຈາະໄວ້ ດ້ວຍຕະບອງ ແລະໄມ້ເທົ້າຂອງທ່ານ
ເຫລົ່ານັ້ນ ແລະຈາກຖິ່ນກັນດານນັ້ນໄປເຂົາກໍມາເຖິງມັດຕານາ

19 ແລະຈາກມັດຕານາເຖິງເມືອງນາຮາລີເອນ ແລະຈາກນາຮາລີເອນເຖິງເມືອງບາໂມດ

20 ແລະຈາກບາໂມດເຖິງຮ່ອມພູຊຶ່ງຢູ່ໃນທ້ອງຖິ່ນໂມອາບຂ້າງຍອດພູປິສກາຊຶ່ງເບິ່ງລົງມາເຫັນຖິ່ນແຫ້ງແລ້ງກັນ
ດານ

**ອິສຣາເອນຊະນະກະສັດຊີໂຮນ**

King Sihon Defeated

(ພບຍ 2:26-37)
21 ແລ້ວອິສຣາເອນສົ່ງຜູ້ສົ່ງຂ່າວໄປຫາຊີໂຮນກະສັດຄົນອາໂມຣິດກ່າວວ່າ,
22 “ຂໍໃຫ້ຂ້າພະເຈົ້າຜ່ານແຜ່ນດິນຂອງທ່ານ ພວກເຮົາຈະບໍ່ລ້ຽວເຂົ້າໄປໃນນາ ຫລືໃນສວນອະງຸ່ນ ເຮົາຈະບໍ່ດື່ມ
ນໍ້າຈາກບໍ່ ເຮົາຈະເດີນໄປຕາມທາງຫລວງຈົນເຮົາໄດ້ຜ່ານເຂດແດນເມືອງຂອງທ່ານ”
23 ແຕ່ຊີໂຮນບໍ່ຍອມໃຫ້ອິສຣາເອນຍົກຜ່ານເຂດແດນຂອງທ່ານ ທ່ານຮອບຮວມພົນຂອງທ່ານຍົກອອກສູ້ຮົບກັບ
ຄົນອິສຣາເອນໃນຖິ່ນກັນດານ ແລະມາເຖິງຢາຮັສ ຮົບກັບຄົນອິສຣາເອນໃນຖິ່ນກັນດານທີ່ນັ້ນ
24 ແລະຄົນອິສຣາເອນໄດ້ປະຫານທ່ານເສັຽດ້ວຍດາບ ຍຶດເອົາແຜ່ນດິນຂອງທ່ານຈາກແມ່ນໍ້າອາຣ໌ໂນນຈົນ
ເຖິງຢັບໂບກໄກໄປຈົນເຖິງແດນຄົນອັມໂມນ ເພາະວ່າເຂດແດນຂອງຄົນອັມໂມນເຂັ້ມແຂງ
25 ແລະຄົນອິສຣາເອນຍຶດເມືອງເຫລົ່ານີ້ທັງຫມົດ ແລະຄົນອິສຣາເອນເຂົ້າຕັ້ງຢູ່ໃນທົ່ວເມືອງຂອງຄົນອາໂມຣິດ
ໃນເຮສໂບນ ແລະຕາມຊົນນະບົດທັງຫມົດ
26 ເພາະວ່າເຮສໂບນເປັນເມືອງຫລວງຂອງຊີໂຮນກະສັດຂອງຄົນອາໂມຣິດ ຜູ້ທີ່ຕໍ່ສູ້ກັບກະສັດຊາວໂມອາບອົງ
ກ່ອນ ແລະຍຶດໄດ້ແຜ່ນດິນຂອງທ່ານທັງສິ້ນໄກໄປເຖິງແມ່ນໍ້າອາຣ໌ໂນນ
27 ເພາະສະນັ້ນນັກຮ້ອງບົດປະພັນຈຶ່ງເວົ້າວ່າ ມາທີ່ເຮສໂບນໃຫ້ສ້າງ ແລະສະຖາປະນາເມືອງແຫ່ງຊີໂຮນຂຶ້ນ
28 ເພາະວ່າມີໄຟອອກໄປຈາກເຮສໂບນ ມີແປວໄຟອອກໄປຈາກເມືອງແຫ່ງຊີໂຮນ ໄດ້ທຳລາຍເມືອງອາຣ໌ຂອງ
ໂມອາບ ເຈົ້າຂອງແຫ່ງເນີນສູງຂອງແມ່ນໍ້າອາຣ໌ໂນນ
29 ໂອ ໂມອາບເອີຍ ວິບັດແກ່ເຈົ້າ ໂອ ຊົນຊາດແຫ່ງພຣະເຄໂມສເອີຍ ເຈົ້າຕ້ອງພິນາດ ພຣະເຄໂມສໄດ້ທຳໃຫ້
ບຸດຊາຍຂອງຕົນເປັນຄົນຫລົບໄພ ແລະທຳໃຫ້ລູກສາວຂອງຕົນເປັນຊະເລີຍຂອງຊີໂຮນກະສັດຄົນອາໂມຣິດ
30 ເຮົາທັງຫລາຍໄດ້ຍິງເຂົາທັງປວງ ເຮສໂບນພິນາດຈົນເຖິງດີໂບນ ເຮົາໄດ້ກວາດລ້າງເຖິງໂນຟາເສັຽ ຄືເຖິງເມ
ເດບາ
31 ດັ່ງນັ້ນ ຄົນອິສຣາເອນໄດ້ອາໄສຢູ່ໃນແຜ່ນດິນຄົນອາໂມຣິດ
32 ແລະໂມເຊໃຊ້ຄົນໄປສອດແນມເມືອງຢາເຊີ ແລະເຂົາທັງຫລາຍໄດ້ຍຶດຊົນນະບົດຂອງເມືອງນັ້ນ ແລະຂັບໄລ່
ຄົນອາໂມຣິດທີ່ຢູ່ທີ່ນັ້ນເສັຽ

**ອິສຣາເອນຊະນະ ກະສັດໂອກ**

King Og Defeated

(ພບຍ 3:1-22)
33 ແລ້ວເຂົາກໍລ້ຽວຍົກເດີນໄປຕາມທາງເມືອງບາຊານ ແລະກະສັດໂອກ ເມືອງບາຊານກໍອອກມາທັງຕົວທ່ານກັບ
ພົນໄພ່ຂອງທ່ານເພື່ອສູ້ຮົບກັບເຂົາທີ່ເອັດເຣອີ
34 ແຕ່ພຣະຜູ້ເປັນເຈົ້າໄດ້ບອກໂມເຊວ່າ, “ຢ່າຢ້ານເຂົາເລີຍ ເພາະເຮົາໄດ້ມອບເຂົາໄວ້ໃນມືຂອງເຈົ້າແລ້ວ ທັງ
ພົນໄພ່ຂອງເຂົາ ແລະແຜ່ນດິນຂອງເຂົາ ແລະເຈົ້າຈະກະທຳແກ່ເຂົາຢ່າງເຈົ້າໄດ້ກະທຳແກ່ຊີໂຮນກະສັດຄົນ
ອາໂມຣິດຜູ້ຢູ່ທີ່ເຮສໂບນ”
35 ດັ່ງນັ້ນ ເຂົາທັງຫລາຍຈຶ່ງຂ້າໂອກ ແລະລູກຫລານຂອງທ່ານເສັຽ ທັງປະຊາຊົນຂອງທ່ານບໍ່ມີເຫລືອໃຫ້ທ່ານຈັກ
ຄົນດຽວ ແລະເຂົາທັງຫລາຍກໍເຂົ້າຍຶດແຜ່ນດິນຂອງທ່ານ

## 22 ເຈົ້າຊີວິດຊາວໂມອາບ

**ສົ່ງຄົນໄປຫາບາລາອາມ**

Balak Summons Balaam to Curse Israel

1 ຊາວອິສຣາເອນໄດ້ເຄື່ອນຍ້າຍໄປຕັ້ງຄ້າຍຢູ່ຕາມທົ່ງຮາບໂມອາບຢູ່ທາງທິດຕາເວັນອອກຂອງແມ່ນໍ້າຈໍແດນ
ຊຶ່ງກົງກັນຂ້າມກັບເມືອງເຢຣິໂກ
2 ເມື່ອເຈົ້າຊີວິດບາລາກ ບຸດຊາຍຂອງຊິບໂປໄດ້ເຫັນສິ່ງທີ່ຊາວອິສຣາເອນໄດ້ກະທຳຕໍ່ຊາວອາໂມຣິດແລ້ວ
3 ພຣະອົງ ແລະປະຊາຊົນຊາວໂມອາບກໍເກີດມີຄວາມສະທ້ານຢ້ານກົວຊາວອິສຣາເອນ ຍ້ອນວ່າຊາວອິສຣາ
ເອນມີຈຳນວນຫລວງຫລາຍ
4 ຊາວໂມອາບຈຶ່ງເວົ້າຕໍ່ພວກຜູ້ນຳຊາວມີດີອານວ່າ, “ໃນບໍ່ຊ້ານີ້ ຝູງຊົນເຫລົ່ານີ້ຈະທຳລາຍທຸກສິ່ງຢູ່ອ້ອມເຮົາ
ເຫມືອນດັ່ງງົວກິນຫຍ້າຢູ່ຕາມທົ່ງ” ໃນສມັຍນັ້ນ ບາລາກໄດ້ເປັນເຈົ້າຊີວິດຊາວໂມອາບ
5 ດັ່ງນັ້ນພຣະອົງຈຶ່ງຈັດສົ່ງຜູ້ນຳຂ່າວໄປຫາບາລາອາມ ບຸດຊາຍຂອງເບໂອຢູ່ເມືອງເປໂທ ໃກ້ແມ່ນໍ້າເອິຟຣາດ ທີ່
ປະເທດອາມາວ ໃຫ້ຣາຍງານຂ່າວຕໍ່ ບາລາອາມວ່າ, “ເຈົ້າບາລາກຢາກໃຫ້ທ່ານຮູ້ວ່າ ຊົນຊາດທັງຫມົດທີ່ມາ
ຈາກປະເທດເອຢິບນັ້ນໄດ້ຢາຍຢູ່ທຸກໆບ່ອນ ເຂົາໄດ້ຂູ່ເຂັນວ່າຈະຍຶດເອົາປະເທດຂອງພວກເຮົາ
6 ພວກເຂົາມີຈຳນວນຫລາຍກວ່າພວກເຮົາ ສະນັ້ນ ຂໍໃຫ້ທ່ານມາສາບແຊ່ງພວກເຂົາໃຫ້ພວກເຮົາແດ່ທ້ອນ ບາງ
ທີພວກເຮົາອາດຈະຊະນະພວກເຂົາ ແລະຂັບໄລ່ພວກເຂົາຫນີຈາກແຜ່ນດິນນີ້ໄດ້ ເຈົ້າບາລາກຮູ້ດີວ່າຖ້າທ່ານ
ກ່າວຄຳອວຍພອນ ປະຊາຊົນກໍໄດ້ພອນ ຖ້າທ່ານປ້ອຍດ່າ ພວກເຂົາກໍຈະຖືກປ້ອຍດ່າ”
7 ແລ້ວພວກຜູ້ນຳຊາວໂມອາບ ກັບຊາວມີດີອານກໍອອກເດີນທາງໄປຫາບາລາອາມ ພ້ອມທັງເອົາເງິນຄຳພິທີ
ສາບແຊ່ງໄປນຳ ແລະຣາຍງານຄຳເວົ້າຂອງບາລາກຕໍ່ທ່ານ
8 ແລ້ວບາລາອາມຈຶ່ງເວົ້າຕໍ່ພວກນີ້ວ່າ, “ຈົ່ງພາກັນນອນຄ້າງຄືນຢູ່ນີ້ສາກ່ອນ ແລ້ວມື້ອື່ນ ຂ້າພະເຈົ້າຈະບອກໃຫ້
ພວກທ່ານຊາບວ່າ ພຣະຜູ້ເປັນເຈົ້າຊົງກ່າວຢ່າງໃດຕໍ່ຂ້າພະເຈົ້າ” ດັ່ງນັ້ນ ພວກຜູ້ນຳຊາວໂມອາບຈຶ່ງພັກຢູ່ກັບ
ບາລາອາມ
9 ພຣະເຈົ້າຊົງສະເດັດມາຖາມບາລາອາມວ່າ, “ພວກທີ່ມາພັກກັບເຈົ້ານັ້ນແມ່ນໃຜ?”
10 ບາລາອາມກໍຕອບວ່າ, “ເຈົ້າບາລາກແຫ່ງປະເທດໂມອາບໄດ້ສົ່ງພວກນີ້ມາບອກຂ້າພຣະອົງວ່າ
11 ພວກທີ່ມາຈາກປະເທດເອຢິບໄດ້ແຜ່ຜາຍອອກໄປທົ່ວທຸກບ່ອນໃນປະເທດ ທ່ານຢາກໃຫ້ຂ້າພຣະອົງດ່າສາບ
ແຊ່ງພວກເຂົາໃຫ້ທ່ານ ເພື່ອວ່າທ່ານຈະຕໍ່ສູ້ກັບພວກເຂົາ ແລະຂັບໄລ່ພວກເຂົາອອກໄດ້”
12 ພຣະເຈົ້າຊົງກ່າວຕໍ່ບາລາອາມວ່າ, “ຢ່າໄປກັບພວກນີ້ ແລະຢ່າສາບແຊ່ງປະຊາຊົນອິສຣາເອນເລີຍ ເພາະວ່າ
ພວກເຂົາມີພອນຂອງເຮົາແລ້ວ”
13 ເຊົ້າມື້ໃຫມ່ມາ ບາລາອາມຈຶ່ງໄປຫາພວກຜູ້ນຳຂ່າວຂອງເຈົ້າບາລາກ ແລະເວົ້າວ່າ, “ຈົ່ງພາກັນກັບຄືນເມືອສາ
ເພາະວ່າ  ພຣະຜູ້ເປັນເຈົ້າບໍ່ອະນຸຍາດໃຫ້ຂ້າພະເຈົ້າໄປກັບທ່ານ”
14 ແລ້ວພວກນີ້ກໍກັບຄືນເມືອຫາ ບາລາກ ແລະລາຍງານຕໍ່ພຣະອົງຕາມທີ່ ບາລາອາມປະຕິເສດບໍ່ຍອມມາກັບ
ພວກຕົນ
15 ສ່ວນເຈົ້າບາລາກ ກໍຈັດສົ່ງພວກຜູ້ນຳຫລາຍກວ່າເທື່ອທຳອິດ ແລະມີກຽດຕິຍົດສູງກວ່າໄປອີກ
16 ພວກເຫລົ່ານີ້ກໍກັບຄືນໄປຣາຍງານຕໍ່ ບາລາອາມຕາມຖ້ອຍຄຳຂອງ ບາລາກວ່າ, “ຢ່າປະຕິເສດເລີຍ ຈົ່ງມາ
ຕາມຄຳຮ້ອງຂໍຂອງເຮົາເທີນ
17 ເຮົາຈະຕອບບຸນແທນຄຸນທ່ານໂດຍໃຫ້ທ່ານຮັ່ງມີເປັນດີ ແລະຈະປະຕິບັດຕາມທຸກສິ່ງທີ່ທ່ານຮ້ອງຂໍມາ ຂໍກະຣຸ
ນາມາດ່າສາບແຊ່ງພວກເຫລົ່ານີ້ໃຫ້ເຮົາແດ່ທ້ອນ”
18 ແຕ່ບາລາອາມຕອບວ່າ, “ເຖິງແມ່ນວ່າເຈົ້າບາລາກຈະມອບເງິນມອບຄຳພາຍໃນພຣະຣາຊວັງໃຫ້ຂ້າພະເຈົ້າ
ຂ້າພະເຈົ້າກໍບໍ່ອາດຂັດຂືນຄຳສັ່ງຂອງພຣະຜູ້ເປັນເຈົ້າ ຜູ້ຊົງເປັນພຣະເຈົ້າຂອງຂ້າພະເຈົ້າໄດ້ດອກ

19 ແຕ່ຂໍໃຫ້ພວກທ່ານຄ້າງຄືນຢູ່ບ່ອນນີ້ເຫມືອນພວກອື່ນໆທີ່ເຄີຍມາແລ້ວ ເພື່ອວ່າບາງທີ່ຂ້າພະເຈົ້າຈະໄດ້ຮູ້ຈັກ
ຕື່ມວ່າ ພຣະຜູ້ເປັນເຈົ້າຊົງມີສິ່ງອື່ນທີ່ຈະບອກຂ້າພະເຈົ້າອີກຫລືບໍ່”
20 ແລ້ວໃນຄືນນັ້ນ ພຣະເຈົ້າກໍຊົງສະເດັດມາບອກບາລາອາມວ່າ, “ຖ້າພວກເຫລົ່ານີ້ມາຮ້ອງຂໍໃຫ້ເຈົ້າໄປກັບ
ພວກເຂົາ ເຈົ້າຈົ່ງຕຽມຕົວໄປສາ ແຕ່ຂໍພຽງໃຫ້ເຈົ້າທຳຕາມສິ່ງທີ່ເຮົາບອກເທົ່ານັ້ນ”
21 ດັ່ງນັ້ນ ເຊົ້າມື້ໃຫມ່ມາ ບາລາອາມຈຶ່ງຈັດແຈ່ງເອົາອານໃສ່ຫລັງລໍ ແລະອອກເດີນທາງໄປກັບພວກຜູ້ນຳຊາວ
ໂມອາບ

**ທູດສວັນແລະລໍຂອງບາລາອາມ**

Balaam, the Donkey, and the Angel

22 ພຣະເຈົ້າຊົງພຣະພິໂຣດທີ່ບາລາອາມໄປກັບພວກເຂົາ ໃນຂນະທີ່ ບາລາອາມຂີ່ລໍໄປໂດຍມີຄົນໃຊ້ສອງຄົນ
ເປັນຕິດຕາມໄປນັ້ນ ເທວະດາຂອງພຣະຜູ້ເປັນເຈົ້າກໍຊົງຢືນຢູ່ກາງທາງເພື່ອກີດກັ້ນທາງເດີນຂອງທ່ານ
23 ພໍເມື່ອລໍຫລຽວເຫັນເທວະດາຊົງຢືນຖືດາບຢູ່ ມັນກໍແລ່ນຫນີອອກຈາກທາງນັ້ນໄປທາງທົ່ງນາ ແຕ່ບາລາ
ອາມໄດ້ຕີລໍ ແລະຂະຫນາບມັນກັບຄືນມາສູ່ຫົນທາງໃຫຍ່
24 ຕໍ່ມາອີກ ເທວະດາກໍຢືນຢູ່ແຄມທາງລະຫວ່າງສວນອະງຸ່ນຊຶ່ງມີກຳແພງຫີນຢູ່ສອງຟາກຂ້າງ
25 ເມື່ອລໍຫລຽວເຫັນເທວະດາມັນກໍເຊເຂົ້າໄປຕຳຝາກຳແພງ ແລະຫນີບຕີນຂອງບາລາອາມເຂົ້າໃສ່ຝາ ບາລາ
ອາມຈຶ່ງຕີລໍອີກເທື່ອນຶ່ງ
26 ແລ້ວເທວະດາກໍຫນີໄປທາງຫນ້າອີກ ໄປຢູ່ບ່ອນແຄບໆ ຊຶ່ງໃນບ່ອນນັ້ນບໍ່ມີປ່ອງທາງຈະຜ່ານໄປທາງອື່ນໄດ້
ເລີຍ
27 ເທື່ອນີ້ ເມື່ອລໍຫລຽວເຫັນເທວະດາມັນກໍຫມູບລົງ ສ່ວນບາລາອາມກໍແຮງໃຈຮ້າຍ ທ່ານເອົາໄມ້ແສ້ຕີຫລັງລໍອີກ
28 ພຣະຜູ້ເປັນເຈົ້າຈຶ່ງທຳໃຫ້ລໍປາກເປັນ ແລະມັນໄດ້ເວົ້າຕໍ່ບາລາອາມວ່າ, “ທ່ານຈະໃຫ້ຂ້າພະເຈົ້າທຳຢ່າງໃດ
ເປັນຫຍັງທ່ານຈຶ່ງໄດ້ຂ້ຽນຕີຂ້າພະເຈົ້າເຖິງສາມເທື່ອດັ່ງນີ້”
29 ບາລາອາມກໍຕອບວ່າ, “ເພາະວ່າເຈົ້າແກ້ງເຮົາ ຖ້າວ່າເຮົາມີດາບ ເຮົາຈະຕ້ອງຂ້າເຈົ້າເສັຽ”
30 ລໍກໍເວົ້າອີກວ່າ, “ຂ້າພະເຈົ້າບໍ່ແມ່ນລໍຕົວທີ່ທ່ານເຄີຍຂີ່ມາເລື້ອຍໆນັ້ນບໍ ຂ້າພະເຈົ້າເຄີຍໄດ້ເຮັດກັບທ່ານແບບ
ນີ້ມາກ່ອນບໍ” ບາລາອາມຈຶ່ງຕອບວ່າ, “ບໍ່ດອກ”
31 ພຣະຜູ້ເປັນເຈົ້າກໍທຳໃຫ້ ບາລາອາມເຫັນເທວະດາຖືດາບຢືນຢູ່ບ່ອນນັ້ນ ບາລາອາມຈຶ່ງກົ້ມຫນ້າຂາບລົງ
32 ເທວະດາໄດ້ຖາມວ່າ, “ເປັນຫຍັງເຈົ້າຈຶ່ງຕີລໍຂອງເຈົ້າເຖິງສາມເທື່ອດັ່ງນີ້ ເຮົາມານີ້ເພື່ອຂັດຂວາງເຈົ້າບໍ່ໃຫ້ເດີນ
ທາງໄປທາງນີ້
33 ແຕ່ລໍຂອງເຈົ້າໄດ້ເຫັນເຮົາກ່ອນ ແລະງວກຫນ້າຫນີໄປທາງໃຫມ່ເຖິງສາມຄັ້ງ ຖ້າວ່າມັນບໍ່ທຳດັ່ງນັ້ນ ເຮົາຕ້ອງ
ໄດ້ຂ້າເຈົ້າແລ້ວ ແລະລໍຂອງເຈົ້າກໍຈະຖືກປ່ອຍໄປ”
34 ບາລາອາມຈຶ່ງເວົ້າວ່າ, “ຂ້າພຣະອົງໄດ້ທຳຜິດແລ້ວ ເພາະຂ້າພຣະອົງບໍ່ຮູ້ມາກ່ອນວ່າພຣະອົງມາຢືນຂວາງ
ທາງຂ້າພຣະອົງ ໃນເມື່ອພຣະອົງຄິດວ່າການທີ່ຈະເດີນທາງຕໍ່ໄປນີ້ຫາກເປັນການຜິດ ຂ້າພຣະອົງກໍຈະກັບຄືນ
ເມືອ”
35 ແຕ່ເທວະດາບອກວ່າ, “ຈົ່ງເດີນທາງຕໍ່ໄປກັບຄົນເຫລົ່ານີ້ ແຕ່ໃຫ້ເວົ້າຄຳທີ່ເຮົາບອກເຈົ້າໃຫ້ເວົ້າເທົ່ານັ້ນ” ດັ່ງ
ນັ້ນບາລາອາມຈຶ່ງອອກເດີນທາງຕໍ່ໄປກັບຜູ້ນຳໂມອາບຊຶ່ງບາລາກໄດ້ຈັດສົ່ງມາ
36 ເມື່ອບາລາກຮູ້ວ່າ ບາລາອາມກຳລັງມາ ພຣະອົງກໍອອກໄປຕ້ອນຮັບທ່ານທີ່ເມືອງອີຣ໌ ຢູ່ແຄມແມ່ນ້ຳອາຣ໌ໂນນ
ໃກ້ເຂດແດນໂມອາບ
37 ບາລາກຈຶ່ງຖາມ ບາລາອາມວ່າ, “ເມື່ອເຮົາສົ່ງຄົນໄປຫາທ່ານ ເປັນຫຍັງທ່ານຈຶ່ງບໍ່ມາ ຫລືທ່ານຄິດວ່າເຮົາ
ບໍ່ອາດສາມາດໃຫ້ຂອງບັນນາການແກ່ທ່ານພຽງພໍຊັ້ນບໍ່”

38 ບາລາອາມຈຶ່ງຕອບວ່າ, “ຂ້າພະເຈົ້າໄດ້ມານີ້ແລ້ວເດ່ ແຕ່ວ່າດຽວນີ້ ພຣະອົງຮູ້ບໍ່ວ່າ ຂ້າພະເຈົ້າບໍ່ມີອຳນາດ
ຫຍັງຫມົດ ຂ້າພະເຈົ້າເວົ້າໄດ້ພຽງແຕ່ຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງບອກໃຫ້ເວົ້າເທົ່ານັ້ນ”
39 ດັ່ງນັ້ນ ບາລາອາມກໍໄປເມືອງກີຣີອາດຮູໂຊທ ກັບບາລາກ
40 ຢູ່ເມືອງນີ້ບາລາກໄດ້ຂ້າງົວ ແລະແກະ ແລ້ວໄດ້ເອົາຊີ້ນບາງສ່ວນໃຫ້ແກ່ບາລາອາມ ກັບພວກຜູ້ນຳທີ່ຢູ່ກັບ
ທ່ານ

**ຄຳທຳນວາຍຄັ້ງທຳອິດຂອງບາລາອາມ**

Balaam’s First Oracle

41 ເຊົ້າມື້ໃຫມ່ມາ ບາລາກກໍພາບາລາອາມຂຶ້ນໄປເມືອງບາໂມດບາອານ ຈາກບ່ອນນັ້ນບາລາອາມໄດ້ຫລຽວເຫັນ
ຊາວອິສຣາເອນສ່ວນນຶ່ງ

## 23

Chapter 23

1 ທ່ານຈຶ່ງເວົ້າຕໍ່ບາລາກວ່າ, “ຂໍໃຫ້ສ້າງແທ່ນບູຊາເຈັດແທ່ນໃຫ້ຂ້າພະເຈົ້າແດ່ ແລະໃຫ້ນຳເອົາງົວເຖິກ ແລະ
ແກະແນວລະເຈັດໂຕມາໃຫ້ຂ້າພະເຈົ້າ”
2 ບາລາກໄດ້ປະຕິບັດຕາມຄຳທີ່ ບາລາອາມໄດ້ບອກທັງສອງໄດ້ກະທຳການຖວາຍບູຊາງົວ ແລະແກະໃສ່ເທິງ
ແທ່ນບູຊາແຕ່ລະອັນ
3 ແລ້ວບາລາອາມຈຶ່ງເວົ້າຕໍ່ບາລາກວ່າ, “ໃນຂນະທີ່ຂ້າພະເຈົ້າໄປເບິ່ງວ່າ ພຣະຜູ້ເປັນເຈົ້າຈະມາພົບຂ້າພະເຈົ້າ
ຫລືບໍ່ນັ້ນ ຂໍໃຫ້ພຣະອົງຢືນຢູ່ໃກ້ໆກັບບ່ອນເຜົາຖວາຍບູຊາຂອງພຣະອົງນີ້ເດີ ຂ້າພະເຈົ້າຈະບອກພຣະອົງທຸກ
ສິ່ງທີ່ພຣະຜູ້ເປັນເຈົ້າຊົງນິມິດໃຫ້ເຫັນ” ດັ່ງນັ້ນ ບາລາອາມຈຶ່ງຂຶ້ນໄປບ່ອນສູງ ແລະແປນ
4 ໃນຂນະນັ້ນ ພຣະເຈົ້າກໍຊົງສະເດັດມາພົບທ່ານ ບາລາອາມຈຶ່ງທູນຕໍ່ພຣະອົງວ່າ, “ຂ້າພຣະອົງໄດ້ສ້າງແທ່ນບູ
ຊາ ແລະໄດ້ຖວາຍງົວ ແລະແກະໄວ້ເທິງທຸກແທ່ນ”
5 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຈົ່ງນຳຖ້ອຍຄຳຂອງເຮົາຄືນໄປບອກກັບບາລາກ”
6 ດັ່ງນັ້ນ ບາລາອາມຈຶ່ງກັບຄືນໄປ ແລະໄດ້ພົບບາລາກກຳລັງຢືນຢູ່ໃກ້ເຄື່ອງເຜົາບູຊາ ພ້ອມທັງພວກຜູ້ນຳຊາວ
ໂມອາບທຸກຄົນ
7 ບາລາອາມໄດ້ເວົ້າຄຳທຳນວາຍນີ້ໂດຍເປັ່ງສຽງຂຶ້ນວ່າ, “ເຈົ້າບາລາກໄດ້ພາຂ້າພະເຈົ້າມາຈາກອາຣາມ ທ່ານ
ກະສັດຂອງໂມອາບໄດ້ພາຂ້າພະເຈົ້າມາຈາກພູທາງທິດຕາເວັນອອກ ມາເຖີດ ມາດ່າສາບແຊ່ງຢາໂຄບເພື່ອ
ຂ້າພະເຈົ້າ ມາເຖີດມາປະນາມອິສຣາເອນເທີນ”
8 ຂ້າພະເຈົ້າຈະແຊ່ງໄດ້ຢ່າງໃດ ໃນເມື່ອພຣະເຈົ້າບໍ່ໄດ້ຊົງແຊ່ງ ຫລືວ່າຂ້າພະເຈົ້າຈະປະນາມໄດ້ຢ່າງໃດ ໃນ
ເມື່ອພຣະເຈົ້າບໍ່ໄດ້ຊົງປະນາມ
9 ເມື່ອຂ້າພະເຈົ້າຢືນຢູ່ເທິງພູສູງ ຂ້າພະເຈົ້າໄດ້ຫລຽວເຫັນພວກອິສຣາເອນນີ້ ຂ້າພະເຈົ້າໄດ້ຫລຽວເຫັນພວກເຂົາ
ຈາກພູນ້ອຍ ພວກເຂົາເປັນຊົນຊາດທີ່ຢູ່ເປົ່າປ່ຽວດຽວດາຍ ພວກເຂົາຮູ້ດີວ່າພວກເຂົາໄດ້ຮັບພຣະພອນພິເສດ
ບໍ່ຄືຊາດອື່ນໆ
10 ລູກຫລານຂອງຢາໂຄບເຫມືອນກັບຂີ້ຝຸ່ນດິນ ມັນມີຫລວງຫລາຍຈົນບໍ່ສາມາດນັບໄດ້ ຫລືນັບນຶ່ງໃນສີ່ຂອງອິສ
ຣາເອນໄດ້ ຂໍໃຫ້ຂ້າພະເຈົ້າຕາຍຢ່າງຄົນຊອບທັມ ແລະຂໍໃຫ້ມື້ສຸດທ້າຍຂອງຂ້າພະເຈົ້າເປັນເຫມືອນວັນສຸດ
ທ້າຍຂອງຜູ້ນຶ່ງໃນຫມູ່ໄພ່ພົນຂອງເຂົາ”
11 ແລ້ວບາລາກຈຶ່ງເວົ້າຕໍ່ບາລາອາມວ່າ, “ເປັນຫຍັງເຈົ້າຈຶ່ງທຳໃຫ້ເຮົາແບບນີ້ ການທີ່ເຮົາພາເຈົ້າມາບ່ອນນີ້ ບໍ່
ແມ່ນວ່າໃຫ້ມາອວຍພອນໃຫ້ພວກສັດຕຣູຂອງເຮົາ ແຕ່ວ່າໃຫ້ມາດ່າສາບແຊ່ງພວກເຂົາ”

12 ບາລາອາມຈຶ່ງຕອບວ່າ, "ຂ້າພະເຈົ້າເວົ້າໄດ້ພຽງແຕ່ສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າເວົ້າເທົ່ານັ້ນ"

**ຄຳທຳນວາຍຄັ້ງທີ່ສອງຂອງບາລາອາມ**

Balaam's Second Oracle

13 ແລ້ວບາລາກກໍເວົ້າຕໍ່ບາລາອາມອີກວ່າ, "ຈົ່ງໄປບ່ອນອື່ນອີກກັບເຮົາ ແລະທ່ານຈະໄດ້ເຫັນພວກອິສຣາເອນ
ພຽງແຕ່ຈຳນວນນ້ອຍຄົນເທົ່ານັ້ນ ແລ້ວຂໍໃຫ້ທ່ານສາບແຊ່ງພວກເຂົາຢູ່ບ່ອນນັ້ນ"
14 ດັ່ງນັ້ນ ບາລາກຈຶ່ງນຳບາລາອາມໄປຍັງທົ່ງນາ ໂຊພີມ ແລະໄປເທິງຈອມພູປີສກາ ຢູ່ບ່ອນນີ້ພຣະອົງໄດ້ຊົງສ້າງ
ແທ່ນບູຊາເຈັດແທ່ນ ແລະຖວາຍບູຊາງົວ ແລະແກະໃສ່ແຕ່ລະແທ່ນ
15 ບາລາອາມໄດ້ເວົ້າຕໍ່ບາລາກວ່າ, "ຂໍໃຫ້ພຣະອົງຢືນຢູ່ໃກ້ໆກັບເຄື່ອງເຜົາບູຊາຂອງພຣະອົງນີ້ເດີ ແລະຂ້າພະ
ເຈົ້າຈະໄປເຂົ້າເຝົ້າພຣະເຈົ້າຢູ່ທາງເບື້ອງພຸ້ນ"
16 ພຣະຜູ້ເປັນເຈົ້າຊົງສະເດັດມາພົບບາລາອາມ ແລະບອກຖ້ອຍຄຳທີ່ຈະເວົ້າ ແລ້ວກໍຊົງສັ່ງບາລາອາມນຳຖ້ອຍ
ຄຳກັບຄືນໄປບອກບາລາກ
17 ດັ່ງນັ້ນ ບາລາອາມຈຶ່ງກັບຄືນໄປແລະພົບ ບາລາກກຳລັງຢືນຢູ່ໃກ້ໆເຄື່ອງເຜົາບູຊາພ້ອມທັງພວກຜູ້ນຳຊາວໂມ
ອາບທຸກຄົນ ບາລາກໄດ້ຖາມເຖິງຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້
18 ບາລາອາມຈຶ່ງກ່າວຄຳທຳນວາຍນີ້ໂດຍເປັ່ງສຽງຂຶ້ນວ່າ, "ບາລາກ ບຸດຊາຍຂອງຊິບໂປເອີຍ ຈົ່ງມາພີ້ ແລະຟັງ
ຄຳທີ່ຂ້າພະເຈົ້າຈະກ່າວອອກໄປ
19 ພຣະເຈົ້າບໍ່ໄດ້ເວົ້າຕົວະເໝືອນດັ່ງມະນຸດ ພຣະອົງບໍ່ແມ່ນມະນຸດທີ່ມັກປ່ຽນໃຈ ທຸກສິ່ງທີ່ພຣະອົງຊົງສັນຍາ ພ
ຣະອົງກໍຊົງທຳຕາມສັນຍາ ພຣະອົງຊົງເວົ້າຫຍັງມັນກໍເປັນໄປຢ່າງນັ້ນ
20 ພຣະເຈົ້າຊົງໃຫ້ຂ້າພະເຈົ້າເປັນຜູ້ອວຍພອນ ເມື່ອພຣະອົງຊົງອວຍພອນແລ້ວ ຂ້າພະເຈົ້າຈະລຶບລ້າງຄຳອວຍ
ພອນນັ້ນບໍ່ໄດ້
21 ຂ້າພະເຈົ້າມອງເຫັນສິ່ງຈະເກີດຂຶ້ນກັບຊາວອິສຣາເອນ ຈະບໍ່ມີຄວາມທຸກຍາກ ຫລືລຳບາກແຕ່ຢ່າງໃດ ພຣະຜູ້
ເປັນເຈົ້າຂອງພວກເຂົາກໍຊົງສະຖິດຢູ່ກັບພວກເຂົາ ແລະພວກເຂົາກໍໄດ້ປະກາດວ່າ ພຣະອົງຊົງເປັນເຈົ້າຊີວິດ
ຂອງພວກເຂົາ
22 ພຣະເຈົ້າຊົງໄດ້ນຳພວກເຂົາອອກມາຈາກປະເທດເອຢິບ ພຣະອົງຊົງຕໍ່ສູ້ເພື່ອພວກເຂົາເໝືອນດັ່ງຄວາຍປ່າ
23 ບໍ່ມີຫມໍເວດມົນຄາຖາຜູ້ໃດທີ່ຈະຕໍ່ສູ້ຊົນຊາດອິສຣາເອນໄດ້ ສະນັ້ນປະຊາຊົນຈຶ່ງພາກັນກ່າວເຖິງອິສຣາເອນວ່າ
"ເບິ່ງແມ໋, ສິ່ງທີ່ພຣະເຈົ້າຊົງກະທຳຕໍ່ອິສຣາເອນ"
24 ຊົນຊາດອິສຣາເອນເໝືອນສິງໂຕຮ້າຍແຮງ ມັນຈະບໍ່ຢຸດນິ້ງຈົນກວ່າໄດ້ຈີກ ແລະກັດສວບ ແລະຈົນກວ່າມັນ
ຈະໄດ້ກິນເລືອດຂອງຜູ້ທີ່ມັນຂ້າ"
25 ແລ້ວບາລາກໄດ້ເວົ້າຕໍ່ບາລາອາມວ່າ, "ຖ້າທ່ານປະຕິເສດບໍ່ຍອມດ່າສາບແຊ່ງປະຊາຊົນອິສຣາເອນ ກໍຂໍຢ່າ
ໄດ້ອວຍພອນພວກເຂົາເລີຍ"
26 ບາລາອາມໄດ້ຕອບວ່າ, "ຂ້າພະເຈົ້າເຄີຍບອກພຣະອົງແລ້ວ ຂ້າພະເຈົ້າຈະທຳແຕ່ສິ່ງທີ່ພຣະຜູ້ເປັນເຈົ້າຊົງ
ບອກຂ້າພະເຈົ້າເທົ່ານັ້ນ"

**ບາລາອາມທຳນວາຍຄັ້ງທີ່ສາມ**

27 ບາລາກໄດ້ເວົ້າວ່າ, "ຈົ່ງມາກັບເຮົາ ແລະເຮົາຈະພາທ່ານໄປບ່ອນອື່ນອີກ ບາງທີ່ພຣະເຈົ້າຈະຊົງອະນຸຍາດໃຫ້
ທ່ານດ່າສາບແຊ່ງພວກເຂົາໃນບ່ອນນັ້ນ"
28 ດັ່ງນັ້ນ ພຣະອົງຈຶ່ງພາບາລາອາມໄປເທິງຈອມພູ ເປໂອຣ໌ ຊຶ່ງເປັນບ່ອນທີ່ຫລຽວເຫັນຖິ່ນກັນດານໄດ້
29 ບາລາອາມໄດ້ເວົ້າຕໍ່ບາລາກວ່າ, "ຈົ່ງສ້າງແທ່ນບູຊາໃຫ້ຂ້າພະເຈົ້າເຈັດແທ່ນ ແລະນຳເອົາງົວ ແລະແກະມາໃຫ້
ຂ້າພະເຈົ້າແນວລະເຈັດໂຕ"

30 ບາລາກກໍປະຕິບັດຕາມຄຳບອກກ່າວ ແລະໄດ້ຖວາຍບູຊາງົວ ແລະແກະໄວ້ເທິງແທ່ນບູຊາແຕ່ລະແທ່ນ

## 24

Chapter 24

1 ໃນເທື່ອນີ້ ບາລາອາມຮູ້ວ່າ ພຣະຜູ້ເປັນເຈົ້າຢາກໃຫ້ທ່ານອວຍພອນພວກອິສຣາເອນ ສະນັ້ນທ່ານຈຶ່ງບໍ່ໄດ້ໄປ
ເບິ່ງໂຊກເບິ່ງລາງຕາມທີ່ໄດ້ເຄີຍປະຕິບັດມາກ່ອນ
2 ທ່ານອວາຍໜ້າໄປທາງຖິ່ນກັນດານ ແລະເຫັນຊາວອິສຣາເອນຕັ້ງຄ້າຍຢູ່ເປັນເຜົ່າເປັນຕະກູນ ພຣະວິນຍານບໍ
ຣິສຸດຂອງ ພຣະເຈົ້າຊົງສະເດັດລົງມາເທິງທ່ານ
3 ທ່ານຈຶ່ງໄດ້ກ່າວຄຳທຳນວາຍວ່າ, “ຕໍ່ໄປນີ້ ແມ່ນຖ້ອຍຄຳຂອງບາລາອາມ ບຸດຊາຍຂອງເບໂອຣ໌ ຊຶ່ງເປັນຄຳ
ເວົ້າຂອງຜູ້ທີ່ຮູ້ແຈ້ງເຫັນຈິງ ຄື
4 ຂ້າພະເຈົ້າໄດ້ຍິນຄຳທີ່ພຣະອົງຊົງກ່າວ ໄດ້ເຫັນນິມິດມາຈາກພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ດ້ວຍຕາທີ່ມີດາວປະ
ກາຍ
5 ຢາໂຄບເອີຍ ຕູບຜ້າເຕັນຂອງທ່ານຊ່າງງາມຫລາຍ ຊາວອິສຣາເອນເອີຍ ຄ້າຍຂອງທ່ານກໍງາມ
6 ເຫມືອນແຖວຕົ້ນຕານອັນຍາວຢຽດ ຫລືສວນທີ່ຢູ່ແຄມແມ່ນໍ້າ ເຫມືອນຕົ້ນໄມ້ຫອມທີ່ພຣະຜູ້ເປັນເຈົ້າຊົງປູກ
ໄວ້ ຫລືຕົ້ນສົນທີ່ຢູ່ໃກ້ນໍ້າ
7 ກອງທັບອິສຣາເອນທຳໃຫ້ຊົນຊາດທັງຫລາຍສັ່ນສະທ້ານ ອິສຣາເອນປົກຄອງຫລາຍຊົນຊາດ ເຈົ້າຊີວິດຂອງ
ພວກເຂົາຍິ່ງໃຫຍ່ກວ່າພວກ ອາກັກ ແລະບັນລັງຂອງພຣະອົງຈະຕ້ອງກວ້າງຂວາງ ແລະແຜ່ຜາຍຮຸ່ງເຮືອງ
ອອກໄປ
8 ພຣະເຈົ້າຊົງນຳພວກເຂົາອອກມາຈາກປະເທດເອຢິບ ພຣະອົງຊົງຕໍ່ສູ້ເພື່ອພວກເຂົາເຫມືອນຄວາຍປ່າ ພວກ
ເຂົາສັງຫານສັດຕຣູ ຫັກກະດູກແລະຫັກລູກທນູຂອງພວກເຂົາ
9 ຊົນຊາດນີ້ເຫມືອນສິງຕົວຮ້າຍແຮງ ເມື່ອເວລາມັນນອນຫລັບບໍ່ມີໃຜກ້າປຸກ ຜູ້ທີ່ອວຍພອນອິສຣາເອນຈະໄດ້
ຮັບຄຳອວຍພອນຕອບ ແລະຜູ້ທີ່ສາບແຊ່ງອິສຣາເອນຈະຖືກສາບແຊ່ງ”
10 ບາລາກລຸກຢືນຂຶ້ນກຳກຳປັ້ນດ້ວຍຄວາມໂມໂຫໂກດຮ້າຍ ແລະເວົ້າຕໍ່ບາລາອາມວ່າ, “ເຮົາເອີ້ນເຈົ້າມານີ້ ເພື່ອ
ໃຫ້ມາດ່າສາບແຊ່ງສັດຕຣູຂອງເຮົາ ແຕ່ວ່າທັງສາມຄັ້ງທ່ານໄດ້ອວຍພອນໃຫ້ພວກເຂົາແທນທີ່ຈະດ່າ
11 ບັດນີ້ ຈົ່ງກັບຄືນເມືອສາ ເຮົາສັນຍາວ່າຈະໃຫ້ຣາງວັນແກ່ເຈົ້າ ແຕ່ດຽວນີ້ ພຣະຜູ້ເປັນເຈົ້າບໍ່ອະນຸຍາດໃຫ້ເຈົ້າ
ຮັບຣາງວັນນີ້”
12 ບາລາອາມຈຶ່ງຕອບວ່າ, “ຂ້າພະເຈົ້າໄດ້ບອກພວກທີ່ສົ່ງຂ່າວທີ່ພຣະອົງສົ່ງໄປຫາຂ້າພະເຈົ້ານັ້ນແລ້ວເດ່ວ່າ
13 ແມ່ນແຕ່ພຣະອົງຈະເອົາເງິນຄຳທັງຫມົດໃນພຣະຣາຊວັງມາໃຫ້ແກ່ຂ້າພະເຈົ້າ ຂ້າພະເຈົ້າກໍບໍ່ສາມາດທຳສິ່ງ
ໃດໄດ້ ຖ້າຫາກສິ່ງນັ້ນເປັນການຂັດຂືນຄຳສັ່ງຂອງພຣະຜູ້ເປັນເຈົ້າ ຂ້າພະເຈົ້າເວົ້າໄດ້ພຽງແຕ່ຖ້ອຍຄຳທີ່ພຣະຜູ້
ເປັນເຈົ້າຊົງບອກໃຫ້ເວົ້າເທົ່ານັ້ນ”
14 ບາລາອາມເວົ້າຕໍ່ບາລາກວ່າ, “ເວລານີ້ ຂ້າພະເຈົ້າຈະກັບຄືນເມືອບ້ານເມືອງຂອງຂ້າພະເຈົ້າແລ້ວ ແຕ່ວ່າ
ກ່ອນຂ້າພະເຈົ້າຈະໄປ ຂ້າພະເຈົ້າຢາກຈະເຕືອນພຣະອົງໃນສິ່ງທີ່ຊາວອິສຣາເອນຈະປະຕິບັດຕໍ່ປະຊາຊົນ
ຂອງພຣະອົງໃນພາຍຂ້າງຫນ້າ”

**ບາລາອາມທຳນວາຍຄັ້ງສຸດທ້າຍ**

Balaam’s Fourth Oracle

15 ແລ້ວບາລາອາມກໍເວົ້າຄຳທຳນວາຍວ່າ “ຕໍ່ໄປນີ້ ແມ່ນຖ້ອຍຄຳຂອງບາລາອາມ ບຸດຊາຍຂອງເບໂອຣ໌ ເປັນຄຳ
ເວົ້າຂອງຜູ້ຮູ້ເຫັນຈິງ

16 ຜູ້ໄດ້ຍິນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ແລະຍອມຮັບເອົາສະຕິປັນຍາຂອງຜູ້ສູງສຸດ ຂ້າພະເຈົ້າໄດ້ເຫັນນິມິດທີ່
ມາຈາກພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ດ້ວຍສາຍຕາທີ່ມີແວວອັນປະກາຍ
17 ຂ້າພະເຈົ້າມອງເຫັນອະນາຄົດຂ້າງຫນ້າ ແລະເຫັນຊົນຊາດອິສຣາເອນ ຈະມີເຈົ້າຊີວິດອັນຮຸ່ງເຮືອງ ເຫມືອນ
ດາວເກີດຂຶ້ນມາໃນຖ້າມກາງຊົນຊາດນີ້ ຜູ້ນີ້ຈະເປັນເຫມືອນເຄື່ອງຫມາຍແຫ່ງອຳນາດທີ່ມາຈາກອິສຣາເອນ ພ
ຣະອົງຈະທຸບຕີພວກຜູ້ນຳຂອງໂມອາບ ຈະທຳລາຍພວກທີ່ຈອງຫອງ ແລະຮ້າຍກາດທຸກຄົນ
18 ພຣະອົງຈະຕີຊະນະສັດຕຣູຂອງພຣະອົງທີ່ເມືອງເອໂດມ ແລະຈະຍຶດເອົາແຜ່ນດິນຂອງພວກເຂົາມາເປັນສົມ
ບັດຂອງພຣະອົງ ໃນລະຍະທີ່ພວກອິສຣາເອນດຳເນີນການປາບຢ່າງມີໄຊນັ້ນ
19 ຊົນຊາດອິສຣາເອນຈະຢຽບຢ່ຳພວກເຂົາລົງ ຈະລຶບລ້າງທຳລາຍພວກທີ່ລອດຕາຍຢ່າງຫມົດສິ້ນ
20 ແລ້ວບາລາອາມໄດ້ເຫັນພວກອາມາເລກທາງນິມິດ ທ່ານຈຶ່ງທຳນວາຍວ່າ, “ຊາວອາມາເລກເປັນຊົນຊາດທີ່ມີ
ອຳນາດກວ່າຊາດໃດໆ ແຕ່ວ່າຊົນຊາດນີ້ຈະຖືກທຳລາຍໃຫ້ດັບສູນໄປໃນບັ້ນປາຍ
21 ຕໍ່ມາບາລາອາມກໍເຫັນພວກເກນິດ ທາງນິມິດອີກ ທ່ານຈຶ່ງທຳນວາຍວ່າ, “ບ່ອນທີ່ພວກທ່ານຢູ່ນັ້ນແຫນ້ນຫນາ
ຖາວອນ ແລະປອດພັຍເຫມືອນດັ່ງຮັງນົກຢູ່ເທິງຫນ້າຜາ”
22 ແຕ່ວ່າຊາວເກນິດເອີຍ ເຈົ້າຈະຖືກທຳລາຍ ເມື່ອຊາວອັສຊູມາຍຶດຄອງພວກເຈົ້າ
23 ບາລາອາມໄດ້ທຳນວາຍວ່າ, “ແມ່ນປະຊາຊົນພວກໃດທີ່ທ້ອນໂຮມກັນທາງພາກເຫນືອນັ້ນ”
24 ແຕ່ກຳປັ່ນຈະມາຈາກເມືອງກິດຕິມ ທຳລາຍອັສຊູ ແລະເອເບີ ແລະເຂົາຈະຖືກທຳລາຍດ້ວຍ”
25 ແລ້ວບາລາອາມໄດ້ເດີນທາງກັບເມືອບ້ານ ສ່ວນບາລາກໄດ້ເດີນທາງໄປທາງອື່ນ

## 25 ອິສຣາເອນນະມັສການພຣະບາອານ ເປໂອຣ໌

Worship of Baal of Peor

1 ເມື່ອອິສຣາເອນພັກຢູ່ໃນເມືອງຊິດຕິມ ປະຊາຊົນກໍໄດ້ເລີ້ມຫລິ້ນຊູ້ກັບຍິງຊາວໂມອາບ
2 ຍິງເຫລົ່ານີ້ກໍເຊີນປະຊາຊົນໃຫ້ໄປກະທຳບູຊາຕໍ່ພຣະຂອງນາງ ປະຊາຊົນກໍຮັບປະທານ ແລະຂາບໄຫວ້
ພຣະຂອງນາງ
3 ດັ່ງນັ້ນ ອິສຣາເອນກໍເຂົ້າຖືພຣະບາອານແຫ່ງເປໂອຣ໌ ແລະພຣະຜູ້ເປັນເຈົ້າຊົງພຣະພິໂຣດຕໍ່ອິສຣາເອນ
4 ແລະພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, “ຈົ່ງນຳຫົວຫນ້າທັງຫລາຍຂອງປະຊາຊົນແຂວນທ້ອຍຕາກແດດໄວ້ຕໍ່
ພຣະຜູ້ເປັນເຈົ້າ ເພື່ອວ່າພຣະພິໂຣດອັນກ້ຽວກາດຂອງພຣະຜູ້ເປັນເຈົ້າຈະຫັນຫນີໄປຈາກອິສຣາເອນເສັຽ”
5 ແລະໂມເຊບອກຜູ້ປົກຄອງຂອງອິສຣາເອນວ່າ, “ທ່ານທຸກຄົນຈົ່ງຂ້າຄົນຂອງທ່ານທີ່ເຂົ້າຖືພຣະບາອານແຫ່ງເປ
ໂອຣ໌ເສັຽ”
6 ແລະເບິ່ງແມ, ມີຊາຍອິສຣາເອນຄົນນຶ່ງພາຍິງຄົນມີດີອານຄົນນຶ່ງເຂົ້າມາໃນຄອບຄົວຕໍ່ຫນ້າໂມເຊ ແລະຕໍ່ຫນ້າ
ຊຸມນຸມຊົນທັງຫມົດຂອງອິສຣາເອນ ຂນະເມື່ອເຂົາທັງຫລາຍກຳລັງຮ້ອງໄຫ້ຢູ່ທີ່ປະຕູເຕັນນັດພົບ
7 ເມື່ອຟີເນຮັສບຸດເອເລອາຊາບຸດຂອງອາໂຣນປະໂຣຫິດເຫັນດັ່ງນັ້ນກໍລຸກຂຶ້ນໄປຈາກຊຸມນຸມຊົນ ມືຖືດາບ
8 ຕິດຕາມຊາຍອິສຣາເອນຄົນນັ້ນເຂົາໄປໃນຫ້ອງຂ້າງໃນ ແລະແທງທະລຸຮ່າງກາຍເຂົາທັງສອງ ທັງຊາຍອິສຣາ
ເອນແລະຍິງຄົນນັ້ນ ແລ້ວໄພວິບັດໃນອິສຣາເອນກໍສງົບ
9 ແຕ່ຢ່າງໃດກໍຕາມ ຄົນທີ່ຕາຍດ້ວຍໄພວິບັດມີສອງຫມື່ນສີ່ພັນຄົນ
10 ພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ,

11 "ຟີເນຮັສ ບຸດເອເລອາຊາ ບຸດອາໂຣນປະໂຣຫິດ ໄດ້ຍັບຢັ້ງຄວາມກິ້ວຂອງເຮົາຕໍ່ຄົນອິສຣາເອນ ໃນການທີ່ເຂົາ
ຫຶງຫວງ ດ້ວຍຄວາມຫຶງຫວງຂອງເຮົາທີ່ມີຕໍ່ປະຊາຊົນ ດັ່ງນັ້ນເຮົາຈຶ່ງບໍ່ໄດ້ເຜົາຜານຄົນອິສຣາເອນເສັຽດ້ວຍ
ຄວາມຫຶງຫວງຂອງເຮົາ
12 ດັ່ງນັ້ນຈົ່ງກ່າວວ່າ "ເບິ່ງແມ່, ເຮົາຕັ້ງຄໍາສັນຍາແກ່ເຂົາ
13 ຄໍາສັນຍານັ້ນຈະເປັນຂອງເຂົາ ແລະຂອງເຊື້ອສາຍຂອງເຂົາ ເປັນຄໍາສັນຍາແຫ່ງຕໍາແຫນ່ງປະໂຣຫິດອັນຖາ
ວອນ ເພາະເຂົາຫຶງຫວງເພື່ອພຣະ
ຜູ້ເປັນເຈົ້າຂອງເຂົາ ແລະໄດ້ທໍາການລ້າງມົນທິນບາບຄົນອິສຣາເອນ"
14 ຊື່ຂອງຊາຍອິສຣາເອນຄົນທີ່ຖືກຂ້າຮ່ວມກັບຍິງຊາວມີດີອານຄົນນັ້ນ ຊື່ຊິມຣີ ບຸດຂອງຊາລູ ຫົວຫນ້າຂອງຕະ
ກູນນຶ່ງໃນເຜົ່າຊີເມໂອນ
15 ແລະຊື່ຂອງຍິງຊາວມີດີອານຜູ້ຖືກຂ້າ ຄືໂກສບີ ບຸດຕຣີຂອງຊູ ຜູ້ເປັນຫົວຫນ້າຄົນຕະກູນນຶ່ງໃນມີດີອານ
16 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
17 "ຈົ່ງລົບກວນຄົນມີດີອານ ແລະສູ້ຮົບກັບເຂົາ
18 ເພາະເຂົາລົບກວນເຈົ້າດ້ວຍອຸບາຍ ຊຶ່ງເຂົາລໍ້ເຈົ້າໃນເຣື່ອງເປໂອຣ໌ ແລະໃນເຣື່ອງນາງໂກສບີລູກສາວຫົວຫນ້າ
ແຫ່ງມີດີອານ ຜູ້ທີ່ຖືກຂ້າຕາຍໃນວັນທີບັງເກີດໄພວິບັດດ້ວຍເຣື່ອງເປໂອຣ໌

## 26 ການນັບຊົນອິສຣາເອນໃນໂມອາບ

A Census of the New Generation

1 ພາຍຫລັງໄພວິບັດນັ້ນ ພຣະຜູ້ເປັນເຈົ້າກ່າວກັບໂມເຊ ແລະກ່າວກັບເອເລອາຊາວ່າ,
2 "ຈົ່ງທໍາສໍາມະໂນຄົວຊຸມນຸມຊົນອິສຣາເອນທັງຫມົດ ອາຍຸຕັ້ງແຕ່ຊາວປີຂຶ້ນໄປຕາມຕະກູນຂອງເຂົາທັງຫມົດ
ໃນອິສຣາເອນຜູ້ທີ່ຈະເຂົ້າສົງຄາມໄດ້"
3 ໂມເຊກັບເອເລອາຊາປະໂຣຫິດ ປາໄສກັບເຂົາທັງຫລາຍໃນທົ່ງໂມອາບ ຮີມແມ່ນໍ້າຈໍແດນທີ່ເມືອງເຢຣີໂກວ່າ
4 "ຈົ່ງທໍາສໍາມະໂນຄົວປະຊາຊົນ ອາຍຸຕັ້ງແຕ່ຊາວປີຂຶ້ນໄປ" ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊ ແລະຄົນອິສ
ຣາເອນຜູ້ທີ່ອອກຈາກແຜ່ນດິນເອຢິບຄື
5 ຣູເບນ ບຸດຫົວປີຂອງອິສຣາເອນ ບຸດຂອງຣູເບນຄືຮາໂນກ ຄົນຕະກູນຮາໂນກ ປານລູ ຄົນຕະກູນປານລູ
6 ເຮສໂລນ ຄົນຕະກູນເຮສໂລນ ກາຣ໌ມີ ຄົນຕະກູນກາຣ໌ມີ
7 ເຫລົ່ານີ້ເປັນຕະກູນຂອງຄົນຣູເບນ ມີຈໍານວນສີ່ຫມື່ນສາມພັນເຈັດຮ້ອຍສາມສິບຄົນ
8 ແລະບຸດຂອງປານລູ ຄືເອລີອາບ
9 ບຸດຂອງເອລີອາບ ຄືເນມູເອນ ດາທານ ແລະອາບີຣາມທີ່ເລືອກຈາກຊຸມນຸມຊົນ ເປັນຜູ້ຂັດຂວາງໂມເຊແລະ
ອາໂຣນ ໃນພັກພວກໂກຣາ ເມື່ອເຂົາຂັດຂວາງພຣະຜູ້ເປັນເຈົ້າ
10 ແລະແຜ່ນທໍຣະນີໄດ້ອ້າປາກອອກກືນເຂົາພ້ອມກັບໂກຣາ ເມື່ອພັກພວກນັ້ນເຖິງຕາຍ ເມື່ອໄຟເຜົາຜານເສັຽ
ສອງຮ້ອຍຫ້າສິບຄົນ ແລະເຂົາທັງຫລາຍເປັນເຣື່ອງເຕືອນໃຈ
11 ແຕ່ບຸດຂອງໂກຣານັ້ນບໍ່ໄດ້ຕາຍ
12 ບຸດຂອງຊີໂມເອນຕາມຕະກູນຂອງເຂົາ ຄືເນມູເອນ ຄົນຕະກູນເນມູເອນ ຢາມີນ ຄົນຕະກູນຢາມີນ ຢາຄີນ ຄົນ
ຕະກູນຢາຄີນ
13 ເຊຣາ ຄົນຕະກູນເຊຣາ ຊາອູນ ຄົນຕະກູນຊາອູນ
14 ເຫລົ່ານີ້ເປັນຕະກູນຂອງຊີເມໂອນ ມີຈໍານວນສອງຫມື່ນສອງພັນສອງຮ້ອຍຄົນ
15 ບຸດຂອງກາດ ຕາມຕະກູນຂອງເຂົາ ຄືເຊໂຟນ ຄົນຕະກູນເຊໂຟນ ຮັກກີ ຄົນຕະກູນຮັກກີ ຊູນີ ຄົນຕະກູນຊູນີ

16 ໂອສນີ ຄົນຕະກູນໂອຊນີ ເອຣີ ຄົນຕະກູນເອຣີ

17 ອາໂຣດ ຄົນຕະກູນອາໂຣດ ອາເຣດີ ຄົນຕະກູນອາເຣດີ

18 ເຫລົ່ານີ້ເປັນຄົນຕະກູນຂອງບຸດຂອງກາດຕາມຈຳນວນຂອງເຂົາມີສີ່ໝື່ນຫ້າຮ້ອຍຄົນ

19 ບຸດຂອງຢູດາ ຄື ເອຣ໌ ແລະໂອນານ ເອຣ໌ ແລະໂອນານຕາຍເສັຽໃນແຜ່ນດິນການາອານ

20 ແລະບຸດຂອງຢູດາຕາມຄອບຄົວຂອງເຂົາ ຄື ເຊລາ ຄົນຕະກູນເຊລາ ເປເຣສ ຄົນຕະກູນເປເຣສ ເຊຣາ ຄົນຕະກູນເຊຣາ

21 ແລະບຸດເປເຣັສ ຄືເຮັສໂຣນ ຄົນຕະກູນເຮສໂຣນ ຮາມູນ ຄົນຕະກູນຮາມູນ

22 ເຫລົ່ານີ້ເປັນຄົນຕະກູນຂອງຢູດາຕາມຈຳນວນຂອງເຂົາມີເຈັດໝື່ນຫົກພັນຫ້າຮ້ອຍຄົນ

23 ບຸດຂອງອິສຊາຄາຕາມຕະກູນຂອງເຂົາ ຄືໂທລາ ຄົນຕະກູນໂທລາ ປູວາ ຄົນຕະກູນປູວາ

24 ຢາຊູບ ຄົນຕະກູນຢາຊູບ ຊິມໂຣນ ຄົນຕະກູນຊິມໂຣນ

25 ເຫລົ່ານີ້ເປັນຕະກູນຂອງອິສຊາຄາຕາມຈຳນວນຂອງເຂົາມີຫົກໝື່ນສີ່ພັນສາມຮ້ອຍຄົນ

26 ບຸດຂອງເຊບູລູນຕາມຕະກູນຂອງເຂົາ ຄືເຊເຣດ ຄົນຕະກູນເຊເຣດ ເອໂລນ ຄົນຕະກູນເອໂລນ ຢາເລເອນ ຄົນຕະກູນຢາເລເອນ

27 ເຫລົ່ານີ້ເປັນຕະກູນຂອງເຊບູລູນຕາມຈຳນວນຂອງເຂົາມີຫົກໝື່ນຫ້າຮ້ອຍຄົນ

28 ບຸດອຂງໂຢເຊັບຕາມຕະກູນຂອງເຂົາ ຄືມານັສເຊ ແລະເອຟຣາອິມ

29 ບຸດຂອງມານັສເຊ ຄືມາຄີ ຄົນຕະກູນມາຄີ ມາຄີເປັນບິດາຂອງກີເລອາດ ກີເລອາດ ຄົນຕະກູນກີເລອາດ

30 ບຸດຂອງກີເລອາດ ຄື ອີເອເຊີ ຄົນຕະກູນອີເອເຊີ ເຮເລກ ຄົນຕະກູນເຮເລກ

31 ອັສຣີເອນ ຄົນຕະກູນອັສຣີເອນ ເຊເຄມ ຄົນຕະກູນເຊເຄມ

32 ແລະເຊມີດາ ຄົນຕະກູນເຊມີດາ ແລະເຮເຟີ ຄົນຕະກູນເຮເຟີ

33 ສ່ວນເຊໂລເຟຮາດ ບຸດເຮເຟີບໍ່ມີບຸດຊາຍມີແຕ່ບຸດຍິງ ຊື່ບຸດຕຣີຂອງເຊໂລເຟຮາດ ຄືມາລາ ໂນອາ ໂຮກລາ ມີນຄາ ແລະຕີຣາຊາ

34 ເຫລົ່ານີ້ເປັນຕະກູນຂອງມານັສເຊ ແລະຈຳນວນຂອງເຂົາມີຫ້າໝື່ນສອງພັນເຈັດຮ້ອຍຄົນ

35 ຕໍ່ໄປນີ້ເປັນເຊື້ອສາຍຂອງເອຟຣາອິມຕາມຕະກູນຂອງເຂົາ ຄືຊູເທຣາ ຄົນຕະກູນຊູເທຣາ ເບເຄີ ຄົນຕະກູນເບເຄີ ຕາຮານ ຄົນຕະກູນຕາຮານ

36 ບຸດຂອງຊູເທຣາ ຄືເອຣານ ຄົນຕະກູນເອຣານ

37 ເຫລົ່ານີ້ເປັນຕະກູນຂອງເອຟຣາອິມ ແລະຈຳນວນຂອງເຂົາມີສາມໝື່ນສອງພັນຫ້າຮ້ອຍຄົນ ເຫລົ່ານີ້ເປັນເຊື້ອສາຍຂອງໂຢເຊັບຕາມຕະກູນຂອງເຂົາ

38 ບຸດຂອງເບັນຢາມິນຕາມຕະກູນຂອງເຂົາ ຄືເບລາ ຄົນຕະກູນເບລາ ອັສເບນ ຄົນຕະກູນອັສເບນ ອາຮີຣາມ ຄົນຕະກູນອາຮີຣາມ

39 ເຊຟູຟາມ ຄົນຕະກູນເຊຟູຟາມ ຮູຟາມ ຄົນຕະກູນຮູຟາມ

40 ແລະບຸດຂອງເບລາ ຄື ອາດ ແລະນາອາມານ ຄົນຕະກູນອາດ ແລະຄົນຕະກູນນາອາມານ

41 ເຫລົ່ານີ້ເປັນເຊື້ອສາຍຂອງເບັນຢາມິນຕາມຕະກູນຂອງເຂົາ ແລະຈຳນວນຂອງເຂົາມີສີ່ໝື່ນຫ້າພັນຫົກຮ້ອຍຄົນ

42 ຕໍ່ໄປນີ້ເປັນເຊື້ອສາຍຂອງດານ ຕາມຕະກູນຂອງເຂົາ ຄືຊູຮາມ ຄົນຕະກູນຊູຮາມ ນີ້ເປັນຕະກູນຂອງດານຕາມຕະກູນຂອງເຂົາ

43 ຕະກູນທັງໝົດຂອງຄົນຊູຮາມຕາມຈຳນວນຂອງເຂົາ ມີຫົກໝື່ນສີ່ພັນສີ່ຮ້ອຍຄົນ

44 ບຸດຂອງອາເຊີ ຕາມຕະກູນຂອງເຂົາ ຄືອີມນາ ຄົນຕະກູນອີມນາ ອີຊວີ ຄົນຕະກູນອີຊວີ ເບຣີຢາ ຄົນຕະກູນເບຣີຢາ
45 ບຸດຂອງເບຣີຢາ ຄືເຮເບີ ຄົນຕະກູນເຮເບີ ມັນຄີເອນ ຄົນຕະກູນມັນຄີເອນ
46 ບຸດຕຣີຂອງອາເຊີ ຄືເຊຣາ
47 ເຫລົ່ານີ້ເປັນຕະກູນຂອງບຸດອາເຊີຕາມຈໍານວນຂອງເຂົາ ມີຫ້າໝື່ນສາມພັນສີ່ຮ້ອຍຄົນ
48 ບຸດຂອງເນັບທາລີຕາມຕະກູນຂອງເຂົາ ຄືຢາເຊເອນ ຄົນຕະກູນຢາເຊເອນ ກູນີ ຄົນຕະກູນກູນີ
49 ເຢເຊີ ຄົນຕະກູນເຢເຊີ ຊີນເລມ ຄົນຕະກູນຊີນເລມ
50 ເຫລົ່ານີ້ເປັນຕະກູນຂອງເນັຟທາລີຕາມຕະກູນຂອງເຂົາ ແລະຕາມຈໍານວນຂອງເຂົາ ມີສີ່ໝື່ນຫ້າພັນສີ່ຮ້ອຍຄົນ
51 ຈໍານວນຄົນອິສຣາເອນ ມີຫົກແສນນຶ່ງພັນເຈັດຮ້ອຍສາມສິບຄົນ

**ຈັບສລາກແບ່ງແຜ່ນດິນ**

52 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
53 ໃຫ້ແບ່ງແຜ່ນດິນນັ້ນເປັນມໍຣະດົກແກ່ຄົນເຫລົ່ານີ້ຕາມຈໍານວນຣາຍຊື່
54 ມໍຣະດົກສ່ວນໃຫຍ່ກໍໃຫ້ແບ່ງແກ່ຄົນເຜົ່າໃຫຍ່ ແລະມໍຣະດົກສ່ວນນ້ອຍກໍໃຫ້ແບ່ງແກ່ຄົນເຜົ່ານ້ອຍ ທຸກເຜົ່າຈະໄດ້ຮັບສ່ວນມໍຣະດົກຕາມຈໍານວນຄົນ
55 ແຕ່ໃຫ້ຈັບສລາກແບ່ງແຜ່ນດິນນັ້ນຕາມຣາຍຊື່ເຜົ່າຂອງປູ່ຍ່າຕາຍາຍຂອງເຂົາ
56 ໃຫ້ຈັບສລາກແບ່ງມໍຣະດົກຂອງເຂົານັ້ນ ຕາມສ່ວນເຜົ່າໃຫຍ່ ແລະເຜົ່ານ້ອຍ”

**ເຜົ່າເລວີ**

57 ຕໍ່ໄປນີ້ເປັນຄົນເລວີທີ່ນັບຕາມຕະກູນຂອງເຂົາ ຄືເກີໂຊນ ຄົນຕະກູນເກີໂຊນ ໂກຮາດ ຄົນຕະກູນໂກຮາດ ເມຣາຣີ ຄົນຕະກູນເມຣາຣີ
58 ຕໍ່ໄປນີ້ເປັນຕະກູນຂອງເລວີ ຄືຄົນຕະກູນລິບນີ ຄົນຕະກູນເຮໂບຣນ ຄົນຕະກູນມາລີ ຄົນຕະກູນມູຊີ ຄົນຕະກູນໂກຣາ ແລະໂກຮາດເປັນບິດາຂອງອັມຣາມ
59 ເມັຽຂອງອັມຣາມ ຄືໂຢເຄເບດບຸດຕຣີຂອງເລວີເກີດແກ່ເລວີທີ່ເອຢິບ ແລະນາງມີບຸດກັບອັມຣາມ ຊື່ອາໂຣນ ແລະໂມເຊ ແລະມີຣີອາມເອື້ອຍຂອງເຂົາທັງສອງ
60 ແລະອາໂຣນມີບຸດຊື່ ນາດາບ ອາບີຮູ ເອເລອາຊາ ແລະອີທາມາ
61 ແຕ່ນາດາບ ແລະອາບີຮູນັ້ນໄດ້ເສັຽຊີວິດ ເມື່ອເຂົາບູຊາດ້ວຍໄຟທີ່ຕ້ອງຫ້າມແດ່ພຣະຜູ້ເປັນເຈົ້າ
62 ແລະຈໍານວນຂອງເຂົາເປັນສອງໝື່ນສາມພັນຄົນ ເປັນຜູ້ຊາຍທຸກຄົນອາຍຸຕັ້ງແຕ່ນຶ່ງເດືອນຂຶ້ນໄປ ເພາະເຂົາບໍ່ໄດ້ນັບຮວມໄວ້ໃນຄົນອິສຣາເອນ ເພາະບໍ່ມີມໍຣະດົກໃຫ້ແກ່ເຂົາຖ້າມກາງອິສຣາເອນ

**ກາເລັບ ແລະໂຢຊວຍເທົ່ານັ້ນທີ່ເຫລືອຢູ່**

63 ຈໍານວນຄົນເຫລົ່ານີ້ໂມເຊ ແລະປະໂຣຫິດເອເລອາຊາໄດ້ນັບໄວ້ ຄັ້ງເມື່ອນັບຄົນອິສຣາເອນໃນທົ່ງໂມອາບຂ້າງແມ່ນໍ້າຈໍແດນກົງກັນຂ້າມເມືອງເຢຣີໂກ
64 ແຕ່ຕາມຣາຍຊື່ເຫລົ່ານີ້ບໍ່ມີຊາຍຈັກຄົນນຶ່ງຊຶ່ງໂມເຊແລະອາໂຣນໄດ້ນັບໄວ້ຄັ້ງເມື່ອນັບຄົນອິສຣາເອນໃນຖິ່ນກັນດານຊີນາອີ
65 ເພາະພຣະຜູ້ເປັນເຈົ້າໄດ້ກ່າວເຣື່ອງເຂົາເຫລົ່ານັ້ນວ່າ “ເຂົາຈະຕ້ອງຕາຍໃນຖິ່ນກັນດານ” ບໍ່ມີຊາຍຈັກຄົນນຶ່ງເຫລືອຢູ່ ນອກຈາກກາເລັບບຸດເຢຟຸນເນ ແລະໂຢຊວຍບຸດນູນ

## 27 ຄຳຂໍແຫ່ງບຸດຕຣີຂອງເຊໂລເຟຮາດ

The Daughters of Zelophehad

1 ຄັ້ງນັ້ນບຸດຕຣີທັງຫລາຍຂອງເຊໂລເຟຮາດ ບຸດຂອງເຮເຟີ ຜູ້ເປັນບຸດຂອງເກເລອາດ ຜູ້ເປັນບຸດຂອງມາຄີ ຜູ້ເປັນບຸດຂອງມານັສເຊ ຈາກຕະກູນຂອງມານັສເຊບຸດຂອງໂຢເຊັບເຂົ້າມາໃກ້ ຊື່ບຸດຕຣີທັງຫລາຍຂອງເຂົາ ຄື ມາລາ ໂນອາ ໂຮກລາ ມິນຄາ ແລະຕີຣາຊາ

2 ແລະເຂົາທັງຫລາຍມາຢືນຢູ່ຕໍ່ຫນ້າໂມເຊ ແລະຕໍ່ຫນ້າເອເລອາຊາປະໂຣຫິດ ແລະຕໍ່ຫນ້າຫົວຫນ້າ ແລະຕໍ່ຫນ້າຊຸມນຸມຊົນທີ່ປະຕູເຕັນນັດພົບກ່າວວ່າ,

3 "ບິດາຂອງເຮົາຕາຍເສັຽໃນຖິ່ນກັນດານ ທ່ານບໍ່ໄດ້ຢູ່ໃນພວກທີ່ກະບົດຕໍ່ສູ້ພຣະຜູ້ເປັນເຈົ້າໃນພັກພວກຂອງໂກຣາ ແຕ່ທ່ານເສັຽຊີວິດຍ້ອນບາບຂອງຕົນ ແລະທ່ານບໍ່ມີບຸດຊາຍເລີຍ

4 ເຫດໃດຈຶ່ງລຶບຊື່ບິດາຂອງເຮົາຈາກຕະກູນຂອງທ່ານ ເພາະເຫດທີ່ທ່ານບໍ່ມີບຸດຊາຍເລີຍ ຂໍໃຫ້ເຮົາມີກຳມະສິດທີ່ດິນຖ້າມກາງພີ່ນ້ອງບິດາຂອງເຮົາດ້ວຍ"

5 ໂມເຊໄດ້ນຳເຣື່ອງຂອງເຂົາກາບທູນພຣະຜູ້ເປັນເຈົ້າ

6 ແລະພຣະຜູ້ເປັນເຈົ້າໄດ້ກ່າວກັບໂມເຊວ່າ,

7 ບຸດຕຣີຂອງເຊໂລເຟຮາດເວົ້າຖືກຕ້ອງແລ້ວ ເຈົ້າຈົ່ງໃຫ້ກຳມະສິດທີ່ດິນເປັນມໍຣະດົກຖ້າມກາງພີ່ນ້ອງບິດາຂອງເຂົາ ແລະກະທຳໃຫ້ມໍຣະດົກບິດາຂອງເຂົາຕົກທອດມາເຖິງເຂົາ

8 ເຈົ້າຈົ່ງກ່າວແກ່ຄົນອິສຣາເອນວ່າ "ຖ້າຜູ້ຊາຍຄົນນຶ່ງຕາຍ ແລະບໍ່ມີບຸດຊາຍ ເຈົ້າຈົ່ງໃຫ້ມໍຣະດົກຂອງເຂົາຕົກໄປຍັງບຸດຕຣີຂອງເຂົາ

9 ແລະຖ້າເຂົາບໍ່ມີບຸດຕຣີ ເຈົ້າຈົ່ງໃຫ້ມໍຣະດົກຂອງເຂົາແກ່ພີ່ນ້ອງຂອງເຂົາ

10 ແລະຖ້າເຂົາບໍ່ມີພີ່ນ້ອງ ເຈົ້າຈົ່ງໃຫ້ມໍຣະດົກຂອງເຂົາແກ່ພີ່ນ້ອງບິດາຂອງເຂົາ

11 ແລະຖ້າບິດາຂອງເຂົາບໍ່ມີພີ່ນ້ອງ ເຈົ້າຈົ່ງໃຫ້ມໍຣະດົກຂອງເຂົາແກ່ຍາດຖັດຕໍ່ຕົວເຂົາໄປໃນຕະກູນຂອງເຂົາ ໃຫ້ຜູ້ນັ້ນຖືກຳມະສິດໄດ້ ໃຫ້ເປັນກົດເກນ ແລະກົດຫມາຍແກ່ປະຊາຊົນອິສຣາເອນດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້"

### ໂຢຊວຍເປັນຜູ້ຮັບຫນ້າທີ່ແທນ ໂມເຊ

Joshua Appointed Moses' Successor

(ພບຍ 31:1-8)

12 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, "ຈົ່ງເດີນທາງໄປພູອາບາຣີມ ເພື່ອໄປເບິ່ງພື້ນແຜ່ນດິນທີ່ເຮົາຈະມອບໃຫ້ພວກອິສຣາເອນ

13 ເມື່ອເຈົ້າໄດ້ເຫັນແລ້ວ ເຈົ້າຈະຕາຍເຫມືອນດັ່ງອາໂຣນອ້າຍຂອງເຈົ້າ

14 ຍ້ອນວ່າແຕ່ກ່ອນເຈົ້າທັງສອງໄດ້ລະເມີດຄຳສັ່ງຂອງເຮົາຢູ່ໃນຖິ່ນກັນດານຊິນ ຄືໃນຄາວຊຸມນຸມຊົນທຸກຄົນຮ້ອງທຸກຕໍ່ສູ້ເຮົາທີ່ ເມຣີບັທກາເດສ ເຈົ້າໄດ້ປະຕິເສດບໍ່ຮັບຮູ້ອຳນາດອັນສັກສິດຂອງເຮົາຕໍ່ຫນ້າພວກເຂົາ" (ເມຣີບາດເປັນຊື່ບໍ່ນ້ຳທີ່ເມືອງກາເດສໃນຖິ່ນກັນດານຊິນ)

15 ແລ້ວໂມເຊກໍໄດ້ອ້ອນວອນພຣະຜູ້ເປັນເຈົ້າວ່າ, "ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງເປັນບໍ່ເກີດແຫ່ງຊີວິດຂອງທຸກຄົນ

16 ພຣະອົງຊົງເປັນຜູ້ແຕ່ງຕັ້ງ ຂ້າພຣະອົງອ້ອນວອນຂໍຕໍ່ພຣະອົງ ຂໍຊົງໂຜດແຕ່ງຕັ້ງໃຫ້ມີຜູ້ນຳປະຊົນຊົນເຫລົ່ານີ້

17 ແລະທັງເປັນຜູ້ບັງຄັບບັນຊາພວກເຂົາອອກສູ່ສນາມຮົບ ເພື່ອວ່າພວກຂອງພຣະອົງນີ້ຈະບໍ່ເປັນເຫມືອນແກະທີ່ຂາດຜູ້ລ້ຽງ"

18 ພຣະຜູ້ເປັນເຈົ້າຈຶ່ງກ່າວຕໍ່ໂມເຊວ່າ, "ຈົ່ງໄປເອົາໂຢຊວຍບຸດນູນ ຊຶ່ງເປັນຊາຍທີ່ມີຄວາມສາມາດ ແລະມີພຣະວິນຍານແລ້ວໃຫ້ວາງມືເທິງຫົວເຂົາ

19 ໃຫ້ເອົາເຂົາຢືນຢູ່ຕໍ່ຫນ້າເອເລອາຊາປະໂຣຫິດ ແລະຊຸມນຸມຊົນທັງຫມົດ ແລ້ວໃຫ້ເຈົ້າປະກາດແຕ່ງຕັ້ງໃຫ້ເຂົາເປັນຜູ້ສືບແທນເຈົ້າຕໍ່ຫນ້າຄົນເຫລົ່ານີ້

20 ເພື່ອວ່າ ໃຫ້ຊຸມນຸມຊົນອິສຣາເອນຟັງຄວາມເຂົາ ຂໍໃຫ້ເຈົ້າມອບສິດ ແລະອໍານາດບາງຢ່າງຂອງເຈົ້າໃຫ້ໂຢຊວຍ

21 ແລະເຂົາຈະຢືນຢູ່ຕໍ່ຫນ້າເອເລອາຊາປະໂຣຫິດ ຜູ້ຊຶ່ງຈະທູນຖາມເພື່ອເຂົາຕາມຫລັກຕັດສິນຂອງອູຣິມ ຕໍ່ພຣະຜູ້ເປັນເຈົ້າ ແລະຄົນທັງປວງຈະອອກໄປ ແລະເຂົ້າມາຕາມຄໍາຂອງປະໂຣຫິດທັງເຈົ້າກັບຄົນທັງປວງໃນອິສຣາເອນນັ້ນ ຄືຊຸມນຸມຊົນທັງຫມົດ"

22 ແລ້ວໂມເຊໄດ້ປະຕິບັດຕາມຄໍາສັ່ງຂອງພຣະຜູ້ເປັນເຈົ້າ ທ່ານໄດ້ໃຫ້ໂຢຊວຍຢືນຢູ່ຕໍ່ຫນ້າເອເລອາຊາປະໂຣຫິດ ແລະຊຸມນຸມຊົນທັງຫມົດ

23 ວາງມືເທິງຫົວຂອງໂຢຊວຍ ແລະປະກາດແຕ່ງຕັ້ງໃຫ້ເປັນຜູ້ສືບແທນຕົນ

## 28 ການຖວາຍບູຊາປະຈໍາວັນ

Daily Offerings

(ອພຍ 29:38-46)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 "ຈົ່ງສັ່ງຄົນອິສຣາເອນແລະກ່າວແກ່ເຂົາວ່າຂອງບູຊາຂອງເຮົາ ອາຫານຂອງເຮົາຊຶ່ງເປັນຂອງບູຊາດ້ວຍໄຟເປັນກິ່ນທີ່ພໍໃຈ ເຈົ້າທັງຫລາຍຈົ່ງເອົາໃຈໃສ່ທີ່ຈະຖວາຍບູຊາແກ່ເຮົາຕາມການກໍານົດ

3 ແລະເຈົ້າຈົ່ງກ່າວແກ່ເຂົາວ່າ ນີ້ເປັນເຄື່ອງບູຊາດ້ວຍໄຟ ຊຶ່ງເຈົ້າທັງຫລາຍຄວນຖວາຍແດ່ພຣະຜູ້ເປັນເຈົ້າ ຄືລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສອງໂຕ ເປັນເຄື່ອງບູຊາປະຈໍາທຸກວັນ

4 ເຈົ້າຈົ່ງຖວາຍລູກແກະເປັນເຄື່ອງບູຊາໃນຕອນເຊົ້າໂຕນຶ່ງ ແລະລູກແກະອີກໂຕນຶ່ງນັ້ນເຈົ້າຈົ່ງຖວາຍບູຊາໃນຕອນແລງ

5 ແລະຍອດແປ້ງນຶ່ງສ່ວນສິບເອຟາເປັນທັນຍາບູຊາ ປົນໃສ່ກັບນໍ້າມັນສະກັດນຶ່ງໃນສີ່ຮິນ

6 ເປັນເຄື່ອງເຜົາບູຊາ ຊຶ່ງໄດ້ບັນຊາຕັ້ງໄວ້ທີ່ພູເຂົາຊີນາອີເປັນກິ່ນທີ່ພໍພຣະທັຍ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

7 ສ່ວນເຄື່ອງດື່ມບູຊາຄູ່ກັນນັ້ນໃຫ້ຖວາຍນຶ່ງໃນສີ່ຮິນກັບແກະໂຕນຶ່ງໃນທີ່ບໍຣິສຸດເຈົ້າຈົ່ງຖອກເຄື່ອງດື່ມບູຊາຊຶ່ງເປັນເຫລົ້າຖວາຍແດ່ພຣະຜູ້ເປັນເຈົ້າ

8 ລູກແກະອີກໂຕນຶ່ງເຈົ້າຈົ່ງຖວາຍບູຊາໃນຕອນແລງ ເຈົ້າຈົ່ງຖວາຍບູຊາດ້ວຍໄຟເຊັ່ນດຽວກັບທັນຍາບູຊາຂອງເວລາຕອນເຊົ້າ ແລະເຊັ່ນດຽວກັບເຄື່ອງດື່ມບູຊາທີ່ຄູ່ກັນເປັນກິ່ນທີ່ພໍພຣະທັຍພຣະເຈົ້າ

### ການຖວາຍບູຊາໃນວັນສະບາໂຕ

Sabbath Offerings

9 "ໃນວັນສະບາໂຕລູກແກະອາຍຸນຶ່ງປີສອງໂຕທີ່ບໍ່ມີຕໍາຫນິ ແລະຍອດແປ້ງສອງໃນສິບເອຟາປົນໃສ່ກັບນໍ້າມັນໃຫ້ເປັນທັນຍາບູຊາ ແລະເຄື່ອງດື່ມບູຊາຄູ່ກັນ

10 ນີ້ເປັນເຄື່ອງເຜົາບູຊາທຸກວັນສະບາໂຕນອກເຫນືອເຄື່ອງເຜົາບູຊາ ແລະເຄື່ອງດື່ມບູຊາຄູ່ກັນ

### ການຖວາຍບູຊາປະຈໍາເດືອນ

Monthly Offerings

11 “ເວລາຕົ້ນເດືອນທຸກເດືອນ ເຈົ້າທັງຫລາຍຈົ່ງຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ຄືງົວເຖິກສອງໂຕ ແກະ
ເຖິກໂຕນຶ່ງ ລູກແກະເຖິກນຶ່ງປີບໍ່ມີຕຳໜິເຈັດໂຕ
12 ສຳລັບງົວໂຕນຶ່ງຈົ່ງເອົາຍອດແປ້ງສາມໃນສິບເອຟາປົນໃສ່ນ້ຳມັນ ສຳລັບເປັນທັນຍາບູຊາ ແລະສຳລັບແກະ
ເຖິກໂຕນຶ່ງນັ້ນຈົ່ງເອົາຍອດແປ້ງສອງໃນສິບປົນໃສ່ນ້ຳມັນເປັນທັນຍາບູຊາ
13 ສຳລັບລູກແກະທຸກໂຕຈົ່ງເອົາຍອດແປ້ງນຶ່ງໃນສິບປົນໃສ່ນ້ຳມັນເປັນທັນຍາບູຊາ ໃຫ້ເປັນເຄື່ອງເຜົາບູຊາເປັນ
ກິ່ນທີ່ພໍພຣະທັຍ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ
14 ສ່ວນເຄື່ອງດື່ມບູຊາຄູ່ກັນນັ້ນ ສຳລັບງົວໂຕເຖິກໂຕນຶ່ງຈົ່ງເອົາເຫລົ້າອະງຸ່ນເຄິ່ງຮິນ ສຳລັບແກະເຖິກໂຕນຶ່ງຈົ່ງ
ເອົານຶ່ງໃນສາມຮິນ ສຳລັບລູກແກະໂຕນຶ່ງຈົ່ງເອົານຶ່ງໃນສີ່ຮິນ ນີ້ເປັນເຄື່ອງເຜົາບູຊາປະຈຳເດືອນ ທຸກເດືອນຕ
ລອດປີ
15 ແລະເອົາແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບຖວາຍແດ່ພຣະຜູ້ເປັນເຈົ້າໃຫ້ນຳມາບູຊານອກເຫນືອເຄື່ອງເຜົາ
ບູຊາໄຖ່ ແລະເຄື່ອງດື່ມບູຊາຄູ່ກັນ

**ການຖວາຍບູຊາໃນເທສການລັ້ງ**

Offerings at Passover

(ລລວ 23:5-14)

16 ໃນວັນທີສິບສີ່ຂອງເດືອນທີນຶ່ງເປັນປັສຄາຂອງພຣະຜູ້ເປັນເຈົ້າ
17 ແລະວັນທີສິບຫ້າຂອງເດືອນນີ້ເປັນວັນການລັ້ງ ຈົ່ງຮັບປະທານເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງເຈັດວັນ
18 ໃນວັນຕົ້ນໃຫ້ມີການປະຊຸມບໍຣິສຸດ ເຈົ້າທັງຫລາຍຢ່າກະທຳງານຫນັກໃນວັນນັ້ນ
19 ແຕ່ຈົ່ງຖວາຍບູຊາດ້ວຍໄຟ ເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ຄືເອົາງົວຫນຸ່ມສອງໂຕ ແກະເຖິກໂຕນຶ່ງ
ແລະລູກແກະເຖິກອາຍຸນຶ່ງປີເຈັດໂຕ ເບິ່ງໃຫ້ດີວ່າບໍ່ມີຕຳໜິ
20 ແລະເອົາຍອດແປ້ງປົນໃສ່ນ້ຳມັນເປັນທັນຍາບູຊາຂອງສັດເຫລົ່ານີ້ ສຳລັບງົວເຖິກໂຕນຶ່ງເຈົ້າຈົ່ງຖວາຍສາມໃນ
ສິບເອຟາ ແລະສຳລັບແກະເຖິກໂຕນຶ່ງສອງໃນສິບ
21 ສຳລັບລູກແກະໂຕນຶ່ງໃນຈຳນວນເຈັດໂຕນັ້ນ ຈົ່ງເອົາແປ້ງນຶ່ງໃນສິບ
22 ແລະເອົາແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ເພື່ອທຳການລົບມົນທິນບາບຂອງເຈົ້າ
23 ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ ນອກເຫນືອເຄື່ອງເຜົາບູຊາໃນຕອນເຊົ້າ ຊຶ່ງເປັນເຄື່ອງບູຊາ
24 ໃນທຳນອງດຽວກັນ ເຈົ້າຈົ່ງຖວາຍເຄື່ອງບູຊາທຸກວັນຕລອດທັງເຈັດວັນ ຄືຖວາຍອາຫານເປັນເຄື່ອງບູຊາດ້ວຍ
ໄຟ ເປັນກິ່ນທີ່ພໍພຣະທັຍຂອງພຣະຜູ້ເປັນເຈົ້າ ຈົ່ງຖວາຍບູຊານອກເຫນືອເຄື່ອງເຜົາບູຊາ ແລະເຄື່ອງດື່ມບູຊາຄູ່
ກັນ
25 ແລະໃນວັນທີເຈັດພວກເຈົ້າຈົ່ງມີການປະຊຸມບໍຣິສຸດ ເຈົ້າຢ່າທຳງານຫນັກໃນວັນນັ້ນ

Offerings at the Festival of Weeks

(ລລວ 23:15-22)

26 “ໃນວັນຖວາຍຜົນຣຸ່ນແຣກ ເມື່ອເຈົ້າເອົາເຂົ້າໃຫມ່ມາເປັນທັນຍາບູຊາຖວາຍແດ່ພຣະຜູ້ເປັນເຈົ້າໃນເທສການ
ປັສຄານັ້ນ ເຈົ້າຈົ່ງມີການປະຊຸມບໍຣິສຸດ ເຈົ້າຢ່າທຳງານຫນັກໃນວັນນັ້ນ
27 ແຕ່ຈົ່ງຖວາຍເຄື່ອງເຜົາບູຊາ ໃຫ້ເປັນກິ່ນພໍພຣະທັຍແດ່ພຣະຜູ້ເປັນເຈົ້າ ຄືຖວາຍງົວຫນຸ່ມສອງໂຕ ແກະເຖິກ
ໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີເຈັດໂຕ
28 ແລະຖວາຍຍອດແປ້ງປົນໃສ່ນ້ຳມັນເປັນທັນຍາບູຊາ ຄືສຳລັບງົວໂຕນຶ່ງຖວາຍແປ້ງສາມໃນສິບເອຟາ ສຳລັບ
ແກະເຖິກໂຕນຶ່ງນັ້ນສອງໃນສິບ
29 ສຳລັບລູກແກະເຈັດໂຕ ໂຕລະນຶ່ງໃນສິບ

30 ພ້ອມກັບແບ້ເຖິກໂຕນຶ່ງສຳລັບລຶບມົນທິນຂອງເຈົ້າ
31 ນອກຈາກເຄື່ອງເຜົາບູຊາ ແລະທັນຍາບູຊາຄູ່ກັນນັ້ນ ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ແລະເຄື່ອງດື່ມບູຊາຄູ່ກັນດ້ວຍ ເບິ່ງໃຫ້ດີວ່າໃຫ້ປາສຈາກຕຳໜິ

## 29

Offerings at the Festival of Trumpets

(ລລວ 23:23-25)

1 "ໃນວັນທີນຶ່ງເດືອນທີເຈັດເຈົ້າຈົ່ງມີການປະຊຸມບໍຣິສຸດ ເຈົ້າຢ່າທຳງານໜັກ ເປັນວັນໃຫ້ເຈົ້າທັງຫລາຍເປົ່າແກ
2 ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເປັນກິ່ນຫອມພໍພຣະທັຍພຣະຜູ້ເປັນເຈົ້າ ຄືຖວາຍງົວເຖິກໂຕນຶ່ງ ແກະຜູ້ໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີບໍ່ມີຕຳໜິເຈັດໂຕ
3 ແລະຖວາຍຍອດແປ້ງປົນໃສ່ນ້ຳມັນເປັນທັນຍາບູຊາຄືສຳລັບງົວເຖິກນັ້ນ ຈົ່ງຖວາຍແປ້ງສາມໃນສິບເອຟາ ສຳລັບແກະເຖິກໂຕນັ້ນສອງໃນສິບ
4 ລູກແກະເຈັດໂຕ ໂຕລະນຶ່ງໃນສິບ
5 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ເພື່ອລຶບມົນທິນບາບຂອງເຈົ້າ
6 ໃຫ້ຖວາຍສິ່ງເຫລົ່ານີ້ຕື່ມໃສ່ເຄື່ອງເຜົາບູຊາໃນມື້ຂ້າງຂຶ້ນ(New moon) ແລະທັນຍາບູຊາຄູ່ກັນ ແລະເຄື່ອງເຜົາບູຊາຄູ່ກັບທັນຍາບູຊາ ແລະເຄື່ອງດື່ມບູຊາຄູ່ກັນ ຕາມກົດໝາຍເຄື່ອງບູຊາເຫລົ່ານີ້ ເປັນກິ່ນທີ່ພໍພຣະທັຍເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

Offerings on the Day of Atonement

(ລລວ 23:26-32)

7 "ໃນວັນທີສິບເດືອນທີເຈັດນີ້ ເຈົ້າທັງຫລາຍຈົ່ງມີການປະຊຸມບໍຣິສຸດ ເຈົ້າຈົ່ງບັງຄັບຈິດໃຈຂອງເຈົ້າ ຢ່າທຳການງານສິ່ງໃດ
8 ແຕ່ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ໃຫ້ເປັນກິ່ນທີ່ພໍພຣະທັຍ ຄືຖວາຍງົວໜຸ່ມໂຕນຶ່ງ ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີເຈັດໂຕ ເຈົ້າຢ່າໃຫ້ມີຕຳໜິ
9 ແລະຍອດແປ້ງປົນໃສ່ນ້ຳມັນເປັນທັນຍາບູຊາ ສຳລັບງົວໂຕນັ້ນຖວາຍແປ້ງສາມໃນສິບເອຟາ ສຳລັບແກະເຖິກໂຕນຶ່ງນັ້ນສອງໃນສິບ
10 ສຳລັບລູກແກະເຈັດໂຕນັ້ນ ໂຕລະນຶ່ງໃນສິບ
11 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອເຄື່ອງບູຊາໄຖ່ບາບລຶບມົນທິນ ແລະເຄື່ອງເຜົາບູຊາຊຶ່ງຄູ່ກັບທັນຍາບູຊາ ແລະເຄື່ອງດື່ມບູຊາຄູ່ກັນ

Offerings at the Festival of Booths

(ລລວ 23:33-44)

12 "ໃນວັນທີສິບຫ້າເດືອນທີເຈັດ ເຈົ້າທັງຫລາຍຈົ່ງມີການປະຊຸມບໍຣິສຸດ ເຈົ້າຢ່າທຳງານໜັກ ແລະເຈົ້າຈົ່ງມີການລ້ຽງເຈັດວັນແດ່ພຣະຜູ້ເປັນເຈົ້າ
13 ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍພຣະຜູ້ເປັນເຈົ້າ ຄືງົວໜຸ່ມສິບສາມໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີສິບສີ່ໂຕ ສັດເຫລົ່ານີ້ຢ່າໃຫ້ມີຕຳໜິ
14 ແລະຖວາຍຍອດແປ້ງປົນໃສ່ນ້ຳມັນເປັນທັນຍາບູຊາຄູ່ກັນ ສຳລັບງົວສິບສາມໂຕ ໂຕນຶ່ງຖວາຍແປ້ງສາມໃນສິບເອຟາ ສຳລັບແກະເຖິກສອງໂຕ ໂຕລະສອງໃນສິບ
15 ສຳລັບລູກແກະສິບສີ່ໂຕ ໂຕລະນຶ່ງໃນສິບ

16 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາ ແລະ
ເຄື່ອງດື່ມບູຊາຄູ່ກັນ
17 "ໃນວັນທີສອງຈົ່ງຖວາຍງົວຫນຸ່ມສິບສອງໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
18 ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນສໍາລັບງົວ ແກະເຖິກ ແລະລູກແກະນັ້ນຕາມຈໍານວນຕາມກົດ
ຫມາຍ
19 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
20 "ໃນວັນທີສາມຈົ່ງຖວາຍງົວສິບເອັດໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
21 ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະນັ້ນ ຕາມຈໍານວນຕາມກົດ
ຫມາຍ
22 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
23 "ໃນວັນທີສີ່ຈົ່ງຖວາຍງົວສິບໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
24 ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະນັ້ນ ຕາມຈໍານວນ ຕາມກົດ
ຫມາຍ
25 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
26 "ໃນວັນທີຫ້າຈົ່ງຖວາຍງົວເກົ້າໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
27 ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະນັ້ນ ຕາມຈໍານວນຕາມກົດ
ຫມາຍ
28 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
29 "ໃນວັນທີຫົກຈົ່ງຖວາຍງົວແປດໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
30 ກັບທັນຍາບູຊາ ແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະນັ້ນ ຕາມຈໍານວນຕາມກົດ
ຫມາຍ
31 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
32 "ໃນວັນທີເຈັດເຈົ້າຈົ່ງຖວາຍງົວເຈັດໂຕ ແກະເຖິກສອງໂຕ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິສິບສີ່ໂຕ
33 ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະນັ້ນ ຕາມຈໍານວນຕາມກົດ
ຫມາຍ
34 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງ
ດື່ມບູຊາຄູ່ກັນ
35 "ໃນວັນທີແປດເຈົ້າຈົ່ງມີການປະຊຸມຕາມພິທີ ເຈົ້າຢ່າທໍາງານຫນັກ
36 ແຕ່ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍພຣະຜູ້ເປັນເຈົ້າ ຄືງົວເຖິກໂຕນຶ່ງ
ແກະເຖິກໂຕນຶ່ງ ລູກແກະເຖິກອາຍຸນຶ່ງປີບໍ່ມີຕໍາຫນິເຈັດໂຕ
37 ແລະຖວາຍທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນນັ້ນ ສໍາລັບງົວ ແກະເຖິກ ແລະລູກແກະເຖິກນັ້ນ ຕາມຈໍາ
ນວນຕາມກົດຫມາຍ

38 ແລະຖວາຍແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເຫນືອເຄື່ອງເຜົາບູຊາ ຊຶ່ງຄູ່ກັບທັນຍາບູຊາແລະເຄື່ອງດື່ມບູຊາຄູ່ກັນ

39 "ສິ່ງເຫລົ່ານີ້ເຈົ້າທັງຫລາຍຈົ່ງຖວາຍແດ່ພຣະຜູ້ເປັນເຈົ້າຕາມເທສການຂອງເຈົ້າ ເພີ້ມເຂົ້າກັບການຖວາຍແກ້ບົນຂອງເຈົ້າ ແລະການຖວາຍດ້ວຍໃຈສມັກຂອງເຈົ້າ ເປັນເຄື່ອງເຜົາບູຊາຂອງເຈົ້າ ເຄື່ອງທັນຍາບູຊາຂອງເຈົ້າເຄື່ອງດື່ມບູຊາຂອງເຈົ້າ ແລະເຄື່ອງສານຕິບູຊາຂອງເຈົ້າ"

40 ແລະໂມເຊໄດ້ບອກຄົນອິສຣາເອນຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງບັນຊາທ່ານໄວ້ທຸກປະການ

## 30 ກົດຫມາຍເຣື່ອງການສາບານຂອງສະຕຣີ

Vows Made by Women

1 ໂມເຊໄດ້ເວົ້າກັບຫົວຫນ້າເຜົ່າຄົນອິສຣາເອນວ່າ, "ນີ້ເປັນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງ

2 ເມື່ອຜູ້ໃດສາບານໄວ້ກັບພຣະຜູ້ເປັນເຈົ້າ ຫລືໃຫ້ສັຕສາບານຜູກມັດຕົວໄວ້ດ້ວຍຄໍາສັນຍາຢ່າງນຶ່ງຢ່າງໃດ ຢ່າໃຫ້ເຂົາເສັຽວາຈາ ເຂົາຕ້ອງກະທໍາຕາມຄໍາທີ່ອອກຈາກປາກຂອງເຂົາທັງສິ້ນ

3 ຫລືເມື່ອສະຕຣີຄົນນຶ່ງຄົນໃດບົນໄວ້ແດ່ພຣະຜູ້ເປັນເຈົ້າ ແລະຜູກມັດຕົນເອງໄວ້ດ້ວຍຄໍາສັນຍາ ເມື່ອນາງຍັງສາວຢູ່ໃນເຮືອນບິດາ

4 ແລະບິດາຂອງນາງໄດ້ຍິນຄໍາທີ່ນາງບົນໄວ້ ແລະຄໍາສັນຍາທີ່ນາງຜູກມັດຕົນເອງ ແຕ່ບໍ່ໄດ້ເວົ້າສິ່ງໃດກັບນາງ ກໍໃຫ້ຄໍາທີ່ບົນໄວ້ນັ້ນຄົງຢູ່ ແລະໃຫ້ຄໍາສັນຍາທີ່ຜູກມັດໄວ້ນັ້ນຄົງຢູ່

5 ແຕ່ຖ້າບິດາຂອງນາງຄັດຄ້ານໃນວັນທີ່ເຂົາໄດ້ຍິນນັ້ນ ການທີ່ນາງບົນໄວ້ກໍດີ ຄໍາສັນຍາທີ່ຜູກມັດນາງໄວ້ກໍດີຍ່ອມບໍ່ຄົງຢູ່ ແລະພຣະຜູ້ເປັນເຈົ້າຈະອະພັຍໃຫ້ແກ່ນາງ ເພາະບິດາຂອງນາງໄດ້ຄັດຄ້ານນາງໄວ້

6 ແລະຖ້ານາງແຕ່ງງານມີຜົວແລ້ວ ສິ່ງທີ່ນາງບົນໄວ້ ຫລືຄໍາເວົ້າທີ່ບໍ່ທັນຄິດຊຶ່ງຜູກມັດນາງ

7 ຝ່າຍຜົວກໍໄດ້ຍິນແລ້ວ ແລະໃນມື້ທີ່ໄດ້ຍິນເຂົາກໍບໍ່ໄດ້ເວົ້າສິ່ງໃດກັບນາງ ສິ່ງທີ່ນາງບົນໄວ້ນັ້ນຍ່ອມຄົງຢູ່ ແລະຄໍາສັນຍາທີ່ຜູກມັດຕົວນາງກໍຄົງຢູ່ດ້ວຍ

8 ແຕ່ຖ້າໃນມື້ນັ້ນຜົວມາໄດ້ຍິນເຂົ້າ ແລະເຂົາຄັດຄ້ານ ກໍທໍາໃຫ້ຄໍາທີ່ນາງບົນໄວ້ນັ້ນເປັນໂມຄະ ທັງຄໍາເວົ້າທີ່ບໍ່ທັນຄິດຂອງນາງຊຶ່ງຜູກມັດນາງນັ້ນກໍເປັນໂມຄະດ້ວຍ ແລະພຣະຜູ້ເປັນເຈົ້າຈະຊົງອະພັຍໃຫ້ແກ່ນາງ

9 ແຕ່ຄໍາບົນບານທີ່ແມ່ຫມ້າຍຫລືແມ່ຮ້າງກະທໍາໄວ້ຫລືຄໍາໃດທີ່ນາງເວົ້າຜູກມັດຕົນເອງ ຄໍາເວົ້ານັ້ນຍ່ອມຄົງຢູ່

10 ແລະຖ້ານາງບົນໄວ້ໃນບ້ານຜົວຂອງນາງ ຫລືໃຫ້ສັນຍາດ້ວຍສັດສາບານຜູກມັດຕົນເອງໄວ້

11 ແລະຜົວຂອງນາງໄດ້ຍິນແລ້ວ ແຕ່ບໍ່ວ່າສິ່ງໃດແກ່ນາງ ແລະບໍ່ຄັດຄ້ານນາງ ຄໍາບົນບານຂອງນາງທັງສິ້ນຍ່ອມຄົງຢູ່ ແລະຄໍາສັນຍາທຸກຢ່າງຊຶ່ງນາງຜູກມັດຕົນເອງຍ່ອມຄົງຢູ່

12 ແຕ່ຖ້າຜົວຂອງນາງໄດ້ກະທໍາໃຫ້ບໍ່ຄົງຢູ່ຫລືເປັນໂມຄະໃນມື້ທີ່ເຂົາໄດ້ຍິນແລ້ວ ສິ່ງໃດທີ່ອອກຈາກປາກຂອງນາງກ່ຽວດ້ວຍຄໍາບົນບານຫລືກ່ຽວດ້ວຍຄໍາສັນຍາຂອງນາງຍ່ອມບໍ່ຄົງຢູ່ ຜົວຂອງນາງໄດ້ກະທໍາໃຫ້ເປັນໂມຄະແລະພຣະຜູ້ເປັນເຈົ້າຈະຊົງອະພັຍໃຫ້ແກ່ນາງ

13 ຄໍາບົນບານຫລືຄໍາສັດສາບານທີ່ຈະບັງຄັບຈິດໃຈນາງເອງ ຜົວຂອງນາງຍ່ອມໃຫ້ຄົງຢູ່ຫລືໃຫ້ເປັນໂມຄະໄດ້

14 ແຕ່ຖ້າຜົວຂອງນາງບໍ່ກ່າວສິ່ງໃດແກ່ນາງມື້ແລ້ວມື້ເລົ່າ ເຂົາຍ່ອມກະທໍາໃຫ້ຄໍາບົນບານແລະຄໍາສັນຍາທັງສິ້ນຂອງນາງຊຶ່ງຈະຕົກແກ່ນາງໃຫ້ຄົງຢູ່ ເພາະເຂົາບໍ່ເວົ້າສິ່ງໃດໃນມື້ທີ່ເຂົາໄດ້ຍິນ ເຂົາຈຶ່ງກະທໍາໃຫ້ຄົງຢູ່

15 ແຕ່ຖ້າພາຍຫລັງທີ່ເຂົາໄດ້ຍິນແລ້ວມາກະທໍາໃຫ້ບໍ່ຄົງຢູ່ຫລືເປັນໂມຄະ ເຂົາຍ່ອມຕ້ອງຮັບຄວາມຜິດຂອງນາງ"

16 ຂໍ້ຄວາມເຫລົ່ານີ້ເປັນກົດເກນຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້ ເປັນເຣື່ອງລະຫວ່າງຊາຍກັບເມັຽຂອງເຂົາເຣື່ອງລະຫວ່າງບິດາກັບບຸດຕຣີ ຂນະເມື່ອນາງຍັງສາວຢູ່ ຍັງຢູ່ໃນເຮືອນບິດາຂອງນາງ

## 31 ອິສຣາເອນແກ້ແຄ້ນຄົນມີດີອານ

War against Midian

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຈົ່ງແກ້ແຄ້ນຄົນມີດີອານເພື່ອຄົນອິສຣາເອນ ແລ້ວພາຍຫລັງເຈົ້າຈະຖືກຮວບໃຫ້ໄປຢູ່ກັບປະຊາຊົນຂອງເຈົ້າ
3 ແລະໂມເຊກ່າວກັບປະຊາຊົນວ່າ “ຈົ່ງຕຽມຄົນບາງຄົນໃນພວກເຈົ້າໃຫ້ພ້ອມດ້ວຍອາວຸດເພື່ອທຳສົງຄາມ ແລ້ວ
ຍົກໄປສູ້ພວກມີດີອານ ເພື່ອກະທຳການແກ້ແຄ້ນຂອງພຣະຜູ້ເປັນເຈົ້າຕໍ່ຄົນມີດີອານ
4 ເຈົ້າຈົ່ງສົ່ງຄົນຈາກເຜົ່າອິສຣາເອນເຜົ່າລະພັນຄົນເຂົ້າທຳສົງຄາມ”
5 ດັ່ງນັ້ນເຂົາຈຶ່ງຈັດຄົນຈາກອິສຣາເອນທີ່ນັບພັນໆນັ້ນເຜົ່າລະພັນຄົນ ເປັນຄົນຫມື່ນສອງພັນພ້ອມດ້ວຍອາວຸດ
ເພື່ອເຂົ້າສົງຄາມ
6 ແລະໂມເຊສົ່ງຄົນເຜົ່າລະພັນຄົນອອກໄປທຳສົງຄາມ ທັງຄົນເຫລົ່ານັ້ນກັບຟີເນຮັສບຸດເອເລອາຊາປະໂຣຫິດ
ພ້ອມກັບເຄື່ອງໃຊ້ຂອງສະຖານນະມັສການ ແລະມີແກປຸກຢູ່ໃນມື
7 ເຂົາທຳສົງຄາມຕໍ່ສູ້ຄົນມີດີອານ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊແລະໄດ້ຂ້າຜູ້ຊາຍເສັຽທຸກຄົນ
8 ເຂົາໄດ້ປະຫານຊີວິດບັນດາກະສັດຄົນມີດີອານພ້ອມກັບຄົນອື່ນທີ່ເຂົາຂ້າເສັຽ ມີເອວີ ເຣເຄມ ຊູຣ໌ ຮູຣ໌ ແລະເຣ
ບາກະສັດທັງຫ້າແຫ່ງຄົນມີດີອານ ແລະໄດ້ປະຫານຊີວິດບາລາອາມບຸດເບໂອເສັຽດ້ວຍດາບ
9 ແລະຄົນອິສຣາເອນໄດ້ຈັບສຕຣີຊາວມີດີອານມາເປັນຊະເລີຍ ພ້ອມກັບພວກເດັກນ້ອຍທັງຫລາຍ ແລະ
ຍຶດເອົາຝູງງົວ ຝູງແບ້ ແກະຕລອດຊັບສົມບັດຂອງພວກເຂົາ ເປັນຊັບທີ່ປຸ້ນໄດ້
10 ແລະເອົາໄຟເຜົາເມືອງທີ່ອາສັຍຂອງເຂົາ ແລະເຜົາຄ້າຍທັງສິ້ນຂອງເຂົາເສັຽດ້ວຍ
11 ແລ້ວເກັບບັນດາຂອງທີ່ຍຶດໄດ້ແລະຊັບທີ່ປຸ້ນໄດ້ທັງຄົນແລະສັດໄປເສັຽສິ້ນ
12 ແລ້ວເຂົານຳຊະເລີຍ ແລະຊັບສິນທີ່ປຸ້ນໄດ້ກັບຂອງທີ່ຍຶດໄດ້ທັງຫມົດມາຫາໂມເຊ ແລະເອເລອາຊາປະໂຣຫິດ
ແລະຊຸມນຸມຊົນອິສຣາເອນທີ່ຄ້າຍໃນທົ່ງໂມອາບຮິມແມ່ນ້ຳຈໍແດນທີ່ເມືອງເຢຣິໂກ

### ຍົກທັບກັບຄືນມາ

Return from the War

13 ໂມເຊແລະເອເລອາຊາປະໂຣຫິດແລະບັນດາຫົວຫນ້າແຫ່ງຄົນອິສຣາເອນອອກໄປຕ້ອນຮັບເຂົານອກຄ້າຍ
14 ແລະໂມເຊໄດ້ຮ້າຍພວກນາຍທະຫານ ຄືນາຍພັນແລະນາຍຮ້ອຍຜູ້ກັບຈາກການທຳສົງຄາມ
15 ໂມເຊເວົ້າກັບເຂົາທັງຫລາຍວ່າ, “ທ່ານທັງຫລາຍໄດ້ໄວ້ຊີວິດພວກຜູ້ຍິງທັງຫມົດຫລື
16 ເບິ່ງແມ, ໂດຍຄຳປຶກສາຂອງບາລາອາມ ຍິງເຫລົ່ານີ້ໄດ້ກະທຳໃຫ້ຄົນອິສຣາເອນຫລົງກະທຳຜິດຕໍ່ພຣະຜູ້ເປັນ
ເຈົ້າໃນເຣື່ອງເປໂອຣ໌ ແລະພັຍວິບັດຈຶ່ງໄດ້ເກີດຂຶ້ນຖ້າມກາງຊຸມນຸມຊົນຂອງພຣະຜູ້ເປັນເຈົ້າ
17 ເພາະສະນັ້ນຈົ່ງປະຫານຊີວິດເດັກນ້ອຍຜູ້ຊາຍເສັຽທຸກຄົນ ແລະປະຫານຊີວິດຜູ້ຍິງຊຶ່ງໄດ້ຮ່ວມກັບຜູ້ຊາຍເສັຽ
ທຸກຄົນ
18 ແຕ່ຈົ່ງໄວ້ຊີວິດເດັກຜູ້ຍິງທີ່ຍັງບໍ່ໄດ້ຮ່ວມກັບຜູ້ຊາຍໄວ້ສຳລັບທ່ານທັງຫລາຍເອງ
19 ຈົ່ງຢູ່ພາຍນອກຄ້າຍເຈັດວັນ ທ່ານຜູ້ໃດທີ່ໄດ້ຂ້າຄົນ ແລະທ່ານຜູ້ໃດທີ່ໄດ້ແຕະຕ້ອງຜູ້ທີ່ຖືກຂ້າ ຈົ່ງຊຳຣະຕົວ
ແລະຊະເລີຍຂອງຕົວໃນວັນທີສາມແລະວັນທີເຈັດ
20 ທ່ານຕ້ອງຊຳຣະເຄື່ອງແຕ່ງກາຍທຸກໆໂຕ ເຄື່ອງຫນັງສັດທຸກໂຕ ແລະເຄື່ອງຂົນແບ້ທັງຫມົດແລະເຄື່ອງທຸກ
ສິ່ງທີ່ທຳດ້ວຍໄມ້
21 ແລະເອເລອາຊາປະໂຣຫິດໄດ້ກ່າວແກ່ທະຫານຜູ້ອອກໄປທຳສົງຄາມວ່າ, “ນີ້ເປັນກົດພຣະທັມຊຶ່ງພຣະຜູ້ເປັນ
ເຈົ້າໄດ້ບັນຊາໂມເຊ
22 ສຳລັບທອງຄຳ ເງິນ ທອງສຳຣິດ ເຫລັກ ຊືນ ແລະຂີ້ກົ່ວ

23 ທຸກສິ່ງທີ່ທົນຕໍ່ໄຟໄດ້ ເຈົ້າທັງຫລາຍຈົ່ງລອກເສັ້ງດ້ວຍໄຟ ແລ້ວຈະສະອາດ ຢ່າງໃດກໍດີຕ້ອງເອົານໍ້າລ້າງມົນທິນຊໍາຮະດ້ວຍ ແລະສິ່ງໃດທີ່ທົນໄຟບໍ່ໄດ້ທ່ານຕ້ອງໃຫ້ຜ່ານນໍ້າ
24 ທ່ານຕ້ອງຊັກເສື້ອຜ້າຂອງທ່ານໃນວັນທີເຈັດ ແລະທ່ານຈະສະອາດ ພາຍຫລັງທ່ານຈຶ່ງຈະເຂົ້າມາໃນຄ້າຍໄດ້"

**ການແບ່ງຊັບທີ່ຍຶດມາໄດ້**

Disposition of Captives and Booty

25 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
26 "ເຈົ້າແລະເອເລອາຊາປະໂຣຫິດ ກັບຫົວຫນ້າບັນດາຕະກູນຂອງຊຸມນຸມຊົນ ຈົ່ງນັບສິ່ງຂອງທີ່ໄດ້ມາທັງຄົນແລະສັດ
27 ແລະແບ່ງສິ່ງຂອງເຫລົ່ານັ້ນອອກເປັນສອງສ່ວນໃຫ້ທະຫານຜູ້ອອກໄປທໍາສົງຄາມສ່ວນນຶ່ງ ແລະໃຫ້ຊຸມນຸມຊົນນີ້ອີກສ່ວນນຶ່ງ
28 ແລະຈົ່ງຫັກສ່ວນນຶ່ງຈາກທະຫານທີ່ອອກໄປທໍາສົງຄາມເປັນຂອງຖວາຍແດ່ພຣະຜູ້ເປັນເຈົ້າ ຫ້າຮ້ອຍຊັກນຶ່ງທັງຄົນແລະງົວ ແລະລໍ ແລະຝູງແບ້ແກະ
29 ຈົ່ງເອົາຈາກເຄິ່ງສ່ວນຂອງເຂົາ ມອບໃຫ້ແກ່ເອເລອາຊາປະໂຣຫິດເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ
30 ແລະຈາກສ່ວນຂອງຄົນອິສຣາເອນນັ້ນ ເຈົ້າຈົ່ງນໍາຫ້າສິບຊັກນຶ່ງຈາກຄົນ ຝູງງົວ ຝູງລໍ ແລະຝູງແບ້ແກະ ແລະສັດທັງຫມົດ ມອບໃຫ້ແກ່ຄົນເລວີຜູ້ດູແລທໍາເຕັນສັກສິດຂອງພຣະຜູ້ເປັນເຈົ້າ"
31 ແລະໂມເຊກັບເອເລອາຊາປະໂຣຫິດໄດ້ກະທໍາຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ
32 ບັນດາຊັບທີ່ປຸ້ນໄດ້ອັນເຫລືອຈາກສິ່ງທີ່ທະຫານຍຶກມາໄດ້ນັ້ນຄື ແກະຫົກແສນເຈັດຫມື່ນຫ້າພັນໂຕ
33 ງົວເຈັດຫມື່ນສອງພັນໂຕ
34 ລໍຫົກຫມື່ນນຶ່ງພັນໂຕ
35 ແລະຄົນ ຄືຜູ້ຍິງທີ່ຍັງບໍ່ເຄີຍນອນຮ່ວມກັບຊາຍຮ່ວມກັນທັງຫມົດມີສາມຫມື່ນສອງພັນຄົນ
36 ແລະໃນສ່ວນໄດ້ຂອງຄົນທີ່ອອກໄປທໍາສົງຄາມ ມີແກະສາມແສນສາມຫມື່ນເຈັດພັນຫ້າຮ້ອຍໂຕ
37 ແລະສ່ວນແກະທີ່ເປັນຂອງພຣະຜູ້ເປັນເຈົ້າມີຫົກຮ້ອຍເຈັດສິບຫ້າໂຕ
38 ມີງົວສາມຫມື່ນຫົກພັນໂຕ ງົວອັນເປັນສ່ວນຂອງພຣະຜູ້ເປັນເຈົ້າເຈັດສິບສອງໂຕ
39 ມີລໍສາມຫມື່ນຫ້າຮ້ອຍໂຕ ຊຶ່ງເປັນສ່ວນຂອງພຣະຜູ້ເປັນເຈົ້າຫົກສິບເອັດໂຕ
40 ສ່ວນຄົນນັ້ນມີນຶ່ງຫມື່ນຫົກພັນ ຊຶ່ງເປັນສ່ວນຂອງພຣະຜູ້ເປັນເຈົ້າສາມສິບສອງຄົນ
41 ໂມເຊໄດ້ມອບສ່ວນທີ່ຊັກມາຊຶ່ງເປັນຂອງຖວາຍແດ່ພຣະຜູ້ເປັນເຈົ້ານັ້ນແກ່ເອເລອາຊາປະໂຣຫິດຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາໄວ້ກັບໂມເຊ
42 ຈາກເຄິ່ງສ່ວນຂອງຄົນອິສຣາເອນຊຶ່ງໂມເຊໄດ້ແບ່ງມາຈາກສ່ວນທີ່ທະຫານໄປທໍາສົງຄາມໄດ້ມານັ້ນ
43 (ເຄິ່ງສ່ວນຂອງຊຸມນຸມຊົນ ຄືແກະສາມແສນສາມຫມື່ນເຈັດພັນຫ້າຮ້ອຍໂຕ
44 ງົວສາມຫມື່ນຫົກພັນໂຕ
45 ລໍສາມຫມື່ນຫ້າຮ້ອຍໂຕ
46 ແລະຄົນນຶ່ງຫມື່ນຫົກພັນຄົນ)
47 ຈາກເຄິ່ງສ່ວນຂອງຄົນອິສຣາເອນນັ້ນໂມເຊໄດ້ເອົາສ່ວນຫ້າສິບຊັກນຶ່ງ ທັງຄົນແລະສັດມອບໃຫ້ແກ່ຄົນເລວີຜູ້ດູແລທໍາເຕັນຂອງພຣະຜູ້ເປັນເຈົ້າ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້
48 ແລ້ວນາຍທະຫານຜູ້ບັງຄັບກອງພັນທັງປວງ ຄືນາຍພັນ ນາຍຮ້ອຍໄດ້ເຂົ້າມາໃກ້ໂມເຊ
49 ແລະກ່າວແກ່ໂມເຊວ່າ, "ຄົນໃຊ້ຂອງທ່ານໄດ້ກວດນັບທະຫານຜູ້ຢູ່ໃຕ້ບັງຄັບບັນຊາຂອງຂ້າພະເຈົ້າທັງຫລາຍແລ້ວ ບໍ່ມີຄົນຫາຍໄປຈັກຄົນດຽວ

50 ແລະຂ້າພະເຈົ້າທັງຫລາຍໄດ້ນຳສ່ວນທີ່ຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງຕ່າງຄົນຕ່າງໄດ້ມາ ຄືສິ່ງທີ່ທຳດ້ວຍທອງຄຳ ມີປອກຂາແລະສ້ອຍຄໍ ແຫວນຕຣາ ຕຸ້ມຫູ ແລະປອກແຂນ ເພື່ອທຳການລົບມົນທິນບາບຂອງພວກເຮົາທັງຫລາຍຕໍ່ພຣະຜູ້ເປັນເຈົ້າ”

51 ໂມເຊແລະເອເລອາຊາປະໂຣຫິດ ກໍຮັບສິ່ງຂອງທີ່ທຳດ້ວຍທອງຄຳຈາກເຂົາ

52 ແລະທອງຄຳທັງສິ້ນຊຶ່ງເຂົາໄດ້ຖວາຍແດ່ພຣະຜູ້ເປັນເຈົ້າຈາກນາຍພັນແລະນາຍຮ້ອຍ ມີນ້ຳຫນັກນຶ່ງຫມື່ນຫົກພັນເຈັດຮ້ອຍຫ້າສິບເຊເກລ

53 (ທະຫານເຫລົ່ານັ້ນຕ່າງຄົນຕ່າງໄດ້ເກັບສິ່ງຂອງຂອງຂ້າສຶກມາ)

54 ໂມເຊແລະເອເລອາຊາປະໂຣຫິດໄດ້ຮັບທອງຄຳຈາກນາຍພັນນາຍຮ້ອຍ ນຳມາໃນເຕັນນັດພົບເປັນອະນຸສອນແກ່ຄົນອິສຣາເອນຕໍ່ພຣະຜູ້ເປັນເຈົ້າ

## 32 ເຜົ່າທາງທິດຕາເວັນອອກຂອງຈໍແດນ

Conquest and Division of Transjordan

(ພບຍ 3:12-22)

1 ເຜົ່າເຊື້ອສາຍຣູເບນ ແລະເຜົ່າເຊື້ອສາຍກາດມີຝູງງົວເປັນອັນມາກ ເຂົາໄດ້ເຫັນແຜ່ນດິນຢາເຊີ ແລະແຜ່ນດິນກີເລອາດ ເບິ່ງແມ, ທີ່ນັ້ນເປັນທີ່ເຫມາະແກ່ຝູງສັດ

2 ດັ່ງນັ້ນເຜົ່າເຊື້ອສາຍຂອງກາດແລະເຜົ່າເຊື້ອສາຍຂອງຣູເບນຈຶ່ງມາຫາໂມເຊ ແລະເອເລອາຊາປະໂຣຫິດ ແລະຫົວຫນ້າຂອງຊຸມນຸມຊົນກ່າວວ່າ,

3 “ອາທາໂຣດ ດີໂບນ ຢາເຊີ ນິມຣາ ເຮັສໂບນ ເອເລອາເລ ເຊບັມ ເນໂບ ແລະເບໂອນ

4 ເປັນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າຊົງທຳລາຍຕໍ່ຫນ້າຄົນອິສຣາເອນ ເປັນແຜ່ນດິນເຫມາະກັບຝູງສັດ ແລະຂ້າພະເຈົ້າທັງຫລາຍຄົນໃຊ້ຂອງທ່ານມີຝູງງົວ”

5 ແລະເຂົາທັງຫລາຍກ່າວວ່າ, “ຖ້າຂ້າພະເຈົ້າທັງຫລາຍເປັນທີ່ຊອບຕໍ່ທ່ານ ຂໍມອບແຜ່ນດິນນີ້ເປັນກຳມະສິດແກ່ຄົນໃຊ້ຂອງທ່ານ ຂໍຢ່າພາຂ້າພະເຈົ້າທັງຫລາຍຂ້າມແມ່ນ້ຳຈໍແດນໄປເລີຍ”

6 ແຕ່ໂມເຊເວົ້າກັບເຜົ່າເຊື້ອສາຍຂອງກາດແລະເຜົ່າເຊື້ອສາຍຂອງຣູເບນວ່າ, “ຄວນໃຫ້ພີ່ນ້ອງຂອງທ່ານໄປທຳສົງຄາມ ຝ່າຍພວກທ່ານຈະຢັບຢັ້ງຢູ່ທີ່ນີ້ຢ່າງນັ້ນຫລື

7 ເປັນຫຍັງທ່ານທັງຫລາຍກະທຳໃຫ້ຈິດໃຈຂອງຄົນອິສຣາເອນທໍ້ຖອຍທີ່ຈະຍົກຂ້າມໄປຍັງແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານແກ່ເຂົາ

8 ບິດາຂອງທ່ານທັງຫລາຍໄດ້ກະທຳເຊັ່ນນີ້ ເມື່ອເຮົາໃຊ້ເຂົາໄປຈາກກາເດສບາເນອາໃຫ້ສອດແນມເບິ່ງແຜ່ນດິນນັ້ນ

9 ເມື່ອເຂົາຂຶ້ນໄປຍັງພູເຂົາເອສໂກນ ແລະໄດ້ເຫັນແຜ່ນດິນນັ້ນແລ້ວ ເຂົາກໍກະທຳໃຫ້ຈິດໃຈຄົນອິສຣາເອນທໍ້ຖອຍທີ່ຈະຍົກເຂົ້າໄປໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານແກ່ເຂົາ

10 ໃນວັນນັ້ນພຣະຜູ້ເປັນເຈົ້າຊົງພຣະພິໂຣດເຂົາຢ່າງຫນັກ ພຣະອົງຊົງຕັ້ງສັດສາບານໄວ້ວ່າ

11 “ແນ່ນອນທຸກຄົນຊຶ່ງໄດ້ອອກຈາກເອຢິບຕັ້ງແຕ່ຊາວປີຂຶ້ນໄປ ຈະບໍ່ໄດ້ເຫັນແຜ່ນດິນຊຶ່ງເຮົາໄດ້ຕັ້ງສັດສາບານທີ່ຈະມອບໃຫ້ອັບຣາຮາມ ອີຊາກ ແລະຢາໂຄບ ເພາະເຂົາທັງຫລາຍບໍ່ໄດ້ຕິດຕາມເຮົາດ້ວຍໃຈຈິງ

12 ເວັ້ນແຕ່ກາເລັບບຸດເຢຟຸນເນຄົນເກນິດ ແລະໂຢຊວຍບຸດນູນ ເພາະວ່າເຂົາທັງສອງຕິດຕາມພຣະຜູ້ເປັນເຈົ້າດ້ວຍໃຈຈິງ

13 ແລະພຣະຜູ້ເປັນເຈົ້າຊົງພຣະພິໂຣດຕໍ່ອິສຣາເອນ ພຣະອົງຈຶ່ງຊົງໃຫ້ເຂົາທ່ອງທ່ຽວໄປມາໃນຖິ່ນກັນດານສີ່ສິບປີຈົນຊາດເຊື້ອສາຍທີ່ກະທຳຜິດຕໍ່ພຣະຜູ້ເປັນເຈົ້າຕາຍເສັຽສິ້ນ

14 ແລະເບິ່ງແມ, ທ່ານໄດ້ເຕີບໃຫຍ່ຂຶ້ນມາແທນບິດາຂອງທ່ານ ເປັນເຊື້ອສາຍຄົນບາບທີ່ຈະທະວີພຣະພິໂຣດ
ຂອງພຣະຜູ້ເປັນເຈົ້າຕໍ່ອິສຣາເອນໃຫ້ຫລາຍຍິ່ງຂຶ້ນ
15 ເພາະວ່າຖ້າທ່ານທັງຫລາຍຫັນໜີຈາກການຕິດຕາມພຣະອົງ ພຣະອົງຈະຊົງປະຖິ້ມເຂົາທັງຫລາຍໃນຖິ່ນກັນ
ດານອີກ ແລະທ່ານທັງຫລາຍຈະທຳລາຍຊົນຊາດນີ້ເສັຽ”
16 ແລ້ວເຂົາທັງຫລາຍເຂົ້າມາໃກ້ທ່ານກ່າວວ່າ, “ຂ້າພະເຈົ້າທັງຫລາຍຈະສ້າງຄອກສຳລັບຝູງແບ້ແກະທີ່ນີ້ ແລະ
ສ້າງເມືອງສຳລັບລູກເດັກນ້ອຍໆທັງຫລາຍ
17 ແຕ່ເຮົາທັງຫລາຍຈະຖືອາວຸດພ້ອມທີ່ຈະໄປຂ້າງໜ້າຄົນອິສຣາເອນ ຈົນກວ່າເຮົາທັງຫລາຍຈະນຳເຂົາໄປເຖິງ
ທີ່ຂອງເຂົາ ເດັກນ້ອຍຂອງເຮົາຈະໄດ້ຢູ່ໃນເມືອງທີ່ມີກຳແພງລ້ອມຮອບເພາະຢ້ານຊາວແຜ່ນດິນນີ້
18 ເຮົາທັງຫລາຍຈະບໍ່ຍອມກັບບ້ານຈົນກວ່າຄົນອິສຣາເອນຈະໄດ້ຮັບມໍຣະດົກຂອງເຂົາທຸກຄົນ
19 ເພາະເຮົາຈະບໍ່ໄດ້ຮັບມໍຣະດົກກັບເຂົາທີ່ຝັ່ງຕາເວັນຕົກຂອງແມ່ນ້ຳຈໍແດນແລະນອກອອກໄປ ເພາະວ່າມໍຣະ
ດົກທີ່ຕົກທອດມາເຖິງເຮົາຢູ່ຟາກແມ່ນ້ຳຈໍແດນຂ້າງຕາເວັນອອກນີ້”
20 ໂມເຊຈຶ່ງກ່າວແກ່ເຂົາທັງຫລາຍວ່າ, “ຖ້າທ່ານທັງຫລາຍຈະຈັບອາວຸດຂຶ້ນເຂົ້າສູ່ສົງຄາມຕໍ່ພຣະພັກພຣະຜູ້ເປັນ
ເຈົ້າ
21 ແລະຄົນຂອງທ່ານທີ່ຖືອາວຸດທຸກຄົນຈະຂ້າມແມ່ນ້ຳຈໍແດນໄປຕໍ່ພຣະພັກພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະ
ຊົງຂັບໄລ່ສັດຕຣູໃຫ້ພົ້ນພຣະອົງ
22 ແລະແຜ່ນດິນນັ້ນຈະຜ່າຍແພ້ຕໍ່ພຣະພັກພຣະຜູ້ເປັນເຈົ້າແລ້ວ ພາຍຫລັງທ່ານຈຶ່ງຈະກັບແລະພົ້ນຈາກພັນທະທີ່
ມີຕໍ່ພຣະຜູ້ເປັນເຈົ້າແລະອິສຣາເອນ ແລະແຜ່ນດິນນີ້ຈະຕົກເປັນກຳມະສິດຂອງທ່ານຕໍ່ພຣະພັກພຣະຜູ້ເປັນ
ເຈົ້າ
23 ແຕ່ຖ້າທ່ານທັງຫລາຍບໍ່ໄດ້ກະທຳເຊັ່ນນີ້ ທ່ານທັງຫລາຍໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າ ຈົ່ງຮູ້ແນ່ເຖີດວ່າ
ບາບຂອງທ່ານກໍຕາມທັນ
24 ຈົ່ງສ້າງເມືອງສຳລັບເດັກນ້ອຍໆທັງຫລາຍຂອງທ່ານ ແລະສ້າງຄອກສັດສຳລັບແບ້ແກະຂອງທ່ານ ແລະກະທຳ
ຕາມທີ່ທ່ານສັນຍາໄວ້”
25 ແລະເຜົ່າເຊື້ອສາຍກາດ ແລະເຜົ່າເຊື້ອສາຍຂອງຣູເບນກ່າວແກ່ໂມເຊວ່າ, “ຄົນໃຊ້ຂອງທ່ານຈະກະທຳດັ່ງທີ່
ເຈົ້ານາຍຂອງຂ້າພະເຈົ້າບັນຊາ
26 ເດັກນ້ອຍໆທັງຫລາຍ ຝູງສັດແລະສັດໃຊ້ທັງໝົດຂອງເຮົາ ຈະຢູ່ທີ່ນີ້ໃນເມືອງກິເລອາດ
27 ແຕ່ຄົນໃຊ້ຂອງທ່ານທຸກຄົນຜູ້ມີອາວຸດທຳສົງຄາມຈະຂ້າມໄປເພື່ອສູ້ຮົບຕໍ່ພຣະພັກພຣະຜູ້ເປັນເຈົ້າ ດັ່ງທີ່ເຈົ້າ
ນາຍຂອງຂ້າພະເຈົ້າສັ່ງ”
28 ກ່ຽວກັບເຣື່ອງເຂົາທັງຫລາຍນີ້ ໂມເຊຈຶ່ງອອກຄຳສັ່ງແກ່ເອເລອາຊາປະໂຣຫິດ ແລະແກ່ໂຢຊວຍບຸດນູນ ແລະ
ແກ່ຫົວໜ້າຕະກູນຂອງເຜົ່າຄົນອິສຣາເອນ
29 ແລະໂມເຊກ່າວແກ່ເຂົາວ່າ, “ຖ້າເຜົ່າເຊື້ອສາຍກາດ ແລະເຜົ່າເຊື້ອສາຍຣູເບນ ທຸກຄົນຜູ້ມີອາວຸດທີ່ຈະທຳສົງ
ຄາມຕໍ່ພຣະພັກພຣະຜູ້ເປັນເຈົ້າຈະຂ້າມແມ່ນ້ຳຈໍແດນໄປພ້ອມກັບທ່ານທັງຫລາຍ ແລະແຜ່ນດິນນັ້ນຈະຜ່າຍ
ແພ້ຕໍ່ໜ້າທ່ານແລ້ວ ທ່ານຈົ່ງມອບແຜ່ນດິນກິເລອາດໃຫ້ເປັນກຳມະສິດແກ່ເຂົາ
30 ແຕ່ຖ້າເຂົາບໍ່ຖືອາວຸດຂ້າມໄປກັບທ່ານ ເຂົາຈະຕ້ອງໄດ້ສ່ວນແຜ່ນດິນການາອານຮ່ວມກັບທ່ານເປັນກຳມະສິດ
31 ເຜົ່າເຊື້ອສາຍກາດ ແລະເຜົ່າເຊື້ອສາຍຣູເບນຕອບວ່າ, “ພຣະຜູ້ເປັນເຈົ້າໄດ້ສັ່ງກັບຄົນໃຊ້ຂອງທ່ານຢ່າງໃດ
ເຮົາທັງຫລາຍຈະກະທຳຢ່າງນັ້ນ
32 ເຮົາຈະຖືອາວຸດຂ້າມໄປຕໍ່ພຣະພັກພຣະຜູ້ເປັນເຈົ້າສູ່ແຜ່ນດິນການາອານ ແລະທີ່ດິນມໍຣະດົກຂອງເຮົານັ້ນຈະ
ຄົງຢູ່ຟາກຕາເວັນອອກຂອງແມ່ນ້ຳຈໍແດນ”

33 ໂມເຊໄດ້ມອບດິນແດນເຫລົ່ານີ້ແກ່ເຜົ່າເຊື້ອສາຍກາດ ແລະແກ່ເຜົ່າເຊື້ອສາຍຣູເບນ ແລະແກ່ເຄິ່ງນຶ່ງຂອງເຜົ່າ
ມານັສເຊບຸດໂຢເຊັບ ຄືອານາຈັກຂອງກະສັດຊີໂຮນຄົນອາໂມຣິດ ແລະອານາຈັກຂອງໂອກກະສັດແຫ່ງບາ
ຊານ ທັງແຜ່ນດິນແລະຫົວເມືອງຕລອດເຂດແດນ ຄືຫົວເມືອງໃຫຍ່ໃນແຜ່ນດິນນີ້ຕລອດປະເທດ
34 ແລະເຜົ່າເຊື້ອສາຍຂອງກາດກໍສ້າງເມືອງດີໂບນ ອາຕາໂຣທ ອາໂຣເອີ
35 ອັດໂຣທໂຊຟານ ຢາເຊີ ໂຢກເບຮາ
36 ເບັດນິມຣາ ແລະເບັດຮາຣານ ໃຫ້ເປັນເມືອງມີກຳແພງອ້ອມຮອບ ແລະສ້າງຄອກໃຫ້ແກະ
37 ແລະເຜົ່າເຊື້ອສາຍຂອງຣູເບນກໍສ້າງເມືອງເຮສໂບນ ເອເລອາເລ ກີຣີອາທາອີມ
38 ເນໂບ ແລະບາອັນເມໂອນ (ຊື່ເຫລົ່ານີ້ຕໍ່ມາໄດ້ປ່ຽນໃຫມ່) ແລະຊິບມາ ແລະຕັ້ງຊື່ໃຫ້ແກ່ເມືອງທີ່ເຂົາສ້າງຂຶ້ນ
ນັ້ນ
39 ແລະເຜົ່າເຊື້ອສາຍຂອງມາຄີບຸດມານັສເຊ ແລະເຂົາກໍເຂົ້າຕັ້ງຢູ່ໃນເມືອງນັ້ນ
40 ແລະຢາອີບຸດມານັສເຊໄດ້ໄປຍຶດຊົນນະບົດຂອງເຂົາເຫລົ່ານັ້ນແລະເອີ້ນຊື່ວ່າຮາວໂວດຢາອີ
41 ແລະໂນບາໄດ້ໄປຍຶດເກນາດ ແລະຊົນນະບົດຂອງເມືອງນີ້ ແລະເອີ້ນວ່າເມືອງໂນບາ ຕາມຊື່ຂອງເຂົາ

## 33 ລະຍະທາງທີ່ຄົນອິສຣາເອນເດີນ

The Stages of Israel’s Journey from Egypt

1 ຕໍ່ໄປນີ້ເປັນເຣື່ອງລະຍະທາງເດີນຂອງຄົນອິສຣາເອນ ເມື່ອເຂົາອອກເດີນຈາກແຜ່ນດິນເອຢິບເປັນຫມວດຫມູ່
ພາຍໃຕ້ການນຳຂອງໂມເຊແລະອາໂຣນ
2 ໂມເຊໄດ້ຈົດສະຖານທີ່ບ່ອນເຂົາອອກເດີນ ທີ່ລະຍະໆຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ ຕໍ່ໄປນີ້ເປັນລະ
ຍະຕາມແຕ່ລະບ່ອນທີ່ເຂົາອອກເດີນ
3 ເຂົາຍົກເດີນຈາກຣາເມເຊສໃນຕົ້ນເດືອນ ໃນວັນທີສິບຫ້າຂອງເດືອນຕົ້ນນັ້ນ ຕໍ່ວັນປັສຄາໄປວັນນຶ່ງຄົນອິສຣາ
ເອນອອກເດີນຢ່າງມີໄຊຕໍ່ຫນ້າຕໍ່ຕາບັນດາຊາວເອຢິບທັງສິ້ນ
4 ຂນະນັ້ນຊາວເອຢິບກຳລັງຝັງສົບລູກຫົວປີທັງຫລາຍຂອງຕົນ ເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງປະຫານຊີວິດ ພຣະຜູ້
ເປັນເຈົ້າຊົງລົງໂທດພຣະທັງຫລາຍຂອງເຂົາດ້ວຍ
5 ດັ່ງນັ້ນ ຄົນອິສຣາເອນຈຶ່ງຍົກເດີນຈາກຣາເມເຊສ ແລະຕັ້ງຄ້າຍທີ່ຊຸກໂກດ
6 ແລະຍົກເດີນຈາກຊຸກໂກດ ແລະຕັ້ງຄ້າຍທີ່ເອທາມ ຊຶ່ງຢູ່ເທິງແຄມຖິ່ນກັນດານ
7 ແລະເຂົາທັງຫລາຍຍົກເດີນຈາກເອທາມ ຫັນກັບຄືນໄປຍັງປີຮາຮີໂຣດ ຊຶ່ງຢູ່ທາງທິດຕາເວັນອອກຂອງບາອັນ
ເຊໂຟນ ແລະເຂົາຕັ້ງຄ້າຍທີ່ຫນ້າມິກໂດນ
8 ແລະເຂົາທັງຫລາຍຍົກເດີນຈາກຫນ້າເມືອງປີຮາຮີໂຣດ ຂ້າມກາງທະເລເຂົ້າໄປໃນຖິ່ນກັນດານ ແລະເຂົາທັງ
ຫລາຍເດີນໃນຖິ່ນກັນດານເອທາມລະຍະທາງສາມວັນ ແລະມາຕັ້ງຄ້າຍທີ່ມາຣາ
9 ແລະເຂົາຍົກເດີນຈາກມາຣາມາເຖິງເອລີມ ທີ່ເອລີມມີນ້ຳພຸສິບສອງແຫ່ງແລະຕົ້ນຕານເຈັດສິບຕົ້ນ ແລະເຂົາ
ຕັ້ງຄ້າຍທີ່ນັ້ນ
10 ເຂົາຍົກເດີນຈາກເອລີມມາຕັ້ງຄ້າຍທີ່ທະເລແດງ
11 ແລະຍົກເດີນຈາກທະເລແດງມາຕັ້ງຄ້າຍຢູ່ໃນຖິ່ນກັນດານຊີນ
12 ແລະເຂົາຍົກເດີນຈາກຖິ່ນກັນດານຊີນ ມາຕັ້ງຄ້າຍທີ່ໂດຟກາ
13 ແລະເຂົາຍົກເດີນຈາກໂດຟກາ ແລະຕັ້ງຄ້າຍທີ່ອາລູສ
14 ແລະເຂົາຍົກເດີນຈາກອາລູສ ແລະຕັ້ງຄ້າຍທີ່ເຣຟີດີມ ຊຶ່ງນັ້ນບໍ່ມີນ້ຳໃຫ້ປະຊາຊົນດື່ມ
15 ແລະເຂົາຍົກເດີນຈາກເຣຟີດີມ ແລະຕັ້ງຄ້າຍໃນຖິ່ນກັນດານຊີນາອີ

16 ແລະເຂົາຍົກເດີນຈາກຖິ່ນກັນດານຊີນາອີມາຕັ້ງຄ້າຍທີ່ກິບໂຣດຮັດຕາອາວາ
17 ແລະເຂົາອອກເດີນຈາກກິບໂຣດຮັດຕາອາວາມາຕັ້ງຄ້າຍທີ່ຮາເຊໂຣດ
18 ແລະເຂົາຍົກເດີນຈາກຮາເຊໂຣດ ແລະຕັ້ງຄ້າຍທີ່ຣິດມາ
19 ແລະເຂົາຍົກເດີນຈາກຣິດມາ ແລະຕັ້ງຄ້າຍທີ່ຣິມໂມນເປເຣສ
20 ແລະເຂົາຍົກເດີນຈາກຣິມໂມນເປເຣສ ແລະຕັ້ງຄ້າຍທີ່ລິບນາ
21 ແລະເຂົາຍົກເດີນຈາກລິບນາ ແລະຕັ້ງຄ້າຍທີ່ຣິສຊາ
22 ແລະເຂົາຍົກເດີນຈາກຣິສຊາ ແລະຕັ້ງຄ້າຍທີ່ເກເຮລາທາ
23 ແລະເຂົາຍົກເດີນຈາກເກເຮລາທາ ແລະຕັ້ງຄ້າຍທີ່ພູເຂົາເຊເຟີ
24 ແລະເຂົາຍົກເດີນຈາກພູເຂົາເຊເຟີ ແລະຕັ້ງຄ້າຍທີ່ຮາຣາດາ
25 ແລະເຂົາຍົກເດີນຈາກເຮຣາດາ ແລະຕັ້ງຄ້າຍທີ່ມັກເຮໂລດ
26 ແລະເຂົາຍົກເດີນຈາກເຮໂລດ ແລະຕັ້ງຄ້າຍທີ່ຕາຮາດ
27 ແລະເຂົາຍົກເດີນຈາກຕາຮາດ ແລະຕັ້ງຄ້າຍທີ່ເຕຣາ
28 ແລະເຂົາຍົກເດີນຈາກເຕຣາ ແລະຕັ້ງຄ້າຍທີ່ມິດກາ
29 ແລະເຂົາຍົກເດີນຈາກມິທດກາ ແລະຕັ້ງຄ້າຍທີ່ຮັສໂມນາ
30 ແລະເຂົາຍົກເດີນຈາກຮັສໂມນາ ແລະຕັ້ງຄ້າຍທີ່ໂມເຊໂຣດ
31 ແລະເຂົາຍົກເດີນຈາກໂມເຊໂຣດ ແລະຕັ້ງຄ້າຍທີ່ເບເນຢາອາການ
32 ແລະເຂົາຍົກເດີນຈາກເບເນຢາອາການ ແລະຕັ້ງຄ້າຍທີ່ໂຮຮັກກິດກາດ
33 ແລະເຂົາຍົກເດີນຈາກໂຮຮັກກິດກາດ ແລະຕັ້ງຄ້າຍທີ່ໂຢດບາທາ
34 ແລະເຂົາຍົກເດີນຈາກໂຢດບາທາ ແລະຕັ້ງຄ້າຍທີ່ອາໂບຣນາ
35 ແລະເຂົາຍົກເດີນຈາກອາໂບຣນາ ແລະຕັ້ງຄ້າຍທີ່ເອຊີໂອນເກເບີ
36 ແລະເຂົາຍົກເດີນຈາກເອຊີໂອນເກເບີ ແລະຕັ້ງຄ້າຍໃນຖິ່ນກັນດານຊິນ (ກາເດສ)
37 ແລະຍົກເດີນຈາກກາເດສ ແລະຕັ້ງຄ້າຍທີ່ພູເຂົາໂຮ ຮີມແຜ່ນດິນເອໂດມ
38 ແລະອາໂຣນປະໂຣຫິດໄດ້ຂຶ້ນເທິງພູເຂົາໂຮຣ໌ ຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ ແລະເສັຽ
ຊີວິດທີ່ນັ້ນ ໃນວັນທີນຶ່ງເດືອນທີຫ້າ ປີທີ່ສີ່ສິບນັບຕັ້ງແຕ່ວັນທີ່ຄົນອິສຣາເອນອອກຈາກເອຢິບ
39 ເມື່ອອາໂຣນສິ້ນຊີວິດທີ່ພູເຂົາໂຮຣ໌ນັ້ນ ມີອາຍຸນຶ່ງຮ້ອຍຊາວສາມປີ
40 ແລະກະສັດເມືອງອາຣາດ ຊາວການາອານ ຜູ້ທີ່ຢູ່ໃນເນເກັບໃນແຜ່ນດິນການາອານໄດ້ຍິນຂ່າວວ່າຄົນອິສຣາ
ເອນຍົກມາ
41 ແລະເຂົາຍົກເດີນຈາກພູເຂົາໂຮຣ໌ ແລະຕັ້ງຄ້າຍທີ່ຊັນໂມນາ
42 ແລະເຂົາຍົກເດີນຈາກຊັນໂມນາ ແລະຕັ້ງຄ້າຍທີ່ປູໂນນ
43 ແລະເຂົາຍົກເດີນຈາກປູໂນນ ແລະຕັ້ງຄ້າຍທີ່ໂອໂບດ
44 ແລະເຂົາຍົກເດີນຈາກໂອໂບດ ມາຕັ້ງຄ້າຍທີ່ອີເຢອາບາຣີມ ໃນດິນແດນໂມອາບ
45 ແລະເຂົາອອກເດີນຈາກອີຢິມ ແລະຕັ້ງຄ້າຍທີ່ດີໂບນກາດ
46 ແລະເຂົາຍົກເດີນຈາກດີໂບນກາດ ແລະຕັ້ງຄ້າຍທີ່ອັນໂມນດິບລາທາອິມ
47 ແລະເຂົາຍົກເດີນຈາກອັນໂມນດິບລາທາອິມ ແລະຕັ້ງຄ້າຍໃນພູເຂົາອາບາຣີມໜ້າເນໂບ
48 ແລະເຂົາຍົກເດີນຈາກພູເຂົາອາບາຣີມ ແລະຕັ້ງຄ້າຍໃນທົ່ງແຫ່ງໂມອາບຮີມແມ່ນ້ຳຈໍແດນກົງຂ້າມເມືອງເຢຣີ
ໂກ
49 ເຂົາຕັ້ງຄ້າຍຢູ່ຮີມແມ່ນ້ຳຈໍແດນຕັ້ງແຕ່ເບັດເຢຊີໂມດ ໄກໄປຈົນເຖິງອາເບນຊິດຕິມໃນທົ່ງແຫ່ງໂມອາບ

### ຂອບເຂດແລະການແບ່ງປະເທດການາອານ

Directions for the Conquest of Canaan

50 ແລະພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊໃນທົ່ງແຫ່ງໂມອາບຣິມແມ່ນໍ້າຈໍແດນກົງຂ້າມເມືອງເຢຣິໂກວ່າ,
51 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າຂ້າມແມ່ນໍ້າຈໍແດນເຂົ້າໄປໃນແຜ່ນດິນການາອານ
52 ເຈົ້າຈົ່ງຂັບໄລ່ຊາວເມືອງນັ້ນອອກເສັຽທັງຫມົດ ແລະທຳລາຍສິລາຮູບແກະສລັກຂອງເຂົາເສັຽໃຫ້ສິ້ນ ແລະທຳ
ລາຍຮູບໂຄຣົບທີ່ຫລໍ່ຂອງເຂົາເສັຽໃຫ້ສິ້ນ ແລະທຳລາຍບັນດາບ່ອນນະມັສການຮູບເຫລົ່ານັ້ນຂອງເຂົາເສັຽ
53 ແລະເຈົ້າຈົ່ງຍຶດຄອງແຜ່ນດິນນັ້ນ ແລະເຂົ້າໄປຕັ້ງຢູ່ໃນນັ້ນ ເພາະເຮົາໄດ້ໃຫ້ແຜ່ນດິນນັ້ນ ໃຫ້ເຈົ້າຖືກຳມະສິດ
54 ເຈົ້າທັງຫລາຍຈົ່ງຈັບສລາກມໍຣະດົກທີ່ດິນນັ້ນຕາມຕະກູນຂອງເຈົ້າ ເຜົ່າທີ່ໃຫຍ່ເຈົ້າຈົ່ງໃຫ້ມໍຣະດົກສ່ວນໃຫຍ່
ເຜົ່າທີ່ນ້ອຍເຈົ້າຈົ່ງໃຫ້ມໍຣະດົກສ່ວນນ້ອຍ ດິນຜືນໃດທີ່ສລາກຕົກແກ່ຄົນໃດ ກໍເປັນຂອງຄົນນັ້ນ ເຈົ້າຈົ່ງຮັບມໍ
ຣະດົກຕາມເຜົ່າຂອງບັນພະບຸຣຸດຂອງເຈົ້າ
55 ຖ້າເຈົ້າທັງຫລາຍບໍ່ໄດ້ຂັບໄລ່ຊາວເມືອງນັ້ນອອກເສັຽ ຜູ້ທີ່ເຈົ້າໃຫ້ເຫລືອຢູ່ນັ້ນຈະເປັນຢ່າງສ້ຽນໃນໜ່ວຍຕາ
ຂອງເຈົ້າ ແລະເປັນຢ່າງຫນາມຢູ່ທີ່ສີຂ້າງຂອງເຈົ້າ ແລະເຂົາທັງຫລາຍຈະລົບກວນເຈົ້າໃນແຜ່ນດິນທີ່ເຈົ້າເຂົ້າ
ອາສັຍຢູ່ນັ້ນ
56 ແລະເຮົາຈະກະທຳແກ່ເຈົ້າທັງຫລາຍດັ່ງທີ່ເຮົາຄິດຈະກະທຳແກ່ເຂົາທັງຫລາຍນັ້ນ"

## 34

The Boundaries of the Land

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງສັ່ງຄົນອິສຣາເອນວ່າ ເມື່ອເຈົ້າເຂົ້າໄປໃນແຜ່ນດິນການາອານ (ອັນເປັນແຜ່ນດິນທີ່ເຮົາໃຫ້ແກ່ເຈົ້າເປັນມໍ
ຣະດົກ ຄືແຜ່ນດິນການາອານຕາມເຂດແດນທັງຫມົດ) ນັ້ນ
3 ເຂດດ້ານໃຕ້ຂອງເຈົ້ານັບຈາກຖິ່ນກັນດານຊິນຕາມດ້ານເອໂດມ ແລະອານາເຂດດ້ານໃຕ້ຂອງເຈົ້ານັ້ນ ນັບ
ຈາກປາຍທະເລເກືອທາງດ້ານຕາເວັນອອກ
4 ແລະອານາເຂດຂອງເຈົ້າຈະລ້ຽວໄປທາງໃຕ້ເນີນສູງອາກຣັບບິມ ແລະຂ້າມໄປຍັງຖິ່ນກັນດານຊິນ ໄປສຸດລົງທີ່
ດ້ານໃຕ້ກາເດສບາເນອາ ໄປເຖິງຮາຊາຣັດດາຜ່ານໄປເຖິງອັສໂມນ
5 ແລະອານາເຂດຈະລ້ຽວຈາກອັສໂມນເຖິງແມ່ນໍ້າເອຢິບໄປສິ້ນສຸດລົງທີ່ທະເລ
6 "ອານາເຂດຕາເວັນຕົກເຈົ້າຈະໄດ້ທະເລໃຫຍ່ແລະຝັ່ງທະເລນັ້ນ ນີ້ຈະເປັນເຂດດ້ານຕາເວັນຕົກຂອງເຈົ້າ
7 "ຕໍ່ໄປນີ້ເປັນອານາເຂດດ້ານເຫນືອຂອງເຈົ້າ ຄືຈາກທະເລໃຫຍ່ ເຈົ້າຈົ່ງທຳເຄື່ອງຫມາຍໄປເຖິງພູເຂົາໂຮຣ໌
8 ຈາກພູເຂົາໂຮຣ໌ ເຈົ້າຈົ່ງທຳເຄື່ອງຫມາຍເລື້ອຍໄປຈົນເຖິງທາງເຂົ້າເມືອງເລໂບຮາມາດ ແລະປາຍສຸດຂອງອາ
ນາເຂດດ້ານນີ້ຄືເຊດັດ
9 ແລ້ວອານາເຂດຈະໄປເຖິງຊິຟໂຣນ ໄປສິ້ນສຸດທີ່ຮາຊາເຣນານນີ້ເປັນອານາເຂດດ້ານເຫນືອຂອງເຈົ້າ
10 "ເຈົ້າຈົ່ງທຳເຄື່ອງຫມາຍອານາເຂດດ້ານຕາເວັນອອກຂອງເຈົ້າຈາກຮາຊາເຣນານເຖິງເຊຟາມ
11 ແລະອານາເຂດຈະລົງມາຈາກເຊຟາມເຖິງຣິບລາຂ້າງຕາເວັນອອກຂອງເມືອງອາອິນ ແລະອານາເຂດຈະລົງ
ມາເຖິງທະເລຄິນເນເຣັດທາງດ້ານຕາເວັນອອກ
12 ແລະອານາເຂດຈະລົງມາເຖິງແມ່ນໍ້າຈໍແດນສຸດລົງທີ່ທະເລເກືອ ນີ້ເປັນແຜ່ນດິນຂອງເຈົ້າຕາມອານາເຂດໂດຍ
ຮອບ"
13 ໂມເຊບັນຊາຄົນອິສຣາເອນກ່າວວ່າ, "ນີ້ເປັນແຜ່ນດິນທີ່ເຈົ້າທັງຫລາຍຈະໄດ້ຈັບສະຫລາກຮັບເປັນມໍຣະດົກ
ຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາວ່າ ໃຫ້ຍົກໃຫ້ແກ່ທັງເກົ້າເຜົ່າກັບອີກເຄິ່ງເຜົ່າ

14 ເພາະວ່າເຜົ່າຄົນຣູເບນຕາມຕະກູນ ແລະເຜົ່າກາດຕາມຕະກູນໄດ້ຮັບມໍຣະດົກຂອງເຂົາແລ້ວ ຄົນເຄິ່ງເຜົ່າມາ
ນັສເຊກໍໄດ້ຮັບແລ້ວດ້ວຍ
15 ທັງສອງເຜົ່າແລະເຄິ່ງເຜົ່ານັ້ນໄດ້ຮັບມໍຣະດົກຂອງເຂົາທີ່ຟາກແມ່ນໍ້າຈໍແດນທາງຟາກເມືອງເຢຣີໂກດ້ານຕາ
ເວັນອອກ ທາງຕາເວັນຂຶ້ນ”

Tribal Leaders

16 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
17 “ຕໍ່ໄປນີ້ເປັນຊື່ບຸກຄົນທີ່ຈະແບ່ງດິນແດນແກ່ເຈົ້າທັງຫລາຍໃຫ້ເປັນມໍຣະດົກ ຄືປະໂຣຫິດເອເລອາ ແລະໂຢ
ຊວຍບຸດນູນ
18 ທ່ານຈື່ງນໍາຫົວໜ້າຂອງຄົນທຸກເຜົ່າໄປແບ່ງດິນແດນເພື່ອເປັນມໍຣະດົກ
19 ຕໍ່ໄປນີ້ເປັນຊື່ຂອງຫົວໜ້າເຫລົ່ານັ້ນ ກາເລັບບຸດເຢຟຸນເນຈາກເຜົ່າຢູດາ
20 ເຊມູເອນບຸດອັມມີຮູດຈາກຄົນເຜົ່າຊີເມໂອນ
21 ເອລີດາດບຸດຄີສໂລນຈາກເຜົ່າເບັນຢາມິນ
22 ຈາກຄົນເຜົ່າດານມີຫົວໜ້າຄົນນຶ່ງ ຊື່ບັກກີບຸດໂຢກລີ
23 ຈາກເຊື້ອສາຍຂອງໂຢເຊັບ ຈາກເຜົ່າຄົນມານັສເຊມີຫົວໜ້າຊື່ຮັນນີເອນບຸດເອໂຟດ
24 ແລະຈາກເຜົ່າຄົນເອຟຣາອິມມີຫົວໜ້າຄົນນຶ່ງ ຊື່ເກມູເອນບຸດຊິບຕານ
25 ຈາກເຜົ່າຄົນເຊບູລູນມີຫົວໜ້າຄົນນຶ່ງ ຊື່ເອລີຊາຟານບຸດປາຣ໌ນາກ
26 ຈາກຄົນເຜົ່າອິສຊາຄາມີຫົວໜ້າຄົນນຶ່ງ ຊື່ປັນຕີເອນບຸດອັສຊານ
27 ແລະຈາກຄົນເຜົ່າອາເຊີມີຫົວໜ້າຄົນນຶ່ງ ຊື່ອາຮີຮູດບຸດເຊໂລມີ
28 ຈາກເຜົ່າຄົນເນັຟທາລີມີຫົວໜ້າຄົນນຶ່ງຊື່ ເປດາເຮນບຸດອັມມີຮູດ
29 ບຸກຄົນເຫລົ່ານີ້ເປັນຄົນທີ່ພຣະຜູ້ເປັນເຈົ້າຊົງບັນຊາໃຫ້ແບ່ງມໍຣະດົກໃຫ້ຄົນອິສຣາເອນໃນແຜ່ນດິນການາອານ

## 35 ຫົວເມືອງຂອງພວກເລວີ

Cities for the Levites

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊໃນທົ່ງຮາບແຫ່ງໂມອາບຮິມແມ່ນໍ້າຈໍແດນກົງຂ້າມເມືອງເຢຣີໂກວ່າ,
2 “ຈົ່ງສັ່ງຄົນອິສຣາເອນ ໃຫ້ເຂົາຍົກເມືອງໃຫ້ຄົນເລວີໄດ້ອາສັຍຢູ່ຈາກມໍຣະດົກທີ່ເຂົາໄດ້ຮັບນັ້ນ ແລະຍົກທົ່ງ
ຫຍ້າຮອບໆເມືອງນັ້ນໃຫ້ເຂົາດ້ວຍ
3 ໃຫ້ເມືອງນັ້ນເປັນຂອງເຂົາເພື່ອຈະໄດ້ອາສັຍຢູ່ ໃຫ້ທົ່ງຫຍ້າເພື່ອຝູງງົວ ແລະຝູງສັດອື່ນໆຂອງເຂົາ
4 ທົ່ງຫຍ້າຂອງເມືອງທີ່ເຈົ້າຍົກໃຫ້ແກ່ຄົນເລວີນັ້ນໃຫ້ມີເຂດຈາກກໍາແພງເມືອງແລະຫ່າງອອກໄປນຶ່ງພັນສອກ
ໂດຍຮອບ
5 ແລະເຈົ້າຈົ່ງວັດແທກພາຍນອກເມືອງສອງພັນສອກເປັນດ້ານຕາເວັນອອກ ສອງພັນສອກເປັນດ້ານໃຕ້ ສອງ
ພັນສອກເປັນດ້ານຕາເວັນຕົກ ສອງພັນສອກເປັນດ້ານເຫນືອໃຫ້ຕົວເມືອງຢູ່ກາງ ນີ້ເປັນທົ່ງຫຍ້າປະຈໍາເມືອງ
ເຫລົ່ານັ້ນ
6 ເມືອງຊຶ່ງເຈົ້າຈະຍົກໃຫ້ແກ່ຄົນເລວີ ຄື ເມືອງລີ້ພັຍຫົກເມືອງຊຶ່ງເຈົ້າຈະອະນຸຍາດໃຫ້ຄົນຂ້າຄົນໜີໄປຢູ່ ແລະ
ເຈົ້າຈົ່ງເພີ່ມໃຫ້ເຂົາອີກສີ່ສິບສອງເມືອງ
7 ເມືອງທັງໝົດທີ່ເຈົ້າຍົກໃຫ້ຄົນເລວີເປັນສີ່ສິບແປດຫົວເມືອງ ມີທົ່ງຫຍ້າຕາມເມືອງດ້ວຍ
8 ແລະຫົວເມືອງທີ່ເຈົ້າຈະໃຫ້ເຂົາຈາກກໍາມະສິດຂອງຄົນອິສຣາເອນນັ້ນ ຈາກເຜົ່າໃຫຍ່ເຈົ້າກໍເອົາເມືອງນ້ອຍໆ
ທຸກເຜົ່າຕາມສ່ວນຂອງມໍຣະດົກຊຶ່ງເຂົາໄດ້ຮັບ ໃຫ້ຍົກໃຫ້ແກ່ຄົນເລວີ”

## ເມືອງລີ້ພັຍ

Cities of Refuge

9 (ພບຍ 19:1-13; ຢຊຍ 20:1-9)
10 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
11 ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າທັງຫລາຍຂ້າມແມ່ນໍ້າຈໍແດນ ເຂົ້າໃນແຜ່ນດິນການາອານ
12 ເຈົ້າຈົ່ງເລືອກເມືອງໃຫ້ເປັນເມືອງລີ້ພັຍ ສໍາລັບເຈົ້າເພື່ອຄົນທີ່ໄດ້ຂ້າຄົນດ້ວຍບໍ່ໄດ້ເຈຕນາຈະຫລົບຫນີໄປຢູ່ທີ່
ນັ້ນກໍໄດ້
13 ໃຫ້ເມືອງເຫລົ່ານັ້ນເປັນເມືອງລີ້ພັຍຈາກຜູ້ທີ່ອາຄາດ ເພື່ອບໍ່ໃຫ້ຄົນຂ້າຄົນຈະຕ້ອງຕາຍກ່ອນທີ່ເຂົາຈະຢືນຕໍ່
ຫນ້າຊຸມນຸມຊົນ ເພື່ອຮັບການພິພາກສາ
14 ແລະເມືອງທີ່ເຈົ້າຍົກໄວ້ນັ້ນໃຫ້ເປັນເມືອງລີ້ພັຍຫົກເມືອງ
15 ເຈົ້າຈົ່ງໃຫ້ທາງຟາກຕາເວັນອອກຂອງແມ່ນໍ້າຈໍແດນສາມເມືອງ ແລະອີກສາມເມືອງໃນແຜ່ນດິນການາອານ
ໃຫ້ເປັນເມືອງລີ້ພັຍ
16 ທັງຫົກເມືອງນີ້ໃຫ້ເປັນເມືອງລີ້ພັຍຂອງຄົນອິສຣາເອນ ແລະສໍາລັບຄົນຕ່າງດ້າວ ແລະສໍາລັບຄົນທີ່ອາສັຍຢູ່
ຖ້າມກາງເຂົາ ເພື່ອຄົນນຶ່ງຄົນໃດທີ່ໄດ້ຂ້າເຂົາໂດຍບໍ່ໄດ້ເຈຕນາຈະໄດ້ຫລົບຫນີໄປທີ່ນັ້ນ
17 "ຖ້າຜູ້ໃດຕີເຂົາດ້ວຍເຄື່ອງມືເຫລັກຈົນຄົນນັ້ນເຖິງຕາຍ ຜູ້ນັ້ນເປັນຄົນຂ້າຄົນໃຫ້ປະຫານຊີວິດຄົນຂ້າຄົນນັ້ນ
ເສັຽ
18 ຜູ້ໃດທຸບເຂົາໃຫ້ລົ້ມລົງດ້ວຍກ້ອນຫີນໃນມືຂນາດຂ້າຄົນໄດ້ ແລະຂ້າເຂົາເຖິງຕາຍ ຜູ້ນັ້ນເປັນຄົນຂ້າຄົນ ໃຫ້
ປະຫານຊີ ວິດຄົນຂ້າຄົນນັ້ນເສັຽ
19 ຫລືຜູ້ໃດໃຊ້ອາວຸດໄມ້ທີ່ຢູ່ໃນມືຂນາດຂ້າຄົນໄດ້ຕີເຂົາລົ້ມລົງ ແລະຄົນນັ້ນເຖິງຕາຍ ຜູ້ນັ້ນເປັນຄົນຂ້າຄົນໃຫ້
ປະຫານຊີວິດຄົນຂ້າຄົນນັ້ນເສັຽ
20 ໃຫ້ຜູ້ອາຄາດເອງເປັນຜູ້ປະຫານຊີວິດຄົນຂ້າຄົນນັ້ນ ຖ້າຜູ້ອາຄາດພົບເຂົາເມື່ອໃດກໍໃຫ້ປະຫານຊີວິດເສັຽ
21 ຖ້າຜູ້ໃດແທງເຂົາດ້ວຍຄວາມກຽດຊັງ ຫລືຊຸ່ມຄ່ອຍແກ່ວງສິ່ງຂອງໃສ່ ເຂົາຈົນເຂົາຕາຍ
22 ຫລືເພາະເປັນສັດຕຣູກັນຊົກເຂົາຈົນລົ້ມລົງ ຈົນເຂົາຕາຍ ໃຫ້ປະຫານຊີວິດຜູ້ທີ່ທໍາໃຫ້ເຂົາຕາຍນັ້ນເສັຽ ເຂົາ
ເປັນຄົນຂ້າຄົນ ເມື່ອຜູ້ອາຄາດພົບເຂົາເມື່ອໃດ ກໍໃຫ້ປະຫານຊີວິດເຂົາເສັຽ
23 "ຖ້າຜູ້ໃດ ໂດຍບໍ່ໄດ້ເປັນສັດຕຣູກັນແທງເຂົາທັນທີ ຫລືເອົາສິ່ງໃດແກ່ວງໃສ່ເຂົາໂດຍບໍ່ໄດ້ຄອຍຊຸ່ມດັກຢູ່
24 ຫລືໃຊ້ກ້ອນຫີນຂນາດຂ້າຄົນໄດ້ແກ່ວງຖືກເຂົາເຂົ້າໂດຍບໍ່ໄດ້ເຫັນ ແລະເຂົາເຖິງຕາຍ ແລະເຂົາບໍ່ໄດ້ເປັນສັດ
ຕຣູ ແລະບໍ່ໄດ້ມຸ່ງທໍາຮ້າຍເຂົາ
25 ກໍໃຫ້ຊຸມນຸມຊົນຕັດສິນຄວາມລະຫວ່າງຜູ້ຂ້າ ແລະຜູ້ອາຄາດຕາມກົດຫມາຍນີ້
26 ໃຫ້ຊຸມນຸມຊົນຊ່ອຍຜູ້ຂ້າໃຫ້ພົ້ນຈາກມືຜູ້ອາຄາດ ໃຫ້ຊຸມນຸມຊົນພາເຂົາກັບໄປເຖິງເມືອງລີ້ພັຍ ຊຶ່ງເຂົາໄດ້ຫນີ
ໄປຢູ່ທີ່ນັ້ນ ໃຫ້ເຂົາຢູ່ທີ່ນັ້ນຈົນກວ່າປະໂຣຫິດໃຫຍ່ຜູ້ໄດ້ຖືກຫົດສົງໄວ້ດ້ວຍນໍ້າມັນບໍຣິສຸດເຖິງແກ່ຄວາມຕາຍ
27 ຖ້າຜູ້ຂ້າຄົນອອກໄປພົ້ນເຂດເມືອງລີ້ພັຍ ຊຶ່ງເຂົາຫນີເຂົ້າໄປຢູ່ໃນເວລາໃດ
28 ແລະຜູ້ອາຄາດພົບເຂົານອກເຂດເມືອງລີ້ພັຍ ແລະຜູ້ອາຄາດໄດ້ຂ້າຜູ້ຂ້າຄົນນັ້ນເສັຽ ຜູ້ອາຄາດບໍ່ມີຄວາມຜິດ
29 ເພາະວ່າຊາຍຜູ້ນັ້ນຕ້ອງຢູ່ໃນເຂດເມືອງລີ້ພັຍຈົນປະໂຣຫິດໃຫຍ່ເຖິງແກ່ຄວາມຕາຍ ພາຍຫລັງເມື່ອປະໂຣຫິດ
ໃຫຍ່ເຖິງແກ່ຄວາມຕາຍແລ້ວ ຜູ້ຂ້າຄົນນັ້ນຈະກັບໄປແຜ່ນດິນທີ່ເຂົາຖືກໍາມະສິດຢູ່ກໍໄດ້
30 "ສິ່ງເຫລົ່ານີ້ຄວນເປັນກົດພຣະທັມຂອງເຈົ້າຕລອດຊົ່ວຊາດເຊື້ອສາຍຂອງເຈົ້າໃນບ່ອນທີ່ເຈົ້າອາສັຍຢູ່
31 ຜູ້ໃດຂ້າເຂົາຕາຍໃຫ້ປະຫານຊີວິດຜູ້ຂ້າຄົນນັ້ນເສັຽຕາມປາກຂອງພຍານ ແຕ່ຢ່າປະຫານຊີວິດຜູ້ໃດດ້ວຍມີ
ພຍານປາກດຽວ

32 ນອກຈາກນີ້ ເຈົ້າຢ່າຮັບຄ່າໄຖ່ຊີວິດຂອງຜູ້ຂ້າຄົນ ຜູ້ມີຄວາມຜິດເຖິງຕາຍນັ້ນ ແຕ່ເຂົາຕ້ອງຕາຍ
33 ແລະເຈົ້າຢ່າຮັບຄ່າໄຖ່ຄົນທີ່ຫລົບຫນີໄປຍັງເມືອງລີ້ພັຍເພື່ອໃຫ້ກັບມາຢູ່ໃນແຜ່ນດິນຂອງເຂົາກ່ອນທີ່ປະໂຣຫິດໃຫຍ່ສິ້ນຊີວິດ
34 ດັ່ງນັ້ນເຈົ້າຈຶ່ງບໍ່ກະທຳໃຫ້ແຜ່ນດິນທີ່ເຈົ້າທັງຫລາຍອາສັຍຢູ່ມີມົນທິນ ເພາະວ່າໂລຫິດທຳໃຫ້ແຜ່ນດິນເປັນມົນທິນ ແລະບໍ່ມີສິ່ງໃດທີ່ຈະຊຳຣະແຜ່ນດິນໃຫ້ຫມົດມົນທິນທີ່ເກີດຂຶ້ນເພາະໂລຫິດຕົກໃນແຜ່ນດິນນັ້ນໄດ້ ນອກຈາກໂລຫິດຂອງຜູ້ທີ່ທຳໃຫ້ໂລຫິດຕົກ
35 ເຈົ້າຢ່າກະທຳໃຫ້ເກີດມົນທິນໃນແຜ່ນດິນທີ່ເຈົ້າອາສັຍຢູ່ທີ່ເຮົາຢູ່ຖ້າມກາງ ເພາະວ່າເຮົາຄືພຣະຜູ້ເປັນເຈົ້າຢູ່ຖ້າມກາງຄົນອິສຣາເອນ"

## 36 ກົດຫມາຍກ່ຽວກັບການສົມຣົດຂອງຍິງ ຜູ້ຮັບມໍຣະດົກ

Marriage of Female Heirs

1 ຫົວຫນ້າຄອບຄົວແຫ່ງຕະກູນກິເລອາດບຸດຂອງມາຄີ ຜູ້ເປັນບຸດຂອງມານັສເຊ ຕະກູນເຊື້ອສາຍໂຢເຊັບ ເຂົ້າມາໃກ້ແລະເວົ້າຕໍ່ໂມເຊແລະຕໍ່ຫົວຫນ້າ ຄືບັນດາຫົວຫນ້າຕະກູນຄົນອິສຣາເອນ
2 ເຂົາເວົ້າວ່າ, "ພຣະຜູ້ເປັນເຈົ້າໄດ້ບັນຊາເຈົ້ານາຍຂອງຂ້າພະເຈົ້າໃຫ້ຈັບສລາກຍົກແຜ່ນດິນໃຫ້ເປັນມໍຣະດົກແກ່ຄົນອິສຣາເອນ ແລະເຈົ້ານາຍຂອງຂ້າພະເຈົ້າໄດ້ຮັບບັນຊາຈາກພຣະຜູ້ເປັນເຈົ້າໃຫ້ຍົກມໍຣະດົກຂອງເຊໂລເຟຮາດ ພີ່ນ້ອງຂອງເຮົາແກ່ບຸດຕຣີຂອງເຂົາ
3 ຖ້ານາງທັງຫລາຍແຕ່ງງານກັບບຸດທັງຫລາຍຂອງຄົນອິສຣາເອນເຜົ່າອື່ນແລ້ວ ສ່ວນມໍຣະດົກຂອງເຂົາຈະຖືກຍົກໄປຈາກມໍຣະດົກຂອງບັນພະບຸຣຸດຂອງເຮົາ ເພີ້ມໃຫ້ກັບມໍຣະດົກຂອງຄົນເຜົ່າທີ່ນາງໄປຢູ່ດ້ວຍ ເພາະສະນັ້ນຈຶ່ງເປັນການທີ່ນຳມໍຣະດົກໄປຈາກສ່ວນທີ່ເປັນຂອງເຮົາ
4 ແລະເມື່ອເຖິງປີສຽງເຂົາສັດຂອງຄົນອິສຣາເອນ ມໍຣະດົກທີ່ເປັນສ່ວນຂອງນາງກໍຈະຖືກຍົກໄປເພີ້ມເຂົ້າກັບສ່ວນຂອງເຜົ່າທີ່ນາງໄປຢູ່ດ້ວຍ ຈຶ່ງເປັນການທີ່ນຳສ່ວນມໍຣະດົກຂອງນາງໄປຈາກສ່ວນມໍຣະດົກຂອງເຜົ່າບິດາຂອງເຮົາ"
5 ແລະໂມເຊສັ່ງຄົນອິສຣາເອນຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າວ່າ, "ເຜົ່າຄົນໂຢເຊັບເວົ້າຖືກຕ້ອງແລ້ວ
6 ນີ້ຄືສິ່ງທີ່ພຣະຜູ້ເປັນເຈົ້າຊົງສັ່ງກ່ຽວກັບບຸດຕຣີຂອງເຊໂລເຟຮາດ ຊຶ່ງວ່າ ຈົ່ງໃຫ້ນາງແຕ່ງງານກັບຄົນທີ່ນາງພໍໃຈ ແຕ່ນາງຕ້ອງແຕ່ງງານກັບຄົນພາຍໃນຕະກູນເຜົ່າບິດາຂອງນາງ
7 ດັ່ງນີ້ແຫລະສ່ວນມໍຣະດົກຂອງຄົນອິສຣາເອນຈະບໍ່ຖືກຍົກຍ້າຍຈາກເຜົ່ານຶ່ງໄປໃຫ້ອີກເຜົ່ານຶ່ງ ຄົນອິສຣາເອນທຸກຄົນຕ້ອງຢູ່ໃນທີ່ມໍຣະດົກແຫ່ງເຜົ່າບັນພະບຸຣຸດຂອງຕົນ
8 ແລະບຸດຕຣີທຸກຄົນຜູ້ຮັບກຳມະສິດມໍຣະດົກໃນເຜົ່າຄົນອິສຣາເອນເຜົ່າໃດ ໃຫ້ເປັນເມັຽຂອງຄົນໃດຄົນນຶ່ງໃນຕະກູນໃນເຜົ່າບິດາຂອງຕົນ ເພື່ອຄົນອິສຣາເອນທຸກຄົນຈະຖືກຳມະສິດມໍຣະດົກຂອງບິດາຂອງເຂົາ
9 ດັ່ງນັ້ນຈະບໍ່ມີມໍຣະດົກທີ່ຖືກຍົກຍ້າຍຈາກເຜົ່ານຶ່ງໄປຍັງອີກເຜົ່ານຶ່ງ ເພາະວ່າຄົນອິສຣາເອນແຕ່ລະເຜົ່າຄວນຄົງຢູ່ໃນທີ່ມໍຣະດົກຂອງຕົນ"
10 ພຣະຜູ້ເປັນເຈົ້າຊົງສັ່ງໂມເຊຢ່າງໃດ ບຸດຕຣີທັງຫລາຍຂອງເຊໂລເຟຮາດກໍກະທຳຢ່າງນັ້ນ
11 ເພາະວ່າມາລາ ຕີຊາ ໂຮກລາ ມິນກາ ແລະໂນອາບຸດຕຣີຂອງເຊໂລເຟຮາດໄດ້ແຕ່ງງານກັບບຸດທັງຫລາຍຂອງພີ່ນ້ອງແຫ່ງບິດາຂອງຕົນ
12 ນາງໄດ້ແຕ່ງງານກັບຕະກູນມານັສເຊບຸດຂອງໂຢເຊັບ ແລະສ່ວນມໍຣະດົກຂອງນາງກໍຄົງຢູ່ໃນເຜົ່າແຫ່ງຕະກູນບິດາຂອງນາງ

13 ຂໍ້ຄວາມເຫລົ່ານີ້ເປັນບົດບັນຍັດແລະກົດຫມາຍຊຶ່ງພຣະຜູ້ເປັນເຈົ້າໄດ້ຊົງບັນຊາທາງໂມເຊແກ່ຄົນອິສຣາເອນ
ໃນທົ່ງຮາບແຫ່ງໂມອາບຣິມແມ່ນໍ້າຈໍແດນ ກົງຂ້າມເມືອງເຢຣີໂກ